# ບົດສັງລວມ

## ບັນຫາ ບູລິມະສິດ ແລະ ຄວາມຄືບໜ້າຂອງການແກ້ໄຂບັນຫາ

## ການດຳເນີນທຸລະກິດ ຜ່ານກົນໄກກອງປະຊຸມທຸລະກິດລາວ

## (2021)

ສາລະບານ


I. ບັນຫາທີ່ໄດ້ຮັບການແກ້ໄຂ ຫຼື ໄດ້ຮັບຄຳຕອບທີ່ຊັດເຈນແລ້ວ ..... 3

1. ຄ່າທຳນຽມຈົດທະບຽນຫຼັກຊັບຄ້ຳປະກັນເງິນກູ້ດ້ອຍສິດນຳໃຊ້ທີ່ດິນ ..... 3
2. ນະໂຍບາຍການເປີດກວ້າງດ້ານນິຕິກຳ ໃນການໃຫ້ບໍລິການທາງດ້ານການເງິນຜ່ານເຕັກໂນໂລຊີ (FinTech) ..... 4
3. ຂັ້ນຕອນການອະນຸຍາດແຜນນຳເຂົ້າສິນຄ້າ ແລະ ວັດຖຸດິບ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມພາຍໃຕ້ກົດໝາຍສົ່ງເສີມການລົງທຶນ ..... 6
4. ຄ່າໄຟຟ້າ ປະຈຸບັນ ບໍ່ເປັນການສົ່ງເສີມຂະແໜງກະສິກຳ ເທົ່າທີ່ຄວນ ..... 8
5. ຂັ້ນຕອນການອະນຸມັດເອກະສານເພື່ອຊຳລະພາສີຢູ່ສາງສິນຄ້າ (ທ່ານາແລ້ງ) ..... 9
6. ລະບຽບການຄຸ້ມຄອງດ້ານອະສັງຫາລິມມະຊັບ ..... 11
7. ພາສີນຳເຂົ້າວັດຖຸອຸປະກອນເພື່ອມາຮັບໃຊ້ການຜະລິດ ມີມູນຄ່າສູງ ..... 12
8. ການເຂົ້າຫາຖານຂໍ້ມູນການຜະລິດກະສິກຳໃນ ສປປ ລາວ ..... 14

**II. ບັນຫາທີ່ຈະບໍ່ສືບຕໍ່ປຶກສາຫາລື ແລະ ຕິດຕາມ ..... 15**

1. ອັດຕາຄ່າໄຟຟ້າປະຈຸບັນບໍ່ເປັນການສົ່ງເສີມຂະແໜງການບໍລິການ ..... 15

**III. ບັນຫາທີ່ມີຄວາມຄືບໜ້າໃນການແກ້ໄຂ ແລະ ຈະສືບຕໍ່ປຶກສາຫາລື ..... 17**

ກຸ່ມບັນຫາທີ່ຕິດພັນກັບການເລີ່ມຕົ້ນທຸລະກິດ ແລະ ນະໂຍບາຍສົ່ງເສີມການລົງທຶນ ..... 17

1. ຂັ້ນຕອນການອອກໃບອະນຸຍາດລົງທຶນ ..... 17
2. ຂັ້ນຕອນການອອກໃບອະນຸຍາດດຳເນີນທຸລະກິດ ..... 20
3. ການເຂົ້າຫານະໂຍບາຍ ດ້ານພາສີ ແລະ ອາກອນມູນຄ່າເພີ່ມ ພາຍໃຕ້ກົດໝາຍສົ່ງເສີມການລົງທຶນ... 23
4. ມາດຕະການ ແລະ ນະໂຍບາຍ ສົ່ງເສີມ Start-up ..... 24
5. ການເສີມສ້າງຄວາມເຂັ້ມແຂງໃຫ້ກັບສະມາຄົມທຸລະກິດ ..... 27

ກຸ່ມບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຄ້າ ..... 28

1. ຂັ້ນຕອນການຂໍອະນຸຍາດຂົນສົ່ງສິນຄ້າຜ່ານແດນ ແລະ ສິນຄ້າທີ່ບໍ່ຢູ່ໃນລາຍການສິນຄ້າເກືອດຫ້າມ.. 28
2. ການແຂ່ງຂັນຈາກການນຳເຂົ້າສິນຄ້າ ທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບກົດໝາຍ ..... 30
3. ການເກັບຄ່າທຳນຽມ ທີ່ບໍ່ຖືກຕາມກຳນົດໃນລັດຖະບັນຍັດປະທານປະເທດ 002/ປປທ (ບາງກໍລະນີແກ້ໄຂແລ້ວ) ..... 32
4. ການນຳໃຊ້ລະບົບ LNSW ທີ່ຍັງບໍ່ສົມບູນ ..... 34
5. ການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າພາຍໃນປະເທດ ..... 35
6. ການເກັບອາກອນມູນຄ່າເພີ່ມຈາກຄ່າບໍລິການຂົນສົ່ງສິນຄ້າຜ່ານແດນສາກົນ ແລະ ຂ້າມແດນ ..... 37
7. ວິທີການເກັບຄ່າທຳນຽມທີ່ຕິດພັນກັບການຂົນສົ່ງສິນຄ້າ ..... 39

ກຸ່ມບັນຫາທີ່ຕິດພັນກັບການເຂົ້າເຖິງແຫຼ່ງທຶນ ..... 41

1. ຂັ້ນຕອນການຈົດທະບຽນສັນຍາເງິນກູ້ ແລະ ຫຼັກຊັບຄ້ຳປະກັນ ..... 41
2. ຂັ້ນຕອນທາງດ້ານກົດໝາຍໃນການແກ້ໄຂຂໍ້ຂັດແຍ່ງ ..... 44
3. ການປັບປຸງຖານຂໍ້ມູນສິນເຊື່ອແຫ່ງຊາດການ ..... 47

ກຸ່ມບັນຫາທີ່ຕິດພັນກັບການການຈັດຕັ້ງປະຕິບັດກົດລະບຽບສະເພາະ ............................................ 49
1. ການເກີດຂຶ້ນຂອງຕະຫຼາດແລກປ່ຽນຄູ່ຂະໜານ ແລະ ການບັງຄັບໃຊ້ກົດລະບຽບດ້ານການແລກປ່ຽນເງິນຕາ........................................................................................................ 49
2. ຂະບວນການປັບປ່ຽນການເກັບຮັກສາເອກະສານທາງການເງິນຈາກຮູບແບບເຈ້ຍສໍ່ມາເປັນຮູບແບບອີເລກໂຕນິກເພື່ອຕິດຕາມທຸລະກຳທາງການເງິນ (Dematerialization) ແລະ ການນຳໃຊ້ວາລະດິຈິຕອລ (Digital Agenda) ....................................................................... 54
3. ການສົ່ງຄືນອາກອນມູນຄ່າເພີ່ມ ສຳລັບທຸລະກິດທີ່ຜະລິດສິນຄ້າເພື່ອສົ່ງອອກ .......................... 56
4. ຄວາມໂປ່ງໃສ, ຄວາມສະດວກ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດກົດໝາຍ ແລະ ກົດລະບຽບດ້ານສ່ວຍສາອາກອນ........................................................................ 59
5. ການຈັດຕັ້ງປະຕິບັດກົດລະບຽບກ່ຽວກັບການກວດສຸຂະພາບຂອງແຮງງານ ............................ 62
ບັນຫາສະເພາະຂອງຂະແໜງການບໍລິການດ້ານການເງິນ........................................................ 64
1. ການປັບປຸງ ວິທີການປົກປ້ອງລູກຄ້າທີ່ມີຄວາມສ່ຽງ ໃນຂະແໜງເຊົ່າສິນເຊື່ອ .......................... 64
2. ຄ່າທຳນຽມປະກັນໄພເງິນຝາກ (Deposit Insurance Fees) ສູງເກີນໄປ.......................... 65
3. ການບໍລິຫານຈັດການເງິນຄັງແຮຝາກໄວ້ກັບ ທຫລ ແລະ ການຂໍຖອນເງິນຄັງໃນ ກໍລະນີ ທີ່ ທະນາຄານຕ້ອງການສະພາບຄ່ອງ ........................................................................ 67
4. ຂໍ້ຈຳກັດດ້ານລະບຽບການໃນທຸລະກິດຂະແໜງປະກັນໄພ................................................ 68
5. ການພິຈາລະນາ ກ່ຽວກັບ ປ້າຍລົດ ສຳລັບລົດທີ່ຍັງຢູ່ພາຍໃຕ້ສັນຍາເຊົ່າສິນເຊື່ອ ........................ 70
ບັນຫາສະເພາະຂອງຂະແໜງການທ່ອງທ່ຽວ........................................................................ 71
1. ນະໂຍບາຍສົ່ງເສີມ ການພັດທະນາການທ່ອງທ່ຽວທີ່ອີງໃສ່ທຳມະຊາດ .................................... 71
2. ຂັ້ນຕອນການອະນຸມັດ ການຈັດກິດຈະກຳ ກິລາ ເພື່ອການທ່ອງທ່ຽວ .................................... 74
3. ຂັ້ນຕອນການອະນຸມັດໃບແຈ້ງລາຍຊື່ນັກທ່ອງທ່ຽວທີ່ເຂົ້າມາໃນ ສປປ ລາວ ............................ 76
4. ການປັບປຸງຍຸດທະສາດການສົ່ງເສີມການທ່ອງທ່ຽວ ........................................................ 78
5. ນະໂຍບາຍສະໜັບສະໜູນການທ່ອງທ່ຽວ ໃນໄລຍະການແຜ່ລະບາດ ແລະ ຟື້ນຟູນຈາກ ໂຄວິດ 19 . 81
ບັນຫາສະເພາະຂອງຂະແໜງກະສິກຳ.............................................................................. 83
1. ການຢັ້ງຢືນກະສິກຳສະອາດ ຕ້ອງຜ່ານຫຼາຍຂັ້ນຕອນ, ແລະ ມີຄ່າໃຊ້ຈ່າຍສູງ ............................ 83

## I.ບັນຫາທີ່ໄດ້ຮັບການແກ້ໄຂ ຫຼື ໄດ້ຮັບຄຳຕອບທີ່ຊັດເຈນແລ້ວ

### 1. ຄ່າທຳນຽມຈົດທະບຽນຫຼັກຊັບຄ້ຳປະກັນເງິນກູ້ດ້ວຍສິດນຳໃຊ້ທີ່ດິນ

ສະພາບບັນຫາ: ໃນລັດຖະບັນຍັດປະທານປະເທດ ເລກທີ 003/ປປທ ລົງວັນທີ 26/12/2012 ມາດຕາທີ 79 ໄດ້ກຳນົດໃຫ້ເກັບຄ່າທຳນຽມຈົດທະບຽນສັນຍາຄ້ຳປະກັນເງິນກູ້ຢືມດ້ວຍສິດນຳໃຊ້ທີ່ດິນ ເທົ່າກັບ 0.2% ຂອງຈຳນວນເງິນກູ້ຢືມ ເຊິ່ງຖືວ່າເປັນອັດຕາທີ່ສູງແລະໄດ້ສ້າງຜົນກະທົບໂດຍກົງຕໍ່ຜູ້ກູ້ຢືມ ເນື່ອງຈາກຈະຕ້ອງຈ່າຍຄ່າທຳນຽມໃນມູນຄ່າສູງຫຼາຍເທົ່າຕົວ ເຮັດໃຫ້ການເຂົ້າຫາແຫຼ່ງທຶນມີຄວາມຫຍຸ້ງຍາກ. ໃນ ຮ່າງ ລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ປັບປຸງ ລ່າສຸດ ໄດ້ລະບຸໃຫ້ ຄ່າທຳນຽມຈົດທະບຽນຫຼັກຊັບທີ່ຕິດພັນກັບສິດນຳໃຊ້ທີ່ດິນ ຫຼຸດລົງ ແລະ ເປັນອັດຕາຄົງທີ່ ຕາມການສະເໜີຂອງພາກທຸລະກິດ ໃນກອງປະຊຸມທຸລະກິດລາວ ຄັ້ງທີ 10, 11 ແລະ 12, ແຕ່ຮ່າງລັດຖະບັນຍັດ ປະທານປະເທດ ດັ່ງກ່າວ ຍັງບໍ່ມີການຮັບຮອງ ແລະ ປະກາດນຳໃຊ້, ຜູ້ປະກອບການຈຶ່ງຍັງຕ້ອງເສຍຄ່າທຳນຽມຈົດທະບຽນສັນຍາຄ້ຳປະກັນເງິນກູ້ຢືມດ້ວຍສິດນຳໃຊ້ທີ່ດິນ ໃນອັດຕາທີ່

**ສະເໜີວິທີແກ້ໄຂ:**

ສະເໜີໃຫ້ກົມສ່ວຍສາອາກອນ ສຳເລັດ ແລະ ປະກາດນຳໃຊ້ ລັດຖະບັນຍັດປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການສະບັບປັບປຸງ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1. ກົມສ່ວຍສາອາກອນ

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

- ໄດ້ມີການຮັບຮອງລັດຖະບັນຍັດ ເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການແລ້ວ (ປ່ຽນແທນ ລັດຖະບັນຍັດເລກທີ 003/ປປທ), ໝາຍຄວາມວ່າ ຄ່າທຳນຽມການຈົດທະບຽນຫຼັກຊັບຄ້ຳປະກັນທີ່ນຳໃຊ້ທີ່ດິນ ແມ່ນຖືກຫຼຸດລົງ ຕາມລະບຸຢູ່ໃນລັດຖະບັນຍັດສະບັບປັບປຸງ (ໜ້າທີ 84) ດັ່ງນີ້:

***ການຈົດທະບຽນສັນຍາຄ້ຳປະກັນດ້ວຍການເອົາສິດນຳໃຊ້ທີ່ດິນເປັນຫຼັກ***

- *ມູນຄ່າແຕ່ 500 ລ້ານກີບລົງມາ ແມ່ນ ຍົກເວັ້ນຄ່າທຳນຽມ*
- *ມູນຄ່າຫຼາຍກວ່າ 500 ລ້ານກີບ ຫາ 20 ຕື້ກີບ ເກັບ 50,000 ກີບຕໍ່ຄັ້ງ*
- *ມູນຄ່າຫຼາຍກວ່າ 20 ຕື້ ຫາ 50 ຕື້ກີບ ເກັບ 100,000 ກີບຕໍ່ຄັ້ງ*
- *ມູນຄ່າຫຼາຍກວ່າ 50 ຕື້ ຫາ 100 ຕື້ກີບ ເກັບ 150,000 ກີບຕໍ່ຄັ້ງ*
- *ມູນຄ່າຫຼາຍກວ່າ 100 ຕື້ກີບ ຂຶ້ນໄປ ເກັບ 200,000 ກີບຕໍ່ຄັ້ງ*

## 2. ນະໂຍບາຍການເປີດກວ້າງດ້ານນິຕິກຳ ໃນການໃຫ້ບໍລິການທາງດ້ານການເງິນຜ່ານເຕັກໂນໂລຊີ (FinTech)

ສະພາບບັນຫາ: ການບໍລິການດ້ານການເງິນທີ່ນຳໃຊ້ເຕັກໂນໂລຊີສູງ (ຫຼື **FinTech**) ມີຂີດຄວາມສາມາດ ເຂົ້າມາມີບົດບາດ ຫຼາຍຂຶ້ນ ໃນການສົ່ງເສີມການເຂົ້າເຖິງການບໍລິການດ້ານການເງິນຂອງ ສປປ ລາວ ໃນອະນາຄົດ ໂດຍສະເພາະແມ່ນ ຜູ້ທີ່ຢູ່ເຂດຫ່າງໄກສອກຫຼີກໃນຊົນນະບົດ ທີ່ການບໍລິການທາງດ້ານການເງິນຂອງທະນາຄານ ຍັງບໍ່ທົ່ວເຖິງ. ອີງຕາມບົດລາຍງານຕ່າງໆກ່ຽວກັບການພັດທະນາ ທີ່ຍືນຍົງ ຂອງ ສປປລາວ ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງ ການຂະຫຍາຍການຄອບຄຸມການບໍລິການດ້ານການເງິນໃຫ້ທົ່ວເຖິງ ເຊິ່ງສຳລັບ ສປປລາວ ແລ້ວ ຈຳນວນປະຊາກອນ ທີ່ບໍ່ສາມາດເຂົ້າເຖິງການ ບໍລິການດ້ານທະນາຄານແມ່ນກວມເອົາ 60%. ທຽບກັບບັນດາປະເທດ ໃນພາກພື້ນແລ້ວ ການນຳໃຊ້ FinTech ໃນ ສປປລາວ ແມ່ນຍັງມີການພັດທະນາທີ່ລ່າຊ້າຫຼາຍ. ການສ້າງລະບົບຊຳລະໃນຮູບແບບ ຂອງກະເປົາເງິນອີເລັກໂຕນິກ ຫຼື e-wallet ແມ່ນໜຶ່ງໃນການສົ່ງເສີມ ການພັດທະນາດ້ານ FinTech ໃນ ສປປລາວ ແລະ ກໍ່ສອດຄ່ອງກັບແນວທາງການຂະຫຍາຍ ການຄອບຄຸມການບໍລິການດ້ານການເງິນໃຫ້ທົ່ວເຖິງເຊັ່ນ:

- ຂະຫຍາຍການຄອບຄຸມການບໍລິການດ້ານການເງິນສູ່ເຂດຊົນນະບົດ ໂດຍຜ່ານການໃຫ້ຄວາມຮູ້ດ້ານການເງິນ, ການຝຶກອົບຮົມ, ແລະ ຜະລິດຕະພັນທີ່ມີຕົ້ນທຶນຕ່ຳ.
- ຊ່ວຍແກ້ໄຂບັນຫາການຊຳລະ ໃຫ້ແກ່ຜູ້ທີ່ບໍ່ສາມາດເຂົ້າເຖິງທະນາຄານ ໃນເຂດຊົນນະບົດ ແລະ ເພີ່ມຄວາມສະດວກສະບາຍ ໃນການເຂົ້າເຖິງການບໍລິການດ້ານການເງິນຫລາຍຂຶ້ນ
- ຊ່ວຍສົ່ງເສີມໃຫ້ SMEs ສາມາດຊຳລະ ແລະ ເກັບລາຍຮັບ ເພື່ອເພີ່ມປະສິດຕິພາບການຜະລິດ ແລະ ກຳໄລຂອງຕົນໄດ້ດີຂຶ້ນ
- ຊ່ວຍໃຫ້ວິສາຫະກິດໃນ ລາວ ມີທາງເລືອກດ້ານການບໍລິການດ້ານການເງິນ ເພື່ອການຂະຫຍາຍໂຕ ໂດຍສາມາດມີການຮ່ວມມືກັບທະນາຄານ, ສະຖາບັນການເງິນຈຸລະພາກ ແລະ ສະຖາບັນການເງິນອື່ນໆ ອີກດ້ວຍ.
- ຊ່ວຍຜູ້ຊົມໃຊ້ທົ່ວໄປ ໃຫ້ສາມາດນຳໃຊ້ການບໍລິການທາງການເງິນແບບດິຈິຕອລ ເພື່ອ ຫຼຸດຜ່ອນການໃຊ້ເງິນສົດ ແລະ ເພື່ອເຊື່ອມຕໍ່ກັນກັບລະບົບການຄ້າທາງອີເລັກໂຕນິກ.
- ສະນັ້ນຈິ່ງມີຄວາມຈຳເປັນຫລາຍ ທີ່ພາກລັດຖະບານຕ້ອງເຫັນເຖິງຄວາມສຳຄັນຂອງ FinTech ໃນສປປລາວ ເພື່ອການພັດທະນາປະເທດ ໂດຍສະເພາະແມ່ນ ການປັບປຸງກົດລະບຽບຕ່າງໆ ທີ່ກ່ຽວຂ້ອງເພື່ອເອື້ອອຳນວຍໃຫ້ແກ່ ບັນດາທຸລະກິດເກີດໃໝ່ທີ່ນຳໃຊ້ເຕັກໂນໂລຊີສູງ ເພື່ອຈະມາຊ່ວຍແກ້ໄຂບັນຫາການເຂົ້າເຖິງການບໍລິການ ດ້ານການເງິນໃຫ້ທົ່ວເຖິງ ແລະໃຫ້ທັນກັບສະພາບ ການປ່ຽນແປງຂອງລະບົບເສດຖະກິດໃນພາກພື້ນ.

ສຳລັບບໍລິສັດທີ່ມີຄວາມສົນໃຈ ທີ່ຈະດຳເນີນທຸລະກິດທີ່ກ່ຽວກັບ **FinTech** ທີ່ໃຫ້ບໍລິການ **e-wallet** ໃນ ສປປລາວ ນັ້ນຍັງປະສົບກັບບັນຫາກົດລະບຽບແລະ ເງື່ອນໄຂຫລາຍຢ່າງ ເຊັ່ນ:

- ຍັງບໍ່ມີຄວາມກະຈ່າງແຈ້ງກ່ຽວກັບ ຂັ້ນຕອນການປະເມີນ ການທົດລອງນຳໃຊ້ ລະບົບ **e-wallet** ຈາກ ກົມຄຸ້ມຄອງສະຖາບັນການເງິນ ເຊິ່ງລ່າຊ້າມາແຕ່ປີ **2017** ແລະ ກົມຄຸ້ມຄອງລະບົບຊຳລະສະສາງ ແຕ່ປີ **2018**
- ການຮ່າງ ແລະຮັບຮອງນິຕິກຳທີ່ກ່ຽວຂ້ອງ ແມ່ນແກ່ຍາວ ແລະ ລ່າຊ້າ

- ຍັງບໍ່ທັນມີລະບົບຮັບຮອງການລິເລີ່ມແນວຄິດຂອງທຸລະກິດດ້ານ **FinTech** ທີ່ຢູ່ໃນສະພາບ ແວດລ້ອມທີ່ສາມາດຄຸ້ມຄອງໄດ້.
- ເວລາທີ່ມີບໍລິສັດຍື່ນຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດດັ່ງກ່າວ ຂະແໜງການທີ່ກ່ຽວຂ້ອງ ກໍ່ບໍ່ໃຫ້ຄໍາຕອບ ທີ່ຊັດເຈນ

**ຂໍ້ສະເໜີວິທີແກ້ໄຂ**

1) ປະຈຸບັນນີ້ຍັງບໍ່ມີກົດລະບຽບ ຫຼືຄໍາແນະນໍາທີ່ຊັດເຈນຈາກ ທະນາຄານແຫ່ງ ສປປລາວ ໃນການຈັດຕັ້ງປະຕິບັດ ແຜນວຽກງານ ດ້ານການເງິນອີເລັກໂຕນິກ (e-money) ແລະຍັງບໍ່ມີການກໍານົດເວລາທີ່ຊັດເຈນ ໃນການເປີດກວ້າງເພື່ອໃຫ້ມີຜູ້ໃຫ້ການບໍລິການຫລາຍຂຶ້ນ. ສະນັ້ນຈຶ່ງສະເໜີໃຫ້ ທະນາຄານ ແຫ່ງ ສປປລາວ ພິຈາລະນາຄືນກ່ຽວກັບກົດລະບຽບໃນການອະນຸຍາດດໍາເນີນທຸລະກິດປະເພດ e-wallet ແລະ ມີຄໍາຕອບທີ່ຊັດເຈນໃຫ້ກັບບໍລິສັດທີ່ມາຂໍອະນຸຍາດດໍາເນີນທຸລະກິດດັ່ງກ່າວ

**ຂະແໜງການກ່ຽວຂ້ອງຂອງພາກລັດ**

1. ກົມຄຸ້ມຄອງລະບົບຊໍາລະສະສາງ, ທະນາຄານ ແຫ່ງ ສປປ ລາວ

**ຄວາມຄືບໜ້າການແກ້ໄຂລ່າສຸດ:**

- ນະໂຍບາຍສົ່ງເສີມ ການເຂົ້າເຖິງການບໍລິການທາງດ້ານການເງິນ ຜ່ານເຕັກໂນໂລຊີ (FinTech): ອີງຕາມຄໍາຕອບຂອງກົມຄຸ້ມຄອງລະບົບຊໍາລະສະສາງ (ຄລຊ) ສະບັບເລກທີ 247/ຄລຊ ລົງວັນທີ 01 ເມສາ 2020: ປະຈຸບັນ ທະນາຄານແຫ່ງ ສປປລ (ທຫລ) ໄດ້ສໍາເລັດການຄົ້ນຄວ້ານິຕິກໍາລຸ່ມກົດໝາຍວ່າດ້ວຍລະບົບການຊໍາລະ ແລະ ເຊັນຮັບຮອງຈາກ ຜູ້ວ່າການ ທຫລ ກໍ່ຄື ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020 ເຊິ່ງໄດ້ສ້າງຂໍ້ສະດວກໃຫ້ແກ່ຜູ້ປະກອບການທີ່ຕ້ອງການດໍາເນີນທຸລະກິດໃຫ້ບໍລິການຊໍາລະສະສາງ ນໍາໃຊ້ເປັນບ່ອນອີງ. ຕໍ່ກັບບັນຫານີ້ ຜູ້ປະກອບການເຫັນວ່າ ໄດ້ຮັບການແກ້ໄຂແລ້ວ.
- ຜູ້ປະກອບການສ່ວນໃຫຍ່ ເຫັນວ່າ ຂະແໜງການກ່ຽວຂ້ອງໄດ້ມີການປັບປຸງຕາມຂໍ້ສະເໜີຂອງພາກທຸລະກິດ ສະນັ້ນ ຈຶ່ງຖືວ່າ ບັນຫານີ້ ໄດ້ຮັບການແກ້ໄຂ.

3. ຂັ້ນຕອນການອະນຸຍາດແຜນນຳເຂົ້າສິນຄ້າ ແລະ ວັດຖຸດິບ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມພາຍໃຕ້ກົດໝາຍສົ່ງເສີມການລົງທຶນ

ສະພາບຂອງບັນຫາ: ອີງຕາມສະພາບບັນຫາ ການອະນຸມັດ ແຜນນຳເຂົ້າ ສິນຄ້າ ແລະວັດຖຸດິບ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ພາຍໃຕ້ກົດໝາຍສົ່ງເສີມການລົງທຶນ ຊັກຊ້າ, ທີ່ໄດ້ສະເໜີໂດຍບັນດາຜູ້ປະກອບການໃນຂະແໜງຕັດຫຍິບ ໃນກອງປະຊຸມ ທຸລະກິດລາວຄັ້ງທີ 11 ແລະ 12, ຜ່ານມາ ເຫັນວ່າຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ກໍ່ໄດ້ເອົາໃຈໃສ່ແກ້ໄຂປັບປຸງຕາມຂໍ້ສະເໜີຂອງພາກທຸລະກິດ, ໂດຍສະເພາະ ແມ່ນ ໄດ້ອອກບົດແນະນຳ ຂອງຄະນະກຳມະການສົ່ງເສີມ ແລະຄຸ້ມຄອງ ການລົງທຶນ ຂັ້ນສູນກາງ ເລກທີ 01/ຄລທ.ສ ລົງວັນທີ 02/01/2019 ວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າຂອງວິສາຫະກິດ, ເຊິ່ງໄດ້ລະບຸໄລຍະເວລາໃນການອະນຸມັດແຜນນຳເຂົ້າ ພ້ອມທັງໄດ້ລະບຸໃຫ້ ກິດຈະການການຕັດຫຍິບເພື່ອສົ່ງອອກ ຜ່ານແຜນກັບກະຊວງ ອຸດສາຫະກຳ ແລະ ການຄ້າ ໂດຍກົງ ແລ້ວໄປຫາ ກົມພາສີ (ສ່ວນກິດຈະການຜະລິດອື່ນໆ ເພື່ອສົ່ງອອກ ແມ່ນ ໃຫ້ຜ່ານແຜນກັບກະຊວງແຜນການ ແລະ ການລົງທຶນ). ພ້ອມດຽວກັນນີ້ ໃນການຫັກລົບແຜນນຳເຂົ້າ ກົມພາສີ ກໍ່ໄດ້ສຳເລັດການຕິດຕັ້ງ ແລະ ນຳໃຊ້ ລະບົບເອເລັກໂຕຣນິກ ໃນການຄຸ້ມຄອງຕິດຕາມ ຫັກລົບແຜນນຳເຂົ້າ ໃນທຸກດ່ານພາສີສາກົນ ແລະ ກອງຄຸ້ມຄອງພາສີ ໃນຂອບເຂດທົ່ວປະເທດ. ສະນັ້ນຈິ່ງສະເໜີໃຫ້ ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ປະສານກັບຂະແໜງການທີ່ຕິດພັນກັບການອະນຸມັດແຜນນຳເຂົ້າ, ເພື່ອປັບປຸງຂັ້ນຕອນການຜ່ານແຜນ ຂໍອະນຸຍາດນຳເຂົ້າ ພາຍໃຕ້ນະໂຍບາຍສົ່ງເສີມການລົງທຶນ ໃຫ້ສະດວກວ່ອງໄວ

**ຂໍ້ສະເໜີວິທີແກ້ໄຂ:**

1) ສະເໜີໃຫ້ ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ປະສານກັບຂະແໜງການທີ່ຕິດພັນກັບການອະນຸມັດແຜນນຳເຂົ້າ, ເພື່ອປັບປຸງຂັ້ນຕອນການຜ່ານແຜນ ຂໍອະນຸຍາດນຳເຂົ້າ ພາຍໃຕ້ ນະໂຍບາຍສົ່ງເສີມການລົງທຶນ ໃຫ້ສະດວກວ່ອງໄວ.

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

- ບັນຫານີ້ໄດ້ຖືກຍົກຂຶ້ນເພື່ອປຶກສາຫາລືໃນ ກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
  - **ຕາງໜ້າ ຈາກກົມພາສີ**: ຂັ້ນຕອນການຂໍອະນຸມັດແຜນນຳເຂົ້າ (Master List) ພາຍໃຕ້ນະໂຍບາຍສົ່ງເສີມການລົງທຶນ ແມ່ນອີງໃສ່ຂັ້ນຕອນທີ່ລະບຸພາຍໃຕ້ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ສ່ວນຂະແໜງພາສີພຽງແຕ່ຄຸ້ມຄອງ ພາຍຫຼັງທີ່ມີການຮັບຮອງຂອງແຜນນຳເຂົ້າແລ້ວ. ຜ່ານມາການຄິດໄລ່ພາສີ ແລະ ອາກອນ ໃນລະບົບ ASYCUDA ຖ້າກໍລະນີສິນຄ້າມີອາກອນຊົມໃຊ້ ອາດມີການຊັກຊ້າ ເນື່ອງຈາກໃນບາງກໍລະນີ ກ່ອນການປັບສູດຄິດໄລ່ໃນລະບົບ ຕ້ອງໄດ້ຂໍອະນຸມັດຈາກເຈົ້າຂອງລິຂະສິດຂອງລະບົບ. ຖ້າຫາກເກີດມີບັນຫາໃນລັກສະນະດັ່ງກ່າວໃນຕໍ່ໜ້າ ຫຼື ກໍລະນີທີ່ຜູ້ປະກອບການຕ້ອງການນຳເຂົ້າສິນຄ້າແບບສຸກເສີນ ຖ້າຫາກວ່າການອະນຸມັດແຜນນຳເຂົ້າມີຄວາມຊັກຊ້າ ໂດຍມີການຢັ້ງຢືນຈາກ ຂະແໜງການທີ່ອະນຸມັດແຜນນຳເຂົ້າ, ຜູ້ປະກອບການສາມາດຂໍຄ້ຳປະກັນສິນຄ້າອອກກ່ອນ ເຊິ່ງເຈົ້າໜ້າທີ່ພາສີປະຈຳດ່ານ ຈະເປັນຜູ້ພິຈາລະນາອະນຸມັດເປັນແຕ່ລະກໍລະນີ, ແລະ ຫຼັງຈາກຄ້ຳປະກັນສິນຄ້າອອກແລ້ວ ຈະກຳນົດໃຫ້ຜູ້ປະກອບການ ຊຳລະສະສາງ

ເອກະສານໃຫ້ສຳເລັດ ພາຍໃນ 30 ວັນ (ສຳລັບໂຄງການທີ່ໄດ້ຮັບນະໂຍບາຍສົ່ງເສີມ ພາຍໃຕ້ກົດໝາຍສົ່ງເສີມການລົງທຶນ). ຕໍ່ກັບຂໍ້ສະເໜີປັບປຸງ ໃຫ້ມີສາຍດ່ວນສະເພາະຂອງຂະແໜງພາສີ ແມ່ນເຫັນດີທີ່ຈະນຳໄປປັບປຸງ ເພື່ອອຳນວຍຄວາມສະດວກແກ່ຜູ້ປະກອບການ.

- **ຕາງໜ້າ ຈາກກົມສົ່ງເສີມລົງທຶນ:** ຕໍ່ກັບຂັ້ນຕອນການຂໍອະນຸມັດແຜນນຳເຂົ້າ (Master List) ພາຍໃຕ້ນະໂຍບາຍສົ່ງເສີມການລົງທຶນ ຜ່ານມາໄດ້ມີການປັບປຸງໃຫ້ດີຂຶ້ນ ໂດຍສະເພາະແມ່ນ ໄດ້ກຳນົດໃຫ້ຂະແໜງການກ່ຽວຂ້ອງ ຕ້ອງປະກອບຄຳເຫັນພາຍໃນ 5 ວັນລັດຖະການ. ໃນກໍລະນີທີ່ ຜູ້ປະກອບການສົ່ງເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະໃຫ້ເວລາ ຜູ້ປະກອບການ ແກ້ໄຂເອກະສານພາຍໃນ 15 ວັນ ປະຕິທິນ ຫຼື 10 ວັນລັດຖະການ. ຖ້າຫາກທາງຜູ້ປະກອບການ ບໍ່ສາມາດແກ້ໄຂເອກະສານໃນເວລາທີ່ກຳນົດໄວ້, ເອກະສານຄຳຮ້ອງຂໍອະນຸມັດແຜນນຳເຂົ້າ ກໍ່ຈະຖືກຍົກເລີກ. ຕໍ່ກັບຂໍ້ສະເໜີ ໃຫ້ພິຈາລະນາຍົກເວັ້ນອາກອນມູນຄ່າເພີ່ມແກ່ໂຄງການລົງທຶນທີ່ໄດ້ຮັບນະໂຍບາຍສົ່ງເສີມ ໃນການຊື້ສິນຄ້າທີ່ສະໜອງໂດຍຜູ້ຜະລິດພາຍໃນປະເທດເຊັ່ນດຽວກັບສິນຄ້ານຳເຂົ້າ, ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກຍັງບໍ່ມີນິຕິກຳຮອງຮັບ, ເຊິ່ງ ກະຊວງແຜນການ ແລະ ການລົງທຶນ ຈະໄດ້ມີການປຶກສາຫາລື ກັບກະຊວງການເງິນ ຕື່ມ ຕໍ່ກັບຂໍ້ສະເໜີດັ່ງກ່າວ. ປະຈຸບັນ ກະຊວງແຜນການ ແລະ ການລົງທຶນ ພວມປັບປຸງຄຳແນະນຳ ເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 ວ່າດ້ວຍການອະນຸມັດການໃຫ້ນະໂຍບາຍອາກອນມູນຄ່າເພີ່ມ ເພື່ອໃຫ້ສອດຄ່ອງກັບ ກົດໝາຍ ພາສີ ສະບັບປັບປຸງ, ແລະ ກົດໝາຍອື່ນໆ ທີ່ຕິດພັນ.

- ໄດ້ມີການຕິດຕາມບັນຫານີ້ຜ່ານກອງປະຊຸມຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າກໍ່ໄດ້ຕິດຕາມບັນຫານີ້ ແລະ ຈະສືບຕໍ່ຕິດຕາມເປັນປະຈຳ
- **ໂດຍການຕິດຕາມຄວາມຄືບໜ້າຮອດປີ 2021 ຜູ້ປະກອບການສ່ວນໃຫຍ່ ເຫັນວ່າ ຂັ້ນຕອນການອະນຸຍາດແຜນນຳເຂົ້າສິນຄ້າ ແລະວັດຖຸດິບ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມພາຍໃຕ້ກົດໝາຍສົ່ງເສີມການລົງທຶນ ໄດ້ຮັບການປັບປຸງໃຫ້ສະດວກວ່ອງໄວຂຶ້ນຫຼາຍແລ້ວ ສະນັ້ນຈຶ່ງຖືວ່າບັນຫານີ້ ໄດ້ຮັບການແກ້ໄຂ**

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**:

- ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ
- ກົມພາສີ, ກະຊວງການເງິນ

## 4. ຄ່າໄຟຟ້າ ປະຈຸບັນ ບໍ່ເປັນການສົ່ງເສີມຂະແໜງກະສິກຳ ເທົ່າທີ່ຄວນ

ສະພາບບັນຫາ: ຜູ້ປະກອບການໃນຂະແໜງການກະສິກຳ ເຫັນວ່າ ຂະແໜງ ຂະແໜງການກະສິກຳ ແມ່ນມີຄວາມສຳຄັນຕໍ່ເສດຖະກິດຂອງ ສປປ ລາວ ເນື່ອງຈາກເປັນຂະແໜງທີ່ກວມເອົາການຈ້າງງານສ່ວນໃຫຍ່ຂອງແຮງງານໃນປະເທດ, ທັງຍັງເປັນຂະແໜງຍຸດທະສາດໃນການຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານໃຫ້ກັບພົນລະເມືອງລາວ. ໃນ ແຜນພັດທະນາ ເສດຖະກິດ ແລະ ສັງຄົມຂອງປະເທດ ຍັງລະບຸໃຫ້ ຊຸກຍູ້ສົ່ງເສີມຂະແໜງການຜະລິດກະສິກຳ ເພື່ອໃຫ້ ສາມາດກຳນົດສິນຄ້າກະສິກຳທີ່ເປັນທ່າແຮງສູງຂອງ ຊາດ, ເປັນ ເອກະລັກ ຂອງ ທ້ອງຖິ່ນ ແລະ ສາມາດເປັນບູລິມະສິດໃນການສົ່ງອອກຕາມມາດຖານກະສິກຳສະອາດ ແລະ ຍົກສູງສະມັດຕະພາບຂອງການຜະລິດກະສິກຳ, ພ້ອມທັງໄດ້ກຳນົດນະໂຍບາຍຊຸກຍູ້ສົ່ງເສີມຕ່າງໆໃຫ້ແກ່ຂະແໜງກະສິກຳ ທີ່ລວມເອົານະໂຍບາຍທາງດ້ານການພັດທະນາພື້ນຖານໂຄງລ່າງຢ່າງຄົບຊຸດ ລວມທັງ ການສະໜອງພະລັງງານ ໄຟຟ້າ ແລະ ນ້ຳ ຢ່າງພຽງພໍ ໃຫ້ແກ່ ຊາວກະສິກອນ ແລະ ໂຮງງານ. ຢ່າງໃດກໍ່ຕາມ ຜູ້ປະກອບການກະສິກຳໃນ ສປປ ລາວ ເຫັນວ່າ ຕົ້ນທຶນໃນການຜະລິດກະສິກຳໃນ ສປປ ລາວ ຍັງມີມູນຄ່າສູງ ເຮັດໃຫ້ສິນຄ້າກະສິກຳທີ່ຜະລິດໃນ ສປປ ລາວ ບໍ່ສາມາດແຂ່ງຂັນກັບສິນຄ້າກະສິກຳທີ່ນຳເຂົ້າຈາກປະເທດເພື່ອນບ້ານໄດ້. ດັ່ງນັ້ນ ເພື່ອຫລຸດຜ່ອນຕົ້ນທຶນລາຄາຜະລິດຕະພັນ ກະສິກຳໃນ ສປປ ລາວ, ເພື່ອໃຫ້ຜູ້ຜະລິດໃນ ສປປ ລາວ ສາມາດແຂ່ງຂັນກັບສິນຄ້າກະສິກຳທີ່ມາຈາກຕ່າງປະເທດ, ເພື່ອໃຫ້ຜູ້ຊົມໃຊ້ສາມາດຊື້ສິນຄ້າກະສິກຳໄດ້ໃນລາຄາທີ່ຖືກລົງ ແລະ ເພື່ອໃຫ້ ຂະແໜງດັ່ງກ່າວສາມາດເຕີບໂຕ ແລະ ຮັກສາການຈ້າງງານ, ຄວນມີນະໂຍບາຍສົ່ງເສີມ ດ້ານອັດຕາຄ່າໄຟຟ້າ ໃຫ້ແກ່ຜູ້ຜະລິດກະສິກຳ ໃນ ສປປ ລາວ.

**ຂໍ້ສະເໜີວິທີແກ້ໄຂ**:

1) ພາກລັດຖະບານຄວນພິຈາລະນາ ສົ່ງເສີມ ຂະແໜງກະສິກຳ ໂດຍການປັບອັດຕາຄ່າໄຟຟ້າ ໃຫ້ຫຼຸດລົງ ເພື່ອເປັນຫລຸດຜ່ອນຕົ້ນທຶນຂອງຜູ້ປະກອບການ.

**ຂະແໜງການທີ່ກ່ຽວຂ້ອງ**

1. ກົມນະໂຍບາຍ ແລະ ແຜນພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2. ລັດວິສາຫະກິດ ໄຟຟ້າ ລາວ

**ຄວາມຄືບໜ້າຂອງການແກ້ໄຂ:**

- ສຄອຊ ໄດ້ສົ່ງໜັງສືຫຼາຍສະບັບເຖິງຂະແໜງການກ່ຽວຂ້ອງ ເພື່ອຕິດຕາມການຂໍນະໂຍບາຍອັດຕາຄ່າໄຟຟ້າໃຫ້ກັບຜູ້ປະກອບການ ໂດຍສະເພາະແມ່ນໃນໄລຍະການແຜ່ລະບາດຂອງພະຍາດ ໂຄວິດ 19 (ເດືອນ ມີນາ ຫາ ພຶດສະພາ 2020).

- ກະຊວງພະລັງງານ ແລະ ບໍ່ແຮ່ ແຈ້ງເຖິງລັດວິສາຫະກິດ ໄຟຟ້າລາວ (ເລກທີ 0438/ພບ ລົງວັນທີ 08 ເມສາ 2020) ເພື່ອເລີ່ມຈັດຕັ້ງປະຕິບັດໂຄງສ້າງລາຄາໄຟຟ້າ ສະບັບປັບປຸງໃໝ່ ເລີ່ມແຕ່ເດືອນ ພຶດສະພາ 2020 ເຖິງ ທັນວາ 2025. ໄດ້ມີການຫຼຸດລາຄາຄ່າໄຟ ໃຫ້ແກ່ລູກຄ້າບາງປະເພດ ກວມເອົາ ຜູ້ປະກອບການໃນຂະແໜງການກະສິກຳເຂົ້ານຳ.

- ຜູ້ປະກອບການຜະລິດໃນຂະແໜງການກະສິກຳ ມີຄວາມພໍໃຈກັບອັດຕາ ລາຄາ ໄຟຟ້າ ໃໝ່ ທີ່ໃຫ້ກັບບັນດາທຸລະກິດທີ່ຢູ່ໃນຂະແໜງການຜະລິດກະສິກຳ, ດັ່ງນັ້ນ ຈຶ່ງຖືວ່າ ບັນຫານີ້ໄດ້ຮັບການແກ້ໄຂ.

## 5. ຂັ້ນຕອນການອະນຸມັດເອກະສານເພື່ອຊໍາລະພາສີຢູ່ສາງສິນຄ້າ (ທ່ານາແລ້ງ)

ສະພາບບັນຫາ: ຜ່ານມາ ຜູ້ປະກອບການເຫັນວ່າ ຂັ້ນຕອນການອະນຸມັດເອກະສານແຈ້ງພາສີຢູ່ສາງສິນຄ້າ (ທ່ານາແລ້ງ) ຍັງບໍ່ໄດ້ຖືກປະຕິບັດວິທີການຄິດໄລ່ມູນຄ່າພາສີທີ່ຊັດເຈນ ຈຶ່ງເຮັດໃຫ້ການນໍາສິນຄ້າອອກຈາກສາງສິນຄ້າ ມີຄວາມຊັກຊ້າ. ໃນການຊໍາລະພາສີ ກ່ອນນໍາສິນຄ້າອອກຈາກສາງ ໂດຍປົກກະຕິແລ້ວ ແມ່ນອີງໃສ່ມູນຄ່າສິນຄ້າທີ່ລະບຸທີ່ຢູ່ໃນໃບແຈ້ງລາຄາສິນຄ້າ (invoice) ເພື່ອມາຄິດໄລ່ມູນຄ່າພາສີທີ່ຜູ້ປະກອບການຕ້ອງຊໍາລະ, ແຕ່ໃນບາງກໍລະນີຂອງການຈັດຕັ້ງປະຕິບັດຜ່ານມາ ເຈົ້າໜ້າທີ່ພາສີບໍ່ໄດ້ຖືເອົາມູນຄ່າທີ່ລະບຸທີ່ຢູ່ໃນໃບແຈ້ງລາຄາສິນຄ້າ (invoice) ມາຄິດໄລ່ພາສີທີ່ຜູ້ປະກອບການຕ້ອງຊໍາລະ ແຕ່ຈະອີງໃສ່ການປະເມີນມູນຄ່າສິນຄ້າດ້ວຍຕົນເອງຂອງເຈົ້າໜ້າທີ່ໃນການຄິດໄລ່. ຜູ້ປະກອບການເຫັນວ່າ ການປະເມີນມູນຄ່າສິນຄ້າໃນລັກສະນະດັ່ງກ່າວ ບໍ່ແມ່ນການຈັດຕັ້ງປະຕິບັດທີ່ມີມາດຕະຖານທີ່ຊັດເຈນ, ສ້າງຄວາມບໍ່ເປັນທໍາແກ່ຜູ້ປະກອບການ ແລະ ເຮັດໃຫ້ຂອດແຈ້ງເອກະສານພາສີຢູ່ສາງສິນຄ້າ ມີຄວາມຊັກຊ້າ.

**ຂໍ້ສະເໜີວິທີແກ້ໄຂ:**

1) ສະເໜີໃຫ້ ຂະແໜງພາສີ ປັບປຸງ ຂັ້ນຕອນການຊໍາລະພາສີຢູ່ສາງສິນຄ້າໃຫ້ມີຄວາມສະດວກ ແລະ ມີວິທີການຄິດໄລ່ທີ່ຊັດເຈນ, ແລະ ປະຕິບັດໃຫ້ເປັນມາດຕະຖານ ແກ່ທຸກຜູ້ປະກອບການ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມພາສີ, ກະຊວງການເງິນ
2. ລັດວິສາຫະກິດສາງສິນຄ້າຜ່ານແດນທ່ານາແລ້ງ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ**

- ອີງຕາມ ການປຶກສາຫາລື ໃນກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ບັນຫາທີ່ຕິດພັນກັບການອໍານວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ ຄັ້ງວັນທີ 16 ກັນຍາ 2020, ແລະ ກອງປະຊຸມຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ (ຂັ້ນຄະນະກົມ) ຄັ້ງວັນທີ 02 ພະຈິກ 2020:

  - ➢ ຕາງໜ້າ ຈາກກົມພາສີ: ຂັ້ນຕອນການແຈ້ງພາສີເປັນລາຍລະອຽດ, ຂັ້ນຕອນການກວດປ່ອຍສິນຄ້າ ແລະ ຂັ້ນຕອນການຊໍາລະສະສາງ ແມ່ນລະບຸໃນບົດແນະນໍາກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ ເລກທີ 00097/ກພສ ລົງວັນທີ 06 ມັງກອນ 2017. ຕໍ່ກັບການປະເມີນມູນຄ່າສິນຄ້າ ແມ່ນ ອີງໃສ່ ກົດໝາຍພາສີ ທີ່ກໍານົດໃຫ້ຄິດໄລ່ຕາມມູນຄ່າການຊື້-ຂາຍໂຕຈິງ, ແລະ ອີງຕາມ 6 ຫຼັກການໃນການປະເມີນມູນຄ່າສິນຄ້າຂອງອົງການການຄ້າໂລກ (WTO). ເນື່ອງຈາກ ຜ່ານມາອາດມີໃບເກັບເງິນ (invoice) ຂອງບາງບໍລິສັດເຫັນວ່າຍັງບໍ່ໄດ້ມາດຕະຖານ, ຈຶ່ງຂາດຄວາມໜ້າເຊື່ອຖື.
  - ➢ ປະຈຸບັນ, ມີ ບົດແນະນໍາ ວ່າດ້ວຍການກໍາມູນຄ່າແຈ້ງພາສີ ສໍາລັບ ສິນຄ້ານໍາເຂົ້າ ເລກທ 1537/ກງ, ລົງວັນທ 04 ມິຖຸນາ 2012, ຄູ່ມືໃນການກໍານົດມູນຄ່າແຈ້ງພາສີ ແລະ ລະບຽບການທີ່ກ່ຽວຂ້ອງທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ. ເຖິງຢ່າງໃດກໍ່ຕາມ, ຖ້າມີ ຄວາມຈໍາເປັນໃນການ ປັບປຸງນິຕິກໍາດັ່ງກ່າວ ເພື່ອໃຫ້ຂັ້ນຕອນ ແລະ ເອກະສານ ສໍາລັບການແຈ້ງ ພາສີ ແລະ ກວດປ່ອຍສິນຄ້າ ມີຄວາມສະດວກຂຶ້ນ, ກົມ

ພາສ ຈະຖິ້ມຄວ້ານິຕິກຳ ດັ່ງກ່າວຄືນ. ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຈະແຈ້ງນິຕິກຳ ດັ່ງກ່າວ ໃຫ້ບັນດາພາກທຸລະກິດທີ່ກ່ຽວຂ້ອງ ຮັບຊາບ.

- ກຸ່ມຜູ້ປະກອບການທີ່ໄດ້ປະສົບບັນຫາດັ່ງກ່າວ ເຫັນວ່າໄດ້ຮັບຄຳຕອບທີ່ຊັດເຈນແລ້ວ ຕໍ່ກັບບັນຫານີ້ ສະນັ້ນບັນຫານີ້ ຈະບໍ່ໄດ້ມີການຍົກຂຶ້ນມາປຶກສາຫາລື ໃນກອງປະຊຸມທຸລະກິດລາວຄັ້ງທີ 13, ແຕ່ ສຄອຊ ຈະສືບຕໍ່ຮ່ວມກັບກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຕິດຕາມຕື່ມກັບບັນດາຜູ້ປະກອບການ ຖ້າເຫັນວ່າມີຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດ ບົດແນະນຳ ວ່າດ້ວຍການກຳມູນຄ່າແຈ້ງພາສີ ມີໃນການກຳນົດມູນຄ່າແຈ້ງພາສີ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ການຈັດຕັ້ງປະຕິບັດບໍ່ເປັນເອກະພາບກັນ ຈິ່ງຈະໄດ້ລາຍງານຫາຂະແໜງການກ່ຽວຂ້ອງ ເພື່ອປຶກສາຫາລື ເພີ່ມເຕີມ.

## 6. ລະບຽບການຄຸ້ມຄອງດ້ານອະສັງຫາລິມມະຊັບ

**ສະພາບຂອງບັນຫາ:** ສະພາບການລົງທຶນໃນດ້ານອະສັງຫາລິມະຊັບ ໃນ ສປປລາວ ໃນໄລຍະປີຜ່ານມາ ບໍ່ຄຶກຄື້ນຄືດັ່ງຊຸມປີກ່ອນໆ ເນື່ອງຈາກ ບໍ່ມີນິຕິກຳມາຮອງຮັບການຂະຫຍາຍຕົວຂອງການລົງທຶນດ້ານອະສັງຫາລິມມະຊັບ ຄືກັບດ້ານອື່ນໆເທື່ອ. ໄດ້ມີນັກລົງທຶນຕ່າງປະເທດຈຳນວນຫຼາຍ ສົນໃຈເຂົ້າມາລົງທຶນດ້ານຄອນໂດມິນຽມຢູ່ ສປປ ລາວ ແລະຜ່ານມາເຫັນວ່າມີການປຸກສ້າງຕຶກອາຄານສູງເພີ່ມຂຶ້ນເລື້ອຍໆ, ແຕ່ ກໍ່ຍັງບໍ່ມີກົດໝາຍ ຫຼື ກົດລະບຽບຮອງຮັບເທື່ອ. ເນື່ອງຈາກບັນດາປະເທດອາຊຽນກໍ່ມີກົດໝາຍ ຫຼື ກົດລະບຽບ ຄຸ້ມຄອງ ຄອນໂດ, ດັ່ງນັ້ນ ເພື່ອເປັນການຈັດລະບຽບການປຸກສ້າງ ແລະ ຮັບຮອງຄວາມປອດໄພ ພ້ອມກັບສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ, ສປປ ລາວ ຄວນມີລະບຽບການ ເພື່ອຄຸ້ມຄອງດ້ານອະສັງຫາລິມມະຊັບເຊັ່ນດຽວກັບບັນດາປະເທດອື່ນໆໃນຂົງເຂດອາຊຽນ. ບັນຫານີ້ໄດ້ຖືກຍົກຂຶ້ນມາປຶກສາຫາລື ໃນກົນໄກກອງປະຊຸມທຸລະກິດລາວຄັ້ງທີ 10 ແລະ ຄັ້ງທີ 13 ແລະຂໍ້ສະເໜີຜ່ານມາກໍ່ໄດ້ຮັບການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງໃຫ້ສືບຕໍ່ຕິດຕາມການແກ້ໄຂ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ໜ່ວຍງານພາກລັດທີ່ກ່ຽວຂ້ອງ ກຳນົດເວລາໃນການສ້າງກົດໝາຍອາຄານ ຫຼືລະບຽບການກ່ຽວຂ້ອງ ໃຫ້ຊັດເຈນ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1. ກົມເຄຫາແລະຜັງເມືອງ, ກະຊວງໂຍທາທິການແລະຂົນສົ່ງ
2. ກົມຄຸ້ມຄອງທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ

**ຄວາມຄືບໜ້າຂອງການແກ້ໄຂບັນຫາລ່າສຸດ**

- ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ສຳເລັດການປັບປຸງ ແລະ ປະກາດນຳໃຊ້ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ໃນທ້າຍປີ 2020. ໃນກົດໝາຍທີ່ດິນສະບັບປັບປຸງ, ໝວດທີ 3, ມາດຕາທີ 106-108 ເຊິ່ງເປັນມາດຕາໃໝ່ໃນກົດໝາຍວ່າດ້ວຍທີ່ດິນ ໄດ້ລະບຸ ເງື່ອນໄຂ, ເອກະສານປະກອບ ແລະ ຂັ້ນການພິຈາລະນາ ການຂຶ້ນທະບຽນທີ່ດິນປຸກສ້າງຄອນໂດມິນຽມ.
- ຜູ້ປະກອບການເຫັນວ່າ ເປັນບາດກ້າວທີ່ດີ ໃນການແກ້ໄຂບັນຫາ ເນື່ອງຈາກ ການປຸກສ້າງຄອນໂດມິນຽມໃນ ສປປ ລາວ ປະຈຸບັນແມ່ນມີນິຕິກຳຮອງຮັບຢ່າງເປັນທາງການແລ້ວ. ດັ່ງນັ້ນ ບັນຫານີ້ ຈະບໍ່ໄດ້ຖືກຍົກຂຶ້ນມາປຶກສາຫາລື ໃນກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ.
- ຢ່າງໃດກໍ່ຕາມ ສຄອຊ ຈະສືບຕໍ່ຕິດຕາມ ການຈັດຕັ້ງປະຕິບັດກົດໝາຍທີ່ດິນສະບັບປັບປຸງ ຮ່ວມກັບຜູ້ປະກອບການຕື່ມ ເນື່ອງຈາກປະຈຸບັນຍັງບໍ່ມີຄຳແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງອອກມາພ້ອມກັບກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງເທື່ອ. ສະນັ້ນຖ້າຫາກເກີດມີຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດ, ສຄອຊ ຈະໄດ້ມີການລາຍງານຫາຂະແໜງການກ່ຽວຂ້ອງເພີ່ມເຕີມໃນຕໍ່ໜ້າ.

## 7. ພາສີນຳເຂົ້າວັດຖຸອຸປະກອນເພື່ອມາຮັບໃຊ້ການຜະລິດ ມີມູນຄ່າສູງ

ສະພາບບັນຫາ: ການເກັບພາສີນຳເຂົ້າ ເປັນວິທີການໜຶ່ງໃນການເກັບລາຍຮັບລັດຖະບານ ແຕ່ ການເກັບພາສີນຳເຂົ້າສຳລັບວັດຖຸເຄິ່ງສຳເລັດຮູບທີ່ນຳມາຜະລິດເປັນສິນຄ້າ ກໍ່ມີຜົນກະທົບຕໍ່ກັບຜູ້ປະກອບການພາຍໃນປະເທດ ທີ່ນຳເຂົ້າວັດຖຸດັ່ງກ່າວເຂົ້າມາປະກອບການຜະລິດ ເນື່ອງຈາກ ພາສີນຳເຂົ້າທີ່ເພີ່ມໃສ່ຄ່າວັດຖຸດັ່ງກ່າວ ເຮັດໃຫ້ຜູ້ປະກອບການມີຕົ້ນທຶນການຜະລິດທີ່ສູງຂຶ້ນ ແລະ ມີຂໍ້ຈຳກັດໃນການເຂົ້າເຖິງແຫຼ່ງວັດຖຸອຸປະກອນທີ່ຫຼາກຫຼາຍຈາກຕ່າງປະເທດ. ສາເຫດດັ່ງກ່າວ ເຮັດໃຫ້ຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການຜະລິດພາຍໃນປະເທດຫຼຸດລົງ, ພ້ອມກັນນີ້ ກໍ່ເຮັດໃຫ້ຜູ້ຊົມໃຊ້ສິນຄ້າພາຍໃນປະເທດ ຕ້ອງໄດ້ຊື້ສິນຄ້າ ຫຼື ການບໍລິການ ທີ່ມີລາຄາແພງຂຶ້ນ. ໃນບັນດາບົດສຶກສາຕ່າງໆຈາກຕ່າງປະເທດ ຍົກໃຫ້ເຫັນວ່າການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າສິນຄ້າ ໂດຍສະເພາະແມ່ນການຫຼຸດພາສີນຳເຂົ້າຕໍ່ກັບສິນຄ້າປະເພດວັດຖຸເຄິ່ງສຳເລັດຮູບທີ່ມາຮັບໃຊ້ການຜະລິດພາຍໃນປະເທດ ສາມາດເຮັດໃຫ້ເກີດຜົນໄດ້ຮັບທີ່ດີແກ່ປະເທດຜູ້ນຳເຂົ້າ ເນື່ອງຈາກເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນປະເທດສາມາດເຂົ້າເຖິງແຫຼ່ງວັດຖຸອຸປະກອນທີ່ຫຼາກຫຼາຍທີ່ອາດຈະບໍ່ມີການສະໜອງພາຍໃນປະເທດໄດ້ ໃນລາຄາທີ່ຕໍ່າລົງ. ຢ່າງໃດກໍ່ຕາມ ປະຈຸບັນ ຜູ້ປະກອບການຜະລິດໃນ ສປປ ລາວ ເຫັນວ່າ ຍັງບໍ່ມີການອຳນວຍຄວາມສະດວກທາງດ້ານພາສີນຳເຂົ້າທີ່ພຽງພໍ ຕໍ່ກັບການນຳເຂົ້າວັດຖຸອຸປະກອນມາປະກອບການຜະລິດ. ກໍລະນີຕົວຢ່າງຜ່ານມາ: ໃນອຸດສາຫະກຳໂຮງພິມ ທີ່ນຳເຂົ້າເຈ້ຍມາເປັນວັດຖຸດິບເພື່ອປ້ອນການຜະລິດ ຕ້ອງໄດ້ຈ່າຍພາສີນຳເຂົ້າເຈ້ຍ 5%. ສາເຫດດັ່ງກ່າວເຮັດ ໃຫ້ຜູ້ປະກອບການໂຮງພິມໃນ ສປປ ລາວ ມີຕົ້ນທຶນການຜະລິດທີ່ສູງ ແລະ ເປັນໜຶ່ງໃນສາເຫດທີ່ເຮັດໃຫ້ບໍ່ສາມາດແຂ່ງຂັນກັບໂຮງພິມຂອງປະເທດເພື່ອນບ້ານໄດ້.

**ຂໍ້ສະເໜີວິທີແກ້ໄຂ:**

- ສຶກສາລະອຽດ ແລະ ປະເມີນຄືນ ຜົນດີ ແລະ ຜົນເສຍ ຕໍ່ກັບການເກັບພາສີນຳເຂົ້າສິນຄ້າປະເພດວັດຖຸດິບເພື່ອມາຮັບໃຊ້ການຜະລິດພາຍໃນ ພ້ອມທັງ ສຶກສາປະເພດຂະແໜງການຜະລິດທີ່ຈະສາມາດເຮັດໃຫ້ເກີດຜົນປະໂຫຍດສູງສຸດຖ້າຫາກໄດ້ຮັບການຫຼຸດພາສີນຳເຂົ້າຕໍ່ກັບວັດຖຸອຸປະກອນທີ່ມາຮັບໃຊ້ການຜະລິດຂອງຂະແໜງການຜະລິດນັ້ນໆ
- ຫຼຸດພາສີນຳເຂົ້າຕໍ່ກັບວັດຖຸອຸປະກອນທີ່ມາຮັບໃຊ້ການຜະລິດ ຂອງຂະແໜງການຜະລິດທີ່ເຫັນວ່າຈະສາມາດເຮັດໃຫ້ເກີດຜົນປະໂຫຍດສູງສຸດ ຕໍ່ການສົ່ງອອກ ແລະ ຕໍ່ຜູ້ຊົມໃຊ້ພາຍໃນປະເທດ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1) ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຸດສາຫະກຳ ແລະ ການຄ້າ
2) ກົມພາສີ, ກະຊວງການເງິນ

**ຄວາມຄືບໜ້າຂອງການແກ້ໄຂບັນຫາລ່າສຸດ**

- ອີງຕາມຄຳເຫັນຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
  - ➢ ຕາງໜ້າ ຈາກກົມປູກຝັງ: ສຳລັບ ສິນຄ້າກະສິກຳ ທີ່ຈະນຳເຂົ້າ ແລະ ສົ່ງອອກ ຈະຕ້ອງໄດ້ຜ່ານການເຈລະຈາດ້ານສຸຂະອະນາໄມພືດ ແລະ ມາດຕະຖານສິນຄ້າພືດ (ມາດຕະຖານຂອງ ASEAN, ແລະ

WTO) ເຊິ່ງມີທັງໝົດ 136 ລາຍການທີ່ໄດ້ຜ່ານການເຈລະຈາ. ສ່ວນສິນຄ້າທີ່ບໍ່ໄດ້ຜ່ານການເຈລະຈາ ຈະຕ້ອງໄດ້ຖືກເສຍພາສີ.

- ຕາງໜ້າ ຈາກກົມພາສີ: ສໍາລັບ ການນໍາເຂົ້າສິນຄ້າໃນກອບ ASEAN ໃນປະຈຸບັນ ສໍາລັບສິນຄ້າ 10 ພັນກວ່າລາຍການຕາມສາລະບານອັດຕາພາສີ, ໃນນັ້ນ 96% ຂອງລາຍການສິນຄ້າ ແມ່ນມີ ອັດຕາພາສີນໍາເຂົ້າ ເທົ່າກັບ 0% (ສູນ). ສະນັ້ນ ຖ້າຫາກຜູ້ປະກອບການມີການຢັ້ງຢືນເອກະສານຄົບຖ້ວນຕາມຫຼັກການໃນການແຈ້ງພາສີ ເພື່ອ ໂດຍມີການປະກອບ Form-D ໃນການນໍາເຂົ້າສິນຄ້າ ແມ່ນຈະໄດ້ອັດຕາພາສີ 0% (ສູນ). ຖ້າເຫັນວ່າຍັງມີສິນຄ້າໃດທີ່ຕ້ອງການສະເໜີຫຼຸດອັດຕາພາສີ ແມ່ນໃຫ້ສະເໜີຫາກົມພາສີເພີ່ມເຕີມເພື່ອພິຈາລະນາ.

- ອີງຕາມຂໍ້ສະຫຼຸບຈາກກອງປະຊຸມຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ (ຂັ້ນກົມ) ຄັ້ງວັນທີ 02 ພະຈິກ 2020: ກົມພາສີມີຄໍາແນະນໍາ ກ່ຽວກັບແຫຼ່ງກໍາເນີດສິນຄ້າ ແລະ ການໃຫ້ສິດທິພິເສດທາງດ້ານອັດຕາພາສີ ຕາມເງື່ອນໄຂຂອງບັນດາສັນຍາການຄ້າເສລີ ຕ່າງໆ ທີ່ ສປປ ລາວ ເຂົ້າເປັນພາຄີ ເລກທີ 03782/ກພສ ລົງວັນທີ 16 ກຸມພາ 2016 ເຊິ່ງໄດ້ກໍານົດລະອຽດກ່ຽວກັບຂັ້ນຕອນ ແລະ ລະບຽບການໃນການຂໍສິດທິພິເສດທາງດ້ານອັດຕາພາສີນໍາເຂົ້າໃນກອບການຮ່ວມມືຕ່າງໆຢ່າງຊັດເຈນ. ຢ່າງໃດກໍ່ຕາມກົມພາສີຈະສືບຕໍ່ເຜີຍແຜ່ຄໍາແນະນໍາດັ່ງກ່າວໃຫ້ແກ່ບັນດາທຸລະກິດທີ່ກ່ຽວຂ້ອງຢ່າງກວ້າງຂວາງຕື່ມ. ຖ້າເຫັນວ່າມີຄວາມຈໍາເປັນໃນການປັບປຸງນິຕິກໍາດັ່ງກ່າວເພື່ອໃຫ້ຂັ້ນຕອນ ແລະ ເອກະສານສໍາລັບການຂໍສິດທິພິເສດທາງດ້ານອັດຕາພາສີນໍາເຂົ້າມີຄວາມສະດວກວ່ອງໄວຂຶ້ນ, ກົມພາສີຈະຄົ້ນຄວ້ານິຕິກໍາດັ່ງກ່າວຄືນ.
- ກຸ່ມຜູ້ປະກອບການທີ່ປະສົບບັນຫາ ເຫັນວ່າໄດ້ຮັບຄໍາຕອບທີ່ຊັດເຈນສໍາລັບບັນຫານີ້ ດັ່ງນັ້ນ ບັນຫານີ້ຈະບໍ່ໄດ້ຖືກຍົກຂຶ້ນເພື່ອປຶກສາຫາລືໃນກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ. ຢ່າງໃດກໍ່ຕາມ ສຄອຊ ຈະຮ່ວມກັບ ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ເພື່ອຕິດຕາມຕື່ມຕໍ່ກັບບັນຫານີ້ ຖ້າເຫັນວ່າ ຍັງມີສິນຄ້າປະເພດໃດ ຫຼື ຂັ້ນຕອນໃດ ທີ່ຜູ້ປະກອບການເຫັນວ່າຍັງເປັນຂໍ້ຄົງຄ້າງ ກ່ຽວກັບພາສີນໍາເຂົ້າວັດຖຸອຸປະກອນເພື່ອມາຮັບໃຊ້ການຜະລິດ ກໍ່ອາດຈະໄດ້ຍົກບັນຫານີ້ ລາຍງານແກ່ຂະແໜງການກ່ຽວຂ້ອງເພື່ອປຶກສາຫາລືທາງອອກຮ່ວມກັນຕື່ມຕາມພາຍຫຼັງ.

## 8. ການເຂົ້າຫາຖານຂໍ້ມູນການຜະລິດກະສິກຳໃນ ສປປ ລາວ

ສະພາບບັນຫາ: ປະຈຸບັນ ຂໍ້ມູນທາງດ້ານການຜະລິດ, ການນຳເຂົ້າ ແລະ ສົ່ງອອກ ຜົນຜະລິດກະສິກຳ ໃນ ສປປ ລາວ ຍັງມີຂໍ້ຈຳກັດ ທັງໃນດ້ານຄວາມຄົບຖ້ວນຂອງຂໍ້ມູນ ແລະ ຄວາມອາດສາມາດຂອງການເຂົ້າເຖິງຂໍ້ມູນດັ່ງກ່າວ ຂອງຜູ້ປະກອບການ ເຊັ່ນ ຂໍ້ມູນຜູ້ຜະລິດ, ປະເພດ ແລະ ຈຳນວນຜົນຜະລິດກະສິກຳຕໍ່ປີ ທີ່ຜະລິດ ໃນ ສປປ ລາວ ແລະ ທີ່ນຳເຂົ້າ ຫຼື ສົ່ງອອກ, ຈຶ່ງເປັນສາເຫດໃຫ້ການຕັດ ສິນໃຈລົງທຶນໃນຂະແໜງການຜະລິດກະສິກຳ ເປັນໄປໄດ້ຍາກ ເນື່ອງຈາກຜູ້ລົງທຶນບໍ່ສາມາດເຂົ້າຫາຂໍ້ມູນດັ່ງກ່າວ ຈຶ່ງບໍ່ສາມາດປະເມີນຕະຫຼາດ ແລະ ຄູ່ແຂ່ງໃນຕະຫຼາດໄດ້. ຂໍ້ຈຳກັດດັ່ງກ່າວ ເຫັນວ່າບໍ່ສົ່ງເສີມໃຫ້ມີການລົງທຶນໃນຂະແໜງການກະສິກຳ ໃນ ສປປ ລາວ ເທົ່າທີ່ຄວນ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ຮ່ວມກັບ ກະຊວງອຸດສາຫະກຳ ແລະ ການຄ້າ ປັບປຸງຖານຂໍ້ມູນ ການຜະລິດ, ການນຳເຂົ້າ ແລະ ສົ່ງອອກ ຜົນຜະລິດກະສິກຳ ໃນ ສປປ ລາວ ໃຫ້ມີຂໍ້ມູນທີ່ສົມບູນຍິ່ງຂຶ້ນ, ພ້ອມທັງ ສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະ ແມ່ນຂໍ້ມູນຜູ້ຜະລິດ, ປະເພດ ແລະ ຈຳນວນຜົນຜະລິດກະສິກຳຕໍ່ປີ ທີ່ຜະລິດ ໃນ ສປປ ໃນແຕ່ລະພື້ນທີ່, ແລະ ທີ່ນຳເຂົ້າ ຫຼື ສົ່ງອອກ ພ້ອມທັງເຜີຍແຜ່ວິທີການນຳໃຊ້ລະບົບຖານຂໍ້ມູນດັ່ງກ່າວໃຫ້ພາກທຸລະກິດຮັບຊາບ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້
2. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຄ

**ຄວາມຄືບໜ້າຂອງການແກ້ໄຂບັນຫາລ່າສຸດ**

- ອີງຕາມຜົນຂອງກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບກະສິກຳ) ຄັ້ງວັນທີ 01 ທັນວາ 2020, ກົມປູກຝັງຕອບວ່າ ກົມປູກຝັງ ໄດ້ມີການເກັບກຳ ຂໍ້ມູນດ້ານການ ຜະລິດ, ນຳເຂົ້າ ແລະ ສົ່ງອອກ ສິນຄ້າກະສິກຳ (ຍົກເວັ້ນ ສິນຄ້າ ນຳເຂົ້າ ແລະ ສົ່ງອອກຜ່ານດ່ານປະເພນີ) ໃນ ສປປ ລາວ ຢ່າງເປັນປະຈຳໃນແຕ່ລະປີ ເຊິ່ງເປັນຂໍ້ມູນທີ່ສາມາດເຜີຍແຜ່ໃຫ້ແກ່ພາຍນອກໄດ້. ຢູ່ພາຍໃຕ້ກົມປູກຝັງ ແມ່ນມີໜ່ວຍງານສະເພາະທີ່ສາມາດສະໜອງຂໍ້ມູນດັ່ງກ່າວໃຫ້ແກ່ຜູ້ປະກອບການໄດ້, ສະນັ້ນ ຜູ້ປະກອບການສາມາດຕິດຕໍ່ພົວພັນເພື່ອຂໍຂໍ້ມູນດັ່ງກ່າວໄດ້ທີ່ກົມປູກຝັງ (ມີຄ່າໃຊ້ຈ່າຍ). ຢ່າງໃດກໍ່ຕາມ ປະຈຸບັນ ແມ່ນຍັງບໍ່ສາມາດເອົາຂໍ້ມູນດັ່ງກ່າວລົງໃນເວບໄຊທ໌ຂອງກົມປູກຝັງໄດ້ເທື່ອ ເນື່ອງຈາກເວບໄຊທ໌ ຍັງບໍ່ສາມາດຮອງຮັບຮູບແບບຂອງຂໍ້ມູນ.
- ຜູ້ປະກອບການເຫັນວ່າ ໄດ້ຮັບຄຳຕອບທີ່ຊັດເຈນແລ້ວ ຕໍ່ກັບບັນຫານີ້ ສະນັ້ນ ບັນຫານີ້ຈະບໍ່ໄດ້ຖືກຍົກຂຶ້ນມາປຶກສາຫາລື ໃນກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ.
- ຢ່າງໃດກໍ່ຕາມ ສຄອຊ ຈະມີການຕິດຕາມກັບຜູ້ປະກອບການຕື່ມ ຖ້າຜູ້ປະກອບການເຫັນວ່າຍັງມີຂໍ້ຄົງຄ້າງໃນການເຂົ້າຫາຂໍ້ມູນດັ່ງກ່າວ ໂດຍສະເພາະ ແມ່ນດ້ານຄ່າໃຊ້ຈ່າຍໃນການເຂົ້າຫາຂໍ້ມູນ ຖ້າເຫັນວ່າສູງເກີນໄປ ອາດຈະມີການລາຍງານຫາຂະແໜງການກ່ຽວຂ້ອງເພີ່ມເຕີມ ເພື່ອປຶກສາຫາລືວິທີແກ້ໄຂ.

## II. ບັນຫາທີ່ຈະບໍ່ສືບຕໍ່ປຶກສາຫາລື ແລະ ຕິດຕາມ

### 1. ອັດຕາຄ່າໄຟຟ້າປະຈຸບັນບໍ່ເປັນການສົ່ງເສີມຂະແໜງການບໍລິການ

ສະພາບບັນຫາ: ເນື່ອງຈາກເຫັນໄດ້ເຖິງຄວາມສຳຄັນຂອງຂະແໜງການທ່ອງທ່ຽວ ຕໍ່ການສ້າງລາຍຮັບຂອງປະເທດ, ການຊຸກຍູ້ສົ່ງເສີມ ຂະແໜງທຸລະກິດການບໍລິການ ໂດຍສະເພາະທຸລະກິດການບໍລິການຫຼັກ ທີ່ປິ່ນອ້ອມການທ່ອງທ່ຽວ ກໍ່ຄວນຈະໄດ້ຮັບການສົ່ງເສີມຈາກພາກລັດຖະບານ ເພື່ອຫລຸດຜ່ອນຕົ້ນທຶນລາຄາ ຜະລິດຕະພັນການທ່ອງທ່ຽວລົງ.ປະຈຸບັນນີ້ ຂະແໜງທຸລະກິດດ້ານບໍລິການ ເປັນຕົ້ນແມ່ນບັນ ໂຮງແຮມ, ຮ້ານອາຫານ, ແລະ ບັນດາແຫຼ່ງບໍລິການ ທ່ອງທ່ຽວ ຕ່າງໆ ແມ່ນບໍ່ໄດ້ຮັບສິດທິພິເສດດ້ານຄ່າໄຟຟ້າ ຄືກັນກັບຂະແໜງອຸດສະຫະກຳ ຈຶ່ງເຮັດໃຫ້ມີຄ່າໃຊ້ຈ່າຍໄຟຟ້າສູງຫຼາຍ. ຂະແໜງບໍລິການແມ່ນ ມີບົດບາດສຳຄັນຫລາຍຕໍ່ການພັດທະນາເສດຖະກິດ ເນື່ອງຈາກ ກວມເອົາເກືອບ 40% ຂອງ ຜະລິດຕະພັນມວນລວມ ຫຼື GDP ຂອງປະເທດ, ເຊິ່ງ ຫຼາຍກວ່າຂະແໜງອຸດສະຫາກຳທີ່ກວມເອົາ 33.2%. ສະນັ້ນພາກທຸລະກິດເຫັນວ່າ ລັດຖະບານກໍ່ຄວນເອົາໃຈໃສ່ສົ່ງເສີມຂະແໜງການບໍລິການ ເຊັ່ນດຽວກັນກັບຂະແໜງອຸດສາຫະກຳ. ປະຈຸບັນເຫັນວ່າອັດຄ່າໄຟຟ້າຂອງຂະແໜງການຄ້າ ແລະ ບໍລິການ ສູງກ່ວາປະເພດ ອຸດສາຫະກຳຫລາຍກ່ວາ 40% (ຕົວຢ່າງລາຄາໄຟຟ້າແຮງດັນຕໍ່າ ຕໍ່ກິໂລວັດໂມງ: ອຸດສາຫະກຳ ເທົ່າກັບ 779 ກີບ, ການບໍລິການ ເທົ່າກັບ 1101 ກີບ, ອີງຕາມ ລາຄາປີ 2017) . ເມື່ອທຽບກັບປະເທດອ້ອມຂ້າງ ເຊັ່ນ ປະເທດໄທ ທີ່ມີການພັດທະນາດ້ານການບໍລິການ ແລະ ການທ່ອງທ່ຽວຫລາຍກ່ວາ ສປປລາວ, ເຫັນວ່າ ອັດຕາຄ່າໄຟຟ້າ ສຳລັບຂະແໜງການຄ້າແລະການບໍລິການ ແມ່ນຕໍ່າກ່ວາ ຂະແໜງອຸດສາຫະກຳເກີນ 30% .

**ຂໍ້ສະເໜີວິທີແກ້ໄຂ:**

2) ພາກລັດຖະບານຄວນພິຈາລະນາ ສົ່ງເສີມ ຂະແໜງການບໍລິການ ໂດຍການປັບອັດຕາຄ່າໄຟຟ້າ ໃຫ້ເທົ່າກັນກັບຂະແໜງອຸດສະຫະກຳ ເພື່ອເປັນຫລຸດຜ່ອນຕົ້ນທຶນຂອງຜູ້ປະກອບການດ້ານການບໍລິການລົງ.

**ຂະແໜງການທີ່ກ່ຽວຂ້ອງ**

3. ກົມນະໂຍບາຍ ແລະ ແຜນພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
4. ລັດວິສາຫະກິດ ໄຟຟ້າ ລາວ

**ຄວາມຄືບໜ້າການແກ້ໄຂລ່າສຸດ:**

- ອີງຕາມຄຳຕອບທີ່ຜ່ານມາຂອງຂະແໜງການກ່ຽວຂ້ອງ ເຫັນວ່າສຳລັບບັນຫານີ້ ລັດຖະບານບໍ່ມີທິດທາງທີ່ສາມາດແກ້ໄຂຕາມການສະເໜີຂອງພາກທຸລະກິດ, ສະນັ້ນ ຈະບໍ່ມີການສືບຕໍ່ສະເໜີບັນຫານີ້ໃນກອງປະຊຸມທຸລະກິດລາວ ຄັ້ງທີ 13.
- ອີງຕາມຄຳຕອບຂອງກົມນະໂຍບາຍພະລັງງານ ແລະ ແຜນພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 335/ພບ.ກນຜ ວັນທີ 28 ເມສາ 2020, ອັດຕາຄ່າໄຟຟ້າ ຂອງຂະແໜງການບໍລິການ ແມ່ນຖືກປັບໃຫ້ຫຼຸດລົງຈາກອັດຕາເກົ່າ (ອີງຕາມ ໂຄງສ້າງລາຄາໄຟຟ້າ ແຈ້ງການສະບັບເລກທີ 394/ຫສນຍ ລົງວັນທີ 19 ມີນາ 2020, ໂດຍໃຫ້ເລີ່ມຈັດຕັ້ງປະຕິບັດອັດຕາໃໝ່ ແຕ່ວັນທີ 01 ພຶດສະພາ 2020 ຮອດ ວັນທີ 31 ທັນວາ 2025), ສ່ວນຂໍ້ສະເໜີທີ່ໃຫ້ອັດຕາຄ່າໄຟຟ້າຂອງຂະແໜງການບໍລິການ ເທົ່າກັບຂະແໜງອຸດສາຫະກຳ ແມ່ນ

ບໍ່ສາມາດປະຕິບັດໄດ້ ເນື່ອງຈາກສະພາບການທາງດ້ານເສດຖະກິດໃນປະຈຸບັນ ທີ່ລັດຖະບານ ເລັ່ງໃສ່ການສົ່ງເສີມການຜະລິດສິນຄ້າໃຫ້ເພີ່ມຂຶ້ນໂດຍການສົ່ງເສີມໃຫ້ບັນດາອຸດສາຫະກໍາໃຫຍ່ໆມີການຜະລິດຫຼາຍຂຶ້ນ. ພາກທຸລະກິດ ເຫັນວ່າ ບັນຫານີ້ ແມ່ນຍັງໄດ້ຮັບການແກ້ໄຂ.

- ຜົນການປຶກສາຫາລື ຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ( ບັນຫາທີ່ຕິດພັນກັບການທ່ອງທ່ຽວ) ຄັ້ງວັນທີ 17 ກັນຍາ 2019:
  - ຕາງໜ້າ ກົມນະໂຍບາຍພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່: ອັດຕາສ່ວນການນໍາໃຊ້ໄຟຟ້າຂອງຂະແໜງບໍລິການປະຈຸບັນຍັງບໍ່ສູງ (16.5%, ສ່ວນຂະແໜງອຸດສາຫະກໍາ ແມ່ນ 42%). ອີງຕາມທິດຊີ້ນໍາຂອງລັດຖະບານທີ່ຕ້ອງການເນັ້ນໜັກກ່ຽວກັບການຄໍ້າຈູນດ້ານສະບຽງອາຫານ, ກະຊວງ ພະລັງງານຈຶ່ງພິຈາລະນາວິເຄາະຄ່າໄຟຟ້າຄືນໃໝ່ຂອງຂະແໜງກະສິກໍາເປັນຫຼັກກ່ອນ, ແຕ່ຖ້າໃນອານາຄົດຖ້າທຸລະກິດທ່ອງທ່ຽວເປັນໄປໄດ້ດີ ອາດຈະມີການຄໍ້າຈູນໂດຍລັດຖະບານໃນອະນາຄົດ.

# III. ບັນຫາທີ່ມີຄວາມຄືບໜ້າໃນການແກ້ໄຂ ແລະ ຈະສືບຕໍ່ປຶກສາຫາລື

## ກຸ່ມບັນຫາທີ່ຕິດພັນກັບການເລີ່ມຕົ້ນທຸລະກິດ ແລະ ນະໂຍບາຍສົ່ງເສີມການລົງທຶນ

### 1. ຂັ້ນຕອນການອອກໃບອະນຸຍາດລົງທຶນ

ສະພາບບັນຫາ: ການດຶງດູດການລົງທຶນຈາກພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຫຼາຍຂຶ້ນ ເປັນໜຶ່ງໃນເປົ້າໝາຍຂອງແຜນວຽກຈຸດສຸມ ໃນການຮັບປະກັນໃຫ້ເສດຖະກິດແຫ່ງຊາດ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນ, ເຊິ່ງເປັນໜຶ່ງໃນແຜນວຽກທີ່ນອນຢູ່ໃນ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ. ເຫັນໄດ້ເຖິງຄວາມສຳຄັນຂອງການລົງທຶນຂອງພາກເອກະຊົນ, ລັດຖະບານ ຈຶ່ງໄດ້ອອກຄຳສັ່ງ ເລກທີ 03/ນຍ ລົງວັນທີ 21 ເດືອນ ມັງກອນ ປີ 2020 ວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ. ຢ່າງໃດກໍ່ຕາມ ໃນ ທາງປະຕິບັດ, ໃນການຂໍອະນຸຍາດລົງທຶນ ໃນ ສປປ ລາວ ນັກລົງທຶນ ຍັງພົບພໍ້ກັບອຸປະສັກຫຼາຍຢ່າງ ເຊັ່ນ:

- ຂໍ້ຈຳກັດດ້ານນິຕິກຳ ເຮັດໃຫ້ການຂໍອະນຸຍາດລົງທຶນໃນ ສປປ ລາວ ມີຄວາມຫຍຸ້ງຍາກ ໂດຍສະເພາະແມ່ນຕໍ່ກັບການລົງທຶນຂອງຕ່າງປະເທດ. ອີງຕາມ ດັດສະນີຂໍ້ກີດກັນທາງດ້ານນິຕິກຳຕໍ່ການລົງທຶນຂອງຕ່າງປະເທດ (**OECD FDI Regulatory Restrictiveness Index**) ໃນປີ 2020, ສປປ ລາວ ຍັງມີການກີດກັນດ້ານນິຕິກຳຕໍ່ນັກລົງທຶນຕ່າງປະເທດທີ່ສູງ ເມື່ອທຽບກັບປະເທດອື່ນໆ.
- ຂອດຂັ້ນທີ່ຊໍ້າຊ້ອນກັນລະຫວ່າງຂະແໜງການ ຢ່າງບໍ່ຈຳເປັນ ເຮັດໃຫ້ການຂໍອະນຸຍາດລົງທຶນໃຊ້ເວລາດົນ. ປະຈຸບັນ ອີງຕາມ ດຳລັດ ວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ເລກທີ 03/ນຍ ລົງວັນທີ 10 ມັງກອນ 2019, ສຳລັບກິດຈະການທີ່ນອນຢູ່ໃນບັນຊີຄວບຄຸມ ຜູ້ປະກອບການຕ້ອງໄປຫາຫ້ອງການປະຕູດຽວເພື່ອຂໍໃບອະນຸຍາດລົງທຶນ, ເຊິ່ງໃນການຂໍໃບອະນຸຍາດລົງທຶນ ຫ້ອງການປະຕູດຽວກໍ່ໄດ້ຂໍຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າກ່ອນອອກໃບອະນຸຍາດລົງທຶນ, ແລະ ໃນເວລາທີ່ໄດ້ໃບອະນຸຍາດລົງທຶນແລ້ວ ຜູ້ປະກອບການ ກໍ່ຕ້ອງໄດ້ໄປຂໍໃບອະນຸຍາດດຳເນີນທຸລະກິດກັບຂະແໜງການທີ່ກ່ຽວຂ້ອງ, ເຊິ່ງກໍ່ຕ້ອງໄດ້ຜ່ານຂັ້ນຕອນຄົ້ນຄວ້າຂອງຂະແໜງການກ່ຽວຂ້ອງແບບດຽວກັນຕື່ມອີກ, ຈຶ່ງເຫັນວ່າຊໍ້າຊ້ອນກັນຢ່າງບໍ່ຈຳເປັນ.
- ກິດຈະການທີ່ນອນຢູ່ໃນກິດຈະການຄວບຄຸມ ມີຫຼາຍເກີນໄປ. ອີງຕາມນິຍາມຂອງກິດຈະການຄວບຄຸມທີ່ລະບຸໃນ ດຳລັດ ເລກທີ 03/ນຍ ລົງວັນທີ 10 ມັງກອນ 2019 ວ່າດ້ວຍການຮັບຮອງເອົາກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ, ບັນຊີກິດຈະການຄວບຄຸມ ແມ່ນບັນຊີ "ປະເພດທຸລະກິດທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ" ແຕ່ໃນບັນຊີລາຍການກິດຈະການຄວບຄຸມປະຈຸບັນ ເຫັນວ່າມີຫຼາຍກິດຈະການທີ່ມີຄວາມສ່ຽງຕໍ່າ ຫຼື ບໍ່ມີຄວາມສ່ຽງຕໍ່ກັບ ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ.
- ນິຕິກຳສະເພາະຂອງຫຼາຍຂະແໜງການທີ່ກ່ຽວຂ້ອງໃນການອອກອະນຸຍາດລົງທຶນ ຍັງບໍ່ສອດຄ່ອງກັບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ອີງຕາມກົດໝາຍສົ່ງເສີມການລົງທຶນ ແລະ ດຳລັດວ່າດ້ວຍການຮັບຮອງເອົາກິດຈະການຄວບຄຸມ ເລກທີ 03/ນຍ ລົງວັນທີ 10 ມັງກອນ 2019, ການອອກໃບອະນຸຍາດລົງທຶນແມ່ນກຳນົດໄລຍະເວລາ 25 ວັນລັດຖະການ, ແຕ່ໃນຕົວຈິງບໍ່ສາມາດປະຕິບັດໄດ້ ເນື່ອງຈາກບາງ

ຂະແໜງການກ່ຽວຂ້ອງມີນິຕິກຳສະເພາະທີ່ກຳນົດໄລຍະເວລາພິຈາລະນາສົ່ງຄຳເຫັນການອອກອະນຸຍາດລົງທຶນ ເກີນເວລາຕາມທີ່ກຳນົດໃນກົດໝາຍສົ່ງເສີມການລົງທຶນ (8 ວັນລັດຖະການ).

- ການດຳເນີນເອກະສານພາຍໃນຂອງຂະແໜງການທີ່ມີສ່ວນກ່ຽວຂ້ອງໃນການອອກອະນຸຍາດລົງທຶນ ຍັງຊັກຊ້າ ເນື່ອງຈາກມີ ຂັ້ນຕອນການພິຈາລະນາທີ່ບໍ່ຈຳເປັນ ເຊັ່ນ: ຂັ້ນຕອນການພິຈາລະນາຂອງຫ້ອງການກະຊວງ, ໝາຍຄວາມວ່າຄຳຮ້ອງ ແມ່ນຖືກສົ່ງຫາຫ້ອງການກະຊວງເພື່ອພິຈາລະນາ ແລ້ວຈຶ່ງຖືກສົ່ງຕໍ່ຫາກົມກ່ຽວຂ້ອງເພື່ອຄົ້ນຄວ້າພິຈາລະນາ ແລ້ວຈຶ່ງຖືກສະເໜີຫາລັດຖະມົນຕີເພື່ອອະນຸມັດ ແລະ ສົ່ງກັບມາຫາຫ້ອງການກະຊວງຕື່ມອີກ.
- ຍັງບໍ່ມີຊ່ອງທາງໃນການເຂົ້າເຖິງຂໍ້ມູນຂັ້ນຕອນ, ເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆທີ່ຕິດພັນກັບການກໍ່ຕັ້ງທຸລະກິດ ຂອງບັນດາຂະແໜງການກ່ຽວຂ້ອງ ຕໍ່ກັບການລົງທຶນຂອງຕ່າງປະເທດ ທີ່ນັກລົງທຶນສາມາດເຂົ້າເຖິງໄດ້ງ່າຍ, ຈຶ່ງເຮັດໃຫ້ການຕັດສິນໃນເຂົ້າມາລົງທຶນໃນ ສປປ ລາວ ເປັນໄປໄດ້ຍາກ.

**ຂໍ້ສະເໜີວິທີແກ້ໄຂ**

ສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ພິຈາລະນາ ເປັນເຈົ້າການ ໃນການ:

1. ປະສານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຄືນ ບັນດາກິດຈະການທີ່ຢູ່ໃນບັນຊີກິດຈະການຄວບຄຸມ ແນໃສ່ຫຼຸດລາຍການກິດຈະການທີ່ຢູ່ໃນບັນຊີຄວບຄຸມປະຈຸບັນ ແລະ ມີການປັບປຸງເປັນແຕ່ລະໄລຍະ ເພື່ອເປີດກວ້າງການດຶງດູດການລົງທຶນ, ເນື່ອງຈາກ ເຫັນວ່າ ປະຈຸບັນ ບັນຊີດັ່ງກ່າວຍັງມີລັກສະນະຈຳກັດຫຼາຍເກີນໄປ ແລະ ທັງນີ້ ນັກລົງທຶນກໍ່ຍັງຕ້ອງຜ່ານຂອດການຂໍຂຶ້ນທະບຽນວິສາຫະກິດ ແລະ ຂອດການຂໍອະນຸຍາດດຳເນີນທຸລະກິດກັບຂະແໜງການກ່ຽວຂ້ອງ ທີ່ເປັນຂອດໃນການກວດກາຄວາມຖືກຕ້ອງ ແລະ ເໝາະສົມ ຂອງການລົງທຶນຢູ່ແລ້ວ.
2. ກຳນົດເງື່ອນໄຂທີ່ແນ່ນອນ (ເຊັ່ນ ການໃຫ້ຄະແນນຄວາມສ່ຽງ ຕາມແຕ່ລະເງື່ອນໄຂທີ່ກຳນົດ) ແລະ ນຳໃຊ້ຢ່າງເປັນເອກະພາບກັນໃນທຸກຂະແໜງການ ເພື່ອພິຈາລະນາວ່າກິດຈະການໃດທີ່ຄວນເປັນກິດຈະການທີ່ຍັງຕ້ອງຮັກສາໄວ້ໃນບັນຊີກິດຈະການຄວບຄຸມຂອງຕົນ.
3. ກຳນົດບັນດາເງື່ອນໄຂທີ່ແນ່ນອນ ແລະ ຈະແຈ້ງ ໃນການພິຈາລະນາອອກອະນຸຍາດລົງທຶນ ແລະ ເຜີຍແຜ່ເງື່ອນໄຂດັ່ງກ່າວໃຫ້ຜູ້ປະກອບການຮັບຊາບ
4. ປະສານກັບກະຊວງທີ່ກ່ຽວຂ້ອງ ເພື່ອປັບປຸງຂັ້ນຕອນການຂໍໃບອະນຸຍາດລົງທຶນໃຫ້ຈະແຈ້ງ ແລະ ວ່ອງໄວຂຶ້ນ.
5. ຮວບຮວມຂໍ້ມູນ ແລະ ເປັນສູນລວມການໃຫ້ຂໍ້ມູນຂັ້ນຕອນ, ເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆທັງໝົດຂອງຂະແໜງການກ່ຽວຂ້ອງທີ່ຕິດພັນກັບການກໍ່ຕັ້ງທຸລະກິດ ທີ່ນັກລົງທຶນສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະແມ່ນ ແບບ ອອນລາຍ
6. ປັບປຸງການບໍລິການຂອງຫ້ອງການປະຕູດຽວ ເພື່ອເປັນໃຈກາງໃນການປະສານກັບຂະແໜງການກ່ຽວຂ້ອງສຳລັບການອອກອະນຸຍາດລົງທຶນ ຕາມເປົ້າໝາຍຂອງການກໍ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການປະຕູດຽວຢ່າງແທ້ຈິງ, ໝາຍຄວາມວ່າ ໃຫ້ນັກລົງທຶນສາມາດຍື່ນຂໍຄຳຮ້ອງ, ຮັບຊາບຂໍ້ມູນ ແລະ ຮັບເອົາໃບອະນຸຍາດດຳເນີນທຸລະກິດຢູ່ຈຸດດຽວ ໂດຍທີ່ບໍ່ຕ້ອງໄດ້ໄປປະສານກັບຂະແໜງການອື່ນໆທີ່ກ່ຽວຂ້ອງດ້ວຍຕົວເອງ.

7. ສະເໜີໃຫ້ລັດຖະບານ ປະເມີນຄືນ ການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 03/ນຍ ວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ເລກທີ 03/ນຍ, ນະຄອນຫຼວງວຽງຈັນ ວັນທີ 21 ມັງກອນ 2020 ເປັນແຕ່ລະໄລຍະເລື້ອຍໆ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ
2. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ

**ຄວາມຄືບໜ້າ ໄລຍະຜ່ານມາ:**

- ກະຊວງອຸດສາຫະກຳ ແລະ ການຄ້າ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ໄດ້ປັບປຸງຂັ້ນຕອນການເລີ່ມຕົ້ນທຸລະກິດ: ອີງຕາມໜັງສືແຈ້ງຕອບຂອງກະຊວງປ້ອງກັນຄວາມສະຫງົບ ຫາ ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 728/ຫວກ ລົງວັນທີ 21 ກຸມພາ 2020 ລະບຸວ່າ ກະຊວງ ປກສ ເຫັນດີ ໃຫ້ການກວດສອບປະຫວັດຜູ້ລົງທຶນຕ່າງປະເທດ ຍ້າຍໄປຢູ່ຂັ້ນຕອນຫຼັງການຂຶ້ນທະບຽນວິສາຫະກິດ, ແລະ ສຳລັບການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ເຊັ່ນປ່ຽນແປງຜູ້ຖືຮຸ້ນ, ອຳນວຍການ ແລະ ອື່ນໆ ກຳນົດເວລາພິຈາລະນາ ແມ່ນ 05 ວັນລັດຖະການ. ພ້ອມດຽວກັນ ອີງຕາມແຈ້ງການເລກທີ 0805/ທອຄ.ກທຄວ ລົງວັນທີ 02 ມິຖຸນາ 2020 ລະບຸວ່າ ສຳລັບຫົວໜ່ວຍແຈ້ງຂຶ້ນທະບຽນວິສາຫະກິດໃໝ່ ແມ່ນໃຫ້ກວດສອບປະຫວັດຜູ້ລົງທຶນຫຼັງອອກໃບທະບຽນວິສາຫະກິດ ໂດຍ ເຈົ້າໜ້າທີ່ທະບຽນວິສາຫະກິດ ເປັນຜູ້ສົ່ງສຳເນົາໃບທະບຽນວິສາຫະກິດຫາຂະແໜງ ປກສ.
- ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານກັບຂະແໜງການທີ່ກ່ຽວຂ້ອງເພື່ອປັບປຸງຂັ້ນຕອນການອອກໃບອະນຸຍາດລົງທຶນ. ອີງຕາມການຕິດຕາມຄວາມຄືບໜ້າ ກັບກົມສົ່ງເສີມການລົງທຶນ ໃນ ເດືອນ ພະຈິກ 2020, ແລະ ອີງຕາມ ໜັງສືແຈ້ງຕອບຂອງກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ເລກທີ 270/ລທ2 ວັນທີ 14 ກໍລະກົດ 2020, ສາມາດສະຫຼຸບໄດ້ດັ່ງນີ້: ກຜທ ໄດ້ເອົາໃຈໃສ່ໃນການຕິດຕາມແກ້ໄຂບັນຫາ ໂດຍ ໄດ້ສົ່ງຄຳແນະນຳຈັດຕັ້ງປະຕິບັດ ຄຳສັ່ງເລກທີ 03/ນຍ ໃຫ້ຂະແໜງການກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນເພື່ອຈັດຕັ້ງປະຕິບັດ. ພ້ອມກັນນັ້ນ ກໍ່ໄດ້ສຳເລັດ ແລະ ນຳໃຊ້ແບບຟອມຄຳຮ້ອງຂໍອະນຸຍາດລົງທຶນ ແລະ ແບບຟອມຄຳຮ້ອງຂໍສ້າງຫ້ອງການຜູ້ຕາງໜ້າໃຫ້ສະດວກໃໝ່ ທີ່ສະດວກກວ່າເກົ່າ. ນອກຈາກນີ້ ໄດ້ສົມທົບກັບ ກະຊວງ ອຄ ແລະ ຂະແໜງການກ່ຽວຂ້ອງ ເພື່ອຄົ້ນຄວ້າການເຊື່ອມຕໍ່ຖານຂໍ້ມູນໃນການອອກໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ ແລະ ປັບປຸງຂັ້ນຕອນການກວດສອບປະຫວັດຜູ້ລົງທຶນໃຫ້ໄວຂຶ້ນ; ຕໍ່ກັບຂໍ້ສະເໜີປັບປຸງບັນຊີກິດຈະການຄວບຄຸມ, ກຜທ ໄດ້ສົ່ງໜັງສືສະເໜີຫາຂະແໜງການທີ່ກ່ຽວຂ້ອງເພື່ອປະກອບຄຳເຫັນປັບປຸງບັນຊີກິດຈະການຄວບຄຸມຕາມຂະແໜງການຂອງຕົນ, ປະຈຸບັນ ກຜທ ໄດ້ຮັບຄຳເຫັນຈາກ 6 ຂະແໜງ ການ ແລະ ຍັງລໍຖ້າຄຳເຫັນຈາກຂະແໜງການອື່ນໆທີ່ຍັງເຫຼືອ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ).

## 2. ຂັ້ນຕອນການອອກໃບອະນຸຍາດດໍາເນີນທຸລະກິດ

ສະພາບບັນຫາ: ສືບເນື່ອງຈາກການສະເໜີບັນຫາຂອງພາກທຸລະກິດ ກ່ຽວກັບການເລີ່ມຕົ້ນທຸລະກິດ ທີ່ໄດ້ສະເໜີໃນກອງປະຊຸມທຸລະກິດລາວໃນຄັ້ງຜ່ານມານັ້ນ, ພາກທຸລະກິດ ເຫັນວ່າ ຂະແໜງການກ່ຽວຂ້ອງຂອງພາກລັດ ໄດ້ເອົາໃຈໃສ່ປັບປຸງ ຫຼາຍຂັ້ນຕອນ ໃຫ້ສະດວກຂຶ້ນ ໂດຍສະເພາະ ແມ່ນ ຂັ້ນຕອນການຈົດທະບຽນວິສາຫະກິດ ເຊິ່ງເຫັນໄດ້ວ່າ ມີຄວາມສະດວກ ແລະ ວ່ອງໄວຂຶ້ນຫຼາຍ. ຢ່າງໃດກໍ່ຕາມ ຫຼັງຈາກຂຶ້ນທະບຽນວິສາຫະກິດແລ້ວ ກໍ່ຍັງຕ້ອງຂໍອະນຸຍາດດໍາເນີນທຸລະກິດກັບຂະແໜງການທີ່ກ່ຽວຂ້ອງ ຈຶ່ງສາມາດດໍາເນີນທຸລະກິດໄດ້, ເຊິ່ງຜ່ານມາ ໃນຂັ້ນຕອນການຂໍໃບອະນຸຍາດດໍາເນີນທຸລະກິດ ເຫັນວ່າຍັງເປັນສິ່ງທ້າທາຍຫຼາຍ. ຜູ້ປະກອບການສ່ວນໃຫຍ່ ເຫັນວ່າ ຂັ້ນຕອນການຂໍໃບອະນຸຍາດດໍາເນີນທຸລະກິດກັບຂະແໜງການກ່ຽວຂ້ອງ ແມ່ນຍັງບໍ່ມີຂັ້ນຕອນຈະແຈ້ງ ເຊັ່ນ:

- ຫຼາຍຂະແໜງການ ຍັງບໍ່ມີລະບຽບການສະເພາະ ຫຼື ຂັ້ນຕອນທີ່ຈະແຈ້ງ ແລະ ການກໍານົດໄລຍະເວລາທີ່ແນ່ນອນ ໃນ ການອອກໃບອະນຸຍາດດໍາເນີນທຸລະກິດ ຈຶ່ງເຮັດໃຫ້ການອອກອະນຸຍາດດໍາເນີນທຸລະກິດ ມີຄວາມຊັກຊ້າ. ນອກຈາກນີ້ ລະບົບການຮັບຄໍາຮ້ອງ ແລະ ການລາຍງານພາຍໃນບາງກະຊວງທີ່ອອກໃບອະນຸຍາດດໍາເນີນທຸລະກິດ ມີຫລາຍຂັ້ນຕອນເກີນໄປ ເຊັ່ນ: ຄໍາຮ້ອງຍື່ນຫາຫ້ອງການກະຊວງເພື່ອຄົ້ນຄວ້າ - ເມື່ອຄົ້ນຄວ້າແລ້ວຫ້ອງການກະຊວງສົ່ງໃຫ້ກົມທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ມີຄໍາເຫັນ - ເມື່ອກົມກ່ຽວຂ້ອງຄົ້ນຄວ້າແລ້ວສົ່ງກັບຄືນໄປຫາຫ້ອງການກະຊວງ ຈາກນັ້ນຫ້ອງການກະຊວງເຮັດບົດລາຍງານຫາທ່ານລັດຖະມົນຕີເພື່ອພິຈາລະນາ ແລະ ຕົກລົງອອກອະນຸຍາດດໍາເນີນທຸລະກິດ ເມື່ອທ່ານລັດຖະມົນຕີເຫັນດີ - ຈາກນັ້ນທ່ານລັດຖະມົນຕີຈະສົ່ງຄໍາຮ້ອງກັບມາຫາກົມທີ່ກ່ຽວຂ້ອງເປັນຜູ້ອອກໃບອະນຸຍາດດໍາເນີນ ທຸລະກິດ.
- ໃນຂັ້ນຕອນການຂໍອະນຸຍາດດໍາເນີນທຸລະກິດຢູ່ຂັ້ນທ້ອງຖິ່ນ ຍັງບໍ່ໄດ້ຖືກປັບປຸງໄປຕາມຂັ້ນຕອນ ແລະ ໄລຍະເວລາທີ່ຂັ້ນສູນກາງ ໄດ້ກໍານົດ.
- ຜູ້ປະກອບການ ໂດຍສະເພາະແມ່ນນັກລົງທຶນຕ່າງປະເທດ ທີ່ຕ້ອງການກໍ່ຕັ້ງ ທຸລະກິດຢູ່ ສປປ ລາວ ເຫັນວ່າການເຂົ້າຫາຂໍ້ມູນທີ່ຕິດພັນກັບການກໍ່ຕັ້ງທຸລະກິດ ໃນ ສປປ ລາວ ຍັງຈໍາກັດ, ໂດຍສະເພາະ ແມ່ນ ຂໍ້ມູນກົດລະບຽບຕ່າງໆທີ່ອອກໃໝ່ແຕ່ລະໄລຍະ, ເງື່ອນໄຂທຶນຈົດທະບຽນຕໍ່າສຸດທີ່ກໍານົດໂດຍຂະແໜງການຕ່າງໆ ເປັນຕົ້ນ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ ກະຊວງອຸດສາຫະກໍາ ແລະ ການຄ້າ ພິຈາລະນາ ສືບຕໍ່ເປັນເຈົ້າການປະສານກັບກະຊວງທີ່ກ່ຽວຂ້ອງ ໃນການປັບປຸງຂັ້ນຕອນການອອກໃບອະນຸຍາດດໍາເນີນທຸລະກິດ ໃຫ້ມີຄວາມຈະແຈ້ງ ແລະ ສະດວກ, ໂດຍສະເພາະ ແມ່ນການຫັນໄປນໍາໃຊ້ລະບົບການພິຈາລະນາອີງໃສ່ ຄວາມສ່ຽງ ເປັນຫຼັກ (ເຊັ່ນ ສໍາລັບກິດຈະກໍາທີ່ມີຄວາມສ່ຽງຕໍ່າ ແມ່ນບໍ່ຈໍາເປັນຕ້ອງຂໍອະນຸຍາດດໍາເນີນທຸລະກິດ) ຄືດັ່ງທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ມີການລິເລີ່ມຈັດຕັ້ງປະຕິບັດ.
2. ສະເໜີໃຫ້ ແຕ່ລະຂະແໜງການທີ່ອອກໃບອະນຸຍາດດໍາເນີນທຸລະກິດ ພິຈາລະນາ:
3. ປັບປຸງລະບົບການອອກໃບອະນຸຍາດດໍາເນີນທຸລະກິດຂອງຕົນໃຫ້ໄວຂຶ້ນ ແລະ ໃຫ້ມີເງື່ອນໄຂທີ່ຊັດເຈນ ແລະ ແນ່ນອນໃນການພິຈາລະນາ
4. ຈັດຕັ້ງປະຕິບັດ ຂັ້ນຕອນການອອກໃບອະນຸຍາດດໍາເນີນທຸລະກິດໃຫ້ເປັນເອກະພາບກັນທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

5. ມີຊ່ອງທາງໃນການເຂົ້າເຖິງຂໍ້ມູນຂັ້ນຕອນ, ເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆຂອງຂະແໜງການກ່ຽວຂ້ອງທີ່ຕິດພັນກັບການກໍ່ຕັ້ງທຸລະກິດທີ່ສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະແມ່ນ ແບບ ອອນລາຍ, ຫຼືນຳໃຊ້ຕົວກາງໃນການກະຈາຍຂໍ້ມູນເຫຼົ່ານັ້ນໃຫ້ພາກທຸລະກິດ ເຊັ່ນ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ສະພາການຄ້າຕ່າງປະເທດ ໃນສປປ ລາວ ເປັນຕົ້ນ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຄ
2. ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ
3. ຂະແໜງການອື່ນໆ ທີ່ອອກອະນຸຍາດດຳເນີນທຸລະກິດ

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

- ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງປະສານກັບຂະແໜງການທີ່ກ່ຽວຂ້ອງເພື່ອປັບປຸງຂັ້ນຕອນການອອກໃບອະນຸຍາດດຳເນີນທຸລະກິດ
- ກະຊວງ ອຸດສາຫະກຳ ແລະ ການຄ້າ ກຳລັງປະສານເພື່ອ ໃຫ້ຂະແໜງການກ່ຽວຂ້ອງ ແຕ່ງຕັ້ງພະນັກງານຂອງຕົນເຂົ້າຮ່ວມຄະນະປັບປຸງການອອກອະນຸຍາດດຳເນີນທຸລະກິດ ເພື່ອສັງລວມ ແລະ ສົ່ງບັນຊີກິດຈະການທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ເພື່ອສົ່ງໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ). ພ້ອມກັນນີ້ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຢູ່ໃນຂັ້ນຕອນການຮ່າງ 4 ຄູ່ມື ແນະນຳ ກ່ຽວກັບການອອກອະນຸຍາດດຳເນີນທຸລະກິດ ຄື: ຄູ່ມືການປັບປຸງການອອກໃບອະນຸຍາດດຳເນີນທຸລະກິດ ໃນ ສປປ ລາວ, ຄູ່ມືການອອກໃບອະນຸຍາດດຳເນີນທຸລະກິດສຳລັບກິດຈະການໃໝ່, ຄູ່ມືການປັບປຸງການອອກອະນຸຍາດດຳເນີນທຸລະກິດຕາມຄວາມສ່ຽງຂອງກິດຈະການ ແລະ ຄູ່ມືການປັບປຸງແບບຟອມຄຳຮ້ອງການຂໍອະນຸຍາດດຳເນີນທຸລະກິດ, ເຊິ່ງຄາດວ່າຈະສຳເລັດໃນ ເດືອນ ພະຈິກ 2020. ນອກຈາກນີ້ ກະຊວງອຸດສາຫະກຳ ແລະການຄ້າ ຢູ່ໃນຂັ້ນຕອນການສ້າງ Business Portal ເພື່ອສະໜອງຂໍ້ມູນດ້ານຂັ້ນຕອນ, ນິຕິກຳ ແລະ ເອກະສານທີ່ຕິດພັນກັບການອອກອະນຸຍາດດຳເນີນທຸລະກິດໃນ ສປປ ລາວໃຫ້ແກ່ນັກລົງທຶນ, ເຊິ່ງຄາດວ່າຈະສຳເລັດໃນເດືອນ ທັນວາ 2020.
- ສຳລັບຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດ, ປະຈຸບັນຂະແໜງອຸດສາຫະກຳ ແລະການຄ້າ ໄດ້ມີ ແຈ້ງການເລກທີ 0044/ອຄ.ກທຄວ, ລົງວັນທີ 18 ມັງກອນ 2019 ວ່າດ້ວຍການຮັບຮອງເອົາກິດຈະການອຸດສາຫະກຳ ແລະການຄ້າ ທີ່ຕ້ອງອອກອະນຸຍາດດຳເນີນທຸລະກິດ (ໝາຍຄວາມວ່າ ກິດຈະການທີ່ຢູ່ໃນຂະແໜງອຸດສາຫະກຳ ແລະການຄ້າໃດທີ່ບໍ່ໄດ້ລະບຸໃນລາຍການດັ່ງກ່າວ ແມ່ນ ຫຼັງຈາກໄດ້ທະບຽນວິສາຫະກິດແລ້ວສາມາດດຳເນີນກິດຈະການໄດ້ເລີຍ ໂດຍບໍ່ຕ້ອງຂໍອະນຸຍາດດຳເນີນທຸລະກິດຕື່ມອີກ)
- ຜົນການປຶກສາຫາລື ຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການກໍ່ຕັ້ງ ແລະ ດຳເນີນທຸລະກິດ ໃນ ສປປ ລາວ) ຄັ້ງວັນທີ 30 ສິງຫາ 2019: ອຸດສາຫະກຳ ແລະ ການຄ້າ ຢູ່ໃນຂັ້ນຕອນປະສານກັບຂະແໜງການທີ່ອອກອະນຸຍາດຕ່າງໆ ທີ່ຕິດພັນກັບການຂໍອະນຸຍາດດຳເນີນທຸລະກິດ ເພື່ອເຮັດການສຳຫຼວດຂັ້ນຕອນການອອກໃບອະນຸຍາດ 30 ລາຍການທີ່ຖືກຄັດເລືອກເປັນບູລິມະສິດ (ຈາກທັງໝົດປະມານ 200 ກວ່າໃບອະນຸຍາດ), ໂດຍຈະອີງໃສ່ບົດຮຽນທີ່ດີທີ່ສຸດຂອງຕ່າງປະເທດ ເພື່ອແນະນຳຂັ້ນຕອນການອອກອະນຸຍາດ 30 ລາຍການດັ່ງກ່າວໃຫ້ສະດວກວ່ອງໄວຂຶ້ນ. ປະຈຸບັນ ຂະແໜງອຸດສາຫະກຳ ແລະການຄ້າ ເປັນຂະແໜງການດຽວ ທີ່ມີການກຳນົດລາຍການກິດຈະການທີ່

ຕ້ອງຂໍອະນຸຍາດດຳເນີນທຸລະກິດ. ກະຊວງອຸດສາຫະກຳ ແລະ ການຄ້າ ກຳລັງປະສານກັບຂະແໜງການອື່ນໆ ທີ່ອອກອະນຸຍາດດຳເນີນທຸລະກິດ ເພື່ອຮວບຮວມລາຍການກິດຈະການທີ່ຕ້ອງອອກອະນຸຍາດດຳເນີນ ທຸລະກິດພາຍໃຕ້ການຄຸ້ມຄອງຂອງຂະແໜງການຕ່າງໆ, ເພື່ອຄົ້ນຄວ້າ ວິທີທາງປັບປຸງຂອດຂັ້ນການອອກ ອະນຸຍາດ. ຕໍ່ກັບການເຜີຍແຜ່ວຽກງານການຂຶ້ນທະບຽນວິສາຫະກິດ ຮູບແບບໃໝ່ ໄດ້ເຮັດການເຜີຍແຜ່ 18 ແຂວງໃນທົ່ວປະເທດ, ຖ້າເຫັນວ່າທ້ອງຖິ່ນໃດທີ່ຍັງປະຕິບັດແຕກຕ່າງຈາກສູນກາງ ໃຫ້ພາກທຸລະກິດແຈ້ງຫາ ກົມທະບຽນໄດ້ໂດຍກົງເພື່ອແກ້ໄຂ.

- ສຳລັບການອອກເລກທະບຽນອາກອນໃຫ້ຫ້ອງການຜູ້ຕາງໜ້າ, ກົມສົ່ງເສີມການລົງທຶນ ແມ່ນມີແຜນເຊື່ອມຕໍ່ ລະບົບເຂົ້າກັບລະບົບສ່ວຍສາອາກອນ, ເຊິ່ງປະຈຸບັນແມ່ນຢູ່ຂັ້ນຕອນປຶກສາຫາລື ກັບຂະແໜງອາກອນ.

### 3. ການເຂົ້າຫານະໂຍບາຍ ດ້ານພາສີ ແລະ ອາກອນມູນຄ່າເພີ່ມ ພາຍໃຕ້ກົດໝາຍສົ່ງເສີມການລົງທຶນ

(ຜູ້ຜະລິດພາຍໃນ ແລະ ຕ່າງປະເທດ ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ທີ່ບໍ່ເທົ່າທຽມກັນ)

ສະພາບຂອງບັນຫາ: ນະໂຍບາຍສົ່ງເສີມການລົງທຶນທີ່ມີໃນປະຈຸບັນ ອະນຸຍາດໃຫ້ໂຄງການລົງທຶນຂໍຍົກເວັ້ນພາສີນໍາເຂົ້າ ແລະ ອາກອນມູນຄ່າເພີ່ມ ຕໍ່ ວັດຖຸດິບ ແລະ ອຸປະກອນຕ່າງໆທີ່ຈໍາເປັນເພື່ອມາຮັບໃຊ້ການລົງທຶນທີ່ນໍາເຂົ້າຈາກຕ່າງປະເທດ ເທົ່ານັ້ນ ແຕ່ ກໍລະນີ ໂຄງການລົງທຶນດັ່ງກ່າວ ມີການຊື້ ວັດຖຸດິບ ແລະ ອຸປະກອນຕ່າງໆຈາກຜູ້ຜະລິດພາຍໃນ ເພື່ອມາຮັບໃຊ້ການລົງທຶນ ແມ່ນບໍ່ໄດ້ຮັບນະໂຍບາຍຍົກເວັ້ນອາກອນມູນຄ່າເພີ່ມ ເຊັ່ນດຽວກັບກໍລະນີນໍາເຂົ້າ. ຜູ້ປະກອບການເຫັນວ່າ ການຈັດຕັ້ງປະຕິບັດໃນລັກສະນະດັ່ງກ່າວ ບໍ່ເປັນການສົ່ງເສີມການຜະລິດພາຍໃນ ແລະ ຍັງໄດ້ເຮັດໃຫ້ຜູ້ຜະລິດພາຍໃນ ເສຍປຽບ ໃນການແຂ່ງຂັນກັບຜູ້ຜະລິດຢູ່ຕ່າງປະເທດທີ່ຈະເປັນຜູ້ສະໜອງວັດຖຸອຸປະກອນໃຫ້ແກ່ໂຄງການລົງທຶນດັ່ງກ່າວ ເນື່ອງຈາກຜູ້ຜະລິດພາຍໃນຕ້ອງເກັບອາກອນມູນຄ່າເພີ່ມ 10% ຂອງມູນຄ່າສິນຄ້າ ເຊິ່ງເຮັດໃຫ້ລາຄາສິນຄ້າຜະລິດພາຍໃນສູງຂຶ້ນຢ່າງນ້ອຍ 10% ຖ້າທຽບໃສ່ສິນຄ້າທີ່ນໍາເຂົ້າຈາກຕ່າງປະເທດ. ຜົນຈາກການປຶກສາຫາລືໃນໄລຍະຜ່ານມາ ເຫັນວ່າຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະ ແມ່ນ ຂະແໜງ ສົ່ງເສີມການລົງທຶນ ແລະ ຂະແໜງການເງິນ ກໍ່ໄດ້ສະແດງທັດສະນະເຫັນດີ ຕໍ່ກັບຂໍ້ສະເໜີຂອງພາກທຸລະກິດ. ຢ່າງໃດກໍ່ຕາມ ໃນການຈັດຕັ້ງປະຕິບັດ ແມ່ນຍັງບໍ່ສາມາດເລີ່ມຈັດຕັ້ງປະຕິບັດໄດ້ ຖ້າຫາກບໍ່ມີການຕົກລົງເຫັນດີຢ່າງເປັນທາງການ ໂດຍສອງຂະແໜງການດັ່ງກ່າວ ແລະ ມີການປັບນິຕິກໍາທີ່ກ່ຽວຂ້ອງເພື່ອຮອງຮັບນະໂຍບາຍນີ້.

**ຂໍ້ສະເໜີວິທີແກ້ໄຂ:**

ສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ພິຈາລະນາ ເປັນເຈົ້າການປະສານກັບ ກະຊວງການເງິນເພື່ອ ປຶກສາຫາລື ພິຈາລະນາຍົກເວັ້ນອາກອນມູນຄ່າເພີ່ມແກ່ໂຄງການລົງທຶນທີ່ໄດ້ຮັບນະໂຍບາຍສົ່ງເສີມ ໃນການຊື້ສິນຄ້າທີ່ສະໜອງໂດຍຜູ້ຜະລິດພາຍໃນປະເທດ ເຊັ່ນດຽວກັບສິນຄ້ານໍາເຂົ້າ

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

- ອີງຕາມຄໍາເຫັນຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອໍານວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
    - **ຕາງໜ້າ ຈາກກົມສົ່ງເສີມລົງທຶນ (ຮອງຫົວໜ້າກົມ):** ຕໍ່ກັບຂໍ້ສະເໜີ ໃຫ້ພິຈາລະນາຍົກເວັ້ນອາກອນມູນຄ່າເພີ່ມແກ່ໂຄງການລົງທຶນທີ່ໄດ້ຮັບນະໂຍບາຍສົ່ງເສີມ ໃນການຊື້ສິນຄ້າທີ່ສະໜອງໂດຍຜູ້ຜະລິດພາຍໃນປະເທດເຊັ່ນດຽວກັບສິນຄ້ານໍາເຂົ້າ, ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ ເນື່ອງຈາກຍັງບໍ່ມີນິຕິກໍາຮອງຮັບ, ເຊິ່ງ ກະຊວງແຜນການ ແລະ ການລົງທຶນ ຈະໄດ້ມີການປຶກສາຫາລື ກັບກະຊວງການເງິນ ຕື່ມ ຕໍ່ກັບຂໍ້ສະເໜີດັ່ງກ່າວ. ປະຈຸບັນ ກະຊວງແຜນການ ແລະ ການລົງທຶນ ພວມປັບປຸງ ຄໍາແນະນໍາ ເລກທີ 01/ ຄລທ.ສ, ລົງວັນທີ 02 ມັງກອນ 2019 ວ່າດ້ວຍການອະນຸມັດການໃຫ້ນະໂຍບາຍອາກອນມູນຄ່າເພີ່ມເພື່ອໃຫ້ສອດຄ່ອງກັບ ກົດໝາຍ ພາສີ ສະບັບປັບປຸງ, ແລະ ກົດໝາຍອື່ນໆ ທີ່ຕິດພັນ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1) ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ
2) ກົມສ່ວຍສາອາກອນ, ກະຊວງການເງິນ

## 4. ມາດຕະການ ແລະ ນະໂຍບາຍ ສົ່ງເສີມ Start-up

ສະພາບບັນຫາ: ຜູ້ປະກອບການ Startup ສ່ວນໃຫຍ່ ແມ່ນ ທຸລະກິດທີ່ຄິດຄົ້ນ ແລະນຳໃຊ້ ນະວັດຕະກຳ ເຊິ່ງເປັນທຸລະກິດທີ່ມີຄວາມສ່ຽງສູງ ແຕ່ມີຜົນຕອບແທນສູງ. Startup ສາມາດ ມີບົດບາດສູງ ຕໍ່ການເຕີບໂຕຂອງເສດຖະກິດ ຂອງປະເທດ ເຊັ່ນ: ສ້າງວຽກເຮັດງານທຳ ແລະ ວິທີການເຮັດວຽກແບບໃໝ່, ສ້າງມູນຄ່າເພີ່ມໃຫ້ແກ່ເສດຖະກິດ, ສ້າງໃຫ້ມີການຄິດຄົ້ນ ນະວັດຕະກຳໃໝ່, ສ້າງໃຫ້ມີຄວາມຫຼາກຫຼາຍໃນຂະແໜງທຸລະກິດ ແລະ ເສີມສ້າງ ການນຳໃຊ້ເຕັກໂນໂລຊີ ເຂົ້າໃນການຄ້າ. ປະຈຸບັນ ເຫັນວ່າ ການດຳເນີນທຸລະກິດ ຂອງ Startup ໃນ ສປປ ລາວ ແມ່ນຍັງປະສົບກັບບັນຫາຄວາມທ້າທາຍຫຼາຍດ້ານ ເຊັ່ນ:

- ບໍ່ມີກົດໝາຍ ແລະ ກົດລະບຽບ ສະເພາະ ສໍາລັບ ການກໍ່ຕັ້ງ ແລະ ຄຸ້ມຄອງ Startup
- ນະໂຍບາຍສົ່ງເສີມ ຈາກພາກລັດ ຕໍ່ກັບ Startup ຍັງມີໜ້ອຍ
- ຄວາມເຂົ້າໃຈ ແລະສິນໃຈ ກ່ຽວກັບ Startup ຍັງມີຂ້ອນຂ້າງຕໍ່າ
- ໂຄງລ່າງພື້ນຖານ ທີ່ຈໍາເປັນໃນການດໍາເນີນທຸລະກິດ ຂອງ Startup ແມ່ນ ຍັງມີຂໍ້ຈໍາກັດ (ເຊັ່ນ ຄຸນນະພາບ ແລະ ລາຄາຂອງ ອິນເຕີເນັດ)

ໃນທາງກົງກັນຂ້າມ ເຫັນວ່າ ບັນດາປະເທດ ອ້ອມຂ້າງ ໄດ້ໃຫ້ຄວາມສໍາຄັນ ແລະ ມີນະໂຍບາຍສົ່ງເສີມ Startupຂ້ອນຂ້າງຫຼາຍ. ຍົກຕົວຢ່າງ: ລັດຖະບານ ແຫ່ງ ຫວຽດນາມ ໄດ້ປະກາດ ແຜນການໃນການສ້າງສະພາບການດໍາເນີນທຸລະກິດທີ່ເໝາະສົມໃຫ້ແກ່ທຸລະກິດທີ່ເຕີບໂຕສູງ ໂດຍສະເພາະ ແມ່ນ ທຸລະກິດ ທີ່ນໍາໃຊ້ ເຕັກໂນໂລຊີ ແລະຊັບສິນທາງປັນຍາ ເຊິ່ງສະແດງໃຫ້ເຫັນໃນ 'ຄໍາສັ່ງຂອງນາຍົກລັດຖະມົນຕີ ແຫ່ງຫວຽດນາມ (ເລກທີ 844/ QD-TTg, ລົງວັນທີ 18 ພຶດສະພາ 2016) ໃນການອະນຸມັດ ນະໂຍບາຍຊ່ວຍເຫຼືອ ການສ້າງສະພາບການດໍາເນີນທຸລະກິດ Startup ເພື່ອສ້າງໃຫ້ເປັນປະເທດແຫ່ງ Startup ໃນປີ 2025' . ນອກຈາກນີ້ ປະເທດໄທ ໄດ້ມີການອອກນະໂຍບາຍ Thailand 4.0 ເພື່ອສົ່ງເສີມການສ້າງຄວາມຄິດສ້າງສັນ ແລະນະວັດຕະກໍາ ຜ່ານການນໍາໃຊ້ ເຕັກໂນໂລຊີ ເຊິ່ງໃນນີ້ ກໍ່ໄດ້ມີການອອກມາດຕະການຫຼາຍດ້ານໃນການສົ່ງເສີມ Startup ເຊັ່ນ ການສ້າງຕັ້ງສູນສົ່ງເສີມ Startup ລະດັບຊາດ ເປັນຕົ້ນ. ດັ່ງນັ້ນ ເມື່ອເຫັນໄດ້ເຖິງຜົນປະໂຫຍດ ຂອງ Startup ທີ່ຈະສາມາດປະກອບສ່ວນເຂົ້າໃນການສ້າງເສດຖະກິດຂອງປະເທດ, ລັດຖະບານ ແຫ່ງ ສປປ ລາວ ຄວນສະແດງບົດບາດທີ່ສໍາຄັນ ໃນການເປັນຜູ້ລິເລີ່ມ ອອກນະໂຍບາຍ ແລະແຜນການຕ່າງໆ ເພື່ອສະໜັບສະໜູນທຸລະກິດປະເພດດັ່ງກ່າວ.

ຂໍ້ສະເໜີວິທີແກ້ໄຂ:

1. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ກໍານົດນິຍາມຂອງ ຄໍາວ່າ Startup
2. ສ້າງຄວາມສົນໃຈກ່ຽວກັບ Startup ໂດຍການອອກນະໂຍບາຍສະເພາະ ໃນການສົ່ງເສີມ Startup ( ເຊັ່ນ ນະໂຍບາຍ Startup Nation ຂອງປະເທດຫວຽດນາມ, Thailand 4.0 ຂອງປະເທດໄທ, Start-up India, Stand Up India ຂອງປະເທດ ອິນເດຍ ). ເຊິ່ງນະໂຍບາຍດັ່ງກ່າວ ອາດລະບຸສ້າງຄວາມສົນໃຈກ່ຽວກັບ Startup ໂດຍການອອກນະໂຍບາຍສະເພາະ ໃນການສົ່ງເສີມ Startup ( ເຊັ່ນ ນະໂຍບາຍ Startup Nation ຂອງປະເທດຫວຽດນາມ, Thailand 4.0 ຂອງປະເທດໄທ, Start-up India, Stand Up India ຂອງປະເທດ ອິນເດຍ ). ເຊິ່ງນະໂຍບາຍດັ່ງກ່າວ ອາດລະບຸມາດຕະການສົ່ງເສີມຕ່າງໆ ເຊັ່ນ ດ້ານ ອາກອນ, ງົບປະມານຈັດກິດຈະກໍາເຜີຍແຜ່ຜົນການພັດທະນາເຕັກໂນໂລຊີໃໝ່ໆ,

ການຝຶກອົບຮົມ ແລະອື່ນໆ ໂດຍໃຫ້ມີການເຂົ້າຮ່ວມຂອງພາກທຸລະກິດ ໃນການປະກອບຄໍາຄິດເຫັນເຂົ້າໃນການສ້າງນະໂຍບາຍດັ່ງກ່າວ.

3. ມາດຕະການສົ່ງເສີມຕ່າງໆ ເຊັ່ນ ດ້ານ ອາກອນ, ງົບປະມານຈັດກິດຈະກໍາເຜີຍແຜ່ຜົນການພັດທະນາເຕັກໂນໂລຊີໃໝ່ໆ, ການຝຶກອົບຮົມ ແລະອື່ນໆ ໂດຍໃຫ້ມີການເຂົ້າຮ່ວມຂອງພາກທຸລະກິດ ໃນການປະກອບຄໍາຄິດເຫັນເຂົ້າໃນການສ້າງນະໂຍບາຍດັ່ງກ່າວ.
4. ສ້າງ ແລະ ປັບປຸງກົດລະບຽບ ແລະ ກົດໝາຍ ທີ່ຈະສະໜັບສະໜູນຂະບວນການກໍ່ຕັ້ງ ແລະ ດໍາເນີນທຸລະກິດຂອງ Startup ເຊັ່ນ ກົດລະບຽບຄຸ້ມຄອງ ທຸລະກິດ ແບບ ອອນລາຍ, ກົດລະບຽບ ຄຸ້ມຄອງ ການຄ້າຜ່ານລະບົບ ອີເລັກໂຕນິກ ເປັນຕົ້ນ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1. ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ
2. ກົມເຕັກໂນໂລຊີ ແລະ ນະວັດຕະກໍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

**ຄວາມຄືບໜ້າການແກ້ໄຂບັນຫາ**

- ກົມເຕັກໂນໂລຊີ ແລະ ນະວັດຕະກໍາ, ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ ຮ່ວມກັບກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຮ່າງນະໂຍບາຍສົ່ງເສີມ Start-up ເຊິ່ງປະຈຸບັນ ແມ່ນຢູ່ໃນໄລຍະການຮ່າງນິຕິກໍາສົ່ງເສີມດັ່ງກ່າວ, ຄາດວ່າ ຈະຮ່າງສໍາເລັດໃນທັນວາ 2020, ແລະ ຄາດວ່າຈະສາມາດປະກາດນໍາໃຊ້ໄດ້ໃນໄຕມາດທີ 2 ຂອງປີ 2020. ສ່ວນການອອກນິຕິກໍາທີ່ຕິດພັນກັບການຄ້າເອເລັກໂຕນິກ ແມ່ນ ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ສໍາເລັດຮ່າງ ດໍາລັດວ່າດ້ວຍການຄ້າທາງອີເລັກໂຕນິກ ເຊິ່ງປະຈຸບັນ ແມ່ນລໍຖ້າຄໍາເຫັນເພີ່ມເຕີມ ແລະ ຄາດວ່າຈະສໍາເລັດ ແລະ ປະກາດນໍາໃຊ້ໃນເດືອນ ທັນວາ 2020.
- ອີງຕາມຄໍາຕອບຂອງ ກົມເຕັກໂນໂລຊີ ແລະ ນະວັດຕະກໍາ, ສະບັບເລກທີ 35/ກວຕ.ກຕນ, ລົງວັນທີ 05 ມິຖຸນາ 2020 ຕໍ່ກັບນະໂຍບາຍສົ່ງເສີມ Start-up: ກົມເຕັກໂນໂລຊີ ແລະ ນະວັດຕະກໍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ ຮ່ວມກັບກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຮ່າງນະໂຍບາຍສົ່ງເສີມ Start-up ເຊິ່ງປະຈຸບັນ ແມ່ນຢູ່ໃນໄລຍະເກັບກໍາຂໍ້ມູນ ແລະ ວາງແຜນ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສໍາເລັດ).
- ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ສະຫຼຸບ ໃນກອງປະຊຸມປຶກສາຫາລືລະຫວ່າງພາກລັດ ແລະ ພາກທຸລະກິດ ໃນຫົວຂໍ້ ການສ້າງຄວາມເຂົ້າໃຈ ແລະ ການສ້າງນະໂຍບາຍສົ່ງເສີມ ການເປັນຜູ້ປະກອບການດ້ານນະວັດຕະກໍາ (Innovative Entrepreneurship-Startup) ໃນ ສປປ ລາວ, ໃນວັນທີ 26 ກັນຍາ 2018, ວ່າ ກະຊວງວິທະຍາສາດ ແລະເຕັກໂນໂລຊີ ຈະເປັນເຈົ້າການໃນການສົ່ງເສີມດ້ານວິທະຍາສາດ ເຕັກໂນໂລຊີ ແລະນະວັດຕະກໍາໃນຂັ້ນຕໍ່ໄປ ໂດຍໄດ້ຍົກໃຫ້ເຫັນ 6 ແຜນງານໃນຕໍ່ໜ້າ ຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ໃນການພັດທະນາ ວິທະຍາສາດ ເຕັກໂນໂລຊີ, ນະວັດຕະກໍາ ຈົນຮອດປີ 2030 ມີຄື:
  - ສ້າງຄວາມຮັບຮູ້ ເຂົ້າໃຈ ແລະ ຈິນຕະນາການກ່ຽວກັບການພັດທະນາສິທະຍາສາດ ເຕັກໂນໂລຊີ ແລະນະວັດຕະກໍາ ໃຫ້ສັງຄົມ ແລະທຸກພາກສ່ວນກ່ຽວຂ້ອງຮັບຮູ້ ຢ່າງເລິກເຊິ່ງ, ເຊິ່ງຈະໄດ້ມີການເຜີຍແຜ່ຫຼາຍແບບ ເຊັ່ນນໍາໃຊ້ ສື່ໂທລະພາບ ແລະ ການຈັດງານປະຊຸມສໍາມະນາຕ່າງໆ. ຈະໄດ້ຮ່ວມກັບ ສະພາການຄ້າ ແລະອຸດສາຫະກໍາ ແຫ່ງຊາດລາວ ຈັດກອງປະຊຸມລັກສະນະນີ້ຂຶ້ນເລື້ອຍໆ.

- ສ້າງບັນດານິຕິກຳ, ລະບຽບການ ແລະນະໂຍບາຍສົ່ງເສີມຕ່າງໆ.
- ສ້າງ ແລະພັດທະນາຊັບພະຍາກອນມະນຸດ ໃຫ້ຢູ່ໃນລະດັບສາກົນ.
- ຊຸກຍູ້ສົ່ງເສີມການຄົ້ນຄວ້າ ແລະພັດທະນາວິທະຍາສາດ ແລະນຳເອົາຜົນການຄົ້ນຄວ້າ ເຂົ້າສູ່ການຜະລິດ ໃຫ້ກ້າວເຖິງທຸກຂະແໜງການແລະ ລະດັບທ້ອງຖິ່ນ.
- ການບໍລິການ ທາງດ້ານວິທະຍາສາດ ແລະເຕັກໂນໂລຊີ ເຊິ່ງລວມມີ ການ ຖ່າຍທອດເຕັກໂນໂລຊີ ກໍ່ຄື ການນຳເອົາຄວາມຮູ້ ແລະ ເຄື່ອງຈັກເຂົ້າມາໃນປະເທດ, ການ ເອົາໃຈໃສ່ ທາງດ້ານມາດຕະຖານ ແລະຄຸນ ນະພາບ ຈະຕ້ອງໄດ້ມາດຕະຖານສາກົນ ແລະການປັບປຸງລະບົບ ຂຶ້ນທະບຽນຊັບສິນທາງປັນຍາ.
- ເປີດກວ້າງການຮ່ວມມືກັບຕ່າງປະເທດ ແລະການພົວພັນສາກົນ.
- ນອກຈາກນີ້ ກົມສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ ພວມປັບປຸງດຳລັດກອງທຶນ SME ທີ່ ຄາດວ່າຈະສຳເລັດໃນປີ 2019 ນີ້. ໃນຮ່າງດຳລັດດັ່ງກ່າວ ໄດ້ລະບຸໃຫ້ມີການສົ່ງເສີມ Startup ເປັນ ໜຶ່ງ ໃນກິດຈະກຳຫຼັກຂອງກອງທຶນ.

## 5. ການເສີມສ້າງຄວາມເຂັ້ມແຂງໃຫ້ກັບສະມາຄົມທຸລະກິດ

ສະພາບບັນຫາ: ຜູ້ປະກອບການ ໂດຍສະເພາະແມ່ນໃນຂະແໜງການບໍລິການທາງດ້ານການເງິນ ຈໍາຕ້ອງໄດ້ມີການຮ່ວມມືລະດັບສາກົນ. ໃນນີ້ ທະນາຄານ ແມ່ນ ເປັນຕົວກາງຊ່ວຍອໍານວຍຄວາມສະດວກໃຫ້ແກ່ການຄ້າ, ການແລກປ່ຽນເງິນຕາ ແລະ ການໄຫຼວຽນຂອງເງິນທຶນ, ບໍລິສັດປະກັນໄພ ເປັນຜູ້ຊ່ວຍຈັດການກັບຄວາມສ່ຽງໂດຍການໂອນຄວາມສ່ຽງອອກສູ່ຕະຫຼາດປະກັນໄພຕ່າງປະເທດ, ແລະ ບໍລິສັດເຊົ່າສິນເຊື່ອ ກໍ່ເປັນຜູ້ມີບົດບາດສໍາຄັນໃນຕະຫຼາດຍານພາຫະນະສາກົນ ແລະ ຕະຫຼາດການເງິນ. ຢ່າງໃດກໍ່ຕາມ ບັນຫາທີ່ຜູ້ປະກອບການພົບພໍ້ແມ່ນ ໃນ ດໍາລັດວ່າດ້ວຍສະມາຄົມ ເລກທີ 238/ລບ ລົງວັນທີ 11/08/2017, ໃນວັກທີ 7 ຂໍ້ທີ 3 ລະບຸວ່າ ບໍ່ອະນຸຍາດໃຫ້ຄົນຕ່າງປະເທດ ເປັນຄະນະບໍລິຫານງານຂອງສະມາຄົມທຸລະກິດ ແລະ ບໍ່ອະນຸຍາດໃຫ້ມີສິດອອກສຽງໃນການເລືອກຄະນະບໍລິຫານງານ. ນອກຈາກນີ້ ມາດຕາທີ 31 ຂໍ້ທີ 7 ກໍ່ລະບຸວ່າບໍ່ອະນຸຍາດໃຫ້ຜູ້ຊ່ຽວຊານຕ່າງປະເທດ ຫຼື ອາສາສະໝັກຄົນຕ່າງປະເທດ ເຮັດວຽກປະຈໍາໃນສະມາຄົມໄດ້.

ຍົກຕົວຢ່າງ: ຢູ່ພາຍໃນ ສະມາຄົມປະກັນໄພລາວ (LIA), ມີສະມາຊິກທັງໝົດ 14 ບໍລິສັດ ເຊິ່ງ 11 ບໍລິສັດໃນ 14 ບໍລິສັດດັ່ງກ່າວ ແມ່ນບໍລິສັດທີ່ເປັນເຈົ້າຂອງໂດຍນັກລົງທຶນຕ່າງປະເທດ. ອີງຕາມຂໍ້ກໍານົດຈາກກະຊວງພາຍໃນ ແຈ້ງວ່າບັນດາ 11 ບໍລິສັດ ນີ້ ເປັນໄດ້ພຽງແຕ່ ສະມາຊິກຊ່ວຍສະໜັບສະໜູນໃຫ້ແກ່ສະມາຄົມເທົ່ານັ້ນ ສະນັ້ນຈຶ່ງບໍ່ສາມາດມີສ່ວນຮ່ວມໃນຄະນະບໍລິຫານງານສະມາຄົມໄດ້ ຫຼື ມີສິດເລືອກຄະນະບໍລິຫານງານສະມາຄົມໄດ້. ຖ້າຄໍານຶງເຖິງແງ່ຄວາມເປັນຈິງ ຈະເຫັນວ່າ ສະມາຄົມດັ່ງກ່າວຈະບໍ່ສາມາດມີການແຕ່ງຕັ້ງຄະນະບໍລິຫານງານໄດ້ ເນື່ອງຈາກບໍລິສັດປະກັນໄພຂອງລາວ ທີ່ມີຜູ້ອໍານວຍການເປັນຄົນລາວ ມີຈໍານວນໜ້ອຍກວ່າຂໍ້ກໍານົດຂອງການສ້າງຕັ້ງຄະນະບໍລິຫານງານສະມາຄົມ. ຖ້າຫາກນັກລົງທຶນຕ່າງປະເທດ ບໍ່ສາມາດປະກອບຄໍາເຫັນປັບປຸງສະພາບການດໍາເນີນທຸລະກິດ ໂດຍຜ່ານສະມາຄົມ ຫຼື ສະພາການຄ້າຂອງຕົນໄດ້ ກໍ່ຈະເປັນຜົນກະທົບໃຫ້ແກ່ການລົງທຶນຂອງຕ່າງປະເທດໃນ ສປປ ລາວ. ເຫັນໄດ້ວ່າ ດໍາລັດວ່າດ້ວຍສະມາຄົມ ມີການຈໍາກັດການເຂົ້າຮ່ວມຂອງນັກລົງທຶນຕ່າງປະເທດ ໃນເວທີປຶກສາຫາລືທີ່ສໍາຄັນ ຢ່າງແທ້ຈິງ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ ກະຊວງພາຍໃນ ພິຈາລະນາ ປັບປຸງ ດໍາລັດວ່າດ້ວຍສະມາຄົມເລກທີ 238/ລບ, ລົງວັນທີ 11/08/2017 ໂດຍລະບຸອະນຸຍາດໃຫ້ນັກລົງທຶນຕ່າງປະເທດສາມາດມີສ່ວນຮ່ວມໃນການເປັນຄະນະບໍລິຫານງານຂອງສະມາຄົມທຸລະກິດ ແລະ ສະພາການຄ້າຕ່າງປະເທດ ໃນ ສປປ ລາວ.
2. ສະເໜີໃຫ້ ກະຊວງ ອຸດສາຫະກໍາ ແລະ ການຄ້າ ພິຈາລະນາຄືນ ກ່ຽວກັບ ຂໍ້ຕົກລົງ ຂອງກະຊວງອຸດສາຫະກໍາ ແລະການຄ້າ ເລກທີ 1006/ອຄ.ຄພນ ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈໍາ ສປປ ລາວ, ເພື່ອໃຫ້ນັກລົງທຶນຕ່າງປະເທດ ມີບົດບາດສ່ວນຮ່ວມໃນ ສະພາການຄ້າຕ່າງປະເທດ ຫຼາຍຂຶ້ນ ( ທັງໃນແງ່ການໃຫ້ຄໍາປຶກສາ ຫຼື ການອາສາສະໝັກຕາມຄວາມອາດສາມາດ

**ຂະແໜງການທີ່ກ່ຽວຂ້ອງ**

1. ກະຊວງພາຍໃນ
2. ກະຊວງອຸດສາຫະກໍາ ແລະ ການຄ້າ

## ກຸ່ມບັນຫາທີ່ຕິດພັນກັບການອໍານວຍຄວາມສະດວກທາງດ້ານການຄ້າ

### 1. ຂັ້ນຕອນການຂໍອະນຸຍາດຂົນສົ່ງສິນຄ້າຜ່ານແດນ ແລະ ສິນຄ້າທີ່ບໍ່ຢູ່ໃນລາຍການສິນຄ້າເກືອດຫ້າມ

ສະພາບບັນຫາ: ຜ່ານການສະເໜີບັນຫາ ຂັ້ນຕອນການຂໍອະນຸຍາດຂົນສົ່ງສິນຄ້າສໍາລັບສິນຄ້າຜ່ານແດນ ສໍາລັບສິນຄ້າ ທີ່ບໍ່ຢູ່ໃນລາຍການສິນຄ້າເກືອດຫ້າມ ໃນກົນໄກກອງປະຊຸມທຸລະກິດລາວຄັ້ງທີ 10, 11 ແລະ 12 ຜ່ານມາ ຕໍ່ກັບຂໍ້ຫຍຸ້ງຍາກຂອງຂັ້ນຕອນການຂໍອະນຸຍາດຂົນສົ່ງສິນຄ້າຜ່ານແດນ ທີ່ອະນຸຍາດໂດຍກົມພາສີ ແລະ ການຈໍາກັດດ່ານພາສີສາກົນທີ່ສາມາດຂົນສົ່ງ, ຜ່ານມາ ອີງຕາມການລາຍງານຂອງຜູ້ປະກອບການ ເຫັນວ່າ ກະຊວງການເງິນກໍ່ໄດ້ມີການເອົາໃຈໃສ່ແກ້ໄຂຕາມບາງຂໍ້ສະເໜີຂອງພາກທຸລະກິດ ທີ່ໄດ້ສະເໜີ ເຊັ່ນ ໄດ້ຢຸດການຮຽກຮ້ອງເອກະສານສັນຍາຊື້ຂາຍ ລະຫວ່າງ ຜູ້ຊື້ ແລະ ຜູ້ຂາຍ, ແລະ ໃບມອບສິດຈາກເຈົ້າຂອງສິນຄ້າໃນການປະກອບເອກະສານແຈ້ງສິນຄ້າຜ່ານແດນ, ໄດ້ຫຼຸດໄລຍະເວລາການຂໍອະນຸຍາດຂົນສົ່ງສິນຄ້າສໍາລັບສິນຄ້າຜ່ານແດນ ຈາກປະມານ 2 ເດືອນ ມາເປັນ 10 ວັນ, ແລະ ໄດ້ກໍານົດອາຍຸຂອງສັນຍາຄໍ້າປະກັນໃນການຂົນສົ່ງສິນຄ້າສໍາລັບສິນຄ້າຜ່ານແດນ ຈາກ 6 ເດືອນ ມາເປັນ 1 ປີ. ຢ່າງໃດກໍ່ຕາມ ຜູ້ປະກອບການ ຍັງເຫັນວ່າ ຂັ້ນຕອນການຂໍອະນຸຍາດຂົນສົ່ງສິນຄ້າສໍາລັບສິນຄ້າຜ່ານແດນ ສໍາລັບສິນຄ້າ ທີ່ບໍ່ຢູ່ໃນລາຍການສິນຄ້າເກືອດຫ້າມ ຈໍາຕ້ອງໄດ້ມີການອໍານວຍຄວາມສະດວກເພີ່ມເຕີມຕາມຂໍ້ສະເໜີອື່ນໆ ທີ່ເຄີຍໄດ້ສະເໜີຫາຂະແໜງການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ຂັ້ນຕອນດັ່ງກ່າວ ມີຄວາມສະດວກ ແລະ ມີບ່ອນອີງທີ່ຊັດເຈນ. ໃນຂັ້ນຕໍ່ໄປ ກົມພາສີ ຈະມີການນໍາໃຊ້ລະບົບ ASEAN Customs Transit System (ACTS) ແຕ່ຢ່າງໃດກໍ່ຕາມ ຜູ້ປະກອບການຂົນສົ່ງສ່ວນໃຫຍ່ ຍັງເຫັນວ່າການນໍາໃຊ້ລະບົບດັ່ງກ່າວຍັງມີຂໍ້ຫຍຸ້ງຍາກ ແລະ ຍັງບໍ່ສາມາດແກ້ໄຂບັນຫາໄດ້, ແລະ ປະຈຸບັນ ຈິ່ງຍັງບໍ່ມີການລິເລີ່ມນໍາໃຊ້ລະບົບດັ່ງກ່າວເທື່ອ.

**ຂໍ້ສະເໜີວິທີແກ້ໄຂ:**

1) ສະເໜີໃຫ້ກົມພາສີ ຕັດຂອດການຂໍອະນຸຍາດລາຍການຂົນສົ່ງສິນຄ້າຜ່ານແດນ ສໍາລັບສິນຄ້າທົ່ວໄປທີ່ບໍ່ແມ່ນ ສິນຄ້າເກືອດຫ້າມ ທີ່ພາກທຸລະກິດຕ້ອງໄດ້ຂໍລ່ວງໜ້າ ; ແລະ
2) ໃນໄລຍະທີ່ການນໍາໃຊ້ລະບົບ ACTS ຍັງບໍ່ໄດ້ຖືກນໍາໃຊ້ຢ່າງສົມບູນ, ສະເໜີໃຫ້ກົມພາສີ ພິຈາລະນາ ນໍາໃຊ້ລະບົບປະຈຸບັນ ຄຽງຄູ່ກັນໄປ.
3) ສະເໜີໃຫ້ ລັດຖະບານ ພິຈາລະນາ ນໍາໃຊ້ດ່ານພາສີສາກົນທີ່ສາມາດຂົນສົ່ງຜ່ານແດນ ສປປລາວ ຕາມລະບຸໃນສັນຍາ ແລະ ອານຸສັນຍາສອງຝ່າຍ ແລະ GMS-CBTA (ໄດ້ຮັບຄໍາຕອບແລ້ວ)

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມພາສີ, ກະຊວງການເງິນ
2. ກົມນໍາເຂົ້າສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ
3. ກົມຂົນສົ່ງ, ກະຊວງ ໂຍທາທິການແລະຂົນສົ່ງ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ ລ່າສຸດ:**

- ອີງຕາມຜົນຂອງການປຶກສາຫາລືໃນກອງປະຊຸມ ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ແລະ ກອງປະຊຸມຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າທົ່ວປະເທດ ຄັ້ງທີ 3: ປະຈຸບັນ ກົມການນໍາເຂົ້າ ແລະ ສົ່ງອອກ ພວມຢູ່ໃນຂັ້ນຕອນການຄົ້ນຄວ້າປັບປຸງ ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ການສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ ແລະ ຂໍ້ຕົກລົງ ວ່າດ້ວຍການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ, ເຊິ່ງການປັບປຸງສອງນິຕິກໍາດັ່ງກ່າວ ຄາດວ່າຈະສາມາດ ກໍານົດຂັ້ນຕອນ, ເອກະສານ ແລະ

ເວລາໃນການອອກອະນຸຍາດຜ່ານແດນສິນຄ້າ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ນຳເຂົ້າຊົ່ວຄາວ ຢ່າງລະອຽດ ແລະ ຊັດເຈນ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດ, ພ້ອມທັງກຳນົດລາຍການສິນຄ້າທີ່ຕ້ອງຂໍອະນຸຍາດ ແລະ ເກືອດຫ້າມ ຜ່ານແດນ ສປປ ລາວ ໃຫ້ມີຄວາມຊັດເຈນ. ຄາດວ່າສອງນິຕິກຳດັ່ງກ່າວຈະສຳເລັດ ໃນງວດ 1 ປີ 2021.

- ອີງຕາມຄຳເຫັນຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
  - **ຕາງໜ້າ ຈາກກົມພາສີ:** ອີງຕາມ ຫຼັກການ ການຂົນສົ່ງສິນຄ້າຜ່ານແດນ ແມ່ນຈະບໍ່ອະນຸຍາດໃຫ້ມີການຄ່ຽນຖ່າຍສິນຄ້າພາຍໃນປະເທດ. ໃນຂັ້ນຕໍ່ໄປ ຈະມີການນຳໃຊ້ລະບົບ ASEAN Customs Transit System (ACTS) ເຊິ່ງລະບົບດັ່ງກ່າວຈະກຳນົດມາດຖານ ແລະ ເງື່ອນໄຂຕ່າງໆ ລວມທັງລາຍການສິນຄ້າ ທີ່ອະນຸຍາດ ຂົນສົ່ງສິນຄ້າຜ່ານແດນໃນກອບ ASEAN (ຄາດວ່າຈະໄດ້ເລີ່ມນຳໃຊ້ໃນເດືອນພະຈິກ 2020). ລະບົບດັ່ງກ່າວ ຈະປ່ຽນແທນການດຳເນີນຂັ້ນຕອນແບບເຈ້ຍສໍ, ພ້ອມກັນນີ້ ໃນການນຳໃຊ້ລະບົບດັ່ງກ່າວ ແມ່ນຈະບໍ່ຈຳເປັນດຳເນີນການຂໍອະນຸຍາດການຂົນສົ່ງສິນຄ້າຜ່ານແດນສຳລັບສິນຄ້າທົ່ວໄປ ທີ່ບໍ່ໄດ້ນອນຢູ່ໃນບັນຊີປະເພດສິນຄ້າເກືອດຫ້າມ, ຄຸ້ມຄອງ ແລະ ສະຫງວນ ເນື່ອງຈາກລະບົບດັ່ງກ່າວຈະດຳເນີນການກວດກາ ແລະ ອະນຸມັດໃຫ້ໂດຍອັດຕະໂນມັດ ຫຼັງຈາກທີ່ຜູ້ປະກອບການດຳເນີນການແຈ້ງ. ພ້ອມກັນນີ້ ກົມພາສີ ແມ່ນພວມຢູ່ໃນຂັ້ນຕອນປັບປຸງກົດໝາຍພາສີ ແລະ ບັນດາລະບຽບການເພື່ອໃຫ້ສອດຄ່ອງກັບສົນທິສັນຍາສາກົນ.
  - **ຕາງໜ້າ ຈາກກົມຂົນສົ່ງ:** ດ່ານສຳລັບການຂົນສົ່ງສິນຄ້າ ແມ່ນຂຶ້ນກັບການເຈລະຈາ ແລະ ຕົກລົງຢູ່ໃນສັນຍາ ສອງຝ່າຍ (ປະຈຸບັນ ມີສັນຍາສອງຝ່າຍ ລາວ-ໄທ, ລາວ-ຫວຽດ, ລາວ-ຈີນ ແລະ ລາວ-ກຳປູເຈຍ), ສັນຍາສາມຝ່າຍ (ມີ ສັນຍາ ລາວ-ຫວຽດນາມ-ໄທ, ລາວ-ຫວຽດນາມ-ກຳປູເຈຍ, ແຕ່ປະຈຸບັນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້), ສັນຍາອານຸພາກພື້ນແມ່ນ້ຳຂອງ (GMS-CBTA) ແລະ ສັນຍາ ASEAN (ປະຈຸບັນ ສັນຍາ ASEAN ແມ່ນຢູ່ໃນຂັ້ນທົດລອງ ໂດຍນຳໃຊ້ເສັ້ນທາງເລກທີ 9, ແລະ ຈະຖືກຈັດຕັ້ງປະຕິບັດໃນໄວໆນີ້). ສຳລັບ ຜູ້ປະກອບການຂົນສົ່ງຂອງ ສປປ ລາວ ທີ່ຕ້ອງການຂົນສົ່ງສິນຄ້າໄປປະເທດອ້ອມຂ້າງ ແມ່ນສາມາດອີງໃສ່ບັນດາສັນຍາເຫຼົ່ານີ້ເປັນບ່ອນອີງໃນການນຳໃຊ້ດ່ານຂົນສົ່ງສິນຄ້າ, ສ່ວນຜູ້ປະກອບການທີ່ຢູ່ຕ່າງປະເທດ ທີ່ຕ້ອງການຂົນສົ່ງສິນຄ້າຜ່ານ ສປປ ລາວ ໄປຍັງປະເທດທີສາມໂດຍບໍ່ມີການຄ່ຽນຖ່າຍສິນຄ້າໃນ ສປປ ລາວ ແມ່ນຕ້ອງອີງໃສ່ກອບສັນຍາ GMS-CBTA ໃນການຂົນສົ່ງສິນຄ້າ. ຢ່າງໃດກໍ່ຕາມ ເນື່ອງຈາກ ປະຈຸບັນ ບັນດາປະເທດຕ່າງໆ ທີ່ລົງນາມໃນສັນຍາ GMS-CBTA ຍັງບໍ່ສາມາດຈັດຕັ້ງປະຕິບັດເງື່ອນໄຂໃນສັນຍາດັ່ງກ່າວໄດ້ຢ່າງເຕັມສ່ວນ. ໃນກອບ GMS-CBTA, ສຳລັບ ສປປ ລາວ ແມ່ນເປີດໃຫ້ນຳໃຊ້ 6 ດ່ານ ຕາມ ເສັ້ນທາງເລກທີ 3, ເສັ້ນທາງເລກທີ 13, ແລະ ເສັ້ນທາງເລກທີ 9 ເພື່ອໃຫ້ລົດຂົນສົ່ງ ຈາກປະເທດຕົ້ນທາງ ຂົນສົ່ງສິນຄ້າ ຜ່ານ ສປປ ລາວ ໄປຍັງປະເທດທີສາມ, ແຕ່ ປະເທດອື່ນໆ ແມ່ນຍັງບໍ່ທັນເປີດໃຫ້ລົດຂົນສົ່ງຈາກ ສປປ ລາວ ຂົນສົ່ງສິນຄ້າຜ່ານໄປຍັງປະເທດທີສາມໄດ້ເທື່ອ ຈິ່ງຍັງເປັນຂໍ້ຈຳກັດຂອງການຈັດຕັ້ງປະຕິບັດສັນຍາ GMS-CBTA.

## 2. ການແຂ່ງຂັນຈາກການນຳເຂົ້າສິນຄ້າ ທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບກົດໝາຍ

ສະພາບບັນຫາ: ປະຈຸບັນຍັງມີຜູ້ປະກອບການ ທີ່ມີການນຳເຂົ້າ, ສະໜອງ, ຈັດສົ່ງ ແລະ ການຈັດຈຳໜ່າຍສິນຄ້າ ທີ່ບໍ່ໄດ້ເສຍພັນທະພາສີ-ອາກອນຢ່າງຖືກຕ້ອງ, ໄດ້ຊຳລະເປັນພຽງບາງສ່ວນ ຫຼື ນຳເຂົ້າສຳລັບມາຈຳໜ່າຍໃນຮ້ານຄ້າປອດພາສີ ແຕ່ຖືກຈຳໜ່າຍສູ່ຕະຫຼາດພາຍໃນທີ່ບໍ່ໄດ້ເສຍພາສີ-ອາກອນຕາມຈຳນວນທີ່ນຳເຂົ້າມາເພື່ອຂາຍພາຍໃນ, ມີການຂາຍສິນຄ້າທີ່ນຳເຂົ້າຈາກຕ່າງປະເທດໂດຍບໍ່ໄດ້ຕິດສະຫຼາກສິນຄ້າເປັນພາສາລາວ ຕາມທີ່ໄດ້ກຳນົດໃນ ຄຳສັ່ງຂອງລັດຖະມົນຕີກະຊວງ ອຄ ເລກທີ 2501/ອຄ.ຄພນ ລົງວັນທີ 16/12/2015 ກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ, ມີການຄ້າຂາຍສິນຄ້າທີ່ມີຜົນກະທົບຕໍ່ສຸຂະພາບແຕ່ບໍ່ໄດ້ຕິດຄຳເຕືອນກ່ຽວກັບສຸຂະພາບໃສ່ການຫຸ້ມຫໍ່ ຕາມທີ່ກະຊວງສາທາລະນະສຸກກຳນົດ ແລະ ຮູບແບບອື່ນໆ ເຊິ່ງການຄ້າຂາຍສິນຄ້າ ແລະ ການໃຫ້ບໍລິການທີ່ບໍ່ຖືກຕ້ອງຕາມກົດລະບຽບ-ກົດໝາຍເຫຼົ່ານີ້ ໄດ້ສົ່ງຜົນກະທົບຮຸນແຮງ ແລະ ເກີດມີການແຂ່ງຂັນທີ່ບໍ່ເປັນທຳຕໍ່ຜູ້ປະກອບການທີ່ປະຕິບັດຖືກຕ້ອງ ຕາມກົດລະບຽບ-ກົດໝາຍໃນ ສປປ ລາວ, ລວມໄປເຖິງຜົນກະທົບຕໍ່ລາຍຮັບຂອງລັດຖະບານ.

ກໍລະນີຕົວຢ່າງຜ່ານມາ ການຄ້າຂາຍ, ການສະໜອງ, ການຈັດສົ່ງ ແລະ ການຈັດຈຳໜ່າຍຢາສູບເຖື່ອນ ຫຼື ຢາສູບປອມ ທີ່ບໍ່ໄດ້ເສຍພັນທະພາສີ-ອາກອນ. ຜ່ານມາເຫັນວ່າໄດ້ມີຢາສູບເຖື່ອນ ຈຳນວນຫຼາຍທີ່ພົບເຫັນວາງຈຳໜ່າຍຢູ່ໃນຫຼາຍຮ້ານຄ້າຂາຍຍ່ອຍ, ເຊິ່ງບໍ່ມີຄຳເຕືອນສຸຂະພາບກວມເອົາຕາມອັດຕາສ່ວນທີ່ກະຊວງສາທາລະນະສຸກໄດ້ກຳນົດ, ບໍ່ມີສະຫຼາກເປັນພາສາລາວ ແລະ ບໍ່ມີສະແຕມອາກອນ.

**ຂໍ້ສະເໜີວິທີແກ້ໄຂ:**

1) ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີວຽກງານການລົງກວດກາ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ, ຖ້າພົບເຫັນການລະເມີດ (ຜູ້ນຳເຂົ້າ, ຜູ້ຈັດຈຳໜ່າຍ, ແລະ ຕົວແທນຈຳໜ່າຍ, ຜູ້ໃຫ້ບໍລິການ ສິນຄ້າ ຫຼື ການບໍລິການປະຕິບັດບໍ່ຖືກຕ້ອງຕາມລະບຽບກົດໝາຍ).
2) ສະເໜີ ໃຫ້ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ່ວຍງານສະເພາະເພື່ອຮັບຄຳຮ້ອງຟ້ອງ ຕໍ່ກັບການນຳເຂົ້າ ຫຼື ຈຳໜ່າຍ ສິນຄ້າ ທີ່ປະຕິບັດພັນທະບໍ່ຖືກຕ້ອງຕາມລະບຽບກົດໝາຍ, ຢ່າງເປັນລະບົບ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມການຄ້າພາຍໃນ, ກະຊວງ ອຄ
2. ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຄ
3. ກົມພາສີ, ກະຊວງການເງິນ
4. ກົມສ່ວຍສາອາກອນ, ກະຊວງການເງິນ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ ລ່າສຸດ:**

- ອີງຕາມໜັງສືແຈ້ງຕອບຂອງກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0322/ກຄພນ.ຄພນ ວັນທີ 05 ພຶດສະພາ 2020: ໃນດ້ານ ການແຂ່ງຂັນຈາກຊາວຄ້າຂາຍຕ່າງປະເທດ ທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບກົດໝາຍ ໃນ ສປປ ລາວ ເຫັນວ່າ ຍັງບໍ່ທັນມີຄວາມຄືບໜ້າເພີ່ມເຕີມເທົ່າທີ່ຄວນ ເນື່ອງຈາກ ການຈັດຕັ້ງປະຕິບັດຄຳແນະນຳເລກທີ 0651/ອຄ.ກຄພນ ລົງວັນທີ 12 ກໍລະກົດ 2019 ກ່ຽວກັບການແກ້ໄຂບັນຫາຄົນຕ່າງປະເທດເຄື່ອນໄຫວດຳເນີນທຸລະກິດບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ

ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ ເນື່ອງຈາກມີຫຼາຍແຂວງ ບໍ່ມີຄວາມພ້ອມໃນການຈັດຕັ້ງປະຕິບັດ. ໃນດ້ານການແຂ່ງຂັນຈາກ ການນຳເຂົ້າ ແລະ ຈຳໜ່າຍສິນຄ້າ ທີ່ບໍ່ໄດ້ເສຍພັນທະຖືກຕ້ອງຕາມລະບຽບກົດໝາຍ, ກົມການຄ້າພາຍໃນ ມີແຜນ ຄົ້ນຄວ້າຮ່າງກົດໝາຍວ່າດ້ວຍການກວດກາການຄ້າ ເພື່ອຍົກລະດັບດຳລັດ 508, ພ້ອມກັນນີ້ ກໍ່ມີແຜນໃນການໃນການລົງກວດກາການນຳເຂົ້າ, ການຈຳໜ່າຍສິນຄ້າ ທີ່ຫຼົບຫຼີກພັນທະຕ່າງໆ ເຊັ່ນ: ພາສີ, ອາກອນ ຕາມຮ້ານຄ້າຕ່າງໆ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ).

- ຜ່ານການປຶກສາຫາລື ບັນຫານີ້ ກັບ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າຂັ້ນສູນກາງ ເຫັນວ່າບັນຫາດັ່ງກ່າວເປັນບັນຫາທີ່ກວ້າງ ແລະ ຈະຕ້ອງໄດ້ມີການຕິດຕາມແກ້ໄຂເປັນແຕ່ລະກໍລະນີສະເພາະ

### 3. ການເກັບຄ່າທຳນຽມ ທີ່ບໍ່ຖືກຕາມກຳນົດໃນລັດຖະບັນຍັດປະທານປະເທດ 002/ປປທ (ບາງກໍລະນີແກ້ໄຂແລ້ວ)

ສະພາບບັນຫາ: ເຖິງແມ່ນວ່າ ຄ່າທຳນຽມ ແລະ ຄ່າບໍລິການທັງໝົດຂອງພາກລັດ ແມ່ນຈະຖືກລະບຸໄວ້ໃນລັດຖະບັນຍັດເລກທີ 002/ປປທ (ປ່ຽນແທນເລກທີ 003/ປປທ) ແລ້ວກໍ່ຕາມ ແຕ່ໃນຕົວຈິງ ມີຫຼາຍໜ່ວຍງານຂັ້ນສູນກາງ ແລະ ທ້ອງຖິ່ນ ມີການອອກລະບຽບການເກັບຄ່າທຳນຽມ ຫຼື ຄ່າບໍລິການເພີ່ມ ເຊິ່ງຂັດກັບລັດຖະບັນຍັດ ເລກທີ 002/ປປທ. ລຸ່ມນີ້ ເປັນພຽງບາງຕົວຢ່າງທີ່ພາກທຸລະກິດພົບພໍ້ໃນໄລຍະຜ່ານມາ:

ກໍລະນີຕົວຢ່າງທີ 1 **(ແກ້ໄຂແລ້ວ ໃນທ້າຍປີ 2020)**: ປະຈຸບັນ ໃນການນຳເຂົ້າສິນຄ້າກະສິກຳ (ເຊັ່ນ ຝຸ່ນ) ຈະຕ້ອງໄດ້ມີໃບອະນຸຍາດການນຳເຂົ້າທີ່ອະນຸມັດໂດຍຂະແໜງກະສິກຳ ແລະ ປ່າໄມ້ ເຊິ່ງຜ່ານມາ ຜູ້ປະກອບການເຫັນວ່າ ຄ່າທຳນຽມການຂໍອະນຸຍາດດັ່ງກ່າວ ມີລາຄາແພງເກີນໄປ ແລະ ບໍ່ສົມເຫດສົມຜົນ ຄື ລາຄາ 50,000 ກີບ ຕໍ່ 1 ຄັ້ງ ( ໃນຂະນະທີ່ ລັດຖະບັນຍັດ ເລກທີ 003/ປປທ, ມາດຕາ 41 ຂໍ້ 10.1 ລະບຸ ຄ່າທຳນຽມດັ່ງກ່າວເທົ່າກັບ 25,000 ກີບ ຕໍ່ຄັ້ງ). ໃນກອງປະຊຸມປຶກສາຫາລື ຄັ້ງວັນທີ 16 ກັນຍາ 2020, ຜູ້ຕາງໜ້າ ຈາກກົມປູກຝັງ ໄດ້ອະທິບາຍວ່າ ການເກັບຄ່າທຳນຽມໃນການອະນຸຍາດນຳເຂົ້າ ພືດ ແລະ ຜະລິດຕະພັນພືດກະສິກຳ ເກີນຈາກທີ່ລະບຸໃນລັດຖະບັນຍັດເລກທີ 003/ປປທ ແມ່ນເນື່ອງຈາກ ໃນການປະຕິບັດ ໜ້າທີ່ ຕາມກົດໝາຍ ວ່າດ້ວຍການປ້ອງກັນພືດ ແລະ ກັກກັນພືດ ທີ່ໄດ້ກຳນົດວ່າ ພືດ ຈຳນວນ 136 ຊະນິດ ຕ້ອງຜ່ານການວິໄຈຄວາມສ່ຽງທີ່ອາດມີພະຍາດ ແລະ ສານຕົກຄ້າງຕ່າງໆ, ເຊິ່ງຈະຕ້ອງມີການນຳໃຊ້ ສານເຄມີ ແລະ ອຸປະກອນຕ່າງໆໃນການວິໄຈ. ຜ່ານມາ ຂະແໜງກະສິກຳ ແລະ ປ່າໄມ້ ເຫັນວ່າ ຄ່າໃຊ້ຈ່າຍໃນອຸປະກອນການວິໄຈດັ່ງກ່າວ ແມ່ນສູງກວ່າ ຄ່ານຳນຽມໃນການອະນຸຍາດນຳເຂົ້າ ພືດ ແລະ ຜະລິດຕະພັນພືດກະສິກຳ ທີ່ເກັບຕາມລັດຖະບັນຍັດເລກທີ 003/ປປທ, ຈຶ່ງໄດ້ມີການເກັບເພີ່ມຈາກທີ່ກຳນົດໃນລັດຖະບັນຍັດ ເລກທີ 003/ປປທ. ຜູ້ປະກອບການພາກທຸລະກິດ ເຫັນວ່າ ຖ້າຫາກຂະແໜງກະສິກຳ ແລະ ປ່າໄມ້ ເຫັນວ່າມີຄວາມຈຳເປັນໃນການເກັບຄ່າທຳນຽມເພີ່ມຈາກທີ່ລະບຸໃນລັດຖະບັນຍັດເລກທີ 003/ປປທ ແມ່ນ ຄວນຈະມີການສະເໜີປັບປຸງຄ່າທຳນຽມ ແລະ ລະບຸໃນລັດຖະບັນຍັດ 003/ປປທ ຢ່າງເປັນທາງການກ່ອນຈຶ່ງເກັບ, ພ້ອມທັງແຈ້ງໃຫ້ກັບຜູ້ປະກອບການຮັບຊາບ.

ກໍລະນີຕົວຢ່າງທີ 2: ປະຈຸບັນການກວດມາດຕະຖານເຕັກນິກຊີງຊັ່ງຂອງ ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ມີການເກັບຄ່າທຳນຽມ ທີ່ບໍ່ສອດຄ່ອງກັບລັດຖະບັນຍັດ ເລກທີ 003/ປປທ ເຮັດໃຫ້ເກີດພາລະແບກຮັບໃຫ້ບັນດາຜູ້ປະກອບການໃນແຕ່ລະປີ. ຜູ້ຕາງໜ້າ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງຜົ້ງສາລີ ໄດ້ປະກອບຄຳເຫັນໃນກອງປະຊຸມປຶກສາຫາລື ຄັ້ງວັນທີ 04 ສິງຫາ 2020 ວ່າ ໄດ້ມີຄ່າບໍລິການທີ່ບໍ່ນອນຢູ່ໃນລັດຖະບັນຍັດ 003/ປປທ ເຊັ່ນ: ໃບຢັ້ງຢືນກວດສອບ (5000 ກີບ/ຊຸດ), ສະຕິກເກີ້ຊີງຊັ່ງ (2000 ກີບ/ໜ່ວຍ), ລູກກິ່ວ (5000 ກີບ/ໜ່ວຍ), ເຫຼັກລວດ (5000 ກີບ/ໜ່ວຍ) ແລະ ຄ່າບໍລິການກວດສອບ ເຊິ່ງໄດ້ກຳນົດຢູ່ໃນ ຂໍ້ຕົກລົງຂອງທ່ານເຈົ້າເມືອງ ຜົ້ງສາລີ ເລກທີ 89/ຈມຜລ, ລົງວັນທີ 18/2/2016.

ກໍລະນີຕົວຢ່າງທີ 3: ໃນການຈັດຕັ້ງປະຕິບັດການຢັ້ງຢືນສັນຍາເງິນກູ້ ແລະ ຫຼັກຊັບຄ້ຳປະກັນ, ກົມທະບຽນສານ (ກະຊວງຍຸຕິທຳ) ເກັບຄ່າທຳນຽມ 20,000 ກີບ/ຊຸດ (ລະບຸໃນ ລັດຖະບັນຍັດ 003/ປປທ), ແລະ ຄ່າບໍລິການ 5000 ກີບ/ໜ້າເຈ້ຍ (ບໍ່ລະບຸໃນ ລັດຖະບັນຍັດ 003/ປປທ)

**ສະເໜີວິທີແກ້ໄຂ**:

ເນື່ອງຈາກຍັງມີ ກໍລະນີຕົວຢ່າງອີກຫຼາຍ ສະນັ້ນ ສະເໜີໃຫ້ກົມສ່ວຍສາອາກອນ ເປັນເຈົ້າການ ປະສານກັບຂະແໜງການຕ່າງໆ ສ້າງກົນໄກ ຕິດຕາມການ ຈັດຕັ້ງປະຕິບັດ ລັດຖະບັນຍັດ ເລກທີ 002/ປປທ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການຈັດຕັ້ງປະຕິບັດລັດຖະບັນຍັດ ເລກທີ 002/ປປທ ຢ່າງເປັນເອກະພາບທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ. **ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**: ກົມສ່ວຍສາອາກອນ, ກະຊວງການເງິນ

### 4. ການນຳໃຊ້ລະບົບ LNSW ທີ່ຍັງບໍ່ສົມບູນ

ສະພາບບັນຫາ: ໃນຊ່ວງກາງປີ 2019, ຂະແໜງພາສີ ໄດ້ມີການເລີ່ມນຳໃຊ້ລະບົບ LNSW ເຊິ່ງເປັນລະບົບການແຈ້ງພາສີປະຕູດຽວທີ່ທັນສະໄໝ ແລະ ສາມາດເຊື່ອມຕໍ່ໄດ້ກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງກັບການອະນຸມັດການນຳເຂົ້າສິນຄ້າ. ແຕ່ຫຼັງຈາກທີ່ ລະບົບ LNSW ຖືກນຳໃຊ້ໄປໄດ້ໄລຍະໜຶ່ງ ກໍ່ເຫັນວ່າ ລະບົບດັ່ງກ່າວຍັງມີຂອດຂັ້ນທີ່ມີບັນຫາ ແລະ ກໍ່ໄດ້ມີການຢຸດນຳໃຊ້ລະບົບ. ສາເຫດດັ່ງກ່າວເຮັດໃຫ້ເກີດມີຂໍ້ຫຍຸ້ງຍາກແກ່ບາງຜູ້ປະກອບການທີ່ໄດ້ເລີ່ມນຳໃຊ້ລະບົບໄປແລ້ວ. ກໍລະນີຕົວຢ່າງຜ່ານມາ: 1. ຜູ້ປະກອບການນຳເຂົ້າລົດ ທີ່ໄດ້ນຳເຂົ້າລົດໃນໄລຍະທີ່ມີການນຳໃຊ້ລະບົບ LNSW, ເຫັນວ່າ ລະບົບ LNSW ບໍ່ໄດ້ຖືກເຊື່ອມຕໍ່ກັບຂະແໜງໂຍທາທິການແລະຂົນສົ່ງ (ໜ່ວຍງານຂຶ້ນທະບຽນລົດ) ເຮັດໃຫ້ລູກຄ້າຜູ້ທີ່ໄດ້ຊື້ລົດໃນໄລຍະດັ່ງກ່າວ ບໍ່ສາມາດໄປຂຶ້ນປ້າຍລົດໄດ້ ເຊິ່ງເປັນເຫດໃຫ້ລູກຄ້າຂາດຄວາມເຊື່ອໝັ້ນຕໍ່ຜູ້ປະກອບການ. 2. ໃນການຊຳລະພາສີ ຜ່ານລະບົບ LNSW ແມ່ນຕ້ອງໄດ້ດຳເນີນການຊຳລະເປັນເທື່ອລະຫົວໜ່ວຍສິນຄ້າທີ່ນຳເຂົ້າ ເຊິ່ງໃນກໍລະນີທີ່ ຜູ້ປະກອບການນຳເຂົ້າສິນຄ້າໃດໜຶ່ງຈຳນວນຫຼາຍ (ຫົວໜ່ວຍ) ຈະເຮັດໃຫ້ການຊຳລະພາສີ ບໍ່ສາມາດສຳເລັດພາຍໃນມື້ ແລະ ເຮັດໃຫ້ຜູ້ປະກອບການຕ້ອງເສຍຄ່າຂົນສົ່ງເພີ່ມເຕີມ (ເນື່ອງຈາກລົດຂົນສົ່ງຕ້ອງໄດ້ລໍຖ້າຢູ່ ສປປ ລາວ ເພື່ອລໍຖ້າການຊຳລະໃນມື້ຖັດມາ). ສະນັ້ນ ຜູ້ປະກອບການຈິ່ງເຫັນວ່າ ການນຳໃຊ້ລະບົບ LNSW ທີ່ຍັງບໍ່ສົມບູນ ອາດເຮັດໃຫ້ມີບັນຫາຂຶ້ນໃນຕໍ່ໜ້າ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ກົມພາສີ ພິຈາລະນາ ປັບປຸງລະບົບ LNSW ໃຫ້ເປັນລະບົບທີ່ສົມບູນເສຍກ່ອນຈິ່ງນຳໃຊ້ ເພື່ອຫຼີກລ່ຽງຂໍ້ຫຍຸ້ງຍາກທີ່ຈະເກີດຂຶ້ນກັບຜູ້ປະກອບການຕາມພາຍຫຼັງ
2. ສະເໜີໃຫ້ກົມພາສີ ເລັ່ງລັດຂະຫຍາຍຂອບເຂດການນຳໃຊ້ LNSW ໃນແງ່ປະເພດສິນຄ້າ ແລະ ດ່ານພາສີ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:** ກົມພາສີ, ກະຊວງການເງິນ

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

- ອີງຕາມຜົນຂອງກອງປະຊຸມຂອງຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ (ຂັ້ນກົມ), ເດືອນພະຈິກ ປີ 2020, ແລະ ກອງປະຊຸມຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ທົ່ວປະເທດ ຄັ້ງທີ 3 ເດືອນ ທັນວາ 2020: ກົມພາສີ ຈະສືບຕໍ່ສົມທົບກັບບໍລິສັດຜູ້ຮ່ວມພັດທະນາລະບົບ LNSW ເພື່ອພັດທະນາລະບົບໃຫ້ສາມາດນຳໃຊ້ໄດ້ທຸກດ່ານສາກົນທົ່ວປະເທດ ລວມທັງການເຊື່ອມຕໍ່ກັບລະບົບຊຳລະຄ່າພັນທະຕ່າງໆ ເປັນຕົ້ນ ລະບົບ Smart Tax, ທະນາຄານ. ພ້ອມດຽວກັນ, ກໍ່ ສະເໜີ ໃຫ້ຄົ້ນຄວ້າ ແລະ ຂະຫຍາຍລະບົບ LNSW ໄປຍັງຂະແໜງການທີ່ ເປັນຜູ້ອອກອະນຸຍາດນຳ ເຂົ້າ-ສົ່ງອອກ ອື່ນໆ ເຊັ່ນ: ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງສາທາ ລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ສາມາດນຳໃຊ້ ລະບົບດັ່ງກ່າວ ຢ່າງມີ ປະສິດທິພາບ ແລະ ສົມບູນແບບ. ການພັດທະນາລະບົບ LNSW ຍັງມີຄວາມລ່າຊ້າຢູ່ ເນື່ອງຈາກເປັນ ບັນຫາທາງດ້ານເຕັກນິກຂອງລະບົບ. (ບໍ່ໄດ້ລະບຸຄາດໝາຍສຳເລັດ).
- ອີງຕາມຄຳເຫັນຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
  - **ຕາງໜ້າກົມພາສີ**: ພາຍຫຼັງແຈ້ງຊຳລະພາສີຜ່ານລະບົບ ASYCUDA ແລ້ວ ແມ່ນສາມາດຊຳລະພາສີໄດ້ໂດຍຜ່ານຊ່ອງທາງຕ່າງໆຂອງຜ່ານລະບົບທະນາຄານ ຫຼື ປ່ອງບໍລິການທະນາຄານ. ຜ່ານມາການຊຳລະພາສີຜ່ານລະບົບ LNSW ແມ່ນອາດມີການລ່າຊ້າແທ້ ເຊິ່ງອາດເກີດຈາກບັນຫາການເຊື່ອມຕໍ່ຂອງລະບົບທະນາຄານ ແລະ ລະບົບ LNSW.

5. ການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າພາຍໃນປະເທດ

ສະພາບບັນຫາ: ໃນໄລຍະຜ່ານມາ ຜູ້ປະກອບການໃນຂະແໜງການຜະລິດ, ການຄ້າ ແລະ ການຂົນສົ່ງສິນຄ້າ ເຫັນວ່າ ຍັງບໍ່ມີການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າພາຍໃນປະເທດເທົ່າທີ່ຄວນ ເນື່ອງຈາກ ມີຂອດຂັ້ນກວດກາເອກະສານທີ່ອາດຊໍ້າຊ້ອນ, ມີການຕັ້ງດ່ານກວດກາຂອງເຈົ້າໜ້າທີ່ຕາມເສັ້ນທາງຂົນສົ່ງສິນຄ້າພາຍໃນປະເທດ ແລະ ມີການເກັບຄ່າທຳນຽມທີ່ສູງ ເຊັ່ນ:

- ກໍລະນີຕົວຢ່າງ 1: ໃນການຂົນສົ່ງພືດກະສິກຳພາຍໃນປະເທດ ຍັງມີການອອກເອກະສານທີ່ຊໍ້າກັນລະຫວ່າງຂັ້ນເມືອງ ແລະ ແຂວງ, ມີການກວດກາຕາມເສັ້ນທາງ ແລະ ມີການເກັບຄ່າທຳນຽມ.
- ກໍລະນີຕົວຢ່າງ 2: ຜ່ານມາ ການເຄື່ອນຍ້າຍຖ່ານຂາວພາຍໃນປະເທດ ແມ່ນປະຕິບັດຕາມຄຳແນະນຳ ເລກທີ 0050/ກປ ລົງວັນທີ 18 ກັນຍາ 2017, ແຕ່ໃນການຈັດຕັ້ງປະຕິບັດຕົວຈິງ ແມ່ນມີຄວາມຫຍຸ້ງຍາກ ເນື່ອງຈາກ ຕ້ອງຜ່ານການກວດກາຫຼາຍຂອດຂັ້ນ ທັງຂັ້ນເມືອງ ແລະ ຂັ້ນແຂວງ ຈຶ່ງເຮັດໃຫ້ມີຄ່າທຳນຽມທີ່ຕິດພັນສູງ ພ້ອມທັງມີການເກັບຄ່າທຳນຽມທີ່ບໍ່ເປັນທາງການ. ສະເໜີໃຫ້ ຂະແໜງກະສິກຳ ແລະ ປ່າໄມ້ເມືອງເປັນຜູ້ອອກອະນຸຍາດເຄື່ອນຍ້າຍ, ສ່ວນຄ່າທຳນຽມຕ່າງໆ ແມ່ນສະເໜີໃຫ້ປະຕິບັດຕາມລະບຽບການທີ່ມີ.
- ກໍລະນີຕົວຢ່າງ 3: ລົດຂອງຂະແໜງຕັດຫຍິບທີ່ນຳວັດສະດຸເຂົ້າມາຫາໂຮງງານ ເຖິງວ່າຈະມີການກຳນົດເວລາໃນການຂົນສົ່ງແລ້ວກໍ່ຕາມ ກໍ່ຍັງມີຂອດຂັ້ນທີ່ຕ້ອງໄດ້ຂໍອະນຸຍາດເປັນຖ້ຽວ (ຄ່າທຳນຽມ ຖ້ຽວລະ 2-3 ແສນກີບ) ແລະ ບໍ່ສາມາດຂໍລ່ວງໜ້າໄດ້. ສະເໜີໃຫ້ມີການຍົກເລີກຂອດດັ່ງກ່າວ

**ຂໍ້ສະເໜີວິທີແກ້ໄຂ:** ສະເໜີໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງປະສານກັບຂະແໜງຕ່າງໆທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ ພາຍໃນປະເທດ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1) ກົມການຄ້າພາຍໃນ, ກະຊວງ ອຸດສາຫະກຳ ແລະ ການຄ້າ
2) ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຸດສາຫະກຳ ແລະ ການຄ້າ
3) ພະແນກ ໂຍທາທິການ ແລະ ຂົນສົ່ງ, ນະຄອນຫຼວງວຽງຈັນ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ ລ່າສຸດ**

- ອີງຕາມຜົນຂອງກອງປະຊຸມຂອງຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ (ຂັ້ນກົມ), ເດືອນພະຈິກ ປີ 2020, ແລະ ກອງປະຊຸມຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ທົ່ວປະເທດ ຄັ້ງທີ 3 ເດືອນ ທັນວາ 2020: ກົມການນຳເຂົ້າ ແລະ ສົ່ງອອກ ຈະສືບຕໍ່ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງຜັນຂະຫຍາຍຄຳສັ່ງ ວ່າດ້ວຍວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ເລກທີ 12/ນຍ, ລົງວັນ ທີ 16 ຕຸລາ 2020 (ໂດຍສະເພາະຂໍ້ 3.2). ປະຈຸບັນ, ກົມຕຳຫຼວດຈະລາຈອນ ກຳລັງຄົ້ນຄວ້າຮ່າງນິຕິກຳ ເພື່ອຜັນຂະຫຍາຍຄຳສັ່ງເລກທ 12/ນຍ ແນໃສ່ຫຼຸດຜ່ອນປະກົດການຫຍໍ້ທໍ້ຂອງການປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່ຕຳຫຼວດຈະລາຈອນ. ຄາດວ່າ ຈະສຳເລັດພາຍໃນງວດ 1 ປີ 2021. ພ້ອມກັນນັ້ນ ກົມປ່າໄມ້ຈະສືບຕໍ່ຄົ້ນຄວ້າປັບປຸງຂັ້ນຂອດການອອກອະນຸຍາດເຄື່ອນຍ້າຍ ແລະ ສົ່ງອອກຖ່ານຂາວ ໃຫ້ກະທັດຮັດຂຶ້ນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ພາກທຸລະກິດ ເນື່ອງຈາກຖ່ານຂາວ ເປັນສິນຄ້າທີ່ໄດ້ຮັບປຸງແຕ່ງແລ້ວ. ການປັບປຸງດັ່ງກ່າວ ຕິດພັນກັບການປັບປຸງຄຳແນະນຳ ກ່ຽວກັບ ການຂຸດຄົ້ນ ແລະ ເຄື່ອນຍ້າຍໄມ້ຕໍ້, ການເຄື່ອນ

ຍ້າຍຖ່ານຂາວ ທີ່ຜະລິດ ມາຈາກໄມ້ຕິ້ວ ພາຍໃນ ແລະ ສົ່ງອອກຕ່າງປະເທດ ເລກທ 0050/ກປ, ລົງວັນທີ 18 ກັນຍາ 2017. ປະຈຸບັນ ແມ່ນຢູ່ໃນຂັ້ນຕອນການປະເມີນ ຄືນຜົນການຈັດຕັ້ງປະຕິບັດ ຄຳແນະນຳດັ່ງກ່າວ.

- ອີງຕາມຄຳເຫັນຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
  - ➢ ຕາງໜ້າ ຈາກກົມປູກຝັງ: ສຳລັບບັນຫາ ການເຄື່ອນຍ້າຍຖ່ານຂາວ ລະຫວ່າງ ເມືອງ ແມ່ນຂະແໜງກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ອະນຸມັດ, ສ່ວນການເຄື່ອນຍ້າຍລະຫວ່າງ ແຂວງ ແມ່ນຂະແໜງກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອະນຸມັດການເຄື່ອນຍ້າຍ. ຖ້າຫາກຕ້ອງການປັບປ່ຽນຂອດດັ່ງກ່າວຕ້ອງໄດ້ສະເໜີແກ້ໄຂນິຕິກຳທີ່ຕິດພັນ. ສ່ວນການກວດກາຕາມເສັ້ນທາງ, ຂະແໜງກະສິກຳ ແລະ ປ່າໄມ້ບໍ່ໄດ້ມີການກວດກາ ແລະ ບໍ່ມີການເກັບຄ່າທຳນຽມ.
  - ➢ ຕາງໜ້າ ຈາກກົມການ ນຳເຂົ້າ ແລະ ສົ່ງອອກ: ຜ່ານການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 12/ນຍ ລົງວັນທີ ວັນທີ 16 ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ, ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ລົງເກັບກຳຂໍ້ມູນຢູ່ບັນດາແຂວງຕ່າງໆ ແລະ ເຫັນວ່າ ປະຈຸບັນຍັງມີສອງບັນຫາ ທີ່ຍັງບໍ່ສາມາດແກ້ໄຂໄດ້ ເຊິ່ງປະກອບດ້ວຍ ຂອດການອະນຸມັດເອກະສານຂອງຂະແໜງການກ່ຽວຂ້ອງ ທີ່ຍັງທັບຊ້ອນກັນ, ແລະ ການຕັ້ງຈຸດກວດກາຕາມເສັ້ນທາງພາຍໃນປະເທດ. ເພື່ອແກ້ໄຂສອງບັນຫາດັ່ງກ່າວຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າຂັ້ນສູນກາງ ໄດ້ຊີ້ນຳໃຫ້ມີການ ຮ່າງຄຳສັ່ງ ວ່າດ້ວຍການເຄື່ອນຍ້າຍສິນຄ້າ ແລະ ການຕັ້ງຈຸດກວດກາຕາມເສັ້ນທາງ ພາຍໃນປະເທດ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອກຳນົດຂະແໜງການທີ່ສາມາດອະນຸມັດເອກະສານການເຄື່ອນຍ້າຍສິນຄ້າແຕ່ລະປະເພດ ຢ່າງຊັດເຈນ ໂດຍສະເພາະ ແມ່ນຕໍ່ກັບສິນຄ້າປະເພດໄມ້, ຜະລິດຕະພັນໄມ້, ສັດ ແລະ ພືດ ເປັນຕົ້ນ, ແລະ ໄດ້ກຳນົດກ່ຽວກັບ ຂອບເຂດຂອງການກວດກາ ຂອງເຈົ້າໜ້າທີ່ຈາກພາກສ່ວນຕ່າງໆທີ່ມີການກວດກາຕາມເສັ້ນທາງ ຢ່າງລະອຽດ (ອີງຕາມຄຳສັ່ງ ເລກທີ 12/ນຍ ຈະກຳນົດໃຫ້ມີພຽງຂະແໜງ ປ້ອງກັນຄວາມສະຫງົບ, ຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງພາສີ ມີການກວດກາ). ປະຈຸບັນ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ສຳເລັດການຮ່າງຄຳສັ່ງດັ່ງກ່າວ ເຊິ່ງຈະມີການປຶກສາຫາລືປະກອບຄຳເຫັນເພີ່ມເຕີມຈາກຂະແໜງການທີ່ກ່ຽວຂ້ອງ. ຄາດວ່າ ຄຳສັ່ງດັ່ງກ່າວຈະໄດ້ຮັບການອະນຸມັດໃນເດືອນພະຈິກ ແລະ ສາມາດເລີ່ມຈັດຕັ້ງປະຕິບັດ ໃນເດືອນທັນວາປີ 2020.

## 6. ການເກັບອາກອນມູນຄ່າເພີ່ມຈາກຄ່າບໍລິການຂົນສົ່ງສິນຄ້າຜ່ານແດນສາກົນ ແລະ ຂ້າມແດນ

ສະພາບບັນຫາ: ຜ່ານມາ ໃນກອງປະຊຸມທຸລະກິດລາວຄັ້ງທີ 10, 11 ແລະ 12, ພາກທຸລະກິດ ໄດ້ສະເໜີໃຫ້ ຂະແໜງການກ່ຽວຂ້ອງ ແຈ້ງລົບລ້າງ ນິຕິກຳການເກັບອາກອນມູນຄ່າເພີ່ມຕໍ່ການບໍລິການຂົນສົ່ງສິນຄ້າຜ່ານແດນ ທີ່ ທ້ອງຖິ່ນສ້າງຂຶ້ນເອງ ແລະ ສະເໜີໃຫ້ ຍົກເລີກການເກັບອາກອນມູນຄ່າເພີ່ມສຳລັບການບໍລິການຂົນສົ່ງຜ່ານແດນ ໂດຍອີງໃສ່ຫຼັກການເກັບອາກອນມູນຄ່າເພີ່ມທີ່ລະບຸໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເນື່ອງຈາກ ເຮັດໃຫ້ ຄ່າຂົນສົ່ງຜ່ານ ສປປ ລາວ ມີລາຄາແພງຂຶ້ນເມື່ອທຽບກັບປະເທດເພື່ອນບ້ານ ເຊິ່ງ ກະຊວງການເງິນກໍ່ໄດ້ເອົາໃຈໃສ່ ແກ້ໄຂ ດ້ວຍການ ອອກແຈ້ງການລົບລ້າງ ນິຕິກຳການເກັບອາກອນມູນຄ່າເພີ່ມ ທີ່ທ້ອງຖິ່ນສ້າງຂຶ້ນເອງ (ຄຳມ່ວນ, ສະຫວັນນະເຂດ), ພ້ອມທັງໄດ້ລະບຸໃນກົດໝາຍ ອາກອນມູນຄ່າເພີ່ມ ສະບັບປັບປຸງ ເລກທີ 48/ສພຊ ລົງວັນທີ 20-06-2018, ມາດຕາ 12 ທີ່ລະບຸໃຫ້ “ການ ຂົນສົ່ງຜ່ານແດນສາກົນ” ຢູ່ໃນກິດຈະກຳທີ່ຖືກຍົກເວັ້ນອາກອນມູນ ຄ່າເພີ່ມ. ພ້ອມກັນນີ້ ກົມສ່ວຍສາອາກອນ ກໍ່ໄດ້ອອກແຈ້ງການ ກ່ຽວກັບການເກັບອາກອນມູນຄ່າເພີ່ມຈາກການສະ ໜອງການບໍລິການຂົນສົ່ງ ສະບັບເລກທີ 2798/ກງ.ກສອ ລົງວັນທີ 08 ກໍລະກົດ 2019 ເຖິງຫົວໜ້າສ່ວຍສາ ອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເພື່ອບັງຄັບໃຊ້ກົດໝາຍວ່າດ້ວຍອາກອນ ມູນຄ່າເພີ່ມ ສະບັບປັບປຸງ ເນື່ອງຈາກເຫັນວ່າຢູ່ບາງທ້ອງຖິ່ນຍັງມີການເກັບ ອມພ ຕໍ່ການບໍລິການຂົນສົ່ງສິນຄ້າຜ່ານ ແດນ.

ຢ່າງໃດກໍ່ຕາມ ໃນການຈັດຕັ້ງປະຕິບັດ, ກະຊວງການເງິນຈະບໍ່ມີການຍົກເວັ້ນ ອມພ ຕໍ່ກັບສິນຄ້າຜ່ານ ແດນສາກົນ ໃນກໍລະນີທີ່ມີການຄ່ຽນຖ່າຍສິນຄ້າ ຫຼື ຍົກຍໍຕູ້ຂົນສິນຄ້າ ໃນດິນແດນຂອງ ສປປ ລາວ ເນື່ອງຈາກຖື ວ່າເປັນການສະໜອງການບໍລິການຂົນສົ່ງສິນຄ້າຂ້າມແດນ. ພ້ອມດຽວກັນນີ້ ສຳລັບການສະໜອງການບໍລິການ ຂົນສົ່ງສິນຄ້າຂ້າມແດນ, ໝາຍຄວາມວ່າ ການຂົນສົ່ງສິນຄ້າຈາກ ສປປ ລາວ ໄປຫາປະເທດອື່ນ ຫຼື ຈາກປະເທດອື່ນ ເຂົ້າມາ ສປປ ລາວ ໂດຍມີການຄ່ຽນຖ່າຍສິນຄ້າ ຢູ່ ສປປ ລາວ, ຈະຕ້ອງຖືກເສຍອາກອນມູນຄ່າເພີ່ມ. ພາກທຸລະ ກິດ ເຫັນວ່າ ການຈັດເກັບ ອມພ ຕໍ່ກັບສິນຄ້າຜ່ານແດນສາກົນໃນກໍລະນີມີການຍົກຍໍຕູ້ຂົນສົ່ງສິນຄ້າໃນ ສປປ ລາວ ແລະ ການເກັບ ອມພ ຕໍ່ການສະໜອງການບໍລິການຂົນສົ່ງສິນຄ້າຂ້າມແດນ ແມ່ນຂັດກັບຫຼັກການສາກົນ ແລະ ບໍ່ ເປັນການສົ່ງເສີມການຂົນສົ່ງຜ່ານດິນແດນຂອງ ສປປ ລາວ, ພ້ອມທັງເຮັດໃຫ້ຕົ້ນທຶນຄ່າຂົນສົ່ງ ມີລາຄາທີ່ແພງຂຶ້ນ ເຊິ່ງສ້າງຜົນກະທົບຕໍ່ກັບຄວາມສາມາດໃນການແຂ່ງຂັນຂອງສິນຄ້າສົ່ງອອກ ຂອງ ສປປລາວ ແລະ ເຮັດໃຫ້ຜູ້ ຊົມໃຊ້ສິນຄ້າໃນ ສປປ ລາວຕ້ອງໄດ້ຊື້ສິນຄ້າໃນລາຄາທີ່ສູງຂຶ້ນ. ພ້ອມດຽວກັນນີ້ ຜູ້ປະກອບການຍັງເຫັນວ່າ ໃນ ການຈັດຕັ້ງປະຕິບັດການເກັບ ອພມ ສິນຄ້າຂ້າມແດນໃນປະຈຸບັນກໍ່ຍັງບໍ່ເປັນເອກະພາບກັນໃນທົ່ວປະເທດ (ບາງ ດ່ານເກັບ, ບາງດ່ານບໍ່ເກັບ)

ພ້ອມດຽວກັນ ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ 19, ໄດ້ມີມາດຕະການສະກັດກັ້ນການແຜ່ ລະບາດຂອງພະຍາດດັ່ງກ່າວ ເຊິ່ງໃນນັ້ນກໍ່ຂໍ້ກຳນົດຂອງກະຊວງໂຍທາທິການ ແລະ ຂົນສົ່ງ ໃຫ້ມີການຄ່ຽນຖ່າຍ ສິນຄ້າ ຂອງລົດຂົນສົ່ງສິນຄ້າ ຕ່າງປະເທດ (ການຍົກຍໍຕູ້) ໃສ່ລົດຂົນສົ່ງລາວ, ໝາຍຄວາມວ່າ ສຳລັບລົດຂົນສົ່ງ ສິນຄ້າຜ່ານແດນ ກໍ່ຕ້ອງໄດ້ມີການຍົກຍໍຕູ້ ເພື່ອປ່ຽນລົດ ຫຼື ຫົວລາກທີ່ໃຊ້ຂົນສົ່ງ, ເຊິ່ງກໍ່ໝາຍຄວາມວ່າ ສິນຄ້າຜ່ານ ແດນຈະຕ້ອງໄດ້ຖືກເສຍ ອມພ ເນື່ອງຈາກຕ້ອງໄດ້ມີການປ່ຽນລົດຂົນສົ່ງ. ນອກຈາກນີ້ ສະເພາະ ທີ່ຜ່ານຂົວ ມິດຕະພາບ 1 ແມ່ນຕ້ອງໄດ້ຄ່ຽນຖ່າຍຢູ່ ສາງ CY ເຊິ່ງຄ່າທຳນຽມໃນການຍົກ ຫຼື ຍໍ ຕູ້ແມ່ນ 60 ໂດລາສະຫະລັດ ຕໍ່ຕູ້ເຊິ່ງເຫັນວ່າເປັນຄ່າໃຊ້ຈ່າຍທີ່ສູງ ໃຫ້ ແກ່ຜູ້ປະກອບການ.

**ຂໍ້ສະເໜີວິທີແກ້ໄຂ:**

1. ເພື່ອເປັນການສົ່ງເສີມຄວາມສາມາດການແຂ່ງຂັນຂອງການສະໜອງການບໍລິການຂົນສົ່ງ ໃນສປປ ລາວ, ພ້ອມທັງ ປະຕິບັດຕາມທິດທາງຂອງລັດຖະບານໃນການຫັນປ່ຽນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ ມາເປັນປະເທດເຊື່ອມຈອດ, ສະເໜີໃຫ້ກົມສ່ວຍສາອາກອນ ພິຈາລະນາ ຍົກເວັ້ນ ການເກັບອາກອນມູນຄ່າເພີ່ມຈາກຄ່າບໍລິການຂົນສົ່ງສິນຄ້າຜ່ານແດນສາກົນ ແລະ ການບໍລິການຂົນສົ່ງສິນຄ້າຂ້າມແດນ ເນື່ອງຈາກເຫັນວ່າ ຂັດກັບຫຼັກການສາກົນ ແລະ ສົນທິສັນຍາຕ່າງໆ ທີ່ ສປປ ລາວ ເປັນພາຄີ.
2. ສະເໜີໃຫ້ ລະບຸລະອຽດ ໃນນິຕິກຳລຸ່ມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:** ກົມສ່ວຍສາອາກອນ, ກະຊວງການເງິນ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ ລ່າສຸດ:**

- ກົມສ່ວຍສາອາກອນ ໄດ້ສົ່ງໜັງສືແຈ້ງ ສະບັບເລກທີ 4015/ກສອ, ລົງວັນທີ 18 ພະຈິກ 2020 ເຖິງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ກ່ຽວກັບການປະຕິບັດພັນທະອາກອນມູນຄ່າເພີ່ມ ເຊິ່ງລະບຸດັ່ງນີ້: "ການເກັບອາກອນມູນຄ່າເພີ່ມຈາກການດຳເນີນທຸລະກິດການບໍລິການຂົນສົ່ງສິນຄ້າຜ່ານແດນສາກົນ ແລະ ຂ້າມແດນ, ສະເພາະການປະຕິບັດການຍົກເວັ້ນ ອມພ ຂອງການຂົນສົ່ງຜ່ານແດນສາກົນຕາມມາດຕາທີ 12 ຂໍ້ 2.10 ຂອງ ກົດໝາຍ ອມພ ແມ່ນສະໜອງການຂົນສົ່ງ ຕາມທີ່ໄດ້ນິຍາມຄຳສັບໄວ້ໃນມາດຕາ 3 ຂໍ້ 13 ຂອງກົດໝາຍວ່າດ່ວຍອາກອນມູນຄ່າເພີ່ມເທົ່ານັ້ນ, ສະນັ້ນ ໝາຍວ່າ ການບໍລິການຂົນສົ່ງສິນຄ້າຈາກປະເທດໜຶ່ງ ຜ່ານ ສປປ ລາວ ໄປປະເທດທີ ສາມ ເທົ່ານັ້ນ ຈຶ່ງຖືວ່າເປັນການຂົນສົ່ງຜ່ານແດນສາກົນທີ່ຖືກຍົກເວັ້ນ ຕາມກຳນົດໃນກົດໝາຍ ອມພ. ສຳລັບການບໍລິການຂົນສົ່ງຂ້າມແດນ ເປັນການບໍລິການທີ່ຖືກເສຍ ອມພ ຕາມທີ່ກຳນົດໃນມາດຕາທີ 11 ຂໍ້ 2, 3 ແລະ 4 ຂອງ ກົດໝາຍ ອມພ. ການຂົນສົ່ງຂ້າມແດນ ແມ່ນຖືກເກັບ ອມພ ຕາມໄລຍະທາງທີ່ມີການເຄື່ອນໄຫວຕົວຈິງຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໃນມາດຕາ 13 ຂອງກົດໝາຍ ອມພ. ອາກອນມູນຄ່າເພີ່ມບໍ່ແມ່ນຕົ້ນທຶນຂອງສິນຄ້າ ຫຼື ການບໍລິການ ທີ່ຖືກເສຍ ອມພ ເນື່ອງຈາກໄດ້ມີລະບົບຫັກລົບ ຫຼື ໄດ້ຮັບການສົ່ງຄືນ ອມພ ເບື້ອງສົ້ນເຂົ້າທີ່ຕິດພັນກັບສິນຄ້າສົ່ງອອກໄປຕ່າງປະເທດ. ກໍລະນີ ສິນຄ້າ ຫຼື ການບໍລິການ ທີ່ຖືກຍົກເວັ້ນ ອມພ ເບື້ອງສົ້ນເຂົ້າ ທີ່ຕິດພັນ ກັບສິນຄ້າ ຫຼື ການບໍລິການດັ່ງກ່າວ ແມ່ນຈະກາຍເປັນຕົ້ນທຶນຂອງການສະໜອງ".

7. **ວິທີການເກັບຄ່າທຳນຽມທີ່ຕິດພັນກັບການຂົນສົ່ງສິນຄ້າ**

ສະພາບບັນຫາ: ບັນຫາຄ່າຂົນສົ່ງແພງແມ່ນເປັນອຸປະສັກທີ່ສຳຄັນ ທີ່ກະທົບຕໍ່ທຸກຂະແໜງການທີ່ດຳເນີນທຸລະກິດໃນ ສປປ ລາວ ພ້ອມທັງເປັນປັດໃຈທີ່ສຳຄັນ ໃນການດຶງດູດການລົງທຶນຈາກຕ່າງປະເທດ ເນື່ອງຈາກຄ່າຂົນສົ່ງ ມີຜົນກະທົບໂດຍກົງຕໍ່ລາຄາສິນຄ້າ ແລະ ຕົ້ນທຶນການຜະລິດ. ໂດຍລວມແລ້ວ ປັດໃຈທີ່ເຮັດໃຫ້ລາຄາຂົນສົ່ງ ຂອງ ສປປ ລາວ ແພງກ່ວາປະເທດເພື່ອນບ້ານຫຼາຍ ແມ່ນຍ້ອນ ຄວາມບໍ່ດຸ່ນດ່ຽງຂອງການຄ້າ ແລະ ຄ່າໃຊ້ຈ່າຍທີ່ຕິດພັນກັບການແຈ້ງການຂົນສົ່ງສິນຄ້າ ທັງທີ່ເປັນທາງການ ແລະ ບໍ່ເປັນທາງການທີ່ສູງ. ຜ່ານການສະເໜີບັນຫາໃນກອງປະຊຸມທຸລະກິດລາວ ຄັ້ງທີ 10, ແລະ 11 ຜ່ານມາ, ຂະແໜງການເງິນກໍ່ໄດ້ມີການປັບປຸງ ແລະ ພັດທະນາລະບົບການເກັບຄ່າທຳນຽມ ແລະ ຄ່າບໍລິການທີ່ຕິດພັນກັບການຂົນສົ່ງສິນຄ້າ ໂດຍຜ່ານລະບົບ SmartTax ໃນຫຼາຍໆດ່ານພາສີ ໃນຂອບເຂດທົ່ວປະເທດ ເຊັ່ນ ຄ່າທຳນຽມບໍລິການແຈ້ງເອກະສານສິນຄ້າຜ່ານແດນສາກົນ (350,000 ກີບ/ຄັນ) ແລະ ຄ່າບໍລິການດຳເນີນແຈ້ງພາສີ (100,000 ກີບ/ຊຸດ) ເຊິ່ງຜູ້ປະກອບການ ກໍ່ເຫັນວ່າເປັນບາດກ້າວຂອງການປັບປຸງທີ່ເປັນຮູບປະທຳທີ່ດີ ແລະ ສາມາດກວດສອບໄດ້. ຢ່າງໃດກໍ່ຕາມ ຍັງມີຄ່າທຳນຽມ ແລະ ຄ່າບໍລິການທີ່ຕິດພັນກັບການຂົນສົ່ງສິນຄ້າອີກຫຼາຍລາຍການທີ່ຍັງຖືກເກັບເປັນເງິນສົດແບບດັ້ງເດີມ ເຊິ່ງຄວນໄດ້ຮັບການແກ້ໄຂຢ່າງຮີບດ່ວນ ເຊັ່ນ:

- ຄ່າຜ່ານຂົວ (ລົດ 10 ລໍ້ຂຶ້ນໄປ): 135,000 ກີບ/ຄັນ
- ຄ່າທຳນຽມລົດເຂົ້າ-ອອກ ເມືອງ (ລົດບັນທຸກ 18 ລໍ້, ລົດລາກ): 120,000 ກີບ/ຄັນ
- ຄ່າກັກກັນພືດສຳລັບສິນຄ້າຜ່ານແດນ (ຂົວມິດຕະພາບ 3) 15,000 ກີບ/ຄັນ

ພ້ອມກັນນີ້ ກໍ່ຍັງມີການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ເປັນເງິນສົດ ທີ່ເຫັນວ່າ ບໍ່ສອດຄ່ອງກັບລັດຖະບັນຍັດ ເລກທີ 003/ປປທ ຫຼື ບໍ່ມີໃບບິນຮັບເງິນ ເຊິ່ງມູນຄ່າການເກັບຢູ່ແຕ່ລະດ່ານ ເຫັນວ່າມີຄວາມແຕກຕ່າງກັນ. ລຸ່ມນີ້ແມ່ນບາງຄ່າທຳນຽມ ແລະ ຄ່າບໍລິການ ຕາມການລາຍງານຂອງຜູ້ປະກອບການທີ່ພົບພໍ້, ເຊັ່ນ:

- ຄ່າແຈ້ງລົດເຂົ້າອອກໃບບໍ 53: 20,000 ກີບ/ຊຸດ/ຄັນ
- ຄ່າຈໍ້ປຶ້ມຄົນຂັບລົດ: 5,000 - 20,000 ກີບ/ຄົນ
- ຄ່າບໍລິການ, ຄ່າຊຸກຍູ້ກວດກາເອກະສານຫ້ອງຂໍ້ມູນຂ່າວສານ (ຫ້ອງ ASYCUDA) 20,000- 100,000 ກີບ/ຊຸດ
- ຄ່າກຳມະການກວດປ່ອຍສິນຄ້າ 20,000 - 100,000 ຄັນ
- ຄ່າເປີດປະຕູໄມ້ກັນຂອງ ຕມ: 20,000 - 50,000 ກີບ/ຄັນ (ໂດຍສະເພາະແມ່ນຢູ່ດ່ານແດນສະຫວັນ)
- ຄ່າບູລະນະເສັ້ນທາງຢູ່ດ່ານນາເພົ້າ 500,000 ກີບ/ຄັນ
  - ຄ່າລ່ວງເວລາຫຼັງ 16:00 ໂມງຂອງວັນລັດຖະການ, ຫຼື ວັນເສົາ-ອາທິດ ແລະ ວັນພັກລັດຖະການ 50,000 ກີບ - 200,000ກີບ/ຄັນ
  - ຄ່າບໍລິການພາສີ, ຕມ ແລະ ອື່ນໆ ທີ່ແຕກຕ່າງກັນໄປແຕ່ລະດ່ານ ແລະ ລາຍຈ່າຍໃຫ້ກັບຕຳຫຼວດຈະລາຈອນຕາມເສັ້ນທາງຕ່າງໆ

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ຂະແໜງການເງິນ ພິຈາລະນາ ເປັນເຈົ້າການ ປະສານສົມທົບກັບພາກສ່ວນຕ່າງໆ ເພື່ອ ລວມສູນການເກັບຄ່າທຳນຽມທີ່ຕິດພັນກັບການຂົນສົ່ງສິນຄ້າ ແລະ ນຳໃຊ້ລະບົບທັນສະໄໝ ສຳລັບການແຈ້ງເອກະສານ ແລະ ເກັບຄ່າທຳນຽມ ເພື່ອໃຫ້ເກີດປະໂຫຍດສູງສຸດ

2. ສະເໜີໃຫ້ກົມພາສີ ພິຈາລະນາ ອະນຸຍາດໃຫ້ສາມາດນຳໃຊ້ ຟອມ D ໃນຮູບແບບ ອີເລັກໂຕນິກ ໃນການປະກອບເອກະສານແຈ້ງພາສີ ເພື່ອ ຫຼຸດໄລຍະເວລາ ແລະ ຄ່າໃຊ້ຈ່າຍໆໃນການສົ່ງ ຟອມ D ສະບັບຕົ້ນ (ຮູບແບບເຈ້ຍ) ຈາກປະເທດຕົ້ນທາງ ມາ ສປປລາວ, ເນື່ອງຈາກການ ຂົນສົ່ງສິນຄ້າໃນບັນດາປະເທດອາຊຽນ ມີໄລຍະເວລາທີ່ຂ້ອນຂ້າງສັ້ນ ສະນັ້ນ ການຮຽກຮ້ອງເອກະສານຟອມ D ສະບັບຕົ້ນ (ຮູບແບບເຈ້ຍ) ຈະເຮັດໃຫ້ມີການແກ່ຍາວເວລາ ແລະ ເພີ່ມຄ່າໃຊ້ຈ່າຍໃນການ ແຈ້ງເອກະສານພາສີ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມພາສີ, ກະຊວງການເງິນ
2. ກົມສ່ວຍສາອາກອນ, ກະຊວງການເງິນ
3. ກົມນະໂຍບາຍການເງິນ, ກະຊວງການເງິນ ແລະ ນິຕິກຳ
4. ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ ລ່າສຸດ:**

- ອີງຕາມຜົນຂອງກອງປະຊຸມຂອງຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ (ຂັ້ນກົມ), ເດືອນພະຈິກ ປີ 2020, ແລະ ກອງປະຊຸມຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ທົ່ວປະເທດ ຄັ້ງທີ 3 ເດືອນ ທັນວາ 2020: ຂະແໜງການເງິນ (ກົມພາສີ, ກົມສ່ວຍສາອາກອນ) ຈະສືບຕໍ່ ພັດທະນາລະບົບລວມສູນການເກັບຄ່າທຳນຽມທີ່ຕິດພັນກັບການ ຂົນສົ່ງສິນຄ້າ, ນຳເຂົ້າ-ສົ່ງອອກ ພ້ອມທັງນຳໃຊ້ລະບົບທັນສະໄໝ ສຳລັບການແຈ້ງເອກະສານ ແລະ ເກັບຄ່າທຳນຽມ ເພື່ອສາມາດເກັບລາຍ ຮັບເຂົ້າລັດຢ່າງຄົບຖ້ວນ ແລະ ຖືກຕ້ອງ. - ຂະແໜງການທີ່ກ່ຽວຂ້ອງ ປະສານສົມທົບກັບ ພະແນກການຂັ້ນທ້ອງຖິ່ນຂອງຕົນ ເພື່ອປະຕິບັດຕາມລັດຖະບັນຍັດ ວ່າດ້ວຍການເກັບ ຄ່າທຳນຽມ ແລະ ບໍລິການ ທີ່ວາງອອກໃນແຕ່ລະໄລຍະ ຢ່າງເຂັ້ມງວດ. 2. ສຳລັບບັນຫາການຂົນສົ່ງແພງ: - ກົມຂົນສົ່ງ ໄດ້ເຮັດໜັງສືລາຍງານ ຫາລັດຖະບານ ເພື່ອພິຈາລະນາ ຮັບຮອງນິຕິກຳ ກ່ຽວກັບການກຳນົດຄ່າຂົນສົ່ງສິນຄ້າ ເພື່ອເປັນບ່ອນ ອີງ ໃຫ້ແກ່ຜູ້ປະກອບການຂົນສົ່ງ ຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ກັນ (ຍັງບໍ່ໄດ້ກຳນົດໄລຍະເວລາສຳເລັດ)
- ອີງຕາມຄຳເຫັນຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020:
  - **ຕາງໜ້າ ຈາກກົມຂົນສົ່ງ:** ຕໍ່ກັບບັນຫາ ລາຄາຂົນສົ່ງສິນຄ້າແພງ, ກະຊວງ ຍທຂ ໄດ້ຮັບການຊີ້ນຳຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃຫ້ປັບປຸງໂຄງສ້າງລາຄາຂົນສົ່ງສິນຄ້າ ເພື່ອໃຫ້ເປັນມາດຖານສຳລັບຄ່າການຂົນສົ່ງສິນຄ້າ, ແຕ່ບໍ່ແມ່ນການກຳນົດລາຄາແບບບັງຄັບ. ໝາຍຄວາມວ່າ ລາຄາຄ່າຂົນສົ່ງສິນຄ້າ ແມ່ນໃຫ້ເປັນໄປຕາມກົນໄກຂອງຕະຫຼາດ. ພ້ອມກັນນີ້ ກະຊວງ ຍທຂ ກໍ່ພວມຈັດຕັ້ງປະຕິບັດແຜນຍຸດທະສາດດ້ານໂລຈິສຕິກ ເຊິ່ງ ໜຶ່ງໃນຍຸດທະສາດດັ່ງກ່າວ ກໍ່ແມ່ນການຫຼຸດຜ່ອນຄ່າຂົນສົ່ງສິນຄ້າໂດຍການສ້າງ ແລະ ນຳໃຊ້ ສູນເຕົ້າໂຮມ ແລະ ກະຈາຍສິນຄ້າ (ທ່າບົກ) ແລະ ສະຖານີລົດຂົນສົ່ງສິນຄ້າຢູ່ 9 ຈຸດ ໃນຂອບເຂດທົ່ວປະເທດ, ເຊິ່ງປະຈຸບັນມີ ທ່າບົກຢູ່ແຂວງສະຫວັນນະເຂດ ທີ່ໄດ້ນຳໃຊ້ ແລ້ວ, ແລະ ກຳລັງກໍ່ສ້າງທ່າບົກຢູ່ ນະຄອນຫຼວງວຽງຈັນ (ທ່ານາແລ້ງ) ແລະ ຢູ່ແຂວງຈຳປາສັກ, ສ່ວນຢູ່ຈຸດອື່ນໆ ແມ່ນພວມຢູ່ໃນຂັ້ນສຶກສາຄວາມເປັນໄປໄດ້ໃນການສ້າງ.

## ກຸ່ມບັນຫາທີ່ຕິດພັນກັບການເຂົ້າເຖິງແຫຼ່ງທຶນ

### 1. ຂັ້ນຕອນການຈົດທະບຽນສັນຍາເງິນກູ້ ແລະ ຫຼັກຊັບຄໍ້າປະກັນ

ສະພາບບັນຫາ ການຂໍກູ້ຢືມເງິນທີ່ມີຫຼາຍຂັ້ນຕອນ ແລະ ມີຄວາມຫຍຸ້ງຍາກ ແມ່ນເປັນປັດໃຈຫລັກທີ່ເຮັດໃຫ້ ບັນດາ ຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະກາງ ບໍ່ສາມາດເຂົ້າຫາແຫຼ່ງທຶນທີ່ເໝາະສົມໄດ້. ໃນການປ່ອຍກູ້ ໂດຍສະຖາບັນການເງິນ ສ່ວນໃຫຍ່ແມ່ນຕ້ອງໃຊ້ຫຼັກຊັບຄໍ້າປະກັນ (ໂດຍສະເພາະແມ່ນໃຊ້ໃບຕາດິນຂອບທອງ) ແລະ ຕ້ອງປະຕິບັດຕາມກົດລະບຽບທີ່ທາງທະນາຄານກາງ (ທຫລ) ໄດ້ວາງອອກຢ່າງເຂັ້ມງວດ. ຜ່ານມາ ຂັ້ນຕອນ ການເຮັດໃບຕາດິນຂອບທອງນັ້ນ ເຫັນວ່າໃຊ້ເວລາດົນ ແລະ ມີຄ່າໃຊ້ຈ່າຍທີ່ສູງຫລາຍ ເຊິ່ງເປັນຂໍ້ຫຍຸ້ງຍາກໃຫ້ແກ່ ຜູ້ກູ້ຢືມ ໂດຍສະເພາະແມ່ນຜູ້ກູ້ຢືມທີ່ຢູ່ເຂດຊົນນະບົດ, ຜູ້ທີ່ມີລາຍໄດ້ຕໍ່າ, ແລະ ວິສາຫະກິດຂະໜາດນ້ອຍ ທີ່ບໍ່ມີ ຫຼັກຊັບທີ່ເປັນສິດນໍາໃຊ້ທີ່ດິນ. ສໍາລັບຜູ້ທີ່ມີໃບຕາດິນຂອບທອງແລ້ວ, ຂັ້ນຕອນການຂໍກູ້ຢືມ ໂດຍມີໃບຕາດິນ ເປັນຫລັກຊັບ ກໍ່ຍັງມີຫລາຍຂັ້ນຕອນ ແລະ ຄ່າໃຊ້ຈ່າຍທີ່ສູງອີກເຊັ່ນດຽວກັນ ເນື່ອງຈາກຕ້ອງໄດ້ ມີ ຜ່ານ ນາຍບ້ານ, ຜ່ານຫ້ອງການທີ່ດິນ ອີກຄັ້ງ, ແລະ ຕ້ອງໄດ້ຜ່ານຫ້ອງການທະບຽນສານ ເພື່ອຮັບຮອງ. ຂໍ້ຫຍຸ້ງຍາກເຫຼົ່ານີ້ ສໍາລັບບາງຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ແມ່ນເປັນການເພີ່ມຕົ້ນທຶນທີ່ສູງຫຼາຍ ຈຶ່ງເຮັດໃຫ້ຜູ້ ປະກອບການຫຼາຍບໍລິສັດ ບໍ່ສົນໃຈ ຫຼືບໍ່ສາມາດທີ່ຈະກູ້ຢືມເງິນຈາກທະນາຄານ ແລ້ວ ຫັນໄປໃຊ້ການບໍລິການເງິນ ກູ້ນອກລະບົບແທນ ເຖິງແມ່ນວ່າຈະມີອັດຕາດອກເບ້ຍທີ່ສູງກໍ່ຕາມ. ໃນໄລຍະກ່ອນປີ 2017, ບາງທະນາຄານ ສາມາດປ່ອຍກູ້ໃນວົງເງິນຈໍານວນໜ້ອຍ ໂດຍໃຊ້ໃບຕາດິນສີຂາວ ທີ່ຮັບຮອງຢັ້ງຢືນ ຈາກນາຍບ້ານໄດ້. ແຕ່ນັບແຕ່ ຕົ້ນປີ 2018 ເປັນຕົ້ນມາ ແມ່ນບໍ່ສາມາດເຮັດໄດ້ ເນື່ອງຈາກ ທຫລ ໄດ້ອອກແຈ້ງການເລກທີ 818/ຫກ ເຊິ່ງບໍ່ ອະນຸຍາດນໍາໃຊ້ໃບຢັ້ງຢືນທີ່ດິນຈາກນາຍບ້ານ ມາເປັນຫຼັກຊັບຄໍ້າປະກັນໄດ້.ຂໍ້ຈໍາກັດດັ່ງກ່າວ ສິ່ງຜົນສະທ້ອນດ້ານ ລົບໃຫ້ກັບການປ່ອຍກູ້ວົງເງິນໜ້ອຍ ຈໍານວນໃຫ້ກັບ SMEs. ສະນັ້ນ ພາກທຸລະກິດເຫັນວ່າ ແຈ້ງການດັ່ງກ່າວ ບໍ່ ເປັນການສົ່ງເສີມໃຫ້ວິສາຫະກິດຂະໜາດນ້ອຍ ໃຫ້ສາມາດເຂົ້າຫາແຫຼ່ງທຶນຜ່ານ ລະບົບທະນາຄານໄດ້ເທົ່າທີ່ຄວນ. ຈາກການຮວບຮວມຂໍ້ມູນຈາກພາກທຸລະກິດ, ເຫັນວ່າ ໂດຍລວມແລ້ວ ຂັ້ນຕອນການຂໍກູ້ຢືມຈາກທະນາຄານ ປະກອບມີ 6 ຂັ້ນຕອນທີ່ຕ່າງກັນ ແລະ ຕິດພັນກັບສີ່ ໜ່ວຍງານຂອງພາກລັດ ເຊິ່ງໃຊ້ເວລາ ແລະ ຄ່າໃຊ້ຈ່າຍດັ່ງນີ້:

- ເວລາທີ່ໃຊ້ໃນຂັ້ນຕອນທັງໝົດແມ່ນປະມານ 2 ຫາ 4 ອາທິດ (ບໍ່ລວມເອົາເວລາ ໃນການພິຈາລະນາຂອງ ທະນາຄານ).
- ຈໍານວນຄັ້ງທີ່ຕ້ອງໄປຫາໜ່ວຍງານທີ່ກ່ຽວຂອງພາກລັດແມ່ນ 7 ຫາ 11 ຄັ້ງ ຕໍ່ການກູ້ຢືມໜຶ່ງຄັ້ງ (ບາງໜ່ວຍງານຕ້ອງໄດ້ເດີນທາງໄກ ແລະ ໃຊ້ເວລາລໍຖ້າດົນ)
- ຄ່າບໍລິການທີ່ຕິດພັນກັບກູ້ຢືມ ແມ່ນ 2 ຫາ 4 ລ້ານກີບ (ບໍ່ລວມຄ່າໃຊ້ຈ່າຍອື່ນໆ, ຄ່າເສຍເວລາ, ຄ່າ ເດີນທາງ ແລະຄ່າທໍານຽມທະນາຄານ)
- ຂັ້ນຕອນຕ່າງໆທີ່ຕິດພັນກັບກົດລະບຽບການປ່ອຍກູ້ ແມ່ນມີຫລາຍຂັ້ນຕອນ ແລະບາງຂັ້ນຕອນກໍ່ເຫັນວ່າ ບໍ່ມີຄວາມຈໍາເປັນ ເຊັ່ນ:
- ການຈໍ້າກາຫ້ອງການທະບຽນສານ
- ການຈົດທະບຽນຫຼັກຊັບຄໍ້າປະກັນໂດຍໃຊ້ຊັບສິນຄົງທີ່ກັບກົມຄຸ້ມຄອງທີ່ດິນ ແລະ ກົມຄຸ້ມຄອງຊັບສິນ ແຫ່ງລັດ ນອກຈາກນີ້ ຍັງມີການເກັບຄ່າທໍານຽມຕ່າງໆທີ່ບໍ່ເປັນເອກະພາບ ຕາມເຂດບ້ານ ແລະ ເມືອງ. ບາງຄັ້ງກໍ່ຕ້ອງໄດ້ມີຄ່າໃຊ້ຈ່າຍພິເສດເພື່ອໃຫ້ເອກະສານແລ້ວໄວຂຶ້ນ. ປະຈຸບັນ ເນື່ອງຈາກການກວດເບິ່ງ ຄວາມຖືກຕ້ອງ ຜ່ານລະບົບອອນໄລນ໌ ຂອງໃບຕາດິນ ແລະ ຄໍາຕັດສິນຂອງສານທີ່ກ່ຽວກັບທີ່ດິນນັ້ນ ຍັງ

ບໍ່ສາມາດເຮັດໄດ້, ຈຶ່ງມີການບັງຄັບໃຫ້ໃຊ້ແຕ່ໃບຕາດິນທີ່ຕ້ອງຈົດທະບຽນແບບທາງການເທົ່ານັ້ນ ເຊິ່ງກໍ່ໃຫ້ເກີດມີຂໍ້ຈຳກັດຕໍ່ການເຂົ້າຫາແຫລ່ງທຶນ ໂດຍສະເພາະແມ່ນ ທຸລະກິດຂະໜາດນ້ອຍ.

**ຂໍ້ສະເໜີວິທີແກ້ໄຂ**

1) ຄວນຫລຸດຜ່ອນຂັ້ນຕອນການກູ້ຢືມໃຫ້ງ່າຍດາຍລົງ ເຊັ່ນສາມາດໃຫ້ມີການບໍລິການລະບົບອອນໄລນ໌ ໃນການກວດກາຄວາມຖືກຕ້ອງຂອງໃບຕາດິນ, ຂໍ້ຂັດແຍ່ງຕ່າງໆ, ແລະ ໂຄງການລັດຖະບານຕ່າງໆທີ່ດິນຕັ້ງຢູ່.
2) ຂັ້ນຕອນການຈົດທະບຽນສານ ຕໍ່ກັບເອກະສານທີ່ຕິດພັນກັບເງິນກູ້ ຄວນຈະຕັດອອກ ຫລື ໃຫ້ສາມາດປະຕິບັດຜ່ານລະບົບອອນໄລນ໌ໄດ້. ສຳລັບການເກັບຄ່າທຳນຽມຈົດທະບຽນສານ ຄວນຄິດໄລ່ເປັນອັດຕາແບບຄົງທີ່ ຫຼື ໃຫ້ມີເພດານຕໍ່ກັບຊຸດເອກະສານໃດໜຶ່ງ ໂດຍບໍ່ໃຫ້ຄິດໄລ່ເປັນໜ້າເຈ້ຍ ຫລື ຈຳນວນເງິນທີ່ສະເໜີກູ້,
3) ຕັດຂັ້ນຕອນ ການຈົດທະບຽນເອກະສານຫລັກຊັບຄ້ຳປະກັນສຳລັບຊັບສິນຄົງທີ່ ກັບກົມຄຸ້ມຄອງຊັບສິນແຫ່ງລັດ
4) ພິຈາລະນາວິທີການເລັ່ງລັດປັບປຸງຄ່າທຳນຽມຈົດທະບຽນຫຼັກຊັບທີ່ຕິດພັນກັບສິດນຳໃຊ້ທີ່ດິນໃນລັດຖະບັນຍັດປະທານປະເທດ ເລກທີ 003 ເພື່ອເປັນການສ້າງກົນໄກທີ່ເອື້ອອຳນວຍໃຫ້ຜູ້ປະກອບການສາມາດດຳເນີນທຸລະກິດໄດ້ຢ່າງຄ່ອງຕົວ ເປັນການຫຼຸດຜ່ອນຕົ້ນທຶນການຜະລິດ ແລະສາມາດແຂ່ງຂັນກັບຕະຫຼາດຕ່າງປະເທດໄດ້,
5) ປະຕິບັດການຈັດເກັບຄ່າທຳນຽມໃຫ້ເປັນເອກະພາບໂດຍສະເພາະຂັ້ນບ້ານ ແລະ ໃຫ້ມີແຜ່ນປ້າຍລະບຸຄ່າທຳນຽມຊັດເຈນຕິດຕາມຫ້ອງການປົກຄອງຂັ້ນບ້ານ, ເມືອງ ແລະ ອື່ນໆ,
6) ຖ້າເປັນໄປໄດ້ການເກັບຄ່າທຳນຽມ ແລະຄ່າບໍລິການຂອງພາກລັດ ທີ່ຕິດພັນກັບການກູ້ຢືມໂດຍໃຊ້ຫຼັກຊັບຄ້ຳປະກັນ ຄວນເກັບຄ່າທຳນຽມຈຸດດຽວຜ່ານລະບົບທະນາຄານ,
7) ຕໍ່ກັບວົງເງິນກູ້ຈຳນວນໜ້ອຍ ຄວນອະນຸຍາດໃຫ້ສາມາດນຳໃຊ້ໃບຢັ້ງຢືນສິດນຳໃຊ້ທີ່ດິນ ທີ່ຮັບຮອງໂດຍນາຍບ້ານ ເປັນຫຼັກຊັບຄ້ຳປະກັນໃນເຂດທີ່ບໍ່ມີການເຮັດໃບຕາດິນຂອບທອງ (ແລ້ວລາຍງານເຂົ້າໃນລະບົບຂໍ້ມູນສິນເຊື່ອໄດ້)

**ຂະແໜງການກ່ຽວຂ້ອງຂອງພາກລັດ**

**1.** ກົມຄຸ້ມຄອງທະນາຄານທຸລະກິດ, ທຫລ
**2.** ກົມຄຸ້ມຄອງທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
**2.** ກົມທະບຽນສານ, ກະຊວງຍຸດຕິທຳ
**3.** ກົມຄຸ້ມຄອງຊັບສິນແຫ່ງລັດ, ກະຊວງການເງິນ
**4.** ກົມສ່ວຍສາອາກອນ, ກະຊວງການເງິນ

**ຄວາມຄືບໜ້າຂອງການແກ້ໄຂ ລ່າສຸດ:**

ຂັ້ນຕອນການຈົດທະບຽນສັນຍາເງິນກູ້ ແລະ ຫຼັກຊັບຄ້ຳປະກັນ: ອີງຕາມໜັງສືຕອບຈາກກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 516/ກຄທ, ລົງວັນທີ 17 ມິຖຸນາ 2020 ເຊິ່ງໄດ້ຮອບຮອມຄຳຕອບຈາກຂະແໜງການທີ່ກ່ຽວຂ້ອງທີ່ຕິດພັນກັບບັນຫານີ້, ແລະ ອີງຕາມ ຜົນການປຶກສາຫາລື ຈາກກອງປະຊຸມປຶກສາຫາລື

ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ( ບັນຫາທີ່ຕິດພັນກັບການບໍລິການທາງດ້ານການເງິນ) ຄັ້ງວັນທີ 06 ສິງຫາ 2019 ສາມາດສະຫຼຸບຄວາມຄືບໜ້າໄດ້ຄື:

- ກົມທະບຽນສານ (ກະຊວງຍຸຕິທຳ): ຢັ້ງຢືນວ່າການຢັ້ງຢືນສັນຍາເງິນກູ້ ແລະ ຫຼັກຊັບຄ້ຳປະກັນ ຜ່ານມາແມ່ນບໍ່ມີການແກ່ຍາວເວລາ ສູງສຸດບໍ່ເກີນ 15 ວັນ. ສ່ວນຄ່າທຳນຽມ ໃນການຢັ້ງຢືນສັນຍາເງິນກູ້ ແມ່ນເທົ່າກັບ 20,000 ກີບ ຕໍ່ສະບັບ(ຊຸດ) ແລະ ຄ່າບໍລິການ ແມ່ນ ເກັບ 5000 ກີບ/ເຈ້ຍ; ກົມທະບຽນສານ ໄດ້ປະກອບຄຳເຫັນໃນ ກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ( ບັນຫາທີ່ຕິດພັນກັບການບໍລິການທາງດ້ານການເງິນ) ຄັ້ງວັນທີ 06 ສິງຫາ 2019 ຄື: ເນື່ອງຈາກການຈົດທະບຽນສານ ແມ່ນການຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ແລະ ເອກະສານອື່ນໆ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງມີຂັ້ນຕອນນີ້, ແຕ່ແຜນການປັບປຸງໃນຕໍ່ໜ້າ ແມ່ນຈະໄດ້ຕັດບາງຂອດທີ່ຕິດພັນກັບການຈົດທະບຽນສານທີ່ເຫັນວ່າບໍ່ຈຳເປັນອອກ. ສະເໜີໃຫ້ ຈັດກອງປະຊຸມລະຫວ່າງໜ່ວຍງານທີ່ກ່ຽວຂ້ອງຂອງພາກລັດສະເພາະເພື່ອປັບປຸງຂອດຂັ້ນທີ່ຊ້ຳຊ້ອນ ແລະ ບໍ່ຈຳເປັນ.
- ກົມຄຸ້ມຄອງຊັບສິນຂອງລັດ (ກະຊວງການເງິນ): ສຳລັບປະເພດສັນຍາເງິນກູ້ ແລະ ຫຼັກຊັບຄ້ຳປະກັນ ແມ່ນບໍ່ໄດ້ຈັດຕັ້ງປະຕິບັດຢູ່ກົມຄຸ້ມຄອງຊັບສິນຂອງລັດ;
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍທີ່ດິນ ແລະ ໄດ້ມີການປະກາດນຳໃຊ້ ກົດໝາຍສະບັບປັບປຸງແລ້ວ ໃນທ້າຍປີ 2020. ບາດກ້າວຕໍ່ໄປ ຈະມີປັບປຸງນິຕິກຳລຸ່ມກົດໝາຍ ເປັນຕົ້ນແມ່ນຄຳແນະນຳວ່າດ້ວຍການຈົດທະບຽນນິຕິກຳກ່ຽວກັບທີ່ດິນ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ). ນອກຈາກນີ້ ກົມທີ່ດິນ ໄດ້ປະກອບຄຳເຫັນໃນ ກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ( ບັນຫາທີ່ຕິດພັນກັບການບໍລິການທາງດ້ານການເງິນ) ຄັ້ງວັນທີ 06 ສິງຫາ 2019 ຄື: ແຜນການປັບປຸງໃນຕໍ່ໜ້າ ແມ່ນ ເລັ່ງການອອກໃບຕາດິນ ທົ່ວປະເທດໃຫ້ສຳເລັດ ໃນປີ 2025, ແລະ ພັດທະນາລະບົບການຈົດທະບຽນທີ່ດິນ ແບບອອນລາຍ ໃຫ້ສາມາດນຳໃຊ້ໄດ້ໃນຂອບເຂດທົ່ວປະເທດ. ປະຈຸບັນ ການຈົດທະບຽນຄ້ຳປະກັນເງິນກູ້ ໃຊ້ເວລາສະເລ່ຍປະມານ 10 ວັນ. ພາຍໃນປີ 2019 ຈະໄດ້ມີການເລີ່ມສ້າງສູນບໍລິການທາງດ້ານທີ່ດິນໃນທົ່ວປະເທດ ໃຫ້ສອດຄ່ອງກັບກົດໝາຍທີ່ດິນ, ໝາຍຄວາມວ່າ ການຈົດທະບຽນຕ່າງໆທີ່ຕິດພັນກັບສິດນຳໃຊ້ທີ່ດິນ ຈະແມ່ນສູນດັ່ງກ່າວ ເປັນຜູ້ໃຫ້ບໍລິການ ແລະການເກັບຄ່າທຳນຽມ ແມ່ນຈະເກັບຜ່ານລະບົບທະນາຄານ. ເຊິ່ງໃນເບື້ອງຕົ້ນແມ່ນໄດ້ເລີ່ມທົດລອງໃຫ້ບໍລິການຢູ່ ນະຄອນຫຼວງວຽງຈັນ. ການສ້າງສູນດັ່ງກ່າວ ຕ້ອງໄດ້ຮັບການຮ່ວມມືຈາກຂະແໜງການກ່ຽວຂ້ອງ ໂດຍສະເພາະແມ່ນໜ່ວຍງານທະບຽນສານ ແລະ ໜ່ວຍງານສ່ວຍສາອາກອນ.
- ທະນາຄານແຫ່ງ ສປປ ລາວ: ຮ່າງຂໍ້ຕົກລົງ ວ່າດ້ວຍບໍລິສັດຄ້ຳປະກັນສິນເຊື່ອ ແມ່ນໄດ້ສຳເລັດການຮ່າງຂໍ້ຕົກລົງໂດຍພື້ນຖານ ແລະ ກຳລັງດຳເນີນການກວດກາຄວາມສອດຄ່ອງຂອງຮ່າງນິຕິກຳໂດຍກົມກ່ຽວຂ້ອງ. ພາຍຫຼັງສຳເລັດແລ້ວຈະນຳສະເໜີທ່ານຜູ້ວ່າການ ທຫລ ເພື່ອພິຈາລະນາອະນຸມັດລາຍເຊັນ ແລະ ປະກາດໃຊ້ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ).

## 2. ຂັ້ນຕອນທາງດ້ານກົດໝາຍໃນການແກ້ໄຂຂໍ້ຂັດແຍ່ງ

ສະພາບບັນຫາ: ຂັ້ນຕອນທາງກົດໝາຍໃນການແກ້ໄຂຂໍ້ຂັດແຍ່ງ ກໍ່ເປັນອີກບັນຫາໜຶ່ງທີ່ກະທົບກັບຜູ້ປະກອບການບໍລິການທາງການເງິນ. ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຫຼາຍແຫ່ງ ເຫັນວ່າ ການແກ່ຍາວໄລຍະເວລາໃນການພິຈາລະນາຄະດີ ແລະ ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ສ້າງຜົນກະທົບໃຫ້ແກ່ການດຳເນີນທຸລະກິດຂອງຜູ້ປະກອບການ ແລະ ບັນດາລູກຄ້າທີ່ນຳໃຊ້ການບໍລິການດ້ານການເງິນ. ພ້ອມກັນນີ້ ບັນຫາດັ່ງກ່າວ ກໍ່ໄດ້ສົ່ງຜົນກະທົບທາງອ້ອມ ໃຫ້ແກ່ ການເຂົ້າຫາແຫຼ່ງທຶນຂອງວິສາຫະກິດ ແລະ ຍັງກະທົບຕໍ່ການປົກປ້ອງຜູ້ຊົມໃຊ້. ໃນຂະນະດຽວກັນ ກໍ່ຍັງເຫັນໄດ້ວ່າ ການຈັດຕັ້ງປະຕິບັດກົດໝາຍທີ່ຕິດພັນກັບການແກ້ໄຂຂໍ້ຂັດແຍ່ງ ຢ່າງບໍ່ເປັນເອກະພາບກັນທົ່ວປະເທດ.

ຂະແໜງການທະນາຄານ ໄດ້ຍົກເອົາປະສົບການໂດຍກົງທີ່ຕົນປະສົບພົບພໍ້ ກ່ຽວກັບການພິຈາລະນາຄະດີທີ່ຕິດພັນກັບເງິນກູ້ຢືມກັບທະນາຄານ ເຊິ່ງຜູ້ກູ້ຢືມໄດ້ຜິດສັນຍາເງິນກູ້. ການພິຈາລະນາຄະດີ ລວມເຖິງການຈັດຕັ້ງປະຕິບັດຄຳຕັດສິນສານຂອງຄະດີລັກສະນະດັ່ງກ່າວ ເຫັນວ່າແກ່ຍາວຫຼາຍກວ່າສາມປີ (ບາງຄະດີກໍ່ຍັງບໍ່ທັນສຳເລັດ). ຕາງໜ້າຈາກທະນາຄານທຸລະກິດ ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າຈະມີການຕັດສິນໃຫ້ທະນາຄານເປັນຜູ້ຊະນະຄະດີໃນທຸກຊັ້ນສານແລ້ວກໍ່ຕາມ, ແຕ່ຜູ້ກູ້ຢືມທີ່ໄດ້ຜິດສັນຍາເງິນກູ້ ແລະ ຖືກຕັດສິນໃຫ້ເສຍຄະດີ ກໍ່ຍັງສາມາດດຳເນີນທຸລະກິດຂອງຕົນຕໍ່ໄດ້, ແລະ ຍັງສາມາດນຳໃຊ້ສິດໃນການອຸທອນຕໍ່ໄດ້ ໂດຍທີ່ບໍ່ໄດ້ມີການລິເລີ່ມດຳເນີນການຂາຍຊັບສິນເພື່ອມາໃຊ້ໜີ້ທະນາຄານແຕ່ຢ່າງໃດ, ໃນຂະນະທີ່ທະນາຄານ ຕ້ອງໄດ້ຊຳລະຄ່າປະກັນໄພຊັບສິນເພື່ອປົກປ້ອງມູນຄ່າຊັບສິນຂອງຕົນ ພ້ອມທັງຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການທີ່ຕິດພັນກັບການຕິດຕາມຄະດີ ແລະ ຕິດຕາມການຂາຍຊັບສິນຂອງຜູ້ກູ້ຢືມ ຢ່າງຕໍ່ເນື່ອງ.

ອີງຕາມ ບົດລາຍງານການດຳເນີນທຸລະກິດ ປີ 2020 ຂອງທະນາຄານໂລກ, ການບັງຄັບໃຊ້ສັນຍາໃນ ສປປ ລາວ ໃຊ້ເວລາປະມານ 50% ເກີນ ເວລາສະເລ່ຍຂອງການບັງຄັບໃຊ້ສັນຍາໃນບັນດາປະເທດອາຊີຕາເວັນອອກໃນກໍລະນີຄະດີທີ່ມີລັກສະນະຄ້າຍຄືກັນ. ໃນນີ້ ການດຳເນີນການຮ້ອງຟ້ອງຕໍ່ສານຊັ້ນຕົ້ນໃນ ສປປ ລາວ ສຳລັບຄະດີຄວາມທາງການຄ້າ ທີ່ບໍ່ມີລັກສະນະຊັບຊ້ອນ ກໍ່ໃຊ້ເວລາເຖິງ 828 ວັນ. ພາຍໃນກອບໄລຍະເວລາດັ່ງກ່າວນັ້ນ ແມ່ນຂະບວນການຕັດສິນຂອງສານພຽງຢ່າງດຽວ ເຊິ່ງເມື່ອຄະດີໄດ້ຮັບການຕັດສິນຈາກສານແລ້ວ ກໍ່ຍັງຕ້ອງໃຊ້ເວລາອີກປະມານ 365 ວັນ ສຳລັບເຈົ້າໜ້າທີ່ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການແນບເອກະສານ ແລະ ການດຳເນີນການກັບຊັບສິນຂອງລູກໜີ້. ຖ້າຫາກລວມໄລຍະເວລາສຳລັບການອຸທອນຕື່ມອີກ ກໍ່ຈະເຫັນວ່າ ຄະດີຄວາມໃດໜຶ່ງສາມາດແກ່ຍາວຫຼາຍປີຈຶ່ງຈະສຳເລັດ.

ໄລຍະເວລາການຈັດຕັ້ງປະຕິບັດຄຳຕັດສິນສານທີ່ແກ່ຍາວ ຈະຍິ່ງມີຜົນກະທົບຕໍ່ການປ່ອຍສິນເຊື່ອຂອງທະນາຄານໃຫ້ກັບ SME ໂດຍລວມ. ສຳລັບທະນາຄານທີ່ສືບຕໍ່ປ່ອຍສິນເຊື່ອໃຫ້ກັບກຸ່ມເປົ້າໝາຍນີ້ ກໍ່ຈະມີການເພີ່ມຄ່າໃຊ້ຈ່າຍດຳເນີນການດ້ານກົດໝາຍໃນການຟ້ອງຮ້ອງ, ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄຳຕັດສິນສານ ແລະ ຄ່າປົກປ້ອງຊັບສິນ ເຊິ່ງຈະສະທ້ອນອອກມາເປັນຄ່າໃຊ້ຈ່າຍໃນການກູ້ຢືມທີ່ແພງຂຶ້ນ ທີ່ຜູ້ກູ້ຢືມຕ້ອງໄດ້ຈ່າຍ. ໂດຍທົ່ວໄປແລ້ວ ເນື່ອງຈາກຈະມີທະນາຄານພຽງຈຳນວນໜ້ອຍທີ່ຈະຕ້ອງການປ່ອຍສິນເຊື່ອໃຫ້ກັບ SME ແລະ

ເນື່ອງຈາກຄ່າໃຊ້ຈ່າຍໃນການກູ້ຢືມທີ່ເພີ່ມຂຶ້ນ, ຈະຍິ່ງເຮັດໃຫ້ຊ່ອງຫວ່າງຂອງການເຂົ້າຫາເງິນກູ້ທະນາຄານຂອງ SME ນັບມື້ນັບຫຼາຍຂຶ້ນ. ບັນດາທະນາຄານທຸລະກິດເຫັນວ່າ ສາເຫດດັ່ງກ່າວເຮັດໃຫ້ມີສະຖາບັນການເງິນທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ເຂົ້າມາປ່ອຍສິນເຊື່ອໃຫ້ SME ຫຼາຍຂຶ້ນ ເຊິ່ງຈະເຮັດໃຫ້ເກີດຜົນເສຍຄື:

- ຂະແໜງການກ່ຽວຂ້ອງບໍ່ສາມາດຄຸ້ມຄອງໄດ້, ເຮັດໃຫ້ລາຍຮັບອາກອນຂອງລັດຖະບານ ໜ້ອຍລົງ;
- ບໍ່ສາມາດຄຸ້ມຄອງຜູ້ກູ້ຢືມໄດ້, ໂດຍສະເພາະແມ່ນໃນດ້ານຄ່າໃຊ້ຈ່າຍທີ່ຕິດພັນກັບການກູ້ຢືມ; ແລະ
- ເຮັດໃຫ້ເກີດມີການບັງຄັບຍຶດເອົາຊັບສິນຄ້ຳປະກັນເງິນກູ້ ດ້ວຍການໃຊ້ຄວາມຮຸນແຮງຕໍ່ຜູ້ກູ້ຢືມ

ຜູ້ປະກອບການໃນຂະແໜງການບໍລິການດ້ານການເງິນເຫັນວ່າ ການຕີຄວາມໝາຍ ແລະ ການຈັດຕັ້ງປະຕິບັດ ຫຼື ບັງຄັບໃຊ້ສັນຍາຢ່າງບໍ່ເປັນເອກະພາບກັນ ແມ່ນເກີດຂຶ້ນຢ່າງຫຼວງຫຼາຍ ແລະ ມີສາເຫດສ່ວນໃຫຍ່ມາຈາກ ການຂາດປະສົບການ ແລະ ຄວາມເຂົ້າໃຈຕໍ່ສັນຍາທາງການເງິນ ຂອງເຈົ້າໜ້າທີ່ກ່ຽວຂ້ອງ ໂດຍສະເພາະຢ່າງຍິ່ງແມ່ນຢູ່ຂັ້ນບ້ານ (ນາຍບ້ານ).

ກໍລະນີຕົວຢ່າງທີ່ຜູ້ປະກອບການພົບພໍ້ຜ່ານມາ: ໃນການຮ້ອງຟ້ອງສັນຍາປະກັນໄພ ຢູ່ ສປປ ລາວ, ເຈົ້າໜ້າທີ່ບາງຄົນບໍ່ມີຄວາມເຂົ້າໃຈກ່ຽວກັບເນື້ອໃນຂອງສັນຍາປະກັນໄພ ໂດຍສະເພາະຢ່າງຍິ່ງ ແມ່ນຕໍ່ກັບຂອບເຂດຂອງການປະກັນ ແລະ ຄວາມຮັບຜິດຊອບຂອງຄູ່ຮ່ວມສັນຍາ. ໃນບາງກໍລະນີ ສານຊັ້ນຕົ້ນກໍ່ໄດ້ມີການສັ່ງຄຳຕັດສິນເພື່ອອຸທອນຕໍ່ສານສູງ ໂດຍທີ່ບໍ່ໄດ້ກວດຄືນເບິ່ງສັນຍາປະກັນໄພຄືນຕື່ມກ່ອນ. ຍົກຕົວຢ່າງ ໃນສັນຍາປະກັນໄພລົດ, ຄວາມຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນກັບຊັບສິນທີ່ຖືກປະກັນຈາກອຸບັດຕິເຫດ ແມ່ນຄວາມຮັບຜິດຊອບຂອງບໍລິສັດປະກັນໄພ ແຕ່ກໍ່ໄດ້ກຳນົດຂອບເຂດຄວາມຮັບຜິດຊອບຢູ່ໃນສັນຍາ, ພ້ອມດຽວກັນສັນຍາປະກັນໄພ ກໍ່ໄດ້ກຳນົດຂໍ້ຍົກເວັ້ນ (ເຊັ່ນ ໃນກໍລະນີ ອຸບັດຕິເຫດເກີດຂຶ້ນຍ້ອນຜູ້ຂັບຂີ່ຢູ່ໃນອາການມຶນເມົາ ຫຼື ກໍລະນີເກີດເຫດສຸດວິໄສ ທີ່ຈະເກີນຄວາມຮັບຜິດຊອບຂອງບໍລິສັດປະກັນໄພ). ການຕີກອບຄວາມຮັບຜິດຊອບໃນສັນຍາປະກັນໄພ ສາມາດຊ່ວຍໃຫ້ບໍລິສັດປະກັນໄພ ຂາຍປະກັນໃນລາຄາທີ່ຜູ້ຊົມໃຊ້ເຂົ້າເຖິງໄດ້. ບໍລິສັດປະກັນໄພ ຈະຄິດໄລ່ຄວາມເປັນໄປໄດ້ຂອງຜົນເສຍຫາຍທີ່ຕ້ອງຮັບຜິດຊອບ ແລ້ວຈຶ່ງມາກຳນົດຄ່າປະກັນທີ່ຜູ້ຊື້ປະກັນຕ້ອງຈ່າຍ. ຢ່າງໃດກໍ່ຕາມ ໄດ້ມີກໍລະນີທີ່ ເຈົ້າໜ້າທີ່ພິພາກສາ ບໍ່ມີຄວາມເຂົ້າໃຈທີ່ພຽງພໍຕໍ່ກັບສັນຍາປະກັນໄພ ແລະ ໄດ້ຕັດສິນຄະດີ ໂດຍບໍ່ໄດ້ອ້າງອີງໃສ່ກອບຄວາມຮັບຜິດຊອບທີ່ກຳນົດໃນສັນຍາ. ສາເຫດດັ່ງກ່າວ ເຮັດໃຫ້ບໍລິສັດປະກັນໄພຕັ້ງລາຄາຄ່າປະກັນສູງຂຶ້ນ ເຮັດໃຫ້ການເຂົ້າຫາການບໍລິການດ້ານປະກັນໄພຍາກຂຶ້ນສຳລັບຜູ້ຊົມໃຊ້.

**ຂໍ້ສະເໜີວິທີແກ້ໄຂ**

1. ສຶກສາຄືນ ກອບຂອງກົດລະບຽບ ແລະ ກົດໝາຍ ທີ່ຕິດພັນກັບການເກັບຄືນໜີ້ສິນ (ວິທີການພິຈາລະນາຄະດີແພ່ງ ແລະ ກົດໝາຍ ທີ່ຕິດພັນກັບ ການບັງຄັບໃຊ້ສັນຍາ, ການຄ້າ, ທະນາຄານ, ທຸລະກຳທີ່ມີຫຼັກຊັບຄ້ຳປະກັນ ແລະ ກົດໝາຍທີ່ຕິດພັນກັບອາກອນ, ເນື່ອງຈາກຈະຊ່ວຍໃນຂະບວນການເຮັດວຽກຂອງສານສຳລັບຄະດີທາງແພ່ງ ແລະ ຄະດີທາງການຄ້າ)

2. ດຳເນີນການປະເມີນຜົນຈາກກໍລະນີຕົວຈິງທີ່ເກີດຂຶ້ນ ຕໍ່ກັບວິທີ ແລະ ຂະບວນການຕັດສິນຄະດີທາງການຄ້າ ຂອງສານນະຄອນຫຼວງວຽງຈັນ, ພ້ອມທັງ ປະເມີນຄືນ ກອບຂອງກົດລະບຽບ ແລະ ກົດໝາຍ ທີ່ຕິດພັນກັບ ໂຄງຮ່າງການຈັດຕັ້ງ ແລະ ຂະບວນການດຳເນີນ ແລະ ຕັດສິນຄະດີຂອງສານ ທີ່ອາດເປັນສາເຫດໃຫ້ການ ຕັດສິນຄະດີບໍ່ມີປະສິດຕິຜົນ ແລະ ລ່າຊ້າ.
3. ເພີ່ມຄວາມຮູ້ທາງດ້ານການເງິນ ແລະ ໃຫ້ຄຳແນະນຳທາງດ້ານການເງິນ ໃຫ້ແກ່ຜູ້ຊົມໃຊ້ການບໍລິການທາງດ້ານ ການເງິນ ແທນທີ່ຈະໃຊ້ລະບົບສານໃນການບັງຄັບໃຊ້ສັນຍາ ເນື່ອງຈາກອາດສົ່ງຜົນກະທົບຕໍ່ເປົ້າໝາຍການປົກ ປ້ອງຜູ້ບໍລິໂພກໃນໄລຍະຍາວ.
4. ອາດຈະພິຈາລະນາ ຕາມລຸ່ມນີ້:
   - ໃນຂະບວນການພິຈາລະນາຄະດີຂອງສານຊັ້ນຕົ້ນ ຜູ້ພິພາກສາອາດພິຈາລະນາໃຫ້ມີຜູ້ຕາງໜ້າຈາກ ສະມາຄົມປະກັນໄພ ແລະ ຈາກພາກສ່ວນທີ່ກ່ຽວຂ້ອງ ມາຊ່ວຍໃຫ້ຄຳປຶກສາ. ຖ້າເຮັດໄດ້ໃນ ລັກສະນະດັ່ງກ່າວ ຈະສາມາດເຮັດໃຫ້ການຕັດສິນຄະດີຂອງສານຊັ້ນຕົ້ນມີປະສິດຕິຜົນ (ແລະ ຫຼຸດຜ່ອນຈຳນວນການຍື່ນອຸທອນ) ແລະ ຈະມີພຽງກໍລະນີທີ່ມີລັກສະນະຊັບຊ້ອນ ທີ່ຈະຖືກຍົກຂຶ້ນ ໄປຕັດສິນຢູ່ທີ່ສານຊັ້ນສູງ.
   - ຝຶກອົບຮົມໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອໃຫ້ມີຄວາມເຂົ້າໃຈ ກ່ຽວກັບສັນຍາປະກັນໄພ ແລະ ວິທີການ ຮຽກຮ້ອງຄ່າສິນໄໝທົດແທນ.
   - ສ້າງຕັ້ງຄະນະກຳມະການທີ່ປຶກສາດ້ານປະກັນໄພ ເຊິ່ງລວມເອົາ ສະມາຊິກຜູ້ຕາງຕ້າ ຈາກ ສະມາຄົມ ປະກັນໄພລາວ (**LIA**), ກົມຄຸ້ມຄອງຊັບສິນຂອງລັດ, ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ (**DSI**), ກະຊວງການເງິນ ເປັນຄະນະ, ເພື່ອເຮັດໜ້າທີ່ໃຫ້ຄຳປຶກສາຕໍ່ກໍລະນີທີ່ຄົງ ຄ້າງດ້ານການປະກັນໄພ.
5. ຮ່ວມກັບໜ່ວຍງານປຶກສາຫາລືດ້ານການບໍລິການທາງດ້ານການເງິນ ເພື່ອກະກຽມແຜນງານລະອຽດໃນການ ປັບປຸງຂໍ້ຈຳກັດທາງດ້ານກົດລະບຽບ ແລະ ກົດໝາຍທີ່ຕິດພັນ ໂດຍອີງໃສ່ຜົນໄດ້ຮັບຈາກບົດສຶກສາຂະບວນ ການດຳເນີນຄະດີທາງດ້ານການຄ້າ ທີ່ອີງໃສ່ຂໍ້ມູນຕົວຈິງ. ມີການຕິດຕາມຜົນຂອງການຈັດຕັ້ງປະຕິບັດແຜນງານ ແລະ ປັບປ່ຽນແຜນງານຕາມຄວາມເໝາະສົມປະຈຳເປັນແຕ່ລະໄລຍະ.

**ຂະແໜງການທີ່ກ່ຽວຂ້ອງ**

1. ກົມຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກະຊວງຍຸດຕິທຳ
2. ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານ ແຫ່ງ ສປປ ລາວ
3. ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານ ແຫ່ງ ສປປ ລາວ
4. ຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງ ການເງິນ

### 3. ການປັບປຸງຖານຂໍ້ມູນສິນເຊື່ອແຫ່ງຊາດການ

ສະພາບບັນຫາ: ລະບົບຂໍ້ມູນສິນເຊື່ອບໍ່ວ່າຂອງລັດ ຫຼື ຂອງເອກະຊົນກໍ່ລ້ວນແຕ່ຖືກສ້າງຂຶ້ນມາເພື່ອປັບປຸງການເກັບກຳ ຂໍ້ມູນສິນເຊື່ອຂອງບຸກຄົນ ແລະ ນິຕິບຸກຄົນໃຫ້ທົ່ວເຖິງ. ການມີລະບົບ ຂໍ້ມູນສິນເຊື່ອທີ່ດີ ສາມາດຊ່ວຍໃຫ້ບັນດາສະຖາບັນການເງິນຜູ້ປ່ອຍກູ້ ຂະຫຍາຍສິນເຊື່ອໃນອັດຕາດອກເບ້ຍທີ່ເໝາະສົມໄດ້. ໃນ ສປປລາວ ລະບົບຂໍ້ມູນສິນເຊື່ອໄດ້ຖືກສ້າງຂຶ້ນໃນປີ 2012 ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງສປປລາວ (ທຫລ). ອີງຕາມລະບຽບການແລ້ວ ບັນດາສະຖາບັນການເງິນຕ່າງໆ ເຊັ່ນທະນາຄານ, ສະຖາບັນການເງິນຈຸລະພາກ, ແລະ ບໍລິສັດເຊົ່າສິນເຊື່ອ ຕ້ອງໄດ້ເຂົ້າເປັນສະມາຊິກໃນລະບົບດັ່ງກ່າວ ເພື່ອໃຫ້ຂໍ້ມູນກະຈາຍຢ່າງທົ່ວເຖິງ ແລະ ມີຄວາມໜ້າເຊື່ອຖືໄດ້. ຕົວຊີ້ວັດການເຂົ້າຫາສິນເຊື່ອຂອງສປປລາວ ແມ່ນໄດ້ຄະແນນຂ້ອນຂ້າງດີໃນການຈັດອັນດັບການດຳເນີນທຸລະກິດຂອງທະນາຄານໂລກໃນປີຜ່ານມາ, ເຊິ່ງຢູ່ທີອັນດັບທີ 73. ຢ່າງໃດກໍ່ຕາມ, ເມື່ອທຽບກັບບັນດາປະເທດໃນຂົງເຂດອາຊີຕາເວັນອອກ ແລະ ປາຊີຟິກແລ້ວ ຕົວເລກຂໍ້ມູນຂ່າວສານສິນເຊື່ອຂອງບຸກຄົນ ແລະບໍລິສັດທີ່ຢູ່ໃນລະບົບ ແມ່ນຍັງຕ່ຳເຊິ່ງກວມເອົາພຽງ 14.5% ຂອງປະຊາກອນຜູ້ໃຫຍ່.

ເຖິງແມ່ນວ່າລະບົບຂໍ້ມູນສິນເຊື່ອຂອງສປປລາວ ຈະໄດ້ຮັບການປັບປຸງການບໍລິການໃຫ້ດີ ຂຶ້ນເລື້ອຍໆໃນໄລຍະຜ່ານມາກໍ່ຕາມ, ລະບົບດັ່ງກ່າວແມ່ນຍັງບໍ່ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ໃຊ້ໄດ້ດີ ເທົ່າທີ່ຄວນ. ຜ່ານການເກັບຂໍ້ມູນຈາກບັນດາທະນາຄານ ທຸລະກິດ ແລະ ສະຖາບັນການເງິນຕ່າງໆ ເຫັນໄດ້ວ່າ ການນຳໃຊ້ລະບົບຂໍ້ມູນຂ່າວສານສິນເຊື່ອແມ່ນເຫັນວ່າຍັງມີຂໍ້ຈຳກັດເຊັ່ນ:

- ຍັງບໍ່ມີຂໍ້ມູນຈາກບໍລິສັດໄຟຟ້າ, ນ້ຳປະປາ, ໂທລະຄົມ ແລະ ບໍລິສັດຂາຍຍ່ອຍ.
- ບໍ່ມີການເຊື່ອມຕໍ່ກັບບັນດາຖານຂໍ້ມູນຂອງກະຊວງຕ່າງໆທີ່ກ່ຽວຂ້ອງ
- ບັນຫາເລື່ອງຄຸນນະພາບຄວາມໜ້າເຊື່ອຖືຂອງຂໍ້ມູນ, ການສົ່ງຂໍ້ມູນເດືອນລະຄັ້ງ ແລະ ການປ້ອນຂໍ້ມູນໂດຍບໍ່ຜ່ານລະບົບຂອງທະນາຄານ ໂດຍກົງ ແມ່ນມີຄວາມສ່ຽງໃຫ້ເກີດມີຄວາມຜິດພາດ ແລະ ລ່າຊ້າ
- ຂໍ້ຈຳກັດໃນການກວດກາຄວາມຖືກຕ້ອງຂອງຂໍ້ມູນຈາກທາງສູນຂໍ້ມູນສິນເຊື່ອ ແລະ ບໍ່ສາມາດກວດເບິ່ງຈາກຖານຂໍ້ມູນອື່ນໆ ໄດ້.
- ການຈັດຕັ້ງປະຕິບັດກົດລະບຽບໃນການເປັນສະມາຊິກ ແລະ ພັນທະໃນການໃຫ້ຂໍ້ມູນທີ່ຖືກຕ້ອງ ແມ່ນຍັງບໍ່ທັນຮັບການປະຕິບັດເທົ່າທີ່ຄວນ.
- ຂໍ້ຈຳກັດໃນການຄົ້ນຫາ ແລະ ການລາຍງານຂໍ້ມູນສິນເຊື່ອ ເຊັ່ນ ການຄົ້ນຫາຂໍ້ມູນໂດຍຜ່ານລະບົບຄູ່ມືແຕ່ບໍ່ສາມາດເຮັດຜ່ານລະບົບຫາ ລະບົບໄດ້
- ຍັງບໍ່ມີການລາຍງານຂໍ້ມູນສິນເຊື່ອທີ່ເປັນຮູບແບບມາດຖານ
- ຍັງບໍ່ມີການໃຫ້ບໍລິການທີ່ເພີ່ມເຕີມດ້ານອື່ນເຊັ່ນ ການໃຫ້ຄະແນນສິນເຊື່ອ, ບົດລາຍງານແບບສັງລວມຂໍ້ມູນສິນເຊື່ອ ແລະ ບົດລາຍງານຂໍ້ມູນສິນເຊື່ອຂອງ ຂະແໜງການສະເພາະ.

**ຂໍ້ສະເໜີວິທີແກ້ໄຂ**

1) ມີການວາງແຜນຈັດຕັ້ງປະຕິບັດ ການຍົກລະດັບສູນຂໍ້ມູນສິນເຊື່ອເພື່ອຂະຫຍາຍການຄອບຄຸມ ຂໍ້ມູນໃຫ້ທົ່ວເຖິງ ແລະ ການເຊື່ອມໂຍງຂໍ້ມູນກັບບັນດາຂະແໜງການທີ່ກ່ຽວຂ້ອງ;
2) ເພີ່ມການບັງຄັບໃຊ້ກົດລະບຽບທີ່ຕິດພັນຢ່າງເຂັ້ມງວດໃນການກວດກາ ມາດຕະຖານການລາຍງານຂໍ້ມູນສິນເຊື່ອ ໂດຍກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ;

3) ຈັດກອງປະຊຸມປຶກສາຫາລືກັບບັນດາສະມາຊິກ ເປັນແຕ່ລະໄລ ຍະ ເພື່ອລາຍງານຄວາມຄືບໜ້າໃນການປັບປຸງ ຖານຂໍ້ມູນສິນເຊື່ອ, ຫຼືມີການລາຍງານຄວາມຄືບໜ້າຜ່ານຊ່ອງທາງຕ່າງໆ ເຊັ່ນ ເວັບໄຊທ໌ ແລະ ແຈ້ງການ;
4) ມີການປຶກສາກັບບັນດາຜູ້ໃຊ້ລະບົບຂໍ້ມູນສິນເຊື່ອໃນການສ້າງ ຫຼື ປັບປຸງລະບົບຂໍ້ມູນໃໝ່ ເພື່ອໃຫ້ຜູ້ນຳໃຊ້ຕົວຈິງ ໄດ້ມີສ່ວນຮ່ວມໃນການສ້າງ ແລະ ປັບປຸງລະບົບ ລວມເຖິງການມີສ່ວນຮ່ວມໃນການຄັດເລືອກບໍລິສັດ ຜູ້ພັດທະນາລະບົບ, ການສ້າງລະບົບຈຳລອງ, ການທົດລອງໃຊ້ ແລະ ການທົດສອບການຮັບຮອງຂອງຜູ້ໃຊ້;
5) ເພື່ອເປັນການສົ່ງເສີມໃຫ້ມີການຊົມໃຊ້ຖານຂໍ້ມູນຫລາຍຂຶ້ນ ຄວນເກັບຄ່າບໍລິການທັງໝົດລວມຢູ່ໃນຄ່າສະມາ ຊິກປະຈຳປີ ເພື່ອຫລຸດຜ່ອນຄ່າໃຊ້ຈ່າຍລົງ.

## ຂະແໜງການກ່ຽວຂ້ອງຂອງພາກລັດ

1. ທະນາຄານ ແຫ່ງ ສປປ ລາວ
2. ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

## ຄວາມຄືບໜ້າການແກ້ໄຂລ່າສຸດ

- ການປັບປຸງຖານຂໍ້ມູນສິນເຊື່ອແຫ່ງຊາດ: ອີງຕາມໜັງສືແຈ້ງຕອບ ຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເລກທີ 193/ຂສລ ວັນທີ 29 ເມສາ 2020: ທຫລ ໄດ້ສຳເລັດການສ້າງ, ປະກາດນຳໃຊ້ ແລະ ເຜີຍແຜ່ ດຳລັດວ່າດ້ວຍຂໍ້ມູນຂ່າວສານສິນເຊື່ອ ເຊິ່ງໄດ້ປະກາດນຳໃຊ້ໃນເດືອນ ກໍລະກົດ 2019, ແລະ ໄດ້ສ້າງຕັ້ງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເຊິ່ງ ບໍລິສັດດັ່ງກ່າວ ໄດ້ຮ່ວມລົງນາມໃນບົດບັນທຶກການຮ່ວມມື ກັບບັນດາບໍລິສັດສາທາລະນຸປະໂພກ (ໄຟຟ້າ, ນໍ້າປະປາ, ໂທລະຄົມ) ເພື່ອປັບປຸງຖານຂໍ້ມູນສິນເຊື່ອໃຫ້ມີຄວາມຄົບຖ້ວນຍິ່ງຂຶ້ນ. ນອກຈາກນີ້ ແມ່ນກຳລັງກະກຽມພັດທະນາລະບົບຂໍ້ມູນຂ່າວສານສິນເຊື່ອໃໝ່ ເຊິ່ງປະຈຸບັນໄດ້ສຳເລັດການຄົ້ນຄວ້າຄວາມຕ້ອງການທາງດ້ານທຸລະກິດ ແລະ ເຕັກນິກຂອງລະບົບດັ່ງກ່າວ (ບໍ່ໄດ້ລະບຸຄາດໝາຍສຳເລັດ). ໄດ້ມີການປະສານກັບຜູ້ຊົມໃຊ້ຢ່າງເປັນປົກກະຕິ ໂດຍຜ່ານລະບົບຂໍ້ມູນຂ່າວສານສິນເຊື່ອ. ສຳລັບຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ ແມ່ນບໍ່ທັນມີແຜນປັບປຸງເພີ່ມເຕີມ.

**ກຸ່ມບັນຫາທີ່ຕິດພັນກັບການການຈັດຕັ້ງປະຕິບັດກົດລະບຽບສະເພາະ**

1. **ການເກີດຂຶ້ນຂອງຕະຫຼາດແລກປ່ຽນຄູ່ຂະໜານ ແລະ ການບັງຄັບໃຊ້ກົດລະບຽບດ້ານການແລກປ່ຽນເງິນຕາ**

ສປປ ລາວ ມີອັດຕາແລກປ່ຽນອ້າງອີງ ສະກຸນເງິນ ໂດລາ/ກີບ ເຊິ່ງຖືກກຳນົດຢ່າງເປັນທາງການ ເປັນອັດຕາດຽວ ໃນແຕ່ລະມື້. ທະນາຄານ ແຫ່ງ ສປປ ລາວ (ທຫລ) ໄດ້ອະນຸຍາດໃຫ້ ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ກຳນົດອັດຕາແລກປ່ຽນ ລະຫວ່າງເງິນກີບກັບເງິນໂດລາສະຫະລັດ ຂອງຕົນ ໄດ້ໃນຂອບເຂດບໍ່ເກີນ +/-0.25 ທຽບໃສ່ອັດຕາແລກປ່ຽນອ້າງອີງຂອງ ທຫລ (ເຊັ່ນໃນ ວັນທີ 23 ກໍລະກົດ 2021 ອັດຕາອ້າງອີງແມ່ນເທົ່າກັບ 9,533). ຢ່າງໃດກໍ່ຕາມ ຍັງມີບັນດາຮ້ານແລກປ່ຽນ ແລະ ສະຖາບັນການເງິນທີ່ບໍລິການແລກປ່ຽນເງິນຕາ ທີ່ບໍ່ປະຕິບັດຕາມຂໍ້ຕົກລົງຂອງ ທຫລ (ເລກທີ 801/ທຫລ ລົງວັນທີ 05 ຕຸລາ 2015) ໂດຍ ມີການກຳນົດອັດຕາ ແລກປ່ຽນຊື້-ຂາຍ ເງິນໂດລາສະຫະລັດ ເກີນຈາກຂອບເຂດ ທີ່ ທຫລ ກຳນົດ ເຮັດໃຫ້ເກີດມີຕະຫຼາດຄູ່ຂະໜານໃນການແລກປ່ຽນເງິນຕາເກີດຂຶ້ນ. ຕົວຢ່າງ ໃນລະຫວ່າງເດືອນ ກໍລະກົດນີ້ເອງ, ອັດຕາແລກປ່ຽນຢູ່ຕະຫຼາດຄູ່ຂະໜານ ແມ່ນສູງເຖິງ 12,000 ກີບ ຕໍ່ ໜຶ່ງ ໂດລາ ຢູ່ໃນບາງສະຖານແລກປ່ຽນເງິນຕາ.

**ການສັງເກດຂອງໜ່ວຍງານປຶກສາຫາລືຂະແໜງການບໍລິການທາງດ້ານການເງິນ** ເຫັນວ່າ: ກ່ອນກອງປະຊຸມປຶກສາຫາລື ຂອງຂະແໜງການບໍລິການທາງດ້ານການເງິນ, ເຫັນໄດ້ວ່າ ທະນາຄານທຸລະກິດກໍ່ປະສົບພົບພໍ້ກັບບັນຫາຄວາມຫຍຸ້ງຍາກໃນການຊອກຫາເງິນ ໂດລາ ໃນອັດຕາແລກປ່ຽນ ທີ່ສອດຄ່ອງກັບ ທຫລ ກຳນົດ, ເຖິງວ່າຈະເປັນອັດຕາທີ່ບໍ່ມີກຳໄລກໍ່ຕາມ (ເຊັ່ນ ຊື້ໃນອັດຕາຂາຍ). ບັນດາລູກຄ້າທີ່ຕ້ອງການເງິນຕາ ເຊັ່ນ ເພື່ອຊຳລະຄ່າສິນຄ້ານຳເຂົ້າ, ເພື່ອຊຳລະໜີ້ ຫຼື ເງິນປັນຜົນ ໃຫ້ກັບຂາຮຸ້ນຢູ່ຕ່າງປະເທດ ກໍ່ບໍ່ສາມາດແລກປ່ຽນເງິນຕາໄດ້ຢ່າງພຽງພໍ ຈຶ່ງເຮັດໃຫ້ຈຳຕ້ອງໄດ້ຊື້ ເງິນໂດລາ ໃນຕະຫຼາດຄູ່ຂະໜານ ຈຶ່ງເຮັດໃຫ້ອັດຕາແລກປ່ຽນ ໃນລະບົບ ແລະ ໃນຕະຫຼາດຄູ່ຂະໜານ ມີຄວາມແຕກຕ່າງນັບມື້ນັບຫຼາຍຂຶ້ນ. ອີງຕາມປະສົບການຕົວຈິງຈາກຂະແໜງການທະນາຄານ, ເຫັນວ່າ ປະລິມານການແລກປ່ຽນເງິນຕາໃນຕະຫຼາດຄູ່ຂະໜານ ແມ່ນປະມານ 10 ເທົ່າຂອງປະລິມານການແລກປ່ຽນເງິນຕາໃນອັດຕາທີ່ຖືກຕ້ອງຕາມທີ່ ທຫລ ກຳນົດ.

**ການເບິ່ງເຫັນໂອກາດໃນການສ້າງກຳໄລ:** ຈາກການສັງເກດຂອງໜ່ວຍງານປຶກສາຫາລື ຂະແໜງການບໍລິການທາງດ້ານການເງິນ ເຫັນວ່າ ການສະໜອງເງິນໂດລາໃນຕະຫຼາດຄູ່ຂະໜານ ແມ່ນບໍ່ໄດ້ມາຈາກເງິນທີ່ນັກທ່ອງທ່ຽວນຳເຂົ້າມາ ຫຼື ຈາກເງິນທີ່ຜູ້ອອກແຮງງານລາວທີ່ຢູ່ຕ່າງປະເທດສົ່ງກັບມາບ້ານພຽງຢ່າງດຽວ ເນື່ອງຈາກ ໃນຊ່ວງການແຜ່ລະບາດຂອງໂຄວິດ-19 ປະລິມານເງິນຈາກແຫຼ່ງເຫຼົ່ານີ້ ແມ່ນຫຼຸດລົງ, ແຕ່ ປະລິມານເງິນໂດລາຈຳນວນຫຼາຍແມ່ນມາຈາກບັນດາບໍລິສັດສົ່ງອອກຂະໜາດໃຫຍ່ ທີ່ເລັງເຫັນເຖິງສະພາບການຂາດແຄນເງິນຕາໃນຕະຫຼາດ ແລະ ຕ້ອງການທີ່ຈະປ່ອຍເງິນໂດລາອອກໃນອັດຕາທີ່ສູງເພື່ອສ້າງກຳໄລ.

ບຸກຄົນທົ່ວໄປ ແລະ ລູກຄ້າຂອງສະຖາບັນການເງິນທີ່ຊື້ ໂດລາສະຫະລັດ ໃນຕະຫຼາດຄູ່ຂະໜານ ແມ່ນລ້ວນແຕ່ມາຈາກຄວາມຈຳເປັນທີ່ບໍ່ມີທາງເລືອກ ແລະ ກໍ່ເປັນຂໍ້ຫຍຸ້ງຍາກໃນທາງບັນຊີທີ່ຈະສະມາດອະທິບາຍເຖິງວ່າເປັນຫຍັງມູນຄ່າຊັບສິນຂອງບໍລິສັດທີ່ເປັນເງິນກີບ ຈຶ່ງນັບມື້ນັບຫຼຸດລົງ ຖ້າຫາກປຽບທຽບເປັນເງິນໂດລາໃນອັດຕາ

ຕາມທີ່ ທຫລ ກຳນົດ. ສຳລັບຜູ້ຂາຍເງິນໂດລາໃນຕະຫຼາດຄູ່ຂະໜານ ສ່ວນໃຫຍ່ແມ່ນເພື່ອຈຸດປະສົງໃນການສ້າງກຳໄລພຽງຢ່າງດຽວ ແລະ ຜູ້ຂາຍເງິນຕາກໍ່ຍັງສາມາດບັນທຶກບັນຊີໃນອັດຕາຕາມທີ່ ທຫລ ກຳນົດ ໂດຍຕັດເອົາຈຳນວນກຳໄລທີ່ໄດ້ຈາກການແລກປ່ຽນໃນອັດຕາທີ່ບໍ່ຖືກຕ້ອງຕາມກົດລະບຽບ ອອກຈາກການບັນທຶກບັນຊີຂອງບໍລິສັດ ເພື່ອຜົນປະໂຫຍດສ່ວນໂຕ.

ໃນຂະນະດຽວກັນການປະຕິບັດລະບຽບ ຫຼື ບົດລົງໂທດ ກໍ່ມີໜ້ອຍ ເນື່ອງຈາກ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ 55/ສພຊ ລົງວັນທີ 22 ທັນວາ 2014 ; ຂໍ້ຕົກລົງວ່າດ້ວຍທຸລະກິດແລກປ່ຽນເງິນຕາ ເລກທີ 393/ທຫລ, ລົງວັນທີ 2 ກໍລະກົດ 2020 ແລະ ຂໍ້ຕົກລົງ ເລກທີ 801/ທຫລ ກ່ຽວກັບການກຳນົດອັດຕາແລກປ່ຽນອ້າງອີງ ລະຫວ່າງເງິນກີບກັບເງິນໂດລາສະຫະລັດ ແລະການກຳນົດອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ, ລົງວັນທີ 5 ຕຸລາ 2015 ຍັງບໍ່ຖືກຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ໃນຂະນະດຽວກັນ ຕະຫຼາດຄູ່ຂະໜານກໍ່ໄດ້ຖືກຮັບຮູ້ວ່າມີຕົວຕົນແທ້ຈິງ ເນື່ອງຈາກໃນເວບໄຊທ໌ຂອງ ທຫລ ເອງ ກໍ່ມີການລາຍງານໃຫ້ເຫັນອັດຕາແລກປ່ຽນຂອງຕະຫຼາດຄູ່ຂະໜານ (https://www.bol.gov.la/exchang_rate_all). ພ້ອມດຽວກັນນີ້ ໃບເກັບເງິນຂອງຫຼາຍບໍລິສັດ ໃນ ສປປ ລາວ ກໍ່ມີການລະບຸລາຄາ ທີ່ເປັນທັງກີບ ແລະ ໂດລາໃຫ້ພ້ອມ ເຊິ່ງຫຼາຍຄັ້ງກໍ່ຢູ່ ໃນອັດຕາທີ່ຢູ່ນອກເໜືອກອບທີ່ ທຫລ ກຳນົດ. ສັງເກດວ່າ ສິ່ງເຫຼົ່ານີ້ແມ່ນເກີດຂຶ້ນຢ່າງເປັນປະຈຳ ແລະ ເປັນປົກກະຕິ ໃນ ສປປ ລາວ.

**ຜົນກະທົບຕໍ່ເສດຖະກິດຂອງ ສປປ ລາວ:** ແນ່ນອນວ່າ ການມີຕົວຕົນຂອງຕະຫຼາດຄູ່ຂະໜານ ເຮັດໃຫ້ ສປປ ລາວ ບໍ່ສາມາດຄຸ້ມຄອງນະໂຍບາຍທາງດ້ານເງິນຕາໄດ້. ການເກີດຂຶ້ນຂອງຕະຫຼາດດັ່ງກ່າວ ໄດ້ຫຼຸດບົດບາດຂອງ ທຫລ ເປັນພຽງຜູ້ອອກກົດລະບຽບເທົ່ານັ້ນ ເນື່ອງຈາກ ທຫລ ອາດບໍ່ສາມາດຄວບຄຸມ ແລະ ຄຸ້ມຄອງໃຫ້ການໄຫຼຂອງເງິນຕາເຂົ້າມາໃນປະເທດທີ່ມີຈຳກັດນີ້ ຖືກໄປໝູນໃຊ້ໃນຂະແໜງຫຼື ວຽກງານທີ່ເປັນບູລິມະສິຢ່າງແທ້ຈິງ ເຊັ່ນ ການຊຳລະການນຳເຂົ້າທີ່ຈຳເປັນ ຫຼື ການຊຳລະໜີ້ສິນ, ເນື່ອງຈາກການໄຫຼເຂົ້າມາຂອງເງິນໂດລາສ່ວນໃຫຍ່ແມ່ນຜ່ານຊ່ອງທາງຕະຫຼາດຄູ່ຂະໜານ. ພວກເຮົາເຂົ້າໃຈວ່າ ທຫລ ເອງກໍ່ເລັງເຫັນບັນຫານີ້ ຈຶ່ງໄດ້ມີຂໍ້ຍົກເວັ້ນໃຫ້ບາງວິສາຫະກິດຂະໜາດໃຫຍ່ ຫຼື ວິສາຫະກິດລັດລົງທຶນ ສາມາດມີການຊຳລະສະສາງພາຍໃນປະເທດເປັນເງິນໂດລາ ຫຼື ຖືຄອງເງິນທຶນເປັນເງິນໂດລາໄດ້. ຢ່າງໃດກໍ່ຕາມ ຂໍ້ຍົກເວັ້ນດັ່ງກ່າວ ຍິ່ງເຮັດໃຫ້ການສະໜອງເງິນໂດລາພາຍໃນປະເທດຫຼຸດລົງ ເນື່ອງຈາກວ່າ ທຸລະກຳທີ່ໃຊ້ເງິນຕາຈາກບັນດາບໍລິສັດດັ່ງກ່າວດັ່ງກ່າວບໍ່ໄດ້ເກີດຂຶ້ນພາຍໃນປະເທດ ແລະ ມີພຽງບາງສ່ວນເທົ່ານັ້ນທີ່ຖືກແລກປ່ຽນມາເປັນເງິນກີບ ເຊິ່ງໃຫ້ຄວາມສ່ຽງຕໍ່ການສະໜອງເງິນຕາຍິ່ງເພີ່ມຂຶ້ນໃນຕະຫຼາດແລກປ່ຽນໃນລະບົບທີ່ຖືກຕ້ອງ.

**ຜົນກະທົບຕໍ່ການລົງທຶນຂອງຕ່າງປະເທດ ໃນ ສປປ ລາວ** ໜ່ວຍງານປຶກສາຫາລືຂະແໜງການບໍລິການທາງດ້ານການເງິນ ສັງເກດເຫັນວ່າ ຕະຫຼາດຄູ່ຂະໜານເຮັດໃຫ້ເກີດມີຜູ້ໄດ້ປຽບ ແລະ ເສຍປຽບ ໃນການແຂ່ງຂັນ, ເຊິ່ງຜູ້ໄດ້ປຽບແມ່ນ ບັນດາຮ້ານແລກປ່ຽນ ແລະ ທະນາຄານ ທີ່ບໍ່ປະຕິບັດຕາມກົດລະບຽບກ່ຽວກັບການແລກປ່ຽນຊື້-ຂາຍເງິນຕາ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີລາຍຮັບເປັນສະກຸນເງິນໂດລາ ແລະ ສາມາດ ແລກປ່ຽນ ໂດລາ-ກີບໄດ້ທີ່ຕະຫຼາດຄູ່ຂະໜານ ແລະ ບັນດາບຸກຄົນ ຫຼື ນິຕິບຸກຄົນທີ່ມີລາຍຮັບເປັນເງິນໂດລາ ແລະ ຂາຍໂດລາໃນຕະຫຼາດຄູ່

ຂະໜານໃນອັດຕາທີ່ສູງ. ໃນຂະນະດຽວກັນ ຕະຫຼາດຄູ່ຂະໜານ ກໍ່ໄດ້ສ້າງຄວາມເສຍຫາຍໃຫ້ຫຼາຍພາກສ່ວນບໍ່ວ່າຈະເປັນບຸກຄົນ, ບັນດາບໍລິສັດ, ລວມທັງ ລັດຖະບານ ແຫ່ງ ສປປ ລາວ. ຈາກຜົນກະທົບທີ່ເກີດຂຶ້ນ ສາມາດເຫັນໄດ້ວ່າ ຕະຫຼາດຄູ່ຂະໜານ ຈະເຮັດໃຫ້ການລົງທຶນຂອງຕ່າງປະເທດທີ່ມີຄຸນນະພາບ ແລະ ການຄວາມອາດສາມາດຂອງການແຂ່ງຂັນຂອງທຸລະກິດຫຼຸດລົງ ເນື່ອງຈາກ ບັນດາການລົງທຶນຂອງຕ່າງປະເທດທີ່ມີຄຸນນະພາບຈະປະຕິບັດຕາມກົດລະບຽບ ແລະ ກົດໝາຍຂອງ ສປປ ລາວ ໂດຍບໍ່ນຳໃຊ້ຕະຫຼາດແລກປ່ຽນຄູ່ຂະໜານ ເຊິ່ງເຮັດໃຫ້ພວກເຂົາມີຄັງເງິນກີບທີ່ສະສົມຂຶ້ນເລື້ອຍໆ ແຕ່ຄັງເງິນກີບດັ່ງກ່າວ ແມ່ນຈະຫຼຸດມູນຄ່າລົງເລື້ອຍໆປະມານປີລະ 5%. ບັນດາບໍລິສັດເຫຼົ່ານີ້ ຈະບໍ່ສາມາດມີເງິນໂດລາພຽງພໍເພື່ອຊື້ສິນຄ້ານຳເຂົ້າ, ຈ່າຍໜີ້ສິນທີ່ເປັນເງິນຕາ ແລະ ສົ່ງກຳໄລທີ່ໄດ້ຈາກການລົງທຶນທີ່ເປັນເງິນກີບ ໄປໃຫ້ບໍລິສັດແມ່ທີ່ຢູ່ຕ່າງປະເທດໄດ້.

**ຄວາມຄືບໜ້າຫຼັງກອງປະຊຸມຂອງໜ່ວຍງານປຶກສາຫາລືຂະແໜງການບໍລິການທາງດ້ານການເງິນ**

ທຫລ ໄດ້ມີການສົ່ງໜັງສືແຈ້ງຕອບ ມາຫາສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວກ່ຽວກັບຂໍ້ສັງເກດທີ່ກ່າວມາ ຂອງໜ່ວຍງານປຶກສາຫາລືຂະແໜງການບໍລິການທາງດ້ານການເງິນ. ໜັງສືແຈ້ງຕອບດັ່ງກ່າວ ໄດ້ລະບຸເຖິງມາດຕະການ ທີ່ ທຫລ ດຳເນີນ ໃນການຕິດຕາມການຈັດຕັ້ງປະຕິບັດກົດລະບຽບດ້ານເງິນຕາ, ເຊິ່ງລວມມີທັງການ ຕິດຕາມແລະ ກວດກາຄືນ ບັນດາສະຖາບັນແລກປ່ຽນເງິນຕາຕ່າງໆ ທັງທີ່ຖືກກົດໝາຍ ແລະ ບໍ່ຖືກກົດໝາຍ. ຢ່າງໃດກໍ່ຕາມ ຈາກກອງປະຊຸມຂອງໜ່ວຍງານປຶກສາຫາລືໃນເດືອນ ຕຸລາ 2020 ມາຮອດປະຈຸບັນ ພວກເຮົາກໍ່ສັງເກດເຫັນວ່າ ອັດຕາແລກປ່ຽນຢູ່ຕະຫຼາດຄູ່ຂະໜານ ຍິ່ງແຕກໂຕນຈາກອັດຕາແລກປ່ຽນໃນກອບທີ່ ທຫລ ກຳນົດ. ເນື່ອງຈາກຄວາມຊັບຊ້ອນຂອງຕະຫຼາດຄູ່ຂະໜານ, ອາດມີຄວາມເປັນໄປໄດ້ຍາກທີ່ຈະຄົ້ນຫາແຫຼ່ງທີ່ມາຂອງເງິນຕາທັງໝົດທີ່ສະໜອງ ລວມທັງອັດຕາແລກປ່ຽນ ໃນຕະຫຼາດດັ່ງກ່າວ ເພາະບາງທຸລະກຳກໍ່ມາໃນຮູບການການຊຳລະການຊື້ຂາຍສິນຄ້າ ແລະ ການບໍລິການ ຜ່ານບັນຊີທະນາຄານທັງໃນປະເທດ ແລະ ຢູ່ຕ່າງປະເທດ ແທນທີ່ຈະເປັນການແລກປ່ຽນເງິນໂດຍກົງ.

ໃນໜັງສືແຈ້ງຕອບຂອງ ທຫລ, ສະແດງໃຫ້ເຫັນວ່າ ທຫລ ກໍ່ມີຄວາມພະຍາຍາມທີ່ຈະປັບໃຫ້ຕະຫຼາດຄູ່ຂະໜານເຂົ້າມາສູ່ການບໍລິການແລກປ່ຽນເງິນຕາທີ່ຖືກຕ້ອງຕາມກົດໝາຍ. ສະນັ້ນ ພາຍໃນຕົ້ນເດືອນນີ້ເອງ, ທຫລໄດ້ມີການຮ່າງ ໂມເດວ ໃນການເຮັດໃຫ້ບັນດາຮ້ານແລກປ່ຽນເງິນຕາ ມາເປັນຕົວແທນແລກປ່ຽນເງິນຕາຂອງບັນດາທະນາຄານທຸລະກິດ (ນິຕິກຳ ເລກທີ 758, ລົງວັນທີ 12 ກໍລະກົດ 2021). ຖ້າຫາກວ່າ ແຈ້ງການດັ່ງກ່າວສາມາດເຮັດໃຫ້ສະຖາບັນແລກປ່ຽນເງິນຕາທີ່ປະຕິບັດບໍ່ຖືກຕ້ອງຫຼຸດລົງ ແລະ ຊ່ວຍໃຫ້ການແລກປ່ຽນເງິນຕາມີຄວາມໂປ່ງໃສ ກໍ່ຈະຊ່ວຍໃຫ້ບັນຫານີ້ມີຄວາມຄືບໜ້າໃນການແກ້ໄຂທີ່ດີ, ແຕ່ທັງນີ້ ທັງນັ້ນ ແມ່ນຂຶ້ນກັບຄວາມເຂັ້ມງວດຂອງການຈັດຕັ້ງປະຕິບັດ ແຈ້ງການດັ່ງກ່າວ. ການໄຫຼເຂົ້າ ແລະ ອອກ ຂອງເງິນຕາ ຜ່ານບັນຊີດຽວ ຈະເຮັດໃຫ້ ທຫລ ສາມາດກວດສອບໄດ້ວ່າມາຈາກສະຖາບັນໃດ, ເຊິ່ງຈະຊ່ວຍໃຫ້ອັດຕາແລກປ່ຽນກັບມາສູ່ກອບທີ່ ທຫລ ກຳນົດ. ຢ່າງໃດກໍ່ຕາມ ທຫລ ອາດຕ້ອງເພີ່ມຄວາມລະມັດລະວັງຕໍ່ກັບທຸລະກຳໃນຮູບແບບອື່ນໆ ເຊັ່ນການຊຳລະສິນຄ້າຕ່າງໆທີ່ອາດຈະຜ່ານ ຫຼື ບໍ່ຜ່ານລະບົບ ທີ່ເຮັດໃຫ້ອັດຕາແລກປ່ຽນໂດລາສະຫະລັດສູງກວ່າອັດຕາໃນກອບທີ່ ທຫລ ກຳນົດ ເຊິ່ງຈະເຮັດໃຫ້ເກີດການແຂ່ງຂັນທີ່ບໍ່ເປັນທຳ ລະຫວ່າງທະນາຄານດ້ວຍກັນ.

**ຂໍ້ສະເໜີວິທີແກ້ໄຂ:**

ສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ພິຈາລະນາ:

1. ເພີ່ມຜົນສັກສິດໃນການຈັດຕັ້ງປະຕິບັດຕາມກົດລະບຽບ ທີ່ຕິດພັນກັບການກຳນົດອັດຕາແລກປ່ຽນ ຂອງທະນາຄານທຸລະກິດ ແລະ ບັນດາຮ້ານແລກປ່ຽນ ໂດຍການຈັດຕັ້ງປະຕິບັດມາດຕະການລົງໂທດຕໍ່ບັນດາ ສະຖາບັນ ຫຼື ຮ້ານແລກປ່ຽນທີ່ບໍ່ປະຕິບັດຕາມກົດລະບຽບທີ່ ທຫລ ກຳນົດ.
    - ກວດສອບ ແລະ ລະບຸ ບັນດາຕະຫຼາດແລກປ່ຽນຄູ່ຂະໜານເຫຼົ່ານີ້ ໂດຍເບິ່ງຈາກທີ່ມາຂອງການສະໜອງເງິນໂດລາສະຫະລັດ ມາເປັນເງິນກີບ (ເຊັ່ນ ຈາກຜູ້ສົ່ງອອກ)
    - ເພີ່ມບົດລົງໂທດໃຫ້ກັບບໍລິສັດທີ່ ຂາຍສິນຄ້າ ຫຼື ການບໍລິການ ຕາມອັດຕາທີ່ຢູ່ນອກກອບທີ່ ທຫລ ກຳນົດ ໃນເວລາເຮັດໃບເກັບເງິນເປັນໂດລາ ແລະ ກີບ.
2. ເພີ່ມຄວາມຢືດຢຸ່ນເທື່ອລະໜ້ອຍ ໃນການການກຳນົດອັດຕາແລກປ່ຽນ ເພື່ອຄ່ອຍໆຫັນໄປນຳໃຊ້ ຮູບແບບອັດຕາແລກປ່ຽນລອຍຕົວ ຕາມກົນໄກຕະຫຼາດ (ເຊັ່ນດຽວກັບ ຕະຫຼາດແລກປ່ຽນເງິນບາດ (THB) ເປັນກີບ).
    - ອັດຕາແລກປ່ຽນອີງຕາມກົນໄກຕະຫຼາດ ຊ່ວຍສົ່ງເສີມໃຫ້ສາມາດມີ ການແລກປ່ຽນເງິນຕາລ່ວງໜ້າ ເຊິ່ງເປັນໜຶ່ງໃນເຄື່ອງມືໃນການຈຳກັດຄວາມສ່ຽງ ທີ່ຈະຊ່ວຍໃຫ້ບັນດາບໍລິສັດຕ່າງໆສາມາດບໍລິຫານຈັດການຄວາມສ່ຽງດ້ານອັດຕາແລກປ່ຽນຂອງຕົນ ພ້ອມທັງຊ່ວຍໃຫ້ມີການນຳໃຊ້ ການຊື້ຂາຍລະຫວ່າງທະນາຄານ (interbank market) ໃຫ້ຫຼາຍຂຶ້ນ ແລະ ສົ່ງເສີມໃຫ້ມີການແຂ່ງຂັນໃນຕະຫຼາດແລກປ່ຽນເງິນຕາ ຢ່າງເປັນທຳຫຼາຍຂຶ້ນ.
3. ສ້າງໃຫ້ມີສະພາບແວດລ້ອມການແຂ່ງຂັນທີ່ເປັນທຳ ເພື່ອໃຫ້ທຸລະກິດສາມາດແຂ່ງຂັນໃນດ້ານການໄຫຼວຽນຂອງເງິນຕາ: ເນື່ອງຈາກການຊອກຫາການສະໜອງເງິນໂດລາ ແມ່ນມີຄວາມຫຍຸ້ງຍາກເພີ່ມຂຶ້ນເລື້ອຍໆ, ສະເໜີໃຫ້ ທຫລ ພິຈາລະນາ ໃຫ້ເວລາແກ່ບັນດາບໍລິສັດລົງທຶນຕ່າງປະເທດທີ່ຢູ່ ສປປ ລາວ ສາມາດຖືຄອງ ແລະ ຮັກສາທຶນເປັນເງິນໂດລາໄດ້ ຫຼື ໃຫ້ສາມາດຊຳລະສະສາງເປັນເງິນໂດລາ ພາຍໃນປະເທດໄດ້ໃນໄລຍະນີ້ ແລ້ວຈິ່ງຄ່ອຍໆ ຫັນປ່ຽນມາເປັນການນຳໃຊ້ ຫຼື ຖືຄອງເງິນທຶນ ຫຼື ອອກສິນເຊື່ອເປັນເງິນກີບທັງໝົດ (ເຊິ່ງຄ້າຍຄືກັບການຈັດຕັ້ງປະຕິບັດຂອງປະເທດກຳປູເຈຍ). ຫຼື ອີກວິທີໜຶ່ງ ແມ່ນພິຈາລະນາ ຍົກເລີກ ຂໍ້ຍົກເວັ້ນທີ່ໃຫ້ກັບບາງບໍລິສັດໃນການຊຳລະສະສາງພາຍໃນປະເທດເປັນສະກຸນເງິນໂດລາ ຫຼື ຖືຄອງເງິນທຶນເປັນໂດລາ, ເພື່ອເຮັດໃຫ້ເກີດການແຂ່ງຂັນທີ່ເປັນທຳກັບທຸກຝ່າຍ. ຕົວຢ່າງ: ໃນເວລາທີ່ປະເທດຫວຽດນາມ ມີສະພາບຂາດແຄນເງິນຕາ ໃນ 10 ປີກ່ອນ ພວກເຂົາບັງຄັບໃຫ້ບໍລິສັດທີ່ສົ່ງອອກສິນຄ້າທຸກບໍລິສັດ ລວມທັງວິສາຫະກິດລັດລົງທຶນ ປ່ຽນເງິນຕາທີ່ໄດ້ຮັບຈາກການຂາຍ ມາເປັນສະກຸນເງິນທ້ອງຖິ່ນທັງໝົດ ແລ້ວຈິ່ງແລກປ່ຽນກັບເປັນເງິນຕາ ໃນເວລາທີ່ຕ້ອງມີການຊຳລະການນຳເຂົ້າ.
4. **ສ້າງແຮງຈູງໃຈໃນການຖືຄອງສະກຸນເງິນກີບ:** ອາດພິຈາລະນາຫຼຸດອັດຕາດອກເບ້ຍເງິນຝາກທີ່ເປັນສະກຸນເງິນຕ່າງປະເທດ ເຊິ່ງຈະເຮັດໃຫ້ບຸກຄົນ ແລະ ນິຕິບຸກຄົນຕ່າງໆ ຫັນມາຝາກເງິນເປັນສະກຸນເງິນກີບຫຼາຍຂຶ້ນ ເຊິ່ງວິທີການນີ້ ກໍ່ເປັນອີກວິທີການໜຶ່ງທີ່ຖືກໃຊ້ຢູ່ປະເທດຫວຽດນາມເຊັ່ນກັນ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ:**

1. ກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ
2. ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານ ແຫ່ງ ສປປ ລາວ
3. ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານ ແຫ່ງ ສປປ ລາວ
4. ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ

2. ຂະບວນການປັບປຸງການເກັບຮັກສາເອກະສານທາງການເງິນຈາກຮູບແບບເຈ້ຍສໍາມາເປັນຮູບແບບອີເລັກໂຕນິກເພື່ອຕິດຕາມທຸລະກໍາທາງການເງິນ (Dematerialization) ແລະ ການນໍາໃຊ້ວາລະດີຈີຕອລ (Digital Agenda)

ສະພາບບັນຫາ: ຜູ້ປະກອບການບໍລິການທາງດ້ານການເງິນ ບໍ່ວ່າຈະເປັນບັນດາທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ບໍລິສັດປະກັນໄພ ແລະ ບໍລິສັດເຊົ່າສິນເຊື່ອ ເຫັນວ່າ ໃນຂະບວນການປະກອບ ແລະ ອະນຸມັດ ເອກະສານທາງການຕ່າງໆ ໃນ ສປປ ລາວ ຍັງນໍາໃຊ້ຮູບແບບເຈ້ຍສໍຢ່າງຫຼວງຫຼາຍ. ໜັງສືສັນຍາເກືອບທັງໝົດທີ່ຖືກສ້າງຂຶ້ນໃນ ສປປ ລາວ ຈະຕ້ອງໄດ້ລົງລາຍເຊັນດ້ວຍໝຶກ, ແລະ ໃນການປະສານງານ ຫຼື ຂໍນັດພົບກັບຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ກໍ່ຕ້ອງໄດ້ຜ່ານການເຮັດເອກະສານໜັງສືສະເໜີແບບເຈ້ຍສໍ ແລ້ວໃຫ້ບຸກຄົນໄປນໍາສົ່ງໃຫ້ ເຊິ່ງຕ່າງຈາກຮູບແບບທີ່ປະຕິບັດໃນສາກົນກໍ່ຄືການນໍາໃຊ້ ອີເມວ ແລະ ແບບຟອມອີເລັກໂຕນິກເປັນຫຼັກ. ຜູ້ເຂົ້າຮ່ວມຍົກໃຫ້ເຫັນວ່າ ເຖິງວ່າເຈົ້າໜ້າຂອງພາກລັດ ຈະມີການເຂົ້າເຖິງລະບົບ ດີຈີຕອລ ຂ້ອນຂ້າງສູງໃນ ສປປ ລາວ, ແຕ່ການນໍາໃຊ້ຊ່ອງທາງ ດີຈີຕອລ ໃນການຮັບສົ່ງເອກະສານສ່ວນໃຫຍ່ ແມ່ນຜ່ານຊ່ອງທາງທີ່ບໍ່ເປັນທາງການ ແລະ ບໍ່ມີການຮັບຮອງຄວາມປອດໄພຂອງຂໍ້ມູນ ເຊັ່ນ ນໍາໃຊ້ ວອດສແອບ (Whatsapp), ເຟສບຸກ (Facebook), ຈີເມວ (Gmail), ແທນທີ່ຈະໃຊ້ຊ່ອງທາງລະບົບອີເລັກໂຕນິກທີ່ມີການຮັບຮອງຄວາມປອດໄພ ຕົວຢ່າງ ເຊັ່ນ ລະບົບຂໍ້ມູນປະຈໍາຕົວ ຮູບແບບດີຈີຕອລ ‘Singpass’ ຂອງປະເທດ ສິງກະໂປ, ຫຼື ຊ່ອງທາງອີເມວສະເພາະຂອງລັດຖະບານທີ່ມີການຮັບຮອງຄວາມປອດໄພຂອງຂໍ້ມູນ, ແລະ ການນໍາໃຊ້ ລາຍເຊັນດີຈີຕອລ ທີ່ຜູ້ປະກອບການທຸລະກິດ ເຫັນວ່າສາມາດອໍານວຍຄວາມສະດວກໄດ້ຫຼາຍ. ຜູ້ປະກອບການ ຈາກຂະແໜງທະນາຄານ ໄດ້ຍົກຕົວຢ່າງກໍລະນີທີ່ ທຫລ ອະນຸຍາດໃຫ້ທະນາຄານສົ່ງລາຍງານທາງດ້ານການເງິນຜ່ານລະບົບດີຈີຕອລ ໃນໄລຍະການແຜ່ລະບາດຂອງພະຍາດ COVID-19, ເຊິ່ງ ຊ່ອງທາງທີ່ນໍາໃຊ້ ແມ່ນການຮັບສົ່ງຂໍ້ມູນຜ່ານທາງ ຈີເມວ ຫຼື ‘gmail’. ຜູ້ປະກອບການເຫັນວ່າ ການຮັບສົ່ງຂໍ້ມູນໃນລັກສະນະດັ່ງກ່າວ ແມ່ນ ບໍ່ເໝາະສົມ ແລະ ບໍ່ໄດ້ມາດຕະຖານດ້ານຄວາມປອດໄພຂອງຂໍ້ມູນລູກຄ້າ ແລະ ບໍ່ແມ່ນມາດຕະຖານທີ່ສາກົນນໍາໃຊ້. ມີພຽງເຈົ້າໜ້າທີ່ບາງສ່ວນຂອງ ທຫລ ທີ່ມີ ທີ່ຢູ່ອີເມວທາງການຂອງລັດຖະບານ ແລະ ກໍ່ມີການນໍາໃຊ້ຈໍານວນໜ້ອຍເທົ່ານັ້ນ, ແລະ ສ່ວນໃຫຍ່ກໍ່ແມ່ນນໍາໃຊ້ ທີ່ຢູ່ ຈີເມວ ຫຼື ວອດສແອບ (Whatsapp) ໃນການຮັບສົ່ງຂໍ້ມູນ. ເນື່ອງຈາກ ຂໍ້ມູນລາຍຮັບທາງດ້ານການເງິນ ແມ່ນຖືກຈັດເປັນຂໍ້ມູນປະເພດຄວາມລັບຂັ້ນສູງ ເພາະສາມາດບົ່ງບອກຄວາມສາມາດດໍາເນີນງານຂອງທະນາຄານ ແລະ ຂໍ້ມູນສ່ວນໂຕຂອງລູກຄ້າ, ລວມໄປເຖິງຂໍ້ມູນການກູ້ຢືມທີ່ອາດມີຜົນກະທົບຕໍ່ການຕັດສິນໃຈຕ່າງໆ.

ບັນຫາການນໍາໃຊ້ ລາຍເຊັນອີເລັກໂຕນິກ: ໂດຍອີງຕາມກົດໝາຍວ່າດ້ວຍລາຍເຊັນອີເລັກໂຕນິກ ເລກທີ 59/ສພຊ, ລົງວັນທີ 12 ທັນວາ 2018 ໄດ້ລະບຸວ່າ ບຸກຄົນ ຫຼື ນິຕິບຸກຄົນທີ່ຕ້ອງການນໍາໃຊ້ ລາຍເຊັນອີເລັກໂຕນິກ ຈະຕ້ອງໄດ້ຂໍໃບຢັ້ງຢືນຈາກໜ່ວຍງານທີ່ຖືກແຕ່ງຕັ້ງໂດຍ ກະຊວງໄປສະນີ, ໂທລະຄົມ ແລະ ສື່ສານ. ຢ່າງໃດກໍ່ຕາມ ປະຈຸບັນແມ່ນຍັງບໍ່ທັນມີໜ່ວຍງານທີ່ເຮັດໜ້າທີ່ອອກໃບຢັ້ງຢືນດັ່ງກ່າວໄດ້ຢ່າງສົມບູນ ສະນັ້ນຈຶ່ງເຮັດໃຫ້ການນໍາໃຊ້ລາຍເຊັນອີເລັກໂຕນິກຍັງມີຂໍ້ຈໍາກັດ. ພ້ອມດຽວກັນ ໃບຢັ້ງຢືນ ຈາກໜ່ວຍງານຂອງກະຊວງໄປສະນີ, ໂທລະຄົມ ແລະ ສື່ສານກໍ່ບໍ່ໄດ້ຖືກຮັບຮູ້ຈາກສາກົນ, ແລະ ຄ່າທໍານຽມການຂໍໃບຢັ້ງຢືນກໍ່ສູງເກີນໄປ. ໂດຍລວມແລ້ວ ເຫັນວ່າ ການນໍາໃຊ້ ລາຍເຊັນອີເລັກໂຕນິກ ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ໃນ ສປປ ລາວ. ສະນັ້ນ ຈຶ່ງ

ກວ່າທີ່ໜ່ວຍງານອອກໃບຢັ້ງຢືນລາຍເຊັນອີເລັກໂຕນິກ ຈະຖືກສ້າງຕັ້ງຢ່າງສົມບູນ, ເຫັນວ່າ ການນຳໃຊ້ວິທີການຈັດຕັ້ງປະຕິບັດແບບສາກົນ ສຳລັບ ການບໍລິການຂອງລັດຜ່ານທາງລະບົບອີເລັກໂຕນິກ, ການຄ້າອີເລັກໂຕນິກ ແລະ ການຮັບສົ່ງຂໍ້ມູນລາຍງານຜ່ານທາງອີເລັກໂຕນິກລະຫວ່າງທະນາຄານ ແລະ ທຫລ ກໍ່ອາດຈະຍັງບໍ່ສາມາດປະຕິບັດໄດ້.

ຜູ້ປະກອບການໃນຂະແໜງການບໍລິການປະກັນໄພ ໄດ້ຍົກຕົວຢ່າງ ຂອງ ບັນຫາ ກ່ຽວກັບ ການຄ້າຜ່ານທາງອີເລັກໂຕນິກ ທີ່ປະຈຸບັນຖືກອະນຸມັດຢ່າງເປັນທາງການ ແຕ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ເນື່ອງຈາກຍັງຕ້ອງມີການຮັບສົ່ງເອກະສານແບບເຈ້ຍສໍ່ຢູ່. ຍົກຕົວຢ່າງ ບໍລິສັດປະກັນໄພ ສາມາດຂາຍປະກັນໄພ ແບບອອນລາຍ ແລະ ຜູ້ຊື້ປະກັນໄພກໍ່ສາມາດຊໍາລະແບບອອນລາຍໄດ້ ແຕ່ ທຫລ ຍັງຮຽກຮ້ອງໃຫ້ ມີການຈໍ້າກາໃສ່ໜັງສືສັນຍາປະກັນໄພໃນຮູບແບບເຈ້ຍ ເພື່ອ ສົ່ງໃຫ້ກັບ ທຫລ. ຜູ້ປະກອບການເຫັນວ່າ ຂອດດັ່ງກ່າວ ເປັນການກີດຂວາງຈຸດປະສົງຂອງການນຳໃຊ້ລະບົບຊື້ຂາຍຜ່ານທາງອີເລັກໂຕນິກ ຢ່າງຊັດເຈນ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ກະຊວງໄປສະນີ, ໂທລະຄົມ ແລະ ສື່ສານ (MOPT) ເລັ່ງປັບປຸງໃຫ້ມີໜ່ວຍງານທີ່ຮັບຜິດຊອບອອກໃບຢັ້ງຢືນລາຍເຊັນອີເລັກໂຕນິກ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍລາຍເຊັນອີເລັກໂຕນິກໄດ້ ບົນພື້ນຖານທີ່ອີງໃສ່ມາດຕະຖານທີ່ຈັດຕັ້ງປະຕິບັດຢູ່ສາກົນ ທັງໃນດ້ານຂັ້ນຕອນ ແລະ ຄ່າໃຊ້ຈ່າຍ; ພ້ອມທັງ ປັບປຸງຂັ້ນຕອນການຮັບຮອງລາຍເຊັນອີເລັກໂຕນິກ ໃຫ້ສະດວກຂຶ້ນ.
2. ສະເໜີໃຫ້ ທຫລ ນຳໃຊ້ ທີ່ຢູ່ອີເມວທີ່ເປັນທາງການໃນການຮັບສົ່ງຂໍ້ມູນລາຍງານໃນຮູບແບບອີເລັກໂຕນິກຈາກທະນາຄານທຸລະກິດ ເພື່ອປົກປ້ອງຂໍ້ມູນຂອງບັນດາລູກຄ້າຂອງທະນາຄານ.

**ຂະແໜງການກ່ຽວຂ້ອງຂອງພາກລັດ**

2. ກະຊວງໄປສະນີ, ໂທລະຄົມ ແລະ ສື່ສານ
3. ທະນາຄານ ແຫ່ງ ສປປ ລາວ

### 3. ການສົ່ງຄືນອາກອນມູນຄ່າເພີ່ມ ສຳລັບທຸລະກິດທີ່ຜະລິດສິນຄ້າເພື່ອສົ່ງອອກ

ສະພາບບັນຫາ: ຜ່ານການສະເໜີບັນຫາ ການສົ່ງຄືນເງິນອາກອນມູນຄ່າເພີ່ມຕໍ່ຜູ້ຜະລິດສິນຄ້າເພື່ອສົ່ງອອກໃນກົນໄກກອງປະຊຸມທຸລະກິດລາວຄັ້ງທີ 10 ແລະ 11 ຜ່ານມາ ເຫັນວ່າ ບັນຫານີ້ແມ່ນມີຄວາມຄືບໜ້າ ໃນການແກ້ໄຂເປັນຕົ້ນແມ່ນ ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບປັບປຸງ ເລກທີ 48/ສພຊ ລົງວັນທີ 20-06-2018 ໄດ້ລະບຸ (ມາດຕາ 17) ກຳນົດຊັດເຈນ ອັດຕາ 0% ສຳລັບການສົ່ງອອກສິນຄ້າໄປຕ່າງປະເທດ. ໝາຍຄວາມວ່າ ກໍລະນີໃດກໍ່ຕາມ ຖ້າສົ່ງອອກສິນຄ້າ ຈາກ ສປປ ລາວ ຈະຖືກຄິດໄລ່ອາກອນມູນຄ່າເພີ່ມ ອັດຕາ 0%. ໃນການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າ ຜູ້ປະກອບການຂະໜາດໃຫຍ່ບາງບໍລິສັດ ກໍ່ໄດ້ຮັບການສົ່ງຄືນອາກອນມູນຄ່າເພີ່ມແລ້ວບາງສ່ວນ.

ຢ່າງໃດກໍ່ຕາມ ການສົ່ງຄືນອາກອນມູນຄ່າເພີ່ມໃຫ້ຜູ້ຜະລິດສິນຄ້າເພື່ອສົ່ງອອກ ສຳລັບຫຼາຍບໍລິສັດ ກໍ່ຍັງຊັກຊ້າ ແລະ ບໍ່ຊັດເຈນ, ໂດຍສະເພາະແມ່ນສຳລັບຜູ້ປະກອບການ ໃນຮູບແບບ Cut Make Trim (CMT) ທີ່ເຫັນວ່າ ເງື່ອນໄຂທີ່ກົມສ່ວຍສາອາກອນວາງອອກເພື່ອໃຫ້ສາມາດຂໍຄືນເງິນອາກອນມູນຄ່າເພີ່ມ ຍັງບໍ່ມີຄວາມກະຈ່າງແຈ້ງ. ຜູ້ປະກອບການໃນຮູບແບບ CMT ຫຼາຍບໍລິສັດ ຖືກປະຕິເສດການຂໍຄືນເງິນອາກອນມູນຄ່າເພີ່ມດ້ວຍເຫດຜົນທີ່ວ່າ ການປະກອບເອກະສານຂໍຄືນເງິນບໍ່ຖືກຕ້ອງ ຫຼື ບໍລິສັດບັນທຶກບັນຊີ (ໂດຍສະເພາະແມ່ນການຮັບຮູ້ລາຍຮັບ) ບໍ່ຖືກຕ້ອງ. ເນື່ອງຈາກຜູ້ປະກອບການໃນຮູບແບບ CMT ເປັນພຽງຜູ້ສະໜອງການບໍລິການ (ເຊັ່ນບໍລິການຕັດຫຍິບ), ບໍ່ແມ່ນເຈົ້າຂອງວັດຖຸດິບ ແລະ ສິນຄ້າ, ສະນັ້ນໃນການບັນທຶກລາຍຮັບ ຈຶ່ງບັນທຶກເອົາສະເພາະຄ່າບໍລິການທີ່ຕົນໄດ້ຮັບ ເຊິ່ງກໍ່ຂັດກັບເງື່ອນໄຂທີ່ທາງຂະແໜງອາກອນໄດ້ວາງອອກ ກໍ່ຄືໃຫ້ບັນທຶກລາຍຮັບທີ່ເທົ່າກັບມູນຄ່າສິນຄ້າທີ່ສົ່ງອອກ. ບັນຫານີ້ນອກຈາກຈະບໍ່ເປັນການ ເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກ ແລະ ສົ່ງຜົນກະທົບໂດຍກົງ ຕໍ່ຕົ້ນທຶນການຜະລິດຂອງຜູ້ສົ່ງອອກ ແລ້ວ ຍັງບໍ່ເປັນການກະຕຸ້ນ ສົ່ງເສີມໃຫ້ມີການລົງທຶນເພີ່ມຂຶ້ນໃນຮູບແບບ CMT ອີກດ້ວຍ. ສະນັ້ນ ທາງພາກທຸລະກິດໂດຍສະເພາະແມ່ນຜູ້ປະກອບ ການຜະລິດເພື່ອສົ່ງອອກ ຈຶ່ງຂໍສະເໜີບັນຫານີ້ມາຍັງລັດຖະບານ ພິຈາລະນາແກ້ໄຂຢ່າງຮີບດ່ວນ ເພື່ອໃຫ້ຜູ້ປະກອບການສາມາດຂໍຄືນ ອມພ ໄດ້ຕາມທີ່ໄດ້ລະບຸໄວ້ຢ່າງຊັດເຈນໃນກົດໝາຍ.

ຕົວຢ່າງການຈັດຕັ້ງປະຕິບັດຂອງປະເທດໃກ້ຄຽງ:

1. **ໃນກົດໝາຍອາກອນຂອງປະເທດຫວຽດນາມ ລະບຸວ່າ**: ວັດຖຸອຸປະກອນ ນຳເຂົ້າເພື່ອມາຮັບໃຊ້ການຜະລິດ ຫຼື ປຸງແຕ່ງເພື່ອສົ່ງອອກ (ມີສັນຍາຊື້ຂາຍກັບຄູ່ຄ້າທີ່ຢູ່ຕ່າງປະເທດ) ຈະຖືວ່າຢູ່ໃນກໍລະນີຍົກເວັ້ນອາກອນ (ໝາຍຄວາມວ່າບໍ່ມີການເກັບ ອມພ), ແລະ ອັດຕາ ອມພ 0% ແມ່ນຖືກນຳໃຊ້ກັບ ສິນຄ້າ ແລະ ການບໍລິການສົ່ງອອກ ("exported goods and services")
2. **ໃນກົດໝາຍອາກອນມູນຄ່າເພີ່ມຂອງປະເທດກຳປູເຈຍ ລະບຸວ່າ**: ການສົ່ງອອກສິນຄ້າ ຈາກ ຣາຊະອານາຈັກກຳປູເຈຍ, ການສະໜອງການບໍລິການໃຫ້ກັບຜູ້ຊື້ການບໍລິການທີ່ຢູ່ນອກ ຣາຊະອານາຈັກກຳປູເຈຍ, ແລະ ສິນຄ້າ ແລະ ການບໍລິການ ທີ່ເຊື່ອມໂຍງກັບການສົ່ງອອກສິນຄ້າ ແມ່ນຖືກອັດຕາ ອມພ 0%.
3. **ໃນຂໍ້ 80/1 (2) ຂອງກົດໝາຍອາກອນມູນຄ່າເພີ່ມຂອງປະເທດໄທ ລະບຸວ່າ**: ການສະໜອງການບໍລິການທີ່ເກີດຂຶ້ນຢູ່ໃນປະເທດໄທ ແລະ ຖືກນຳໃຊ້ຢູ່ຕ່າງປະເທດ ແມ່ນນຳໃຊ້ອັດຕາ ອມພ 0%.
4. **ໃນຂໍ້ທີ 24 (3) ຂອງກົດໝາຍອາກອນມູນຄ່າເພີ່ມ ຂອງປະເທດ ບັງຄະລາເທດ ລະບຸວ່າ**: ການສະໜອງການບໍລິການສ້ອມແປງ, ບຳລຸງຮັກສາ, ອະນາໄມ, ປັບປຸງ, ປັບປ່ຽນຮູບແບບ ຫຼື ອື່ນໆທີ່ໃກ້ຄຽງ ແມ່ນໄດ້ຮັບອັດຕາ ອມພ 0% ຖ້າມີເງື່ອນໄຂ ຄື: 1. ຖ້າຫາກສິນຄ້າ ຖືກນຳເຂົ້າມາໃນປະເທດ ຊົ່ວຄາວ ພາຍໃຕ້ກົດລະບຽບພາສີຂອງບັງຄະລາເທດ, **ຫຼື** 2. ຖ້າຫາກສິນຄ້າ ຖືກນຳເຂົ້າມາໃນປະເທດ ຊົ່ວຄາວ ເພື່ອຮັບການສະ

ໜອງການບໍລິການ ແລະ ຫຼັງຈາກໄດ້ຮັບການສະໜອງການບໍລິການພາຍໃນປະເທດແລ້ວ ແມ່ນຖືກສົ່ງອອກຈາກບັງຄະລາເທດ (ໂດຍທີ່ບໍ່ໄດ້ມີການນຳໃຊ້ໃນປະເທດ ດ້ວຍຈຸດປະສົງໃດກໍ່ຕາມ).

ຜູ້ປະກອບການເຫັນວ່າ ກົດໝາຍ ອມພ ຂອງ ສປປ ລາວ ຍັງບໍ່ເປັນການເອື້ອອຳນວຍໃຫ້ແກ່ທຸລະກິດການສະໜອງການບໍລິການປຸງແຕ່ງ ຫຼື ການບໍລິການໃນຮູບແບບ CMT ເຖິງແມ່ນວ່າ ການບໍລິການໃນຮູບແບບດັ່ງກ່າວຈະກວມເອົາສ່ວນໃຫຍ່ຂອງອຸດສາຫະກຳປຸງແຕ່ງໃນ ສປປ ລາວກໍ່ຕາມ. ຜູ້ປະກອບການເຫັນວ່າ ການຈັດຕັ້ງປະຕິບັດ ກົດໝາຍ ອມພ ຕາມທີ່ຂະແໜງສ່ວຍສາອາກອນກຳນົດ ແມ່ນບໍ່ສົ່ງເສີມ ແລະ ດຶງດູດການລົງທຶນຂອງຕ່າງປະເທດເທົ່າທີ່ຄວນ ແລະ ອາດເຮັດໃຫ້ ສປປ ລາວ ເສຍໂອກາດໃຫ້ກັບບັນດາປະເທດອ້ອມຂ້າງ ທີ່ກົດໝາຍດ້ານສ່ວຍສາອາກອນ ເອື້ອອຳນວຍໃຫ້ແກ່ການລົງທຶນ, ແລະ ການສົ່ງອອກສິນຄ້າ ແລະ ການບໍລິການ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ ກົມສ່ວຍສາອາກອນສຳເລັດ ແລະ ປະກາດນຳໃຊ້ ຄຳແນະນຳຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ ສະບັບປັບປຸງ.
2. ສະເໜີໃຫ້ກົມບັນຊີ ອະທິບາຍວິທີການຮັບຮູ້ລາຍຮັບ ສຳລັບຜູ້ຜະລິດສົ່ງອອກແບບ CMT.
3. ສະເໜີໃຫ້ມີການ ຮີບຮ້ອນສົ່ງຄືນເງິນ ອມພ ຕາມລະບຽບ ອມພ, ຫຼື ຂໍໃຫ້ມີຄຳຕອບແລະເຫດຜົນກຳນົດເວລາທີ່ຊັດເຈນໃຫ້ກັບຜູ້ສົ່ງອອກ ທີ່ໄດ້ຍື່ນເອກະສານຂໍຄືນເງິນ ອມພ ຜ່ານມາ ແຕ່ ຍັງບໍ່ໄດ້ຮັບເງິນ ອມພ ຄືນວ່າເວລາໃດຈຶ່ງຈະສົ່ງຄືນໄດ້.

**ຂະແໜງການກ່ຽວຂ້ອງຂອງພາກລັດ**

1. ກົມສ່ວຍສາອາກອນ, ກະຊວງການເງິນ
2. ກົມບັນຊີ, ກະຊວງການເງິນ

**ຄວາມຄືບໜ້າຂອງການແກ້ໄຂ ລ່າສຸດ:**

- ອີງຕາມໜັງສືແຈ້ງຕອບຂອງກົມສ່ວຍສາອາກອນ ຫາ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ສະບັບເລກທີ 4015/ກສອ ລົງວັນທີ **18 ພະຈິກ 2020** ລະບຸວ່າ: ການເກັບອາກອນຈາກການດຳເນີນທຸລະກິດການຜະລິດເພື່ອສົ່ງອອກ (ໃນຮູບແບບ CMT) ອີງຕາມມາດຕາ 36 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ການຖືບັນຊີ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນທຸລະກິດໃນລະບົບ ອມພ ຕ້ອງຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ, ກໍ່ຄື ຕ້ອງມີເອກະສານລາຍງານການເງິນຂອງການດຳເນີນທຸລະກິດບົນພື້ນຖານເອກະສານຢັ້ງຢືນດ້ານລາຍຮັບທຸລະກິດ ແລະ ລາຍຈ່າຍທຸລະກິດທີ່ຄົບຖ້ວນ, ໝາຍຄວາມວ່າ ການບັນທຶກລາຍຮັບ ແລະ ລາຍຈ່າຍ ຕ້ອງບໍ່ໜ້ອຍ ຫຼື ຫຼາຍກວ່າຕົວຈິງມູນຄ່າການສົ່ງອອກ ຈຶ່ງຖືວ່າເປັນເງື່ອນໄຂທີ່ຖືບັນຊີຖືກຕ້ອງ. ດັ່ງນັ້ນ ຕໍ່ກັບການຜະລິດສິນຄ້າ ເພື່ອສົ່ງອອກໄປຕ່າງປະເທດ ທີ່ຜູ້ປະກອບການໄດ້ບັນທຶກລາຍຮັບພຽງແຕ່ຄ່າບໍລິການດ້ານແຮງງານ ໂດຍບໍ່ບັນທຶກຕາມມູນຄ່າສິນຄ້າສົ່ງອອກທັງໝົດ ເຂົ້າໃນເອກະສານລາຍງານການເງິນຂອງການດຳເນີນທຸລະກິດ ແມ່ນຖືວ່າບໍ່ຄົບເງື່ອນໄຂຂອງການສົ່ງຄືນເງິນອາກອນມູນຄ່າເພີ່ມ. ກໍລະນີການເຄື່ອນໄຫວທຸລະກິດ ມີລາຍຮັບພຽງແຕ່ຄ່າແຮງງານ ແມ່ນຖືວ່າເປັນກິດຈະການດ້ານການສະໜອງການບໍລິການ ແລະ ຖືກເສຍອາກອນມູນຄ່າເພີ່ມຕາມທີ່ກຳນົດໄວ້ໃນກົດໝາຍ ອມພ ແລະ ສາມາດປະຕິບັດຕາມສິດ ແລະ ເງື່ອນໄຂຂອງການຫັກ ອມພ ເບື້ອງສົ້ນເຂົ້າໄດ້ ຕາມທີ່ກຳນົດໄວ້ໃນມາດຕາທີ 21 ແລະ 23 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ.

- ອີງຕາມໜັງສືແຈ້ງຕອບຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 2113/ກສອ ລົງວັນທີ 10 ກໍລະກົດ 2020: ກະຊວງການເງິນ ພວມຢູ່ໃນຂັ້ນຕອນຂອງການຮ່າງຄຳແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ຄາດວ່າຈະສຳເລັດຮ່າງຂັ້ນພື້ນຖານ ໃນເດືອນ ຕຸລາ 2020. ຕໍ່ກັບຂໍ້ສະເໜີໃຫ້ກະຊວງການເງິນ ສົ່ງຄືນອາກອນມູນຄ່າເພີ່ມ ສຳລັບທຸລະກິດທີ່ຜະລິດສິນຄ້າເພື່ອສົ່ງອອກທີ່ໄດ້ຍື່ນເອກະສານຂໍຄືນອາກອນມູນຄ່າເພີ່ມ ຜ່ານມາແມ່ນຍັງບໍ່ມີຄວາມຄືບໜ້າເພີ່ມເຕີມ.
- ຜົນຈາກການປຶກສາຫາລື ລະດັບວິຊາການ ລະຫວ່າງຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ **ຄັ້ງວັນທີ 22 ຕຸລາ 2019**: ກົດໝາຍອາກອນມູນຄ່າເພີ່ມ ສະບັບປັບປຸງ ເລກທີ 48/ສພຊ ລົງວັນທີ 20-06-2018 ໄດ້ລະບຸ (ມາດຕາ 17) ກຳນົດອັດຕາ 0% ສຳລັບການສົ່ງອອກສິນຄ້າໄປຕ່າງປະເທດ. ໝາຍຄວາມວ່າກໍລະນີໃດກໍ່ຕາມ ຖ້າສົ່ງອອກສິນຄ້າ ຈາກ ສປປ ລາວ ຈະຖືກຄິດໄລ່ອາກອນມູນຄ່າເພີ່ມ ອັດຕາ 0%. ກົມສ່ວຍສາອາກອນ ສະເໜີໃຫ້ ທຸລະກິດທີ່ໄດ້ຍື່ນຂໍຄືນເງິນອາກອນມູນຄ່າເພີ່ມໃນໄລຍະຜ່ານມາ ແຕ່ຍັງບໍ່ໄດ້ຄືນໃຫ້ເຮັດໜັງສືຍື່ນຫາກົມສ່ວຍສາອາກອນເພີ່ມເຕີມ ເພື່ອຄົ້ນຄວ້າສົ່ງຄືນ ອາກອນມູນຄ່າເພີ່ມ ໃຫ້ຜູ້ປະກອບການ. ສຳລັບຜູ້ປະກອບການ ແບບ CMT (ເປັນຜູ້ໃຫ້ບໍລິການຜະລິດ, ບໍ່ແມ່ນເຈົ້າຂອງສິນຄ້າ), ກົມບັນຊີຢັ້ງຢືນວ່າ ໃນການນຳເຂົ້າວັດຖຸອຸປະກອນມາຜະລິດສິນຄ້າ ແລະ ການສົ່ງອອກສິນຄ້າ ຖ້າຫາກວ່າມີເອກະສານຢັ້ງຢືນໄດ້ວ່າຜູ້ຜະລິດ ບໍ່ແມ່ນເຈົ້າຂອງສິນຄ້າ ແຕ່ເປັນພຽງຜູ້ໃຫ້ບໍລິການຜະລິດ, ແມ່ນ ສາມາດຕິດຕາມວັດຖຸອຸປະກອນດັ່ງກ່າວ ຢູ່ນອກໃບສະຫຼຸບຊັບສິນບັດ, ໝາຍຄວາມວ່າຈະບໍ່ໄດ້ຈົດເຂົ້າບັນຊີຂອງຜູ້ປະກອບການ CMT. ກົມສ່ວຍສາອາກອນ, ກົມພາສີ, ກົມບັນຊີ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ຈະປຶກສາຫາລືກັນເພີ່ມເຕີມ ເພື່ອກຳນົດວິທີການທີ່ຊັດເຈນ ໃນການຕິດຕາມວັດຖຸອຸປະກອນທີ່ນຳເຂົ້າ ແລະ ສິນຄ້າທີ່ສົ່ງອອກຂອງຜູ້ປະກອບການແບບ CMT.ນອກຈາກນີ້ ກົມສ່ວຍສາອາກອນ ຈະໄດ້ລະບຸລະອຽດ ໃສ່ໃນຄຳແນະນຳຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ສະບັບປັບປຸງ.

## 4. ຄວາມໂປ່ງໃສ, ຄວາມສະດວກ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດກົດໝາຍ ແລະ ກົດລະບຽບ ດ້ານສ່ວຍສາອາກອນ

ຜູ້ປະກອບການໃນຂະແໜງການບໍລິການທາງດ້ານການເງິນ ເຫັນວ່າ ອຳນາດໃນການຕັດສິນໃຈຂອງເຈົ້າໜ້າທີ່ພາຍໃນກົມສ່ວຍສາອາກອນຍັງຖືກຈຳກັດ ແລະ ຄວາມສາມາດຕັດສິນໃຈຂອງເຈົ້າໜ້າທີ່ລະດັບສູງກໍ່ຍັງມີໜ້ອຍ. ຜູ້ປະກອບການຫຼາຍບໍລິສັດ ຍົກໃຫ້ເຫັນວ່າ ສ່ວນໃຫຍ່ ເມື່ອສົ່ງຄຳຖາມຫາຂະແໜງສ່ວຍສາອາກອນ ຈະບໍ່ໄດ້ຮັບຄຳຕອບທີ່ເປັນລາຍລັກອັກສອນ ຫຼື ອ້າງອີງໃສ່ເນື້ອໃນຂອງກົດໝາຍ ແຕ່ບໍ່ແມ່ນການຕອບຄຳຖາມ. ບາງກໍລະນີທີ່ມີລັກສະນະຊັບຊ້ອນ ຜູ້ປະກອບການກໍ່ຕ້ອງການການອະທິບາຍທີ່ຊັດເຈນ ເຊັ່ນ ອາກອນໄດ້ຮັບຈາກການຂາຍຊັບສິນ (capital gains tax) ຫຼື ພັນທະອາກອນໃນເວລາ ມີການໂອນໜີ້ໃນໄລຍະການປັບປຸງໂຄງສ້າງຂອງນິຕິບຸກຄົນ, ໃນລະຫວ່າງມີການປັບປ່ຽນໂຄງສ້າງ ຫຼື ການຈັດຕັ້ງປະຕິບັດກົດໝາຍອາກອນສະບັບປັບປຸງໃໝ່ຍ້ອນຫຼັງ ຫຼື ໃນການປ່ຽນແປງສຳປະທານສຳລັບຕ່າງປະເທດ. ພ້ອມດຽວກັນນີ້ ຜູ້ເຂົ້າຮ່ວມກໍ່ຍົກໃຫ້ເຫັນຕື່ມວ່າໃນເວລາຕິດຕໍ່ສອບຖາມໜ່ວຍງານສ່ວຍສາອາກອນຜ່ານທາງອີເມວ ສ່ວນໃຫຍ່ຈະໄດ້ຮັບຄຳຕອບຈາກເຈົ້າໜ້າທີ່ສ່ວຍສາອາກອນ ຜ່ານທາງໂທລະສັບ ຫຼື ວອດສແອບ (whatsapp) ແທນ, ໝາຍຄວາມວ່າ ຄຳຕອບທີ່ໄດ້ຮັບແມ່ນລັກສະນະຄຳເວົ້າຈາກເຈົ້າໜ້າທີ່ ເຊິ່ງອາດບໍ່ສາມາດໃຊ້ອ້າງອີງໄດ້ພາຍຫຼັງ. ການຕີຄວາມໝາຍກົດໝາຍສ່ວຍສາອາກອນ ເປັນລັກສະນະຄຳເວົ້າ ຫຼາຍຄັ້ງທີ່ແຕກຕ່າງກັນ ເຮັດໃຫ້ຜູ້ປະກອບການເສຍຜົນປະໂຫຍດ ແລະ ມີຜົນກະທົບຕໍ່ສະພາບແວດລ້ອມການແຂ່ງຂັນ ແລະ ການດຶງດູດນັກລົງທຶນຈາກຕ່າງປະເທດ.

ອີກບັນຫາໜຶ່ງ ແມ່ນໄລຍະເວລາທີ່ເຈົ້າໜ້າທີ່ສ່ວຍສາອາກອນ ໃຊ້ໃນການກວດສອບອາກອນທີ່ຊັກຊ້າແກ່ຍາວຫຼາຍປີ ເຮັດໃຫ້ວິສາຫະກິດ ດຳເນີນທຸລະກິດຢູ່ໃນສະພາບທີ່ບໍ່ແນ່ນອນ. ຜູ້ປະກອບການໄດ້ຍົກຕົວຢ່າງໃຫ້ເຫັນວ່າ ການກວດສອບອາກອນຂອງວິສາຫາກິດຫຼາຍບໍລິສັດຖືກແກ່ຍາວແຕ່ປີ 2015 ມາຮອດປະຈຸບັນກໍ່ຍັງບໍ່ສຳເລັດ ເຖິງວ່າຈະໄດ້ທວງຖາມໄປຫາຫ້ອງການສ່ວຍສາອາກອນຫຼາຍຄັ້ງແລ້ວກໍ່ຕາມ. ສະນັ້ນ ມີຫຼາຍບໍລິສັດ ທີ່ສະພາບໜີ້ສິນດ້ານອາກອນບໍ່ແນ່ນອນເປັນໄລຍະເວລາຫຼາຍປີ.

ພ້ອມກັນນີ້ ຜູ້ປະກອບການກໍ່ ເຫັນວ່າ ການຈັດຕັ້ງປະຕິບັດກົດໝາຍອາກອນ ມີຂໍ້ຫຍຸ້ງຍາກ ຫຼາຍຢ່າງ, ເຊິ່ງຕົວຢ່າງດັ່ງລຸ່ມນີ້:

- ຜູ້ປະກອບການຈາກຂະແໜງປະກັນໄພ ໄດ້ຍົກຕົວຢ່າງ ການເກັບອາກອນຊໍ້າຊ້ອນ ຄື ໃນເວລາຂາຍປະກັນໄພໃຫ້ກັບລູກຄ້າ ບໍລິສັດປະກັນໄພ ຕ້ອງໄດ້ເກັບ ແລະ ຊຳລະ ອາກອນມູນຄ່າເພີ່ມ(ອມພ) ເຕັມຈຳນວນຄ່າປະກັນໄພ, ແລະ ພວກເຂົາກໍ່ຍັງຕ້ອງໄດ້ຈ່າຍ ອມພ ເຕັມຈຳນວນໃນເວລາຊື້ປະກັນໄພຕໍ່ ສຳລັບສັນຍາປະກັນໄພດຽວກັນນັ້ນ. ການເກັບອາກອນຊໍ້າຊ້ອນໃນລັກສະນະນີ້ ເຮັດໃຫ້ບໍລິສັດເກີດມີຄ່າໃຊ້ຈ່າຍດ້ານອາກອນຈຳນວນຫຼາຍ ແລະ ເຮັດໃຫ້ບໍລິສັດຕ້ອງຮັກສາເງິນທຶນໝູນວຽນຈຳນວນຫຼາຍ, ເນື່ອງຈາກ 67% ຂອງປະກັນໄພທັງໝົດທີ່ຂາຍໃນ ສປປ ລາວ ແມ່ນຖືກປະກັນຕໍ່. ບັນດາບໍລິສັດປະກັນໄພເຫຼົ່ານີ້ ຈຶ່ງຕ້ອງໄດ້ເຮັດໜັງສືສະເໜີຂໍຄືນ ອມພ ກັບຂະແໜງສ່ວຍສາອາກອນສຳລັບ ອມພ ທີ່ເກັບຊໍ້າຊ້ອນ ເຊິ່ງກໍ່ເປັນຂອດຂັ້ນທີ່ຜູ້ປະກອບການເຫັນວ່າຫຍຸ້ງຍາກ. ຜູ້ປະກອບການຍົກໃຫ້ເຫັນວ່າ ເຖິງແມ່ນວ່າຈະມີສົນທິສັນຍາກັບບາງປະເທດ ເຊັ່ນ ປະເທດໄທ ກ່ຽວກັບການເກັບ ອມພ ຊໍ້າຊ້ອນ ແຕ່ບໍລິສັດປະກັນໄພກໍ່ບໍ່ສາມາດຂໍໃຊ້ມາດຕະການດັ່ງກ່າວໄດ້

ຖ້າຫາກບໍ່ມີການຂຽນສະເໜີຂໍການຍິນຍອມຈາກກົມສ່ວຍສາອາກອນ ກ່ອນ ເຊິ່ງກໍ່ເຮັດໃຫ້ເກີດຄວາມລ່າຊ້າ ແລະ ເພີ່ມພາລະໃຫ້ຜູ້ປະກອບການຕື່ມ.

- ບໍລິສັດເຊົ່າສິນເຊື່ອ ໄດ້ຍົກຕົວຢ່າງ ທີ່ເຄີຍໄດ້ຈ່າຍອາກອນໃຫ້ກັບເຈົ້າໜ້າທີ່ສ່ວຍສາອາກອນຂັ້ນເມືອງ ແຕ່ ເຈົ້າໜ້າທີ່ບໍ່ມີການບັນທຶກຂໍ້ມູນການຊໍາລະດັ່ງກ່າວໄວ້. ສະນັ້ນ ໃນເວລາທີ່ເຈົ້າໜ້າທີ່ສ່ວຍສາອາກອນຂັ້ນແຂວງ ລົງເກັບອາກອນກັບບໍລິສັດດັ່ງກ່າວ ບໍລິສັດບໍ່ສາມາດເອົາຂໍ້ມູນການຈ່າຍອາກອນທີ່ເຄີຍໄດ້ຈ່າຍກັບເຈົ້າໜ້າທີ່ອາກອນຂັ້ນເມືອງໄດ້ ຈຶ່ງເຮັດໃຫ້ບໍລິສັດຕ້ອງໄດ້ຈ່າຍອາກອນດັ່ງກ່າວຊໍ້າຄືນໃຫ້ເຈົ້າໜ້າທີ່ອາກອນຂັ້ນແຂວງ. ເຖິງບໍລິສັດຈະຮັບຮູ້ວ່າ ສາມາດນໍາໃຊ້ໃບບິນຈ່າຍອາກອນ ຫຼື ເອກະສານອື່ນ ເປັນຫຼັກຖານການຊໍາລະໄດ້ ແຕ່ບໍລິສັດກໍ່ຍັງມີຄໍາຖາມທີ່ວ່າ ເປັນຫຍັງ ຈຶ່ງມີເຈົ້າໜ້າທີ່ອາກອນ ທັງຂັ້ນເມືອງ ແລະ ຂັ້ນແຂວງ ລົງເກັບອາກອນລາຍການດຽວກັນນັ້ນ. ສະນັ້ນ ຜູ້ປະກອບການ ຈຶ່ງເຫັນວ່າ ຍັງບໍ່ມີຄວາມຊັດເຈນເທື່ອວ່າ ເຈົ້າໜ້າທີ່ອາກອນຂັ້ນໃດ ເປັນຜູ້ຮັບຜິດຊອບເກັບອາກອນແຕ່ລະປະເພດ ແລະ ຖ້າຫາກ ມີການເກັບອາກອນເຂົ້າສູນກາງ ກໍ່ຄວນຈະມີຖານຂໍ້ມູນບັນທຶກການຊໍາລະອາກອນຢູ່ຂັ້ນສູນກາງ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ຂະແໜງສ່ວຍສາອາກອນ ພິຈາລະນາ ທົດລອງນໍາໃຊ້ລະບົບການວາງແຜນອາກອນລ່ວງໜ້າ ຫຼື Advance Tax Ruling (**ATR**) ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍດ້ານອາກອນ ມີຄວາມຊັດເຈນ ແລະ ຄວາມເປັນເອກະພາບ ລະຫວ່າງ ເຈົ້າໜ້າທີ່ອາກອນ ແລະ ຜູ້ຊໍາລະອາກອນ. ລະບົບການວາງແຜນອາກອນລ່ວງໜ້າ ຈະຊ່ວຍໃຫ້ຜູ້ປະກອບການສາມາດຮັບຮູ້ຄໍາວິນິດໄສ (Ruling) ເງື່ອນໄຂ ແລະ ຂໍ້ກໍານົດໃນການຄິດໄລ່ອາກອນ ໄດ້ລ່ວງໜ້າ ແລະ ສະເພາະເຈາະຈົງສໍາລັບບໍລິສັດໃຜລາວ ສໍາລັບຊ່ວງໄລຍະເວລາໃດໜຶ່ງ, ແລະ ຈະເຮັດໃຫ້ຫຼຸດຜ່ອນການຈ່າຍເກີນ ຫຼື ການຂໍຄືນອາກອນ ໃນກໍລະນີທີ່ການຕີຄວາມໝາຍອາກອນບໍ່ເປັນເອກະພາບກັນ. ໃນຂັ້ນຕອນ ATR, ບໍລິສັດຈະໄດ້ສົ່ງຄໍາຮ້ອງຫາຫ້ອງການທີ່ກ່ຽວຂ້ອງ ແລະ ຈະມີການຕອບຮັບຈາກຫ້ອງການດັ່ງກ່າວ ຫຼັງຈາກນັ້ນ. ບາງປະເທດ ກໍ່ນໍາໃຊ້ແບບຟອມອີເລັກໂຕນິກ ໃນການລົງທະບຽນຄໍາຮ້ອງ ແລະ ບັນທຶກຄໍາວິນິດໄສ ແຕ່ຂໍ້ມູນຄໍາວິນິດໄສຕໍ່ບໍລິສັດໃດໜຶ່ງ ຈະມີຜົນບັງຄັບໃຊ້ກັບບໍລິສັດດັ່ງກ່າວເທົ່ານັ້ນ. ລະບົບ ATR ຄວນຈະຖືກຄຸ້ມຄອງໂດຍ ຜູ້ຊ່ຽວຊານທີ່ຢູ່ຂັ້ນສູນກາງ ເຊິ່ງອາດປະກອບດ້ວຍ ຜູ້ຊ່ຽວຊານຈາກກົມສ່ວຍສາອາກອນ, ກະຊວງການເງິນ, ຈາກກະຊວງອຸດສາຫະກໍາ ແລະ ການຄ້າ, ແລະ ກະຊວງຍຸດຕິທໍາ.
    - ຕົວຢ່າງ: ບໍລິສັດປະກັນໄພ ສາມາດຂໍການຄໍານວນອາກອນໄດ້ລ່ວງໜ້າ ເຊິ່ງຈະຊ່ວຍໃຫ້ພວກເຂົາໄດ້ຈ່າຍ ອມພ ຄັ້ງດຽວ ສໍາລັບໄລຍະເວລາໃດໜຶ່ງ ໂດຍທີ່ບໍ່ຕ້ອງຈ່າຍຊໍ້າຊ້ອນແລ້ວຂໍຄືນພາຍຫຼັງ.
    - ຕົວຢ່າງ: ໃນກໍລະນີ ມີການປະເມີນການປັບປຸງໂຄງສ້າງກິດຈະການ ຫຼື ມີການລົງທຶນໃນ ສປປ ລາວ, ບໍລິສັດ ຈະສາມາດຂໍຄໍາວິນິດໄສທີ່ແນ່ນອນ ຕໍ່ກັບ ເງື່ອນໄຂ, ອັດຕາອາກອນ ແລະ ວິທີການເກັບອາກອນ ທີ່ພວກເຂົາຕ້ອງໄດ້ຊໍາລະ ສໍາລັບໄລຍະເວລາໃດໜຶ່ງ.
2. ສະເໜີໃຫ້ ຂະແໜງສ່ວຍສາອາກອນ ພິຈາລະນາປັບປຸງການບໍລິການໃຫ້ດີຂຶ້ນ, ມີການສະໜັບສະໜູນໃຫ້ເຈົ້າໜ້າທີ່ ມີອໍານາດໃນການຕັດສິນໃຈຢ່າງເທົ່າທຽມກັນ ພາຍໃຕ້ກອບການຄຸ້ມຄອງຂອງຕົນ

- ສະເໜີໃຫ້ ຫ້ອງການສ່ວຍສາອາກອນໃນ ມີການປັບປຸງການບໍລິການຕາມການແນະນໍາຂອງພາກທຸລະກິດ ແລະ ຜູ້ຊົມໃຊ້ ເຊັ່ນດຽວກັນກັບທີ່ຈັດຕັ້ງປະຕິບັດຢູ່ຫຼາຍປະເທດ. ຕົວຢ່າງ: ສໍານັກງານຈັດເກັບອາກອນຂອງປະເທດ ອົດສະຕຣາລີ ຫຼື Australian Taxation Office (**ATO**) ຈະຮັບຟັງຄໍາແນະນໍາຂອງຊຸມຊົນໃນການປັບປຸງການບໍລິການຂອງຕົນໃຫ້ດີຂຶ້ນ ເຊິ່ງໄດ້ຊ່ວຍໃຫ້ສໍານັກງານດັ່ງກ່າວ ປ່ຽນມຸມມອງຂອງຕົນເອງຈາກ "ເຈົ້າໜ້າທີ່ເກັບອາກອນ" ມາເປັນ "ໜ່ວຍງານໃຫ້ບໍລິການຈັດການດ້ານອາກອນ" ເຊິ່ງສຽງຂອງຊຸມຊົນໄດ້ຮຽກຮ້ອງໃຫ້ ATO "ປັບປຸງພື້ນຖານ, ໃຫ້ຄວາມແນ່ນອນ, ປັບແຕ່ງການບໍລິການຕາມຄວາມຕ້ອງການຂອງຜູ້ຊົມໃຊ້ ແລະ ຊ່ວຍນໍາທາງລະບົບ" ເຊິ່ງກາຍມາເປັນຍຸດທະສາດຂອງການປັບປຸງ ATO ໃຫ້ດີຂຶ້ນເລື້ອຍໆ.

3. ເນື່ອງຈາກປະຈຸບັນ ການກວດສອບອາກອນຂອງບໍລິສັດ ຍັງມີກໍລະນີທີ່ຄົງຄ້າງຫຼວງຫຼາຍ, ລວມທັງກໍລະນີ ແຕ່ປີ 2015, ສະນັ້ນ ຈິ່ງຂໍສະເໜີໃຫ້ ຂະແໜງສ່ວຍສາອາກອນ ພິຈາລະນາ ນໍາໃຊ້ວິທີການດັ່ງລຸ່ມນີ້:
   - ຕົວຢ່າງ: ເລືອກເອົາຂະແໜງການທຸລະກິດໃດໜຶ່ງ ແລ້ວ ພະຍາຍາມກວດສອບອາກອນຂອງບັນດາບໍລິສັດໃນຂະແໜງການດັ່ງກ່າວ ສໍາລັບໄລຍະ ປີ 2015 ຫາ 2019 ໃຫ້ສໍາເລັດໃນຄັ້ງດຽວ ແລ້ວຈຶ່ງສືບຕໍ່ຂອງຂະແໜງການອື່ນ. ວິທີການນີ້ ຈະຊ່ວຍໃຫ້ການກວດສອບງ່າຍຂຶ້ນສໍາລັບເຈົ້າໜ້າທີ່ກວດສອບອາກອນ ເນື່ອງຈາກຜູ້ກວດສອບຈະມີຄວາມເຂົ້າໃຈຕໍ່ກັບຂະແໜງການນັ້ນໆ ແລະ ກໍ່ສາມາດປຽບທຽບການກວດສອບໃນລັກສະນະດຽວກັນ ສໍາລັບແຕ່ລະປີ ແລະ ແຕ່ລະບໍລິສັດໃນຂະແໜງທຸລະກິດດຽວກັນ, ແທນທີ່ຈະ ກວດສອບອາກອນປີ 2015 ຂອງທຸກໆບໍລິສັດ ໃນທຸກໆຂະແໜງການ ແລ້ວຈຶ່ງເລີ່ມກວດສອບອາກອນປີ 2016 ສໍາລັບທຸກບໍລິສັດ ແລະ ທຸກຂະແໜງການ ຕໍ່ໆມາ.
   - ຕົວຢ່າງ: ແທນທີ່ຈະຂໍຂໍ້ມູນ ແລະ ເອກະສານຫຼັກຖານທັງໝົດກັບບໍລິສັດ ເພື່ອມາກວດສອບ ກໍ່ສາມາດໃຊ້ວິທີການສຸ່ມຕົວຢ່າງແທນ.

**ຂະແໜງການທີ່ກ່ຽວຂ້ອງ**

1. ກົມສ່ວຍສາອາກອນ, ກະຊວງການເງິນ
2. ທະນາຄານ ແຫ່ງ ສປປ ລາວ (ໃນນາມເປັນໃນກາງປະສານງານກັບຜູ້ປະກອບການບໍລິການດ້ານການເງິນ)

## 5. ການຈັດຕັ້ງປະຕິບັດກົດລະບຽບກ່ຽວກັບການກວດສຸຂະພາບຂອງແຮງງານ

ສະພາບບັນຫາ: ປະຈຸບັນ ພາກທຸລະກິດ ຫຼື ຜູ້ໃຊ້ແຮງງານ ເຫັນວ່າພາກລັດ ກໍ່ໄດ້ເອົາໃຈໃສ່ເຖິງຄວາມສໍາຄັນໃນວຽກງານສຸຂະພາບ ແລະ ຄວາມປອດໄພຂອງແຮງງານ ເພື່ອເຮັດໃຫ້ ຜູ້ອອກແຮງງານ ມີສະພາບແວດລ້ອມການເຮັດວຽກທີ່ດີ ແລະ ມີຄວາມປອດໄພ. ຍ້ອນເຫັນໄດ້ເຖິງຄວາມສໍາຄັນດັ່ງກ່າວ ຂະແໜງການກ່ຽວຂ້ອງຂອງພາກລັດ ກໍ່ໄດ້ມີນິຕິກໍາ ທີ່ກໍານົດໃຫ້ຜູ້ໃຊ້ແຮງງານ ມີການກວດສຸຂະພາບປະຈໍາປີໃຫ້ກັບຜູ້ອອກແຮງງານຂອງຕົນ, ໂດຍສະເພາະແມ່ນ ກົດໝາຍວ່າດ້ວຍແຮງງານ ສະບັບປຸງ (ມາດຕາ 126 ວ່າດ້ວຍການກວດສຸຂະພາບຂອງຜູ້ແຮງງານ)

ແລະ ບັນດານິຕິກໍາລຸ່ມກົດໝາຍຕ່າງໆທີ່ກ່ຽວຂ້ອງ. ຢ່າງໃດກໍ່ຕາມ ການຈັດຕັ້ງປະຕິບັດບັນດານິຕິກໍາດັ່ງກ່າວ ໄດ້ສ້າງຜົນກະທົບຕໍ່ພາກທຸລະກິດໃນການດໍາເນີນທຸລະກິດ ເນື່ອງຈາກ:

- ເປັນການເພີ່ມຕົ້ນທຶນໃຫ້ກັບຜູ້ໃຊ້ແຮງງານ ຄື: ໃນ ມາດຕາ 24 ຂອງ ດໍາລັດວ່າດ້ວຍສຸຂະພາບ ແລະ ຄວາມປອດໄພແຮງງານ ເລກທີ 22/ລບ ລົງວັນທີ 05/02/2019 ກໍານົດວ່າ "ໃນການກວດສຸຂະພາບຂອງຜູ້ອອກແຮງງານ ຜູ້ໃຊ້ແຮງງານຕ້ອງໄດ້ເຮັດສັນຍາ ກັບສະຖານທີ່ກວດສຸຂະພາບສະເພາະດ້ານ ທີ່ໄດ້ຮັບອະນຸຍາດຈາກຂະແໜງສາທາລະນະສຸກ ແລະ ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ". ຜູ້ປະກອບການເຫັນວ່າ ການກໍານົດໃນລັກສະນະດັ່ງກ່າວ ເປັນການຈໍາກັດທາງເລືອກຂອງຜູ້ໃຊ້ແຮງງານ ເຮັດໃຫ້ຄ່າໃຊ້ຈ່າຍໃນການກວດສຸຂະພາບແຮງງານສູງຢ່າງບໍ່ສົມເຫດສົມຜົນ ເນື່ອງຈາກຜູ້ໃຊ້ແຮງງານບໍ່ສາມາດນໍາໃຊ້ທາງເລືອກອື່ນໃນການກວດສຸຂະພາບຂອງແຮງງານ ເຊັ່ນ ນໍາໃຊ້ບັນດາໂຮງໝໍ ທີ່ໄດ້ຮັບການອະນຸຍາດໃຫ້ດໍາເນີນທຸລະກິດດ້ານການກວດສຸຂະພາບຈາກຂະແໜງສາທາລະນະສຸກຢ່າງຖືກຕ້ອງຕາມກົດໝາຍ ໄດ້. ພ້ອມດຽວກັນ ການຈໍາກັດສະຖານທີ່ກວດສຸຂະພາບໃນລັກສະນະດັ່ງກ່າວ ຍັງເຮັດໃຫ້ການກວດສຸຂະພາບ ບໍ່ທົ່ວເຖິງ ແລະ ຊັກຊ້າ. ອີງຕາມການລາຍງານຈາກຜູ້ປະກອບການ ປະຈຸບັນ ມີພຽງແຕ່ສູນກວດສຸຂະພາບຂອງສອງໂຮງໝໍຂອງລັດ ທີ່ໄດ້ຮັບອະນຸຍາດໃຫ້ເປັນສູນທີ່ສາມາດກວດສຸຂະພາບແຮງງານ ໃນທົ່ວປະເທດ. ຜູ້ປະກອບການເຫັນວ່າ ການຜູກຂາດໃນລັກສະນະດັ່ງກ່າວ ນອກຈາກຈະບໍ່ເປັນການສົ່ງເສີມການແຂ່ງຂັນໃນທຸລະກິດການບໍລິການດ້ານສຸຂະພາບແລ້ວ, ຍັງເຮັດໃຫ້ຄ່າໃຊ້ຈ່າຍໃນການກວດສຸຂະພາບແຮງງານສູງຢ່າງບໍ່ສົມເຫດສົມຜົນ ເນື່ອງຈາກຜູ້ໃຊ້ແຮງງານບໍ່ສາມາດນໍາໃຊ້ທາງເລືອກອື່ນໄດ້. ຍົກຕົວຢ່າງ 1: ໄດ້ມີໜັງສືສະເໜີຈາກກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຖິງບັນດາຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການໃນທຸກຂົງເຂດເສດຖະກິດ ຢູ່ ສປປ ລາວ ເລກທີ 540/ຮສສ-ຄຮງ ລົງວັນທີ 22 ພະຈິກ 2018 ທີ່ລະບຸໃຫ້ ທຸກຫົວໜ່ວຍທຸລະກິດ (ລວມທັງບັນດາໂຄງການ, ເຂດເສດຖະກິດພິເສດ) ຕ້ອງໄດ້ໃຊ້ບໍລິການກວດສຸຂະພາບແຮງງານກັບສູນກວດສຸຂະພາບຂອງໂຮງໝໍມິດຕະພາບ (150 ຕຽງ). ຕົວຢ່າງ 2: ໄດ້ມີບົດບັນທຶກການຮ່ວມມື ລະຫວ່າງ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ (ຂສພ), ກະຊວງແຜນການ ແລະ ການລົງທຶນ ແລະ ສູນກວດສຸຂະພາບແຮງງານພາຍໃນ ແລະ ຕ່າງປະເທດ ໂຮງໝໍມິດຕະພາບຂອງກະຊວງສາທາລະນະສຸກ ທີ່ຖືກສ້າງຂຶ້ນໃນວັນທີ 12 ມິຖຸນາ 2020, ທີ່ກໍານົດໃຫ້ທຸກຫົວໜ່ວຍແຮງງານຢູ່ ຂສພ ໃນຂອບເຂດທົ່ວປະເທດ ຕ້ອງໄດ້ໃຊ້ບໍລິການກວດສຸຂະພາບແຮງງານປະຈໍາປີ ກັບ ສູນກວດສຸຂະພາບແຮງງານຂອງໂຮງໝໍມິດຕະພາບ.
- ເປັນການເພີ່ມຕົ້ນທຶນໃຫ້ກັບຜູ້ໃຊ້ແຮງງານ: ລາຍການກວດສຸຂະພາບທີ່ບັງຄັບໃຫ້ກວດໃນຂະແໜງການຕ່າງໆແມ່ນມີຫຼາຍລາຍການ ຊຶ່ງບາງລາຍການ ຜູ້ປະກອບການເຫັນວ່າອາດບໍ່ຈໍາເປັນສໍາລັບຂະແໜງການນັ້ນໆ ແລະ ກໍ່ເປັນການເພີ່ມຄ່າໃຊ້ຈ່າຍໃຫ້ແກ່ຜູ້ໃຊ້ແຮງງານ ໂດຍສະເພາະແມ່ນບັນດາໂຮງງານ ຫຼື ທຸລະກິດທີ່ມີຜູ້ອອກແຮງງານຈໍານວນຫຼາຍ ແມ່ນຍິ່ງຕ້ອງມີຄ່າໃຊ້ຈ່າຍຈໍານວນຫຼາຍ. ຄ່າໃຊ້ຈ່າຍດັ່ງກ່າວໄດ້ ກາຍເປັນຄ່າໃຊ້ຈ່າຍຕົ້ນທຶນອັນມະຫາສານໃຫ້ແກ່ພາກທຸລະກິດ.

- ເປັນການເພີ່ມຕົ້ນທຶນໃຫ້ກັບຜູ້ໃຊ້ແຮງງານ: ການບັງຄັບໃຊ້ຂໍ້ກຳນົດໃນການຈັດຕັ້ງປະຕິບັດການກວດສຸຂະພາບແຮງງານ ແມ່ນຍັງບໍ່ເປັນເອກະພາບກັນໃນຂອບເຂດທົ່ວປະເທດ. ໝາຍຄວາມວ່າ ຫົວໜ່ວຍແຮງງານທີ່ປະຕິບັດຕາມຂໍ້ກຳນົດດັ່ງກ່າວ ຈະມີຕົ້ນທຶນສູງກວ່າຫົວໜ່ວຍແຮງງານທີ່ບໍ່ປະຕິບັດຕາມຂໍ້ກຳນົດດັ່ງກ່າວ.
- ຈຳກັດການແຂ່ງຂັນໃນທຸລະກິດການບໍລິການດ້ານສຸຂະພາບ: ໃນແຈ້ງການຂອງຫ້ອງການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2957/ຫກ ລົງວັນທີ 07 ກັນຍາ 2020, ຂໍ້ 2 ກຳນົດວ່າ ການກວດສຸຂະພາບປະຈຳປີໃຫ້ຜູ້ອອກແຮງງານຕ້ອງກວດຢູ່ໜ່ວຍງານບໍລິການດ້ານສຸຂະພາບແຮງງານ ຫຼື ສະຖານທີ່ກວດສຸຂະພາບແຮງງານສະເພາະທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມອອກໜັງສືອະນຸຍາດໃຫ້ພາຍຫຼັງການເຫັນດີຂອງກະຊວງສາທາລະນະສຸກເທົ່ານັ້ນ" ເພື່ອເຫດຜົນທີ່ວ່າ ຂະແໜງແຮງງານ ແລະ ສະຫວັດດີການສັງຄົມຕ້ອງການບັນທຶກ ແລະ ເກັບກຳຂໍ້ມູນການກວດສຸຂະພາບແຮງງານ. ເຫັນໄດ້ວ່າ ຜູ້ໃຫ້ບໍລິການດ້ານສຸຂະພາບ ເຊັ່ນ ບັນດາໂຮງໝໍ ທີ່ໄດ້ຮັບການອະນຸຍາດໃຫ້ດຳເນີນທຸລະກິດດ້ານການກວດສຸຂະພາບຈາກຂະແໜງສາທາລະນະສຸກຢ່າງຖືກຕ້ອງຕາມກົດໝາຍ ຖືກຈຳກັດການແຂ່ງຂັນໃນການດຳເນີນທຸລະກິດກວດສຸຂະພາບແຮງງານ ເນື່ອງຈາກມີການເພີ່ມຂອດຂັ້ນການອະນຸມັດຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມເຂົ້າມາຕື່ມ ທີ່ເປັນການຖ່ວງດຶງທາງດ້ານເວລາ ແລະ ງົບປະມານຂອງທຸລະກິດທີ່ຈະໃຫ້ບໍລິການໃນວຽກງານນີ້. ການຈັດຕັ້ງປະຕິບັດໃນລັກສະນະດັ່ງກ່າວ ແມ່ນຖືວ່າບໍ່ແມ່ນວິທີການຈັດຕັ້ງປະຕິບັດທີ່ດີ ແລະ ບໍ່ຖືກປະຕິບັດໃນສາກົນ.

ພາກທຸລະກິດ ຫຼື ຜູ້ໃຊ້ແຮງງານ ເຫັນດີວ່າການຍົກສູງວຽກງານສຸຂະພາບ ແລະ ຄວາມປອດໄພແຮງງານເພື່ອເຮັດໃຫ້ສະພາບແວດລ້ອມການເຮັດວຽກຂອງຜູ້ອອກແຮງງານມີຄວາມປອດໄພ ແມ່ນເປັນສິ່ງທີ່ດີ, ແຕ່ວິທີການຈັດຕັ້ງປະຕິບັດໃນປະຈຸບັນ ແມ່ນ ໄດ້ເພີ່ມຕົ້ນທຶນຈຳນວນຫຼາຍໃຫ້ແກ່ຜູ້ປະກອບການທຸລະກິດ ແລະ ມີຜົນກະທົບຕໍ່ການດຶງດູດການລົງທຶນຈາກຕ່າງປະເທດ. ສະນັ້ນ ແຕ່ຖ້າບັນຫາດັ່ງກ່າວນີ້ຍັງບໍ່ຖືກແກ້ໄຂ ກໍ່ອາດຈະເຮັດໃຫ້ນັກລົງທຶນຈາກຕ່າງປະເທດບໍ່ເຂົ້າມາລົງທຶນ ແລະ ບໍລິສັດທີ່ມີຢູ່ກໍອາດຈະຍ້າຍຖານການຜະລິດໄປປະເທດທີ່ມີນະໂຍບາຍທີ່ດີກວ່າກໍເປັນໄດ້.

**ຂໍ້ສະເໜີວິທີແກ້ໄຂ:**

1) ສະເໜີໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບ ກະຊວງ ສາທາລະນະສຸກ ເພື່ອທົບທວນຄືນ ຕໍ່ກັບ ລາຍການບັງຄັບສຳລັບການກວດສຸຂະພາບຂອງແຮງງານ ໂດຍໃຫ້ເນັ້ນໃສ່ການກວດສະເພາະແຕ່ບາງລາຍການທີ່ຈຳເປັນທີ່ສຸດສຳລັບຂະແໜງການຕ່າງໆ.
2) ສະເໜີໃຫ້ ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາ ລົບລ້າງ ຂອດການອອກໃບອະນຸຍາດການໃຫ້ບໍລິການກວດສຸຂະພາບຂອງຕົນ, ແລະ ໃຫ້ເປັນຄວາມຮັບຜິດຊອບຂອງຂະແໜງສາທາລະນະສຸກ ເພື່ອເປັນການເປີດກວ້າງການແຂ່ງຂັນໃນທຸລະກິດການບໍລິການກວດສຸຂະພາບແຮງງານ, ເຮັດໃຫ້ຫົວໜ່ວຍແຮງງານມີທາງເລືອກທີ່ຫຼາຍຂຶ້ນ ແລະ ມີຄ່າໃຊ້ຈ່າຍທີ່ໜ້ອຍລົງ. ຫຼັງຈາກນັ້ນ ຂະແໜງແຮງງານ ກໍ່ສາມາດສົມທົບກັບຂະແໜງສາທາລະນະສຸກ ເພື່ອເຊື່ອມຕໍ່ ຫຼື ຄຸ້ມຄອງຂໍ້ມູນກ່ຽວກັບການກວດສຸຂະພາບຂອງແຮງງານ.

ຂະແໜງການກ່ຽວຂ້ອງ:

1. ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
2. ຫ້ອງການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
3. ກະຊວງສາທາລະນະສຸກ

**ບັນຫາສະເພາະຂອງຂະແໜງການບໍລິການດ້ານການເງິນ**

**1. ການປັບປຸງ ວິທີການປົກປ້ອງລູກຄ້າທີ່ມີຄວາມສ່ຽງ ໃນຂະແໜງເຊົ່າສິນເຊື່ອ**

ສະພາບບັນຫາ: ຜູ້ປະກອບການຂະແໜງເຊົ່າສິນເຊື່ອ ເຫັນວ່າ ຄວາມສ່ຽງໃຫຍ່ອັນໜຶ່ງຕໍ່ຊັບສິນຂອງບໍລິສັດເຊົ່າສິນເຊື່ອ ແມ່ນການທີ່ລູກຄ້າຂອງຕົນຖືກຄວາມຜິດ ແລະ ບໍ່ໄດ້ມີການປະພັນໄພ. ສັນຍາເຊົ່າສິນເຊື່ອສ່ວນໃຫຍ່ຈະຮຽກຮ້ອງຜູ້ກູ້ຢືມໃຫ້ມີ (1) ການປະກັນໄພບຸກຄົນທີສາມ, (2) ການປະກັນໄພຊັບສິນຂອງບຸກຄົນທີສາມ, ແລະ (3)ການປະກັນໄພທີ່ຄອບຄຸມທັງໝົດຕໍ່ລົດທີ່ຮັບການຈັດສິນເຊື່ອ. ສໍາລັບ (2) ແລະ (3), ແຕ່ລະບໍລິສັດເຊົ່າສິນເຊື່ອ ອາດມີວິທີຈັດຕັ້ງປະຕິບັດທີ່ແຕກຕ່າງກັນ, ແຕ່ ສໍາລັບ (1) ແມ່ນເປັນຂໍ້ບັງຄັບໃນກົດລະບຽບທີ່ກ່ຽວຂ້ອງຂອງ ສປປ ລາວ ວ່າ ລົດທຸກຄັນຕ້ອງມີການປະກັນໄພບຸກຄົນທີສາມ. ຢ່າງໃດກໍ່ຕາມ ໃນການຈັດຕັ້ງປະຕິບັດຕົວຈິງ ໃນເວລາທີ່ການປະກັນໄພໝົດອາຍຸ ເຈົ້າຂອງລົດອາດບໍ່ມີການຕໍ່ອາຍຸສັນຍາປະກັນໄພ, ພ້ອມກັນນັ້ນ ການຕິດຕາມກວດກາອາຍຸປະກັນໄພລົດ ກໍ່ຍັງບໍ່ເປັນລະບົບເທົ່າທີ່ຄວນ.

ສໍາລັບບໍລິສັດເຊົ່າສິນເຊື່ອ ໂດຍສະເພາະແມ່ນບໍລິສັດເຊົ່າສິນເຊື່ອລົດ ແລ້ວ ໜີ້ສິນຕໍ່ບຸກຄົນທີສາມ ແມ່ນຄວາມສ່ຽງທີ່ສູງສໍາລັບບໍລິສັດ ເນື່ອງຈາກຄ່າເສຍຫາຍຈາກອຸບັດເຫດອາດມີມູນຄ່າສູງ ໃນກໍລະນີທີ່ລົດເກີດອຸບັດຕິເຫດ ແລະ ອາດເຮັດໃຫ້ຜູ້ຂັບບໍ່ສາມາດຊໍາລະຄ່າເສຍຫາຍດັ່ງກ່າວໄດ້. ຜູ້ປະກອບການໄດ້ຍົກຕົວຢ່າງກໍລະນີຢູ່ປະເທດ ອິດສະຕຣາລີ ທີ່ການປະກັນໄພບຸກຄົນທີສາມ ຖືກລະບຸເປັນຂໍ້ບັງຄັບພາຍໃຕ້ກົດໝາຍ, ແລະ ການຕິດຕາມການຕໍ່ອາຍຸສັນຍາປະກັນໄພ ແມ່ນ ປະຕິບັດໂດຍການ ລວມຄ່າທໍານຽມປະກັນໄພ ແລະ ຄ່າທໍານຽມຂຶ້ນທະບຽນລົດ ເຂົ້າກັນ ເຊິ່ງເຈົ້າຂອງລົດຕ້ອງໄດ້ຈ່າຍໃຫ້ກັບໜ່ວຍງານຜູ້ອອກທະບຽນໃນແຕ່ລະປີ.

**ຂໍ້ສະເໜີວິທີແກ້ໄຂ**

ສະເໜີໃຫ້ຂະແໜງການກ່ຽວຂ້ອງ ພິຈາລະນາ:

- ປຶກສາຫາລືຮ່ວມກັບບັນດາບໍລິສັດປະກັນໄພ ຕໍ່ກັບວິທີການຈັດຕັ້ງປະຕິບັດທີ່ດີຂອງຕ່າງປະເທດ (ເຊັ່ນ ການບັງຄັບໃຫ້ມີປະກັນໄພບຸກຄົນທີສາມ ແຕ່ເຈົ້າຂອງລົດສາມາດເລືອກບໍລິສັດປະກັນໄພໄດ້ເອງ ຫຼື ລັດຖະບານເປັນຜູ້ເຈລະຈາກັບບໍລິສັດປະກັນໄພ ເພື່ອໃຫ້ເຈົ້າຂອງລົດໄດ້ຈ່າຍຄ່າປະກັນໄພຫຼຸດລົງ) ແລະ ວິທີການຊໍາລະຄ່າທໍານຽມ ທີ່ສະດວກແກ່ຜູ້ຊົມໃຊ້
- ພິຈາລະນາ ເຊື່ອມຕໍ່ ຖານຂໍ້ມູນການຂຶ້ນທະບຽນລົດ ແລະ ຖານຂໍ້ມູນກ່ຽວກັບປະກັນໄພລົດເຂົ້າກັນ ເພື່ອໃຫ້ສະດວກແກ່ການຕິດຕາມອາຍຸສັນຍາປະກັນໄພ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1) ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານ ແຫ່ງ ສປປ ລາວ
2) ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ
3) ກະຊວງໂຍທາທິການ ແລະ ຂົນສົ່ງ

2. ຄ່າທຳນຽມປະກັນໄພເງິນຝາກ (Deposit Insurance Fees) ສູງເກີນໄປ

ສະພາບບັນຫາ: ປະຈຸບັນ ຂໍ້ກຳນົດກ່ຽວກັບຄ່າທຳນຽມປະກັນໄພເງິນຝາກ ລະບຸວ່າ ຜູ້ຝາກເງິນຈະໄດ້ຮັບຄ່າສິນໄໝທົດແທນບໍ່ເກີນ 50 ລ້ານກີບ ເຊິ່ງເປັນມູນຄ່າທີ່ທະນາຄານເຮັດປະກັນໄວ້ ໃນກໍລະນີທີ່ທະນາຄານເກີດບັນຫາ. ໃນຄວາມເປັນຈິງ ທະນາຄານຕ້ອງຈ່າຍຄ່າທຳນຽມປະກັນໄພເງິນຝາກ ທີ່ຄິດໄລ່ເທົ່າກັບ 0.1% ຂອງ ມູນຄ່າເງິນຝາກທັງໝົດ ທີ່ລູກຄ້າຝາກໄວ້ກັບຕົນ. ສຳລັບທະນາຄານທີ່ມີຖານລູກຄ້າເປັນທຸລະກິດຂະໜາດໃຫຍ່ ຈະໄດ້ຮັບຜົນກະທົບຫຼາຍກວ່າທະນາຄານອື່ນທີ່ມີຖານລູກຄ້າລາຍຍ່ອຍເປັນຫຼັກ. ຍົກຕົວຢ່າງ:

- ທະນາຄານ A ມີລູກຄ້າ 100 ຄົນ, ລູກຄ້າແຕ່ລະຄົນ ມີເງິນຝາກກັບທະນາຄານເທົ່າກັບ 100 ລ້ານກີບ, ທະນາຄານ A ຕ້ອງຈ່າຍຄ່າທຳນຽມປະກັນໄພເງິນຝາກເທົ່າກັບ 2.5 ລ້ານກີບ ໃນທຸກໆໄຕມາດ ເພື່ອປົກປ້ອງຜູ້ຝາກເງິນ, ແຕ່ບັນດາລູກຄ້າສາມາດໄດ້ຮັບຄ່າສິນໄໝທົດແທນລວມກັນເທົ່າກັບ 5 ຕື້ກີບເທົ່ານັ້ນ.

  ທະນາຄານ **A** ຕ້ອງຈ່າຍຄ່າທຳນຽມປະກັນໄພເງິນຝາກຕໍ່ປີ ເທົ່າກັບ: 10 ລ້ານກີບ

  ມູນຄ່າສິນໄໝທົດແທນຈາກການປະກັນໄພເງິນຝາກ: 5 ຕື້ກີບ
- ທະນາຄານ B ມີລູກຄ້າ 1000 ຄົນ, ລູກຄ້າແຕ່ລະຄົນ ມີເງິນຝາກກັບທະນາຄານເທົ່າກັບ 5 ລ້ານກີບ, ທະນາຄານ B ຕ້ອງຈ່າຍຄ່າທຳນຽມປະກັນໄພເງິນຝາກເທົ່າກັບ 1.25 ລ້ານກີບໃນທຸກໆໄຕມາດ ເພື່ອປົກປ້ອງເງິນຝາກ, ແຕ່ບັນດາລູກຄ້າສາມາດໄດ້ຮັບຄ່າສິນໄໝທົດແທນລວມກັນເຕັມຈຳນວນເທົ່າກັບ 5 ຕື້ກີບ.

  ທະນາຄານ B ຕ້ອງຈ່າຍຄ່າທຳນຽມປະກັນໄພເງິນຝາກຕໍ່ປີ ເທົ່າກັບ: 5 ລ້ານກີບ

  ມູນຄ່າສິນໄໝທົດແທນຈາກການປະກັນໄພເງິນຝາກ: 5 ຕື້ກີບ

ເຫັນໄດ້ວ່າ ສຳລັບ ທັງສອງທະນາຄານ ແມ່ນມີການປົກປ້ອງລູກຄ້າໃນມູນຄ່າເທົ່າກັນ ແຕ່ ທະນາຄານ A ຕ້ອງໄດ້ຈ່າຍຄ່າທຳນຽມປະກັນໄພເງິນຝາກສອງເທົ່າ ເກີນທີ່ທະນາຄານ B ຈ່າຍ. ໃນຄວາມເປັນຈິງຂອງທະນາຄານທີ່ມີຖານລູກຄ້າເປັນລູກຄ້າລາຍໃຫຍ່ເປັນຫຼັກ ຄ່າທຳນຽມປະກັນໄພເງິນຝາກທີ່ຕ້ອງໄດ້ຈ່າຍໃນແຕ່ລະປີ ແມ່ນມີມູນຄ່າມະຫາສານ. ໃນ ສປປ ລາວ, ເຫັນວ່າ ທະນາຄານທີ່ມີເງິນຝາກຈຳນວນຫຼາຍຈາກບັນດາລູກຄ້າລາຍໃຫຍ່ (ເຊັ່ນ ທະນາຄານທີ່ມີ ເງິນຝາກລູກຄ້າ ເກີນ 50 ລ້ານກີບ ຕໍ່ ໜຶ່ງບັນຊີ) ແມ່ນບັນດາທະນາຄານທີ່ມີມູນຄ່າຫຼັກຊັບຈຳນວນຫຼາຍ, ມີອັດຕາທຶນຕໍ່ຄວາມສ່ຽງ (capital ratios) ທີ່ສູງ ແລະ ມີ ຄວາມສ່ຽງດ້ານສິນເຊື່ອ ທີ່ຕ່ຳ. ສະນັ້ນ ຈະເຫັນໄດ້ວ່າ ທະນາຄານທີ່ໄດ້ຮັບຜົນກະທົບຈາກຂໍ້ກຳນົດດ້ານຄ່າທຳນຽມປະກັນໄພເງິນຝາກ ຂອງ ທຫລ ກໍ່ແມ່ນບັນດາທະນາຄານທີ່ມີຄວາມໝັ້ນຄົງສູງ ແລະ ອາດຈະບໍ່ໄດ້ນຳໃຊ້ເງິນປະກັນຈາກ ທຫລ ໃນການປົກປ້ອງລູກຄ້າເງິນຝາກຂອງຕົນ. ເພາະສະນັ້ນ ໃນເວລາທີ່ຜູ້ຝາກເງິນເກີດມີຄວາມກັງວົນກ່ຽວກັບສະພາບຄ່ອງຂອງລະບົບທະນາຄານ, ຜູ້ຝາກສ່ວນໃຫຍ່ຈະໂອນຍ້າຍເງິນຂອງຕົນໄປຝາກໄວ້ກັບທະນາຄານທີ່ມີຄວາມໝັ້ນຄົງສູງ ເຊິ່ງກໍ່ຈະເຮັດໃຫ້ບັນດາທະນາຄານທີ່ມີຄວາມໝັ້ນຄົງເຫຼົ່ານັ້ນ ຕ້ອງໄດ້ແບກຮັບພາລະດ້ານຄ່າທຳນຽມປະກັນໄພເງິນຝາກຢ່າງບໍ່ເປັນທຳ ເນື່ອງຈາກ ວິທີການຄິດໄລ່ຄ່າທຳນຽມດັ່ງກ່າວ ແມ່ນອີງໃສ່ມູນຄ່າເງິນຝາກທັງໝົດ ແລະ ບໍ່ໄດ້ອີງໃສ່ຈຳນວນມູນຄ່າປະກັນທີ່ຜູ້ຝາກສາມາດໄດ້ຮັບທົດແທນ. ໃນບາງປະເທດ ການປະກັນໄພເງິນຝາກ ແມ່ນເປັນທາງເລືອກ ໃຫ້ກັບ ທະນາຄານ ຫຼື ລູກຄ້າ, ແລະ ໃນ ບາງປະເທດ ວິທີການຄິດໄລ່ຄ່າທຳນຽມປະກັນໄພເງິນຝາກ ແມ່ນອີງຕາມອັນດັບຄວາມສ່ຽງຂອງທະນາຄານ, ໝາຍຄວາມວ່າ ທະນາຄານທີ່ມີຄວາມໝັ້ນຄົງສູງ ແລະ ຄວາມສ່ຽງໜ້

ອຍ ກໍ່ຈະໄດ້ຈ່າຍຄ່າທຳນຽມປະກັນໄພເງິນຝາກໃນອັດຕາທີ່ຕ່ຳກວ່າທະນາຄານທີ່ມີຄວາມສ່ຽງຫຼາຍ, ເຊິ່ງວິທີການດັ່ງກ່າວ ກໍ່ສາມາດເປັນແຮງຈູງໃຈໃຫ້ກັບທະນາຄານໃນການປົກປ້ອງລູກຄ້າຂອງຕົນ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ ທຫລ ພິຈາລະນາປັບປຸງ ຄ່າທຳນຽມປະກັນໄພເງິນຝາກ ໂດຍການຄິດໄລ່ຄ່າທຳນຽມອີງຕາມມູນຄ່າປະກັນໄພທີ່ໃຫ້ກັບລູກຄ້າເງິນຝາກ.
2. ພິຈາລະນານຳໃຊ້ວິທີການ ເລືອກບໍ່ເຂົ້າຮ່ວມ (ຫຼື ເຂົ້າຮ່ວມ) ການປະກັນໄພເງິນຝາກ ສຳລັບທະນາຄານທີ່ມີ ເງິນຝາກຫຼາຍ (ເຊັ່ນທະນາຄານທີ່ມີຖານລູກຄ້າເປັນລູກຄ້າເງິນຝາກລາຍໃຫຍ່ເປັນຫຼັກ)
3. ໃຫ້ມີການລາຍງານຢ່າງໂປ່ງໃສ ຕໍ່ກັບລາຍລະອຽດການນຳເອົາເງິນຄ່າທຳນຽມປະກັນໄພເງິນຝາກ ໄປລົງທຶນຕໍ່.

**ຂະແໜງການກ່ຽວຂ້ອງຂອງພາກລັດ:**

1. ສຳນັກງານປົກປ້ອງເງິນຝາກ, ທະນາຄານ ແຫ່ງ ສປປ ລາວ

**3. ການບໍລິຫານຈັດການເງິນຄັງແຮຝາກໄວ້ກັບ ທຫລ ແລະ ການຂໍຖອນເງິນຄັງໃນ ກໍລະນີ ທີ່ ທະນາຄານ ຕ້ອງການສະພາບຄ່ອງ**

ປະຈຸບັນ ອີງຕາມ ຂໍ້ກໍານົດ ກ່ຽວກັບເງິນແຮບັງຄັບສໍາລັບເງິນຝາກ, ທະນາຄານທຸລະກິດ ຈະຕ້ອງໄດ້ຝາກທຶນຈໍານວນໜຶ່ງຂອງຕົນໄວ້ກັບ ທຫລ ເພື່ອໃຫ້ ທຫລ ສາມາດເຂົ້າຫາຮ່ວງເງິນດັ່ງກ່າວໄດ້ໃນກໍລະນີທີ່ທະນາຄານມີບັນຫາ.

ເນື່ອງຈາກ ຮ່ວງທຶນດັ່ງກ່າວຍັງເປັນຂອງທະນາຄານທຸລະກິດ ແຕ່ ທຫລ ນໍາໄປລົງທຶນໃຫ້ແທນ ພາກທຸລະກິດທະນາຄານທຸລະກິດຈຶ່ງຕ້ອງການຮັບຊາບວ່າ ທຫລ ນໍາໃຊ້ຮ່ວງເງິນດັ່ງກ່າວໄປລົງທຶນໃນດ້ານໃດແດ່. ປະຈຸບັນ ທະນາຄານ ແມ່ນບໍ່ໄດ້ຮັບດອກເບ້ຍຈາກ ຮ່ວງເງິນແຮ ດັ່ງກ່າວ ແລະ ຜູ້ປະກອບການທະນາຄານກໍ່ບໍ່ສາມາດຮັບຮູ້ໄດ້ວ່າ ຮ່ວງເງິນດັ່ງກ່າວທີ່ຖືກນໍາເອົາໄປລົງທຶນ ແມ່ນເພື່ອມາປະກອບເຂົ້າໃນກອງທຶນປົກປ້ອງເງິນຝາກ ຫຼື ແຍກຕ່າງຫາກ.

**ຂໍ້ສະເໜີວິທີແກ້ໄຂ:**

1. ມີການລາຍງານຊັດເຈນກ່ຽວກັບ ການລົງທຶນ ແລະ ບໍລິຫານຈັດການ ເງິນແຮບັງຄັບສໍາລັບເງິນຝາກ ຂອງບັນດາທະນາຄານທຸລະກິດ ທີ່ຢູ່ກັບ ທຫລ

**ຂະແໜງການກ່ຽວຂ້ອງຂອງພາກລັດ**

ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານ ແຫ່ງ ສປປ ລາວ

## 4. ຂໍ້ຈຳກັດດ້ານລະບຽບການໃນທຸລະກິດຂະແໜງປະກັນໄພ

ສະພາບບັນຫາ: ບໍລິສັດປະກັນໄພຂອງຕ່າງປະເທດ ທີ່ດຳເນີນທຸລະກິດໃນ ສປປ ລາວ ເລີ່ມທີ່ຈະບໍ່ສາມາດສ້າງກຳໄລໄດ້ ແລະ ອາດຈະບໍ່ສາມາດສືບຕໍ່ກິດຈະການໄດ້ ຍ້ອນຫຼາຍປັດໃຈທີ່ບໍ່ເອື້ອອຳນວຍ ເຊິ່ງສ່ວນໜຶ່ງ ກໍ່ເກີດຈາກບັນຫາຂໍ້ຫຍຸ້ງຍາກດ້ານອັດຕາແລກປ່ຽນ ແລະ ບັນຫາການບັງຄັບໃຊ້ສັນຍາ. ນອກຈາກບັນຫາທີ່ໄດ້ກ່າວມາແລ້ວ ກໍ່ຍັງມີບັນຫາສະເພາະຂອງຂະແໜງການປະກັນໄພ ທີ່ເປັນຂໍ້ຫຍຸ້ງຍາກໃຫ້ແກ່ການດຳເນີນທຸລະກິດ ຂອງຂະແໜງການ, ໂດຍສະເພາະ ແມ່ນບັນຫາ ຂໍ້ກຳນົດດ້ານເງິນແຮບັງຄັບ ທີ່ບໍລິສັດປະກັນໄພຕ້ອງຮັກສາໄວ້ ເຊິ່ງເຫັນວ່າ ຫຼາຍເກີນໄປ ແລະ ເກີນຈາກການຄິດໄລ່ໂດຍອີງໃສ່ຄວາມສ່ຽງຂອງທຶນ (risk-based capital calculations) ເຊິ່ງເຫັນວ່າ ເປັນຂໍ້ຈຳກັດໃນການສ້າງກຳໄລຂອງບໍລິສັດປະກັນໄພ. ຂໍ້ກຳນົດດ້ານເງິນແຮບັງຄັບສຳລັບມູນຄ່າສິນໄໝທົດແທນ ຈາກເຫດການທີ່ເກີດຂຶ້ນແລ້ວແຕ່ບໍລິສັດປະກັນໄພຍັງບໍ່ໄດ້ຮັບລາຍງານ (incurred but not reported (**IBNR**)) ທີ່ເທົ່າກັບ 15% ກໍ່ເຫັນວ່າສູງເກີນໄປ ເຊິ່ງເຮັດໃຫ້ຄວາມສາມາດໃນການສ້າງກຳໄລຂອງບໍລິສັດປະກັນໄພຫຼຸດລົງ, ເນື່ອງຈາກຈຳນວນເງິນສູງສຸດທີ່ບໍລິສັດປະກັນໄພຕ້ອງຈຳກັດໄວ້ສຳລັບຮັບຄວາມສ່ຽງເອງໂດຍບໍ່ເອົາໄປປະກັນໄພຕໍ່ ແມ່ນຖືກກຳນົດໃຫ້ຢູ່ໃນ ລະດັບຂ້ອນຂ້າງຕໍ່າ ໃນ ສປປ ລາວ.

ຜູ້ຕາງໜ້າຈາກຂະແໜງປະກັນໄພ ກ່າວວ່າ ການຕັດສິນໃຈທີ່ຈະດຳເນີນທຸລະກິດຕໍ່ໃນ ສປປ ລາວ ກໍ່ເປັນການຕັດສິນໃຈທີ່ຍາກ ເນື່ອງມາຈາກ ຄວາມຫຍຸ້ງຍາກໃນການແລກປ່ຽນເງິນຕາເພື່ອຊຳລະສະສາງອອກນອກປະເທດ ໃນຂະນະທີ່ຍັງຕ້ອງປະຕິບັດຕາມຂໍ້ກຳນົດຕ່າງໆໃນການຮັກສາເງິນທຶນໄວ້ໃນປະເທດ ຫຼາຍເກີນຄວາມເໝາະສົມອີງໃສ່ຄວາມສ່ຽງທີ່ບໍລິສັດມີ. ນອກຈາກຈະບໍ່ເປັນການດຶງດູດການລົງທຶນຂອງຕ່າງປະເທດແລ້ວ, ການຈຳກັດຂີດຄວາມສາມາດໃນການສ້າງກຳໄລຂອງຂະແໜງປະກັນໄພ ຍັງມີຜົນກະທົບໂດຍກົງຕໍ່ເສດຖະກິດຂອງ ສປປ ລາວ ໂດຍສະເພາະແມ່ນໃນແງ່ຂອງການເຮັດໃຫ້ລາຍຮັບອາກອນຂອງລັດຖະບານ ຫຼຸດລົງ.

ໃນຫຼາຍປະເທດ ເຊັ່ນ ອົດສະຕຣາລີ ແລະ ນິວຊີແລນ, ສິງກະໂປ, ຮ່ອງກົງ ໄດ້ນຳໃຊ້ ໜັງສືຄໍ້າປະກັນໃນຮູບແບບ ຕາສານເຄຼດິດ ທີ່ໄດ້ຮັບການອະນຸມັດ ຫຼື standby letters of credit (**SBLCs**) ເປັນຕົວຢ່າງໜຶ່ງທີ່ຜູ້ອອກກົດລະບຽບ ໄດ້ອຳນວຍຄວາມສະດວກໃຫ້ແກ່ ຜູ້ໃຫ້ບໍລິການປະກັນໄພ ເພື່ອໃຫ້ສາມາດສ້າງກຳໄລໄດ້ ແລະ ບໍ່ຈຳເປັນຕ້ອງຮັກສາເງິນແຮໄວ້ພາຍໃນປະເທດຫຼາຍເກີນໄປ ໂດຍທີ່ບໍ່ກະທົບກັບການປົກປ້ອງຄວາມສ່ຽງ ຫຼື ເຮັດໃຫ້ລາຍຈ່າຍອາກອນ ພາຍໃນປະເທດຫຼຸດລົງ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ ທຫລ ແລະ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ ພິຈາລະນາປັບປຸງ ຂໍ້ກຳນົດກ່ຽວກັບທຶນຈົດທະບຽນຕໍ່າສຸດ ແລະ ຂໍ້ກຳນົດກ່ຽວກັບເງິນແຮ ໂດຍອີງໃສ່ມູນຄ່າຄວາມສ່ຽງທີ່ຮັກສາໄວ້ພາຍໃນປະເທດ, ໂດຍອາດມີການປຶກສາຫາລືກັບ ສະມາຄົມປະກັນໄພລາວ ກ່ຽວກັບວ່າ ເປັນຫຍັງ ຈຶ່ງຄວນຄິດໄລ່ດ້ວຍວິທີການອີງໃສ່ຄວາມສ່ຽງ ແລະ ເປັນຫຍັງຄວາມສ່ຽງໃນ ສປປ ລາວຈຶ່ງຂ້ອນຂ້າງຕໍ່າ.
2. ສະເໜີໃຫ້ ທຫລ ແລະ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ ພິຈາລະນາ ນຳໃຊ້ຕາສານເຄຼດິດ ທີ່ໄດ້ຮັບການອະນຸມັດ ຫຼື regulatory standby letters of credit (**SBLCs**) ເພື່ອທົດ

ແທນຂໍ້ກໍານົດດ້ານຊັບສິນ ຂອງບໍລິສັດປະກັນໄພ. ວິທີການດັ່ງກ່າວ ຈະຊ່ວຍໃຫ້ ບໍລິສັດປະກັນໄພສາມາດຫຼຸດຜ່ອນຄວາມສ່ຽງດ້ານອັດຕາແລກປ່ຽນ ແລະ ສາມາດເຮັດໃຫ້ບໍລິສັດປະກັນໄພສາມາດນໍາເງິນທຶນດັ່ງກ່າວໄປສ້າງກໍາໄລຢູ່ຕະຫຼາດຕ່າງປະເທດໄດ້.

3. ພິຈາລະນາປັບຂໍ້ກໍານົດດ້ານເງິນແຮບັງຄັບ ສໍາລັບມູນຄ່າສິນໄໝທົດແທນ ຈາກເຫດການທີ່ເກີດຂຶ້ນແລ້ວແຕ່ບໍລິສັດປະກັນໄພຍັງບໍ່ໄດ້ຮັບລາຍງານ ຫຼື IBNR ໂດຍຫຼຸດຈາກ 15% ລົງມາເປັນປະມານ 3-5% ເຊິ່ງບໍລິສັດປະກັນໄພເຫັນວ່າມີຄວາມສົມເຫດສົມຜົນ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ

### 5. ການພິຈາລະນາ ກ່ຽວກັບ ປ້າຍລົດ ສໍາລັບລົດທີ່ຍັງຢູ່ພາຍໃຕ້ສັນຍາເຊົ່າສິນເຊື່ອ

ສະພາບບັນຫາ: ຜູ້ປະກອບການຂະແໜງເຊົ່າສິນເຊື່ອ ເຫັນວ່າຄວາມຮູ້ທາງດ້ານເງິນ ແມ່ນເປັນອຸປະສັກໜຶ່ງຂອງການເຂົ້າຫາການບໍລິການທາງເງິນໃນ ສປປ ລາວ. ພວກເຂົາໄດ້ຍົກຕົວຢ່າງ ໃຫ້ເຫັນວ່າ ຜູ້ຊົມໃຊ້ ຫຼາຍຄົນ ເຫັນແກ່ພາບລັກ ຫຼາຍກວ່າ ຄວາມເຂົ້າໃຈທາງດ້ານການເງິນ ເຊັ່ນ ໃນການຊື້ລົດ ຜູ້ຊົມໃຊ້ຫຼາຍຄົນ ເລືອກທີ່ຈະຂໍສິນເຊື່ອກັບບໍລິສັດປ່ອຍກູ້ທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ດໍາເນີນທຸລະກິດຢ່າງບໍ່ຖືກຕ້ອງ ເພື່ອໃຫ້ສາມາດໄດ້ຮ່ວງເງິນຈໍານວນຫຼາຍມາຊໍາລະຄ່າລົດທັງໝົດ ແລະ ໄດ້ປ້າຍລົດສີເຫຼືອງ, ແທນການໃຊ້ບໍລິການບໍລິສັດເຊົ່າສິນເຊື່ອ ຫຼື ຮັບການຈັດສິນເຊື່ອລົດຈາກຜູ້ຂາຍ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ໄດ້ປ້າຍລົດສີຂາວ, ເນື່ອງຈາກຫຼາຍຄົນເຊື່ອວ່າປ້າຍລົດສີເຫຼືອງ ຈະເປັນພາບລັກທີ່ດີກວ່າປ້າຍລົດສີຂາວ. ຜູ້ປະກອບການຍົກໃຫ້ເຫັນວ່າ ຕົວຢ່າງການຈັດຕັ້ງປະຕິບັດ ຢູ່ປະເທດອື່ນ ເຊັ່ນ ປະເທດໄທ ໄດ້ນໍາໃຊ້ວິທີການຂຶ້ນທະບຽນ ສະຕິກເກີ້ເພື່ອຕິດໃສ່ລົດ ຫຼື ປຶ້ມຕິດຕາມລົດ ເພື່ອຈໍາແນກວ່າລົດຄັນໃດທີ່ຍັງຕິດສິນເຊື່ອຢູ່ ແທນການຈໍາແນກສີຂອງປ້າຍລົດເພາະການຈໍາແນກສີ ອາດເຫັນໄດ້ຊັດເຈນ ແລະ ເຮັດໃຫ້ຜູ້ຊົມໃຊ້ບໍ່ຢາກນໍາໃຊ້ປ້າຍລົດສີຂາວ. ຜູ້ເຂົ້າຮ່ວມເຫັນວ່າຖ້າບັນຫານີ້ໄດ້ຮັບການປັບປຸງ ຈະເຮັດໃຫ້ມີສະພາບແວດລ້ອມການແຂ່ງຂັນດີຂຶ້ນໃນກິດຈະການສິນເຊື່ອລົດ ແລະຜູ້ຊົມໃຊ້ກໍ່ຈະໄດ້ຮັບການປົກປ້ອງທີ່ດີ.

**ຂໍ້ສະເໜີວິທີແກ້ໄຂ**:

1. ສະເໜີໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຄືນ ກ່ຽວກັບ ການຈໍາແນກສີຂອງປ້າຍລົດ ແລະຄວນໃຫ້ປ້າຍລົດເປັນສີດຽວກັນ, ແລະ ນໍາໃຊ້ວິທີການອື່ນໃນການຈໍາແນກປະເພດລົດທີ່ຍັງຕິດສິນເຊື່ອ ແທນເຊັ່ນ ອາດນໍາໃຊ້ສະຕິກເກີ້ ຫຼື ປຶ້ມຕິດຕາມ ແທນ.

**ຂະແໜງການກ່ຽວຂ້ອງຂອງພາກລັດ**

1. ກະຊວງໂຍທາທິການ ແລະ ຂົນສົ່ງ

**ບັນຫາສະເພາະຂອງຂະແໜງການທ່ອງທ່ຽວ**

**1. ນະໂຍບາຍສົ່ງເສີມ ການພັດທະນາການທ່ອງທ່ຽວທີ່ອີງໃສ່ທຳມະຊາດ**

ສະພາບບັນຫາ: ການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ຫຼື Nature-Based Tourism ມີທ່າອ່ຽງທີ່ສຳຄັນໃຫ້ແກ່ການ ພັດທະນາການທ່ອງທ່ຽວ ຂອງ ສປປ ລາວ, ເນື່ອງຈາກ ສປປ ລາວ ມີພື້ນທີ່ເຂດທີ່ສາມາດພັດທະນາເປັນເຂດທ່ອງທ່ຽວທາງທຳມະຊາດ ຫຼວງຫຼາຍ, ແລະ ການທ່ອງທ່ຽວໃນຮູບແບບດັ່ງກ່າວ ນອກຈາກຈະເປັນການປະກອບສ່ວນເຂົ້າໃນການ ຮັກສາສະພາບແວດລ້ອມທຳມະຊາດແລ້ວ, ຍັງສາມາດສ້າງລາຍຮັບເຂົ້າປະເທດ ແລະ ກໍ່ສອດຄ່ອງກັບ ຄາດໝາຍການພັດທະນາແບບຍືນຍົງ ແລະ ການພັດທະນາສີຂຽວ 2030 ຂອງລັດຖະບານ. ການທ່ອງທີ່ອີງໃສ່ທຳມະຊາດ ແມ່ນຮູບແບບການທ່ອງທ່ຽວ ທີ່ລວມເອົາກິດຈະກຳການທ່ອງທ່ຽວ ທາງທຳມະຊາດທຸກຮູບແບບ (ເຊິ່ງກໍ່ລວມເອົາທັງການທ່ອງທ່ຽວ ໃນຮູບແບບອານຸລັກ ຫຼື ecotourism ເຂົ້ານຳ) ເຊັ່ນ ກິດຈະກຳຍ່າງປ່າ, ລ່ອງເຮືອຄາຢັກ, ປີນພູ, ກິດຈະກຳຊົມວິວທິວທັດທຳມະຊາດ, ເຊັ່ນ ການເບິ່ງນົກ, ເບິ່ງດາວ ແລະ ກິດຈະກຳທ່ອງທ່ຽວທາງວັດທະນະທຳ ເຊັ່ນ ການທ່ອງທ່ຽວເບິ່ງວິຖີຊີວິດ ແລະ ທິວທັດໃນເຂດຊົນນະບົດ ເປັນຕົ້ນ. ປະຈຸບັນ ການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ແມ່ນກຳລັງໄດ້ຮັບຄວາມສົນໃຈສູງໃນທົ່ວໂລກ ເນື່ອງຈາກນຳໃຊ້ຕົ້ນທຶນການພັດທະນາແຫຼ່ງທ່ອງທ່ຽວທີ່ຕໍ່າ ແຕ່ສາມາດປະກອບ ສ່ວນເຂົ້າໃນການພັດທະນາ ເສດຖະກິດ ແລະ ສັງຄົມ ທີ່ຍືນຍົງ,ໂດຍສະເພາະແມ່ນ ສາມາດແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນເຂດຊົນນະບົດ ໂດຍການສ້າງລາຍຮັບໃຫ້ແກ່ແຮງງານຜູ້ຍິງ ແລະ ແຮງງານໜຸ່ມໃນເຂດຊົນນະບົດ. ການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ນອກຈາກຈະສ້າງລາຍຮັບໃຫ້ປະເທດ ແລະ ວຽກເຮັດງານທຳໃຫ້ປະຊາກອນແລ້ວ, ຍັງເປັນການຊ່ວຍໃຫ້ນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ ມີຄວາມຮັບຮູ້, ເຂົ້າໃຈຕໍ່ກັບຄວາມຮັບຜິດຊອບ ແລະ ໄດ້ປະກອບສ່ວນເຂົ້າໃນການຮັກສາສິ່ງແວດລ້ອມທາງທຳມະຊາດ ແລະ ສັງຄົມ ອີກດ້ວຍ.

ສປປ ລາວ ມີເງື່ອນໄຂທາງທຳມະຊາດຫຼາຍຢ່າງ ທີ່ເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວ ທີ່ອີງໃສ່ທຳມະຊາດ. ປະຈຸບັນ 17% ຂອງພື້ນທີ່ປະເທດ ໄດ້ຖືກຈັດເປັນພື້ນທີ່ປ່າສະຫງວນ (PAs), ແລະ ລ່າສຸດ ລັດຖະບານກໍ່ໄດ້ປະກາດໃຫ້ປ່າສະຫງວນສອງແຫ່ງ (ນາກາຍນໍ້າເທີນ ແລະ ນໍ້າແອດພູເລີຍ) ເປັນເຂດອຸທະຍານແຫ່ງຊາດ, ເຊິ່ງສອງເຂດດັ່ງກ່າວ ກໍ່ເປັນເຂດປ່າສະຫງວນທີ່ມີຂະໜາດໃຫຍ່ທີ່ສຸດໃນ ອິນໂດຈີນ. ນອກຈາກນີ້ ສປປ ລາວ ຍັງປະກອບມີຄວາມຫຼາກຫຼາຍທາງຊີວະພາບ ເຊິ່ງອີງຕາມການປະເມີນຂອງອົງການ International Union for Conservation of Nature (IUCN), ສປປ ລາວ ມີຊະນິດພັນຂອງດອກໄມ້ ກວ່າ 10.000 ຊະນິດ, ສັດເລືອຄານ ກວ່າ 160 ຊະນິດ, ນົກ ກວ່າ 800 ຊະນິດ ແລະ ສັດລ້ຽງລູກດ້ວຍນົມອີກກວ່າ 100 ຊະນິດ. ຖ້າຫາກວ່າພື້ນທີ່ປ່າສະຫງວນ ແລະ ຊີວະນາໆພັນດັ່ງກ່າວໄດ້ຮັບການປົກປັກຮັກສາທີ່ດີ ກໍ່ຈະກາຍເປັນຈຸດໝາຍການທ່ອງທ່ຽວທາງທຳມະຊາດ ທີ່ສາມາດດຶງດູດນັກທ່ອງທ່ຽວຄຸນຄ່າສູງ, ແລະສ້າງລາຍຮັບທີ່ຫຼວງຫຼາຍໃຫ້ແກ່ປະເທດ. ຢ່າງໃດກໍ່ຕາມ ການພັດທະນາການທ່ອງທ່ຽວທາງທຳມະຊາດ ໃນ ປະຈຸບັນ ກໍ່ຍັງຕ້ອງປະສົບພົບພໍ້ກັບຂໍ້ຫຍຸ້ງຍາກຫຼາຍຢ່າງ, ເນື່ອງຈາກ ຍັງບໍ່ມີມາດຕະການໃນການຮັກສາສະພາບແວດລ້ອມ ແລະ ນະໂຍບາຍສົ່ງເສີມຈາກລັດຖະບານ ເທົ່າທີ່ຄວນ ເຊັ່ນ:

- ຍັງບໍ່ມີມາດຕະການເດັດຂາດ ແລະ ການຈັດຕັ້ງປະຕິບັດທີ່ຊັດເຈນ ໃນການປົກປັກຮັກສາສະພາບແວດລ້ອມ, ການຈັດການກັບມົນລະພິດທາງອາກາດ ແລະ ທາງນໍ້າ ຈາກການຈູດປ່າເຮັດໄຮ່ ຂອງປະຊາຊົນ, ຂາດການບຳບັດນໍ້າເສຍ ແລະ ຂີ້ເຫຍື້ອທີ່ເປັນລະບົບ, ຈຳນວນຊີວະນາໆພັນ ກໍ່ຫຼຸດລົງເລື້ອຍໆໃນແຕ່ລະປີເນື່ອງຈາກຂາດມາດຕະການຈັດການ ການລ່າສັດໃນເຂດສະຫງວນທີ່ຕົ້ນເຫດ ເປັນຕົ້ນ, ເຊິ່ງຈະເຮັດໃຫ້ຄຸນຄ່າຂອງການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ໃນ ສປປ ລາວ ຫຼຸດລົງ,

- ໂຄງລ່າງພື້ນຖານ ເຊັ່ນ ຖະໜົນຫົນທາງ ແລະ ຂົວຂ້າມນໍ້າ ໃນການເຂົ້າຫາແຫຼ່ງທ່ອງທ່ຽວທາງທຳມະຊາດ ຍັງມີຄວາມຫຍຸ້ງຍາກ, ເປັນສາເຫດໃຫ້ການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ໃນ ສປປ ລາວ ມີຕົ້ນທຶນທີ່ສູງ,
- ຍັງບໍ່ມີນິຕິກຳຮອງຮັບທີ່ເອື້ອອຳນວຍໃຫ້ແກ່ ການພັດທະນາການທ່ອງທ່ຽວທີ່ອີງໃສ່ທຳມະຊາດ, ເຊັ່ນ ຍັງບໍ່ມີນິຕິກຳກ່ຽວກັບການບຸກເບີກປ່າສະຫງວນເພື່ອການທ່ອງທ່ຽວ ເຊິ່ງ ປະຈຸບັນ ການເກັບຄ່າທຳນຽມໃນການບຸກເບີກ/ຄ່າສຳປະທານ ພື້ນທີ່ປ່າສະຫງວນເພື່ອການທ່ອງທ່ຽວ ກໍ່ຍັງບໍ່ມີຄວາມຊັດເຈນ ແລະ ມີລາຄາສູງ ເນື່ອງຈາກຍັງອີງໃສ່ ຄ່າທຳນຽມດຽວກັນກັບການສຳປະທານພື້ນທີ່ປ່າສະຫງວນເພື່ອໂຄງການບໍ່ແຮ່ ແລະ ໄຟຟ້າ, ເຊິ່ງກໍ່ເປັນສາມາດທີ່ເຮັດໃຫ້ ວິສາຫະກິດຂະໜາດນ້ອຍ ແລະກາງ ບໍ່ສາມາດມີສ່ວນຮ່ວມໃນທຸລະກິດການທ່ອງທ່ຽວລັກສະນະນີ້ໄດ້,
- ຍັງມີການຈຳກັດການເຂົ້າຮ່ວມຂອງພາກທຸລະກິດ ແລະ ການປົກຄອງທ້ອງຖິ່ນ ໃນການວາງຍຸດທະສາດການພັດທະນາຂະແໜງການທ່ອງທ່ຽວຂອງປະເທດ ເວົ້າລວມ, ແລະ ເວົ້າສະເພາະ ກໍ່ແມ່ນການທ່ອງທ່ຽວທີ່ອີງໃສ່ທຳມະຊາດ,
- ທັກສະ ແລະຄວາມເຂົ້າໃຈຂອງບຸກຄະລາກອນ ຕໍ່ກັບການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ຍັງຈຳກັດ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອ:
   - ສະເໜີໃຫ້ຂະແໜງການກ່ຽວຂ້ອງ ປັບປຸງ ຫຼື ອອກນິຕິກຳຮອງຮັບ ທີ່ເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວທີ່ອີງໃສ່ທຳມະຊາດ, ແລະ ການທ່ອງທ່ຽວທີ່ອີງໃສ່ ຊຸມຊົນ ແນໃສ່ ຫຼຸດຜ່ອນຂອດຂັ້ນການອະນຸຍາດສຳປະທານ ແລະ ຄ່າທຳນຽມທີ່ຕິດພັນກັບການສຳປະທານ ພື້ນທີ່ປ່າສະຫງວນເພື່ອການທ່ອງທ່ຽວທາງທຳມະຊາດ. ມີການເກັບຄ່າທຳນຽມຢ່າງໂປ່ງໃສ. ນິຕິກຳ ດັ່ງກ່າວ ຄວນເນັ້ນ ໃສ່ການປົກປັກຮັກສາສະພາບແວດລ້ອມຂອງແຫຼ່ງທ່ອງທ່ຽວ ແລະ ສຸຂະອະນາໄມຂອງນັກທ່ອງທ່ຽວ (ສຳລັບໂຮງແຮມ ແລະ ຮ້ານອາຫານ) ເປັນຫຼັກ, ແຕ່ຕ້ອງບໍ່ເປັນການສ້າງສິ່ງກີດຂວາງທີ່ບໍ່ສົມເຫດສົມຜົນໃຫ້ແກ່ຜູ້ປະກອບການ.
   - ສ້າງແຜນພັດທະນາການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ແຫ່ງຊາດ. ມີການປະເມີນຄືນຜົນໄດ້ຮັບ ແລະ ຜົນກະທົບຂອງແຜນດັ່ງກ່າວ ເປັນແຕ່ລະໄລຍະ.
   - ມີມາດຕະການທີ່ຊັດເຈນ ແລະ ເປັນລະບົບ ເພື່ອຈັດການກັບບັນຫາ ມົນລະພິດທາງອາກາດ ແລະ ທາງນໍ້າ ແລະ ບັນຫາ ຂີ້ເຫຍື້ອທີ່ຊະຊາຍ.

**ຂະແໜງການທີ່ກ່ຽວຂ້ອງ:**

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
2. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
3. ກະຊວງແຜນການ ແລະ ການລົງທຶນ
4. ກະຊວງໂຍທາທິການ ແລະ ຂົນສົ່ງ
5. ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

- ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮ່ວມກັບ ສຄອຊ ໄດ້ຈັດປະຊຸມປຶກສາຫາລື ເພື່ອຕິດຕາມການແກ້ໄຂບັນຫາທີ່ພາກທຸລະກິດໄດ້ຍົກຂຶ້ນໃນກອງປະຊຸມທຸລະກິດລາວຄັ້ງທີ 12 ກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ ໃນເດືອນ ກໍລະກົດ ແລະ ສິງຫາ 2020 ເຊິ່ງສາມາດສະຫຼຸບໄດ້ຄື:
  - ຕໍ່ກັບຂໍ້ສະເໜີປັບປຸງຄ່າເຊົ່າ ແລະ ສຳປະທານ ທີ່ດິນເຂດປ່າສະຫງວນ ເພື່ອການທ່ອງທ່ຽວ, ປະຈຸບັນ ກະຊວງ ກະສິກຳ ແລະ ປ່າໄມ້ ຢູ່ໃນຂັ້ນຕອນ ຄົ້ນຄວ້າ ປັບປຸງຄ່າເຊົ່າ ແລະ ສຳປະທານດັ່ງກ່າວ ທີ່ລະບຸໃນ ລັດຖະບັນຍັດ ເລກທີ 02/ປປທ ລົງວັນທີ 18 ພະຈິກ 2009 ເຊິ່ງຄາດວ່າ ຈະສຳເລັດໃນທ້າຍປີ 2020, ໂດຍມີແຜນການແຍກ ຄ່າສຳປະທານທີ່ດິນຂອງລັດເພື່ອການທ່ອງທ່ຽວ ລະຫວ່າງການທ່ອງທ່ຽວທາງທຳມະຊາດ ອອກຈາກ ການທ່ອງທ່ຽວ ທາງວັດທະນະທຳ. ໃນການຄົ້ນຄວ້າຄ່າສຳປະທານໃໝ່ ຈະໄດ້ມີການທາບທາມຄຳເຫັນຈາກພາກທຸລະກິດ (ບໍ່ໄດ້ລະບຸ ຄາດໝາຍໄລຍະເວລາສຳເລັດ). ນອກຈາກນີ້, ກົມຄຸ້ມຄອງປ່າສະຫງວນ ໄດ້ຮ່ວມກັບກຸ່ມຜູ້ປະກອບການທ່ອງທ່ຽວ ຄົ້ນຄວ້າປັບປຸງດຳລັດ ວ່າດ້ວຍປ່າສະຫງວນ ເລກທີ 134 ເລກທີ 134/ລບ ເພື່ອກຳນົດຂັ້ນຕອນລະອຽດໃນການສຳປະທານເຂດປ່າສະຫງວນເພື່ອການທ່ອງທ່ຽວ (ຈະໄດ້ສອບຖາມເອົາຂໍ້ມູນເພີ່ມເຕີມຈາກກົມຄຸ້ມຄອງປ່າສະຫງວນຕາມພາຍຫຼັງ).
  - ສຳລັບ ຂໍ້ສະເໜີປັບປຸງ ຄ່າທຳນຽມດ້ານສິ່ງແວດລ້ອມ ທີ່ ລະບຸໃນ ລັດຖະບັນຍັດ ເລກທີ 003/ປປທ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ (ພາກທຸລະກິດສະເໜີໃຫ້ຂະແໜງການກ່ຽວຂ້ອງ ແຍກຄ່າທຳນຽມດ້ານສິ່ງແວດລ້ອມ ລະຫວ່າງ ໂຄງການພັດທະນາການທ່ອງທ່ຽວທີ່ອີງໃສ່ການອະນຸລັກທຳມະຊາດ ອອກຈາກຄ່າທຳນຽມດ້ານສິ່ງແວດ ລ້ອມຂອງໂຄງການປະເພດອື່ນ ເຊັ່ນ: ໂຄງການໄຟຟ້າ ຫຼືບໍ່ແຮ່ ເປັນຕົ້ນ, ແລະ ສະເໜີໃຫ້ຂອດຂັ້ນການກວດກາດ້ານສິ່ງແວດລ້ອມ ສະດວກ ແລະ ມີຄ່າໃຊ້ຈ່າຍຫຼຸດລົງ) ແມ່ນຍັງບໍ່ມີຄວາມຄືບໜ້າ.
  - ຕໍ່ກັບຂໍ້ສະເໜີການຈັດການມົນລະພິດທາງອາກາດ, ທາງນ້ຳ ແລະ ບັນຫາຂີ້ເຫຍື້ອຊະຊາຍທີ່ສົ່ງຜົນກະທົບທາງລົບແກ່ການທ່ອງທ່ຽວ, ກອງປະຊຸມໄດ້ຕົກລົງເຫັນດີ ໃນການຕັ້ງຄະນະກຳມະການຄົ້ນຄວ້າ ແລະ ແກ້ໄຂບັນຫາມົນລະພິດ ແລະ ບັນຫາຂີ້ເຫຍື້ອຊະຊາຍ ທີ່ສົ່ງຜົນກະທົບທາງລົບ ໃຫ້ແກ່ການທ່ອງທ່ຽວ ເຂົ້າຮ່ວມເປັນຄະນະພາຍໃຕ້ສະພາສົ່ງເສີມການທ່ອງທ່ຽວ.

## 2. ຂັ້ນຕອນການອະນຸມັດ ການຈັດກິດຈະກຳ ກິລາ ເພື່ອການທ່ອງທ່ຽວ

ສະພາບບັນຫາ: ການເຮັດກິດຈະກຳກິລາທີ່ດຶງດູດນັກທ່ອງທ່ຽວຈາກຕ່າງປະເທດ ເຊັ່ນ ການແຂ່ງແລ່ນມາລາທອນ, ແລະການແຂ່ງລົດຖີບ ແມ່ນມີນັບມື້ນັບຫລາຍ ແລະ ຊ່ວຍ ກະຕຸ້ນກິດຈະກຳການທ່ອງທ່ຽວໃຫ້ຫຼາຍຂື້ນ. ແຕ່ປະຈຸບັນ ການຂໍອະນຸຍາດ ຈັດກິດຈະກຳປະເພດດັ່ງກ່າວ ແມ່ນຍັງມີຄວາມບໍ່ຊັດເຈນ ແລະເປັນຂໍ້ຫຍຸ້ງຍາກໃນຂອດການຂໍອະນຸຍາດ ຈາກພາກສ່ວນທີ່ກ່ຽວ ເຊິ່ງເຫັນວ່າບໍ່ເປັນການສົ່ງເສີມການທ່ອງທ່ຽວ ໃນ ສປປລາວ ເທົ່າທີ່ຄວນ. ໃນການຈັດຕັ້ງປະຕິບັດ ການຂໍອະນຸຍາດຈັດກິດຈະກຳກິລາເພື່ອກະຕຸ້ນການທ່ອງທ່ຽວ ເຊັ່ນ ການແຂ່ງແລ່ນມາລາທອນ, ແລະການແຂ່ງລົດຖີບ, ຜູ້ປະກອບການແມ່ນຕ້ອງໄດ້ຮັບການອະນຸມັດຈາກ ທັງກະຊວງສຶກສາທິການ ແລະ ກິລາ ແລະ ຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ເຊິ່ງເຫັນວ່າ ມີຫຼາຍຂອດຂັ້ນ ແລະ ໃຊ້ເວລາດົນເກີນໄປ ສຳລັບການອະນຸມັດການຈັດກິດຈະກຳກິລາປະເພດດັ່ງກ່າວ.

**ຂໍ້ສະເໜີວິທີແກ້ໄຂ**

1) ສະເໜີໃຫ້ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນໃຈກາງປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ ແລະ ເພື່ອເປັນການສົ່ງເສີມການທ່ອງທ່ຽວຢ່າງເປັນຮູບປະທຳ.
2) ສະເໜີໃຫ້ຂະແໜງສຶກສາທິການ ແລະ ກິລາ ອອກຄຳແນະນຳລະອຽດກ່ຽວກັບການຈັດກິດຈະກຳກິລາເພື່ອການທ່ອງທ່ຽວ ໂດຍສະເພາະ ແມ່ນ ໃຫ້ລະບຸຂັ້ນຕອນ, ຄ່າທຳນຽມ ແລະ ຄ່າບໍລິການ ແລະ ຈຳນວນເຈົ້າໜ້າທີ່ຮັກສາຄວາມປອດໄພ (ແລະ ຄ່າໃຊ້ຈ່າຍທີ່ຕິດພັນ) ໃນກິດຈະກຳກິລາ ແຕ່ລະຂະໜາດ ແລະ ປະເພດ ແລະ ໃຫ້ມີການຈັດຕັ້ງເປັນເອກະພາບກັນໃນທົ່ວທຸກແຂວງ.

**ຂະແໜງການທີ່ກ່ຽວຂ້ອງ**

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
2. ກົມກິລາມວນຊົນ, ກະຊວງສຶກສາທິການ ແລະ ກິລາ
3. ກົມກິລາລະດັບສູງ, ກະຊວງສຶກສາທິການ ແລະ ກິລາ

**ຄວາມຄືບໜ້າຂອງການແກ້ໄຂ**

- ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຈັດປະຊຸມປຶກສາຫາລື ເພື່ອຕິດຕາມການແກ້ໄຂບັນຫາທີ່ພາກທຸລະກິດໄດ້ຍົກຂຶ້ນໃນກອງປະຊຸມທຸລະກິດລາວຄັ້ງທີ 12 ກັບຂະແໜງການຕ່າງໆທີ່ກ່ຽວຂ້ອງໃນເດືອນ ກໍລະກົດ ແລະ ສິງຫາ 2020 ເຊິ່ງສາມາດສະຫຼຸບໄດ້ຄື: ຂັ້ນຕອນການອະນຸມັດ ການຈັດກິດຈະກຳກິລາ ເພື່ອການທ່ອງທ່ຽວ: ປະຈຸບັນ ກະຊວງສຶກສາທິການ ແລະ ກິລາ ພວມປັບປຸງນິຕິກຳຂອງກະຊວງ ແລະ ຈະໄດ້ລະບຸໄລຍະເວລາໃນການອະນຸມັດກິດຈະກຳກິລາໃຫ້ຊັດເຈນຕື່ມ(ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ).
- ຜົນການປຶກສາຫາລື ຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ( ບັນຫາທີ່ຕິດພັນກັບການທ່ອງທ່ຽວ) ຄັ້ງວັນທີ 17 ກັນຍາ 2019:
  - ຕາງໜ້າ ກົມກິລາລະດັບສູງ, ກະຊວງສຶກສາທິການ ແລະ ກິລາ: ຕໍ່ກັບການຈັດຕັ້ງກິດຈະກຳກິລາ ມີ 2 ປະເພດຄື ກິລາມວນຊົນ (ສຳລັບການຈັດກິດຈະກຳທົ່ວໄປ) ແລະ ກິລາລະດັບສູງ (ສຳລັບການແຂ່ງຂັນກິລາທີ່ໃຊ້ລະບຽບຫຼັກການການຕັດສິນ, ເຕັກນິກ, ກຳມະການ ແລະອື່ນໆ ທີ່ອີງໃສ່ມາດຕະຖານສາກົນ).

ສໍາລັບກິລາລະດັບສູງ ການຂໍອະນຸມັດ ມີ 2 ຂັ້ນຄື: ຂັ້ນກະຊວງສຶກສາທິການ ແລະ ຂັ້ນສໍານັກງານນາຍົກລັດຖະມົນຕີ. ຖ້າກິດຈະກໍາແຂ່ງຂັນກິລາພາຍໃນປະເທດ ແມ່ນມີພຽງແຕ່ຂັ້ນກະຊວງສຶກສາທິການອະນຸມັດ ເພື່ອປະສານງານໃຫ້ນັກກິລາໃນທົ່ວປະເທດມາເຂົ້າຮ່ວມການແຂ່ງຂັນ. ຖ້າກິດຈະກໍາແຂ່ງຂັນກິລາລະດັບສາກົນ ເອກະສານຕ້ອງຜ່ານກະຊວງສຶກສາທິການເພື່ອຮັບຮອງເຕັກນິກການແຂ່ງຂັນ, ແລະຜ່ານ ສນຍ ເພື່ອຮັບຮອງຄວາມປອດໄພ ແລະ ຊີ້ນໍາກະຊວງກ່ຽວຂ້ອງ ເຊັ່ນ ກະຊວງການຕ່າງປະເທດເພື່ອຕິດຕາມກ່ຽວກັບການເຂົ້າມາຂອງນັກກິລາຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເພື່ອຄຸ້ມຄອງຄວາມສະຫງົບໃຫ້ແກ່ກິດຈະກໍາ. ສ່ວນການຈັດກິດຈະກໍາຢູ່ຕ່າງແຂວງແມ່ນທາງພາກສ່ວນສະເໜີຫາຂັ້ນແຂວງ, ບໍ່ໄດ້ຜ່ານສູນກາງ. ສະເໜີໃຫ້ມີກອງປະຊຸມລະດັບວິຊາການກັບພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະແມ່ນ ກະຊວງສຶກສາທິການ, ກະຊວງ ຖວສ, ກະຊວງ ປກສ ແລະ ກະຊວງ ການຕ່າງປະເທດ ເພື່ອກໍານົດພາລະບົດບາດໃຫ້ຊັດເຈນ, ແລະສະເໜີໃຫ້ມີການຈັດກອງປະຊຸມ ເພື່ອສຶກສາຈຸດຄ້າງຄາ ແລະ ຖອດຖອນບົດຮຽນຈາກກິດຈະກໍາທີ່ດໍາເນີນການແລ້ວ ແຕ່ລະຄັ້ງ ເພື່ອຊອກວິທີແກ້ໄຂໃນຕໍ່ໜ້າ.

### 3. ຂັ້ນຕອນການອະນຸມັດໃບແຈ້ງລາຍຊື່ນັກທ່ອງທ່ຽວທີ່ເຂົ້າມາໃນ ສປປ ລາວ

ສະພາບບັນຫາ: ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ, ທີ່ເຂົ້າມາທ່ອງທ່ຽວເປັນກຸ່ມ ໃນ ສປປລາວ, ລັດຖະບານໄດ້ບານໄດ້ອອກ ແຈ້ງການເລກທີ 1997/ຫສນຍ ລົງວັນທີ 19/12/2016 ໃຫ້ມີການຍົກເລີກໃບອະນຸຍາດຂຶ້ນແຜນນຳທ່ຽວ (ຫຼື ໃບ Telex) ເນື່ອງຈາກຖືວ່າເປັນການສ້າງຂໍ້ຫຍຸ້ງຍາກທີ່ບໍ່ຈຳເປັນ ແລະ ເປັນການເພີ່ມ ພາລະ ແລະ ຕົ້ນທຶນໃຫ້ຜູ້ປະກອບການ. ກ່ອນໜ້ານີ້ ຈຸດປະສົງຫຼັກຂອງການເຮັດໃບ Telex ແມ່ນເພື່ອໃຫ້ຂະແໜງການກ່ຽວຂ້ອງໃຊ້ເກັບກຳຂໍ້ມູນ ລາຍລະອຽດຕ່າງໆກ່ອນທີ່ຈະສາມາດນຳກຸ່ມນັກທ່ອງທ່ຽວເຂົ້າມາໄດ້ ເຊັ່ນ: ລາຍຊື່ນັກທ່ອງທ່ຽວ, ສະຖານທີ່ພັກ, ແລະ ສະຖານທີ່ທ່ອງທ່ຽວຕ່າງໆ, ແລະ ອີກຈຸດປະສົງໜຶ່ງ ກໍ່ເພື່ອປ້ອງກັນບໍ່ໃຫ້ມີການນຳນັກທ່ອງທ່ຽວທີ່ທາງການ ບໍ່ອະນຸຍາດໃຫ້ເຂົ້າປະເທດ ເຂົ້າມາໄດ້. ແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງ ເນື່ອງຈາກຖ້າບໍລິສັດນຳທ່ຽວບໍ່ປະຕິບັດຕາມ ແຜນທີ່ລະບຸໄວ້ (ເຊັ່ນ ອາດມີການປ່ຽນຮ້ານອາຫານ, ຫຼື ສະຖານທີ່ທ່ອງທ່ຽວ ອີງຕາມສະພາບຄວາມເໝາະສົມຂອງມື້ທ່ອງທ່ຽວຕົວຈິງ) ກໍ່ຈະຖືກປັບໄໝ ເຊິ່ງຜູ້ປະກອບການນຳທ່ຽວ ເຫັນວ່າເປັນຂໍ້ຫຍຸ້ງຍາກຫຼາຍໃຫ້ແກ່ບໍລິສັດນຳທ່ຽວ ກໍ່ຄືໃຫ້ກັບນັກທ່ອງທ່ຽວ. ສະນັ້ນ ໃນປີ 2017 ພາກລັດຈຶ່ງໄດ້ເອົາໃຈໃສ່ແກ້ໄຂບັນຫາດັ່ງກ່າວ ດ້ວຍການ ປະກາດແຈ້ງການໃຫ້ຍົກເລີກ ໃບ Telex ຢ່າງເປັນທາງການ ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ ການທ່ອງທ່ຽວ. ແຕ່ໃນຕົວຈິງ ພາຍຫລັງມີແຈ້ງການຍົກເລີກນຳໃຊ້ໃບ Telex ສະບັບນີ້ອອກມາ, ກໍ່ໄດ້ມີການສ້າງຂອດຂັ້ນອັນໃໝ່ຂຶ້ນມາ ເຊິ່ງປ່ຽນຊື່ ຈາກການປະກອບເອກະສານ ໃບ Telex ມາເປັນ ໃບສະເໜີ ແທນ, ເຊິ່ງມີຈຸດປະສົງ ແລະ ຂອດຂັ້ນ ທີ່ຄ້າຍຄືກັນກັບການປະກອບໃບ Telex. ຜູ້ປະກອບການເຫັນວ່າ ການເຮັດໃບສະເໜີ ແມ່ນບໍ່ມີຄວາມຈຳເປັນທີ່ສົມເຫດເຫດສົມຜົນ, ບໍ່ເປັນການສົ່ງເສີມການທ່ອງທ່ຽວ, ແລະ ສ້າງຂໍ້ຫຍຸ້ງຍາກໃຫ້ບໍລິສັດນຳທ່ຽວ ທີ່ຕ້ອງກະກຽມເອກະສານທຸກຄັ້ງ ທີ່ຈະນຳນັກທ່ອງທ່ຽວເຂົ້າມາ, ຄື:

- ຜ່ານມາ ຂະແໜງການກ່ຽວຂ້ອງ ໃຫ້ເຫດຜົນຂອງການຮຽກຮ້ອງເອົາໃບສະເໜີ ແມ່ນ ເພື່ອປ້ອງກັນບໍ່ໃຫ້ບຸກຄົນຕ້ອງຫ້າມເຂົ້າປະເທດ ເຊິ່ງ ພາກທຸລະກິດ ເຫັນວ່າ ນັກທ່ອງທ່ຽວທີ່ຈະເຂົ້າມາ ກໍ່ຕ້ອງມີການຂໍວີຊ່າຈາກສະຖານກົງສຸນ ແລະ ສະຖານທູດ ຮຽບຮ້ອຍແລ້ວ, ແລະ ທີ່ສຳຄັນແມ່ນຕ້ອງໄດ້ຜ່ານດ່ານກວດຄົນເຂົ້າເມືອງ, ສະນັ້ນ ການສະກັດບຸກຄົນຕ້ອງຫ້າມເຂົ້າປະເທດ ຄວນຈະເປັນພາລະບົດບາດຂອງພາກສ່ວນທີ່ມີໜ້າທີ່ສະເພາະເປັນຜູ້ຮັບຜິດຊອບວຽກງານດ້ານນີ້.
- ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ໂດຍຜ່ານບໍລິສັດທ່ອງທ່ຽວ ແມ່ນເປັນພຽງສ່ວນໜ້ອຍ ຖ້າທຽບກັບຈຳນວນນັກທ່ອງທ່ຽວທັງໝົດທີ່ເຂົ້າມາ, ແລະ ນັກທ່ອງທ່ຽວທີ່ເຂົ້າມາໂດຍຜ່ານບໍລິສັດທ່ອງທ່ຽວ ກໍ່ໄດ້ຮັບການຮັບປະກັນ ໂດບບໍລິສັດທ່ອງທ່ຽວທີ່ຈົດທະບຽນ ແລະ ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ຢູ່ແລ້ວ, ໝາຍຄວາມວ່າ ມີຄວາມປອດໄພສູງ ເມື່ອທຽບກັບນັກທ່ອງທ່ຽວທີ່ເຂົ້າມາເອງ.
- ນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວໂດຍຜ່ານບໍລິສັດ ສ່ວນຫຼາຍແມ່ນກຸ່ມທີ່ມີລາຍໄດ້ສູງ, ສາມາດໃຊ້ຈ່າຍຫລາຍ ແລະ ໃຊ້ເວລາທ່ອງທ່ຽວໃນປະເທດຫລາຍ ສະນັ້ນພາກລັດຄວນສົ່ງເສີມ ໂດຍການອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວດັ່ງກ່າວ ເພື່ອເພີ່ມລາຍຮັບຈາກນັກທ່ອງທ່ຽວກຸ່ມນີ້ໃຫ້ຫລາຍຂຶ້ນ.
- ນັກທ່ອງທ່ຽວ ທີ່ເຂົ້າມາ ສປປ ລາວ ດ້ວຍລົດຈັກ, ປະຈຸບັນແມ່ນຕ້ອງປະກອບເອກະສານຜ່ານບໍລິສັດທ່ອງທ່ຽວ ເຊິ່ງກໍ່ເປັນສາຍເຫດໜຶ່ງທີ່ເຮັດໃຫ້ນັກທ່ອງທ່ຽວປະເພດນີ້ຫລຸດລົງ ເນື່ອງຈາກມີຂັ້ນຕອນຫຍຸ້ງຍາກ ຖ້າທຽບກັບຂັ້ນຕອນຂອງປະເທດເພື່ອນບ້ານ. ນັກທ່ອງທ່ຽວປະເພດດັ່ງກ່າວສ່ວນໃຫຍ່ແມ່ນມີກຳລັງຈ່າຍທີ່ສູງ ແລະໃຊ້ໄລຍະເວລາຂອງການທ່ອງທ່ຽວຫລາຍວັນ, ສາມາດ ທ່ອງທ່ຽວໄດ້ຫລາຍຈຸດ ທີ່ຫ່າງໄກສອກຫຼີກ ແລະຍັງສາມາດ ຊ່ວຍໂຄສະນາແຫຼ່ງທ່ອທ່ຽວ ໃນແຕ່ລະເຂດອີກດ້ວຍ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນໃຈກາງປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ ແລະ ເພື່ອເປັນການສົ່ງເສີມການທ່ອງທ່ຽວຢ່າງເປັນຮູບປະທຳ.
2. ສະເໜີໃຫ້ພາກສ່ວນຂະແໜງປ້ອງກັນຄວາມສະຫງົບ ພິຈາລະນາລຶບລ້າງຂັ້ນຕອນການຂໍອະນຸຍາດນຳນັກທ່ອງທ່ຽວ ເປັນກຸ່ມເຂົ້າມາໃນ ສປປລາວ ທັງນີ້ກໍ່ເພື່ອເປັນການອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວສາມາດ ເດີນທາງໄປທ່ອງທ່ຽວໃນເຂດທີ່ພາກລັດອະນຸມັດໃຫ້ເປັນເຂດທ່ອງທ່ຽວໄດ້ທົ່ວປະເທດ ຢ່າງບໍ່ມີຂໍ້ຈຳກັດ ບໍ່ວ່າຈະເປັນກຸ່ມທ່ອງທ່ຽວ, ແບບ ຄາລາວານ ຫຼື ແບບບຸກຄົນ ກໍ່ຕາມ. ໃນໄລຍະເວລາລໍຖ້າການພິຈາລະນາຍົກເລີກການປະກອບເອກະສານໃບສະເໜີ, ສະເໜີໃຫ້ຂະແໜງການທ່ຽວຂ້ອງ ອະນຸຍາດໃຫ້ຜູ້ປະກອບການນຳທ່ຽວ ແຈ້ງລາຍການນຳທ່ຽວ ແລະມອບພັນທະຕ່າງໆ ເປັນລາຍເດືອນ, ໂດຍຜ່ານລະບົບທັນສະໄໝ ຫຼື ນຳໃຊ້ ອີເມວ ຫຼື ແຟກສ ໄດ້ ໂດຍບໍ່ຈຳເປັນຕ້ອງເດີນທາງໄປ ຫ້ອງການທີ່ກ່ຽວຂ້ອງທຸກຄັ້ງ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ, ປະຢັດເວລາລົງ, ແລະ ກໍ່ເປັນການສ້າງຂໍ້ສະດວກໃຫ້ແກ່ຂະແໜງການກ່ຽວຂ້ອງໃນການຄຸ້ມຄອງ.

**ຂະແໜງການທີ່ກ່ຽວຂ້ອງ**

2. ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
3. ກົມຕຳຫຼວດທ່ອງທ່ຽວ, ກະຊວງ ປ້ອງກັນຄວາມສະຫງົບ

**ຄວາມຄືບໜ້າການແກ້ໄຂບັນຫາ ລ່າສຸດ:**

➢ ອີງຕາມໜັງສືແຈ້ງຕອບ ຂອງ ກົມຕຳຫຼວດທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ, ສະບັບເລກທີ 249/ຕທທ, ລົງວັນທີ 29 ເມສາ 2020, ກ່ຽວກັບການນຳໃຊ້ລະບົບເອເລັກໂຕນິກ ແລະ ເຄື່ອງທັນສະໄໝເຂົ້າໃນການຮັບສົ່ງເອກະສານແຈ້ງລາຍຊື່ນັກທ່ອງທ່ຽວ ແລະ ການຊຳລະເງິນຄ່າບໍລິການ, ປະຈຸບັນ ກົມຕຳຫຼວດທ່ອງທ່ຽວ ກຳລັງຂຶ້ນແຜນ ແລະ ຄົ້ນຄວ້າຮ່າງນິຕິກຳ ນຳສະເໜີ ຂັ້ນເທິງ ເພື່ອຮັບຮອງ ສຳລັບການຈັດຕັ້ງປະຕິບັດ (ບໍ່ໄດ້ລະບຸຄາດໝາຍໄລຍະເວລາສຳເລັດ). ພ້ອມດຽວກັນນັ້ນ ໃນກອງປະຊຸມ ວັນທີ 14 ກໍລະກົດ 2020 ພາກທຸລະກິດ ສະເໜີປະກອບສ່ວນອຸປະກອນໄອທີບາງຈຳນວນໃຫ້ແກ່ກົມຕຳຫຼວດທ່ອງທ່ຽວ ເພື່ອທົດສອບການຮັບສົ່ງເອກະສານແຈ້ງລາຍຊື່ນັກທ່ອງທ່ຽວສຳລັບນະຄອນຫຼວງວຽງຈັນ.

- ຜົນການປຶກສາຫາລື ຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການທ່ອງທ່ຽວ) ຄັ້ງວັນທີ 17 ກັນຍາ 2019 ແລະ ຄັ້ງວັນທີ 23 ຕຸລາ 2019
  - ພາກທຸລະກິດ ແລະ ຂະແໜງການກ່ຽວຂ້ອງຂອງພາກລັດ ຕົກລົງເຫັນດີ ສືບຕໍ່ໃຫ້ມີການປະກອບເອກະສານໃບສະເໜີແຈ້ງລາຍຊື່ນັກທ່ອງທ່ຽວ ໃນໄລຍະນີ້, ແຕ່ຂະແໜງການກ່ຽວຂ້ອງຈະຕ້ອງລິເລີ່ມປັບປຸງຂັ້ນຕອນການອະນຸມັດໃບສະເໜີແຈ້ງລາຍຊື່ນັກທ່ອງທ່ຽວ ໃຫ້ສະດວກຂຶ້ນ ດ້ວຍການນຳໃຊ້ລະບົບໄອທີ ແບບງ່າຍດາຍ ໃນເບື້ອງຕົ້ນ ( ອີເມວ , ແຟກ) ໃນການຮັບ ແລະ ອະນຸມັດ ໃບສະເໜີແຈ້ງລາຍຊື່ນັກທ່ອງທ່ຽວ ຈົນກ້າວໄປເຖິງການໃຊ້ລະບົບໂປແກຼມຄອມພິວເຕີໃນຕໍ່ໜ້າ ຖ້າມີງົບປະມານພຽງພໍ, ແລະ ໃນຕໍ່ໜ້າ ອາດພິຈາລະນາລຶບລ້າງຂັ້ນຕອນດັ່ງກ່າວ.

### 4. ການປັບປຸງຍຸດທະສາດການສົ່ງເສີມການທ່ອງທ່ຽວ

ສະພາບບັນຫາ: ເຖິງແມ່ນວ່າຈຳນວນນັກທ່ອງທ່ຽວ ແລະ ລາຍຮັບຂອງປີຜ່ານມາ ມີທ່າອ່ຽງທີ່ດີຂຶ້ນກໍ່ຕາມ ທາງພາກທຸລະກິດຍັງເຫັນວ່າ ສປປລາວ ຍັງຂາດການນຳພາການພັດທະນາການທ່ອງທ່ຽວ ຢ່າງທີ່ຖືກເປົ້າໝາຍ, ແລະ ເຫັນວ່າ ການໂຄສະນາສົ່ງເສີມ ການທ່ອງທ່ຽວກໍ່ຍັງບໍ່ພຽງພໍ. ການປັບປຸງພັດທະນາພື້ນຖານໂຄງລ່າງ ແລະ ການບູລະນະແຫຼ່ງ ທ່ອງທ່ຽວຕ່າງໆ ກໍ່ຍັງປະສົບກັບບັນຫາແຫຼ່ງທຶນ ເນື່ອງຈາກວ່າ ການເກັບເງິນເຂົ້າກອງທຶນສົ່ງເສີມການ ທ່ອງທ່ຽວ ແລະ ການບໍລິຫານກອງທຶນເອງກໍ່ຍັງບໍ່ທັນເປັນລະບົບ ຈຶ່ງບໍ່ສາມາດນຳໃຊ້ກອງທຶນເພື່ອມາພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ກ້າວກະໂດດໄດ້.

ສະນັ້ນ, ໂດຍເຫັນໄດ້ເຖິງບັນຫາຕ່າງໆທີ່ໄດ້ກ່າວມາຂ້າງເທິງ, ຜູ້ປະກອບການເຫັນວ່າ ການມີສ່ວນຮ່ວມຂອງພາກທຸລະກິດ ຢ່າງເປັນລະບົບ ໃນການວາງແຜນຍຸດທະສາດພັດທະນາ, ສົ່ງເສີມ ແລະ ໂຄສະນາການທ່ອງທ່ຽວ ທີ່ຖືກເປົ້າໝາຍ ແມ່ນມີຄວາມຈຳເປັນຫຼາຍທີ່ສຸດ ທີ່ຈະນຳພາໃຫ້ການທ່ອງທ່ຽວຂອງ ສປປລາວ ມີການພັດທະນາຫລາຍຂຶ້ນ ແລະ ສາມາດດຶງດູດໃຫ້ນັກທ່ອງທ່ຽວໃຫ້ເພີ່ມຂຶ້ນ, ແລະ ເປັນການນຳໃຊ້ງົບປະມານ ໃຫ້ເກີດປະໂຫຍດສູງສຸດ. ພາກທຸລະກິດເຫັນວ່າມີຄວາມຈຳເປັນທີ່ສຸດທີ່ຈະຕ້ອງ ມີການສ້າງຕັ້ງສະພາບໍລິຫານສົ່ງເສີມການທ່ອງທ່ຽວ ເພື່ອໃຫ້ພາກລັດ ແລະທຸລະກິດສາມາດເຮັດວຽກຮ່ວມ ກັນຢ່າງມີປະສິດທິພາບ. ໂດຍອີງຕາມບົດຮຽນຂອງປະເທດຕ່າງໆ ເຫັນວ່າການສ້າງຕັ້ງສະພາບໍລິຫານສົ່ງເສີມການທ່ອງທ່ຽວນັ້ນ ແມ່ນຕ້ອງໃຫ້ເປັນອົງກອນທີ່ມີຄວາມເປັນເອກະລາດ, ມີສິດອຳນາດໃນ ການບໍລິຫານຈັດການດ້ານຕ່າງໆ ໂດຍມີຄະນະປະຈຳສະພາບໍລິຫານເປັນຜູ້ຊີ້ນຳ ແລະ ມີທີມບໍລິຫານທີ່ເປັນມືອາຊີບ ທີ່ສາມາດຈັດຕັ້ງປະຕິບັດແຜນວຽກງານທ່ອງທ່ຽວ ໄດ້ຢ່າງມີປະສິດທິພາບ. ອົງກອນດັ່ງກ່າວນີ້ຈະເປັນຜູ້ນຳຫລັກໃນການ ວາງແຜນຍຸດທະສາດດ້ານການພັດທະນາ ແລະ ໂຄສະນາການທ່ອງທ່ຽວ, ການຈັດສັນການນຳໃຊ້ກອງທຶນສົ່ງເສີມການທ່ອງທ່ຽວ, ແລະ ທີ່ສຳຄັນ ແມ່ນຕ້ອງເປັນອົງກອນທີ່ມີຄວາມໂປ່ງໃສ ສາມາດກວດສອບ ໄດ້ຈາກຜູ້ກວດສອບພາຍນອກ ກ່ຽວກັບລາຍຮັບລາຍຈ່າຍທັງໝົດ. ບັນດາປະເທດໃນກຸ່ມອາຊຽນ ກໍ່ມີອົງກອນອິດສະຫລະ ເຮັດໜ້າທີ່ບໍລິຫານ ແລະສົ່ງເສີມການທ່ອງທ່ຽວສະເພາະ

ນອກຈາກນີ້ ປະຈຸບັນການເກັບເງິນຈາກນັກທ່ອງທ່ຽວ 1 ໂດລາຕໍ່ຄົນ ແມ່ນບໍ່ສາມາດປະຕິບັດໄດ້ຢ່າງເປັນເອກະພາບກັນ (ເຊັ່ນ ຕາມການລາຍງານຂອງຜູ້ປະກອບການ ເຫັນວ່າ ແຂວງບໍ່ແກ້ວເກັບຢູ່ດ່ານ, ນະຄອນຫຼວງວຽງຈັນ ເກັບຢູ່ນຳບໍລິສັດທ່ອງທ່ຽວ, ຈຳປາສັກ ເກັບທັງຢູ່ດ່ານ ແລະ ນຳບໍລິສັດທ່ອງທ່ຽວ ເປັນຕົ້ນ). ນອກຈາກນີ້ ກໍ່ຍັງບໍ່ມີບົດແນະນຳ ການເກັບເງິນກອງທຶນການທ່ອງທ່ຽວ ແລະ ການນຳໃຊ້ທີ່ຊັດເຈນ. ການເກັບສ່ວນໃຫຍ່ແມ່ນໄດ້ພຽງແຕ່ຈາກບໍລິສັດທ່ອງທ່ຽວ ເຊິ່ງມີພຽງສັດສ່ວນທີ່ໜ້ອຍຫຼາຍ ຖ້າທຽບກັບນັກທ່ອງທ່ຽວທີ່ເຂົ້າມາທັງໝົດ ເຊິ່ງກໍ່ເປັນສາເຫດທີ່ເຮັດໃຫ້ລັດຖະບານ ບໍ່ສາມາດເກັບລາຍຮັບເພື່ອໄປສົມທົບກອງທຶນ ສົ່ງເສີມການ ທ່ອງທ່ຽວໄດ້ຢ່າງຄົບຖ້ວນ. ການເກັບເງິນກອງທຶນສົ່ງເສີມການທ່ອງທ່ຽວ ຈາກບໍລິສັດທ່ອງທ່ຽວ ກໍ່ເຫັນວ່າມີລັກສະນະເກັບຊ້ຳຊ້ອນ ເຊັ່ນຖ້າວ່າ ນັກທ່ຽວທ່ອງຊື້ ແພັກເກັດທ່ອງທ່ຽວ ຈາກຫລາຍບໍລິສັດ ກໍ່ຕ້ອງໄດ້ເສຍ 1ໂດລາ ທຸກຄັ້ງ, ເຊິ່ງເຫັນວ່າບໍ່ເໝາະສົມ. ພາກສ່ວນກ່ຽວຂ້ອງ ກໍ່ຍັງບໍ່ໄດ້ມີ ການປະເມີນ ຫຼືເປີດເຜີຍຂໍ້ມູນກ່ຽວກັບການເກັບເງິນກອງທຶນ ແລະ ການຈັດສັນງົບປະມານເພື່ອນຳໃຊ້ກອງທຶນໃຫ້ຜູ້ມີສ່ວນກ່ຽວຂ້ອງຮັບຮູ້. ຜູ້ປະກອບການ ຄວນມີສ່ວນຮ່ວມໃນການຕັດສິນໃຈ ຫຼືແນະນຳ ການນຳໃຊ້ກອງທຶນສົ່ງເສີມການທ່ອງທ່ຽວ ເພື່ອໃຫ້ເກີດປະໂຫຍດສູງສຸດແກ່ການທ່ອງທ່ຽວ.

**ຂໍ້ສະເໜີວິທີແກ້ໄຂ:**

1. ສະເໜີໃຫ້ທົບທວນຄືນປະສິດຕິຜົນຂອງ ແຜນການສົ່ງເສີມການທ່ອງທ່ຽວ ທີ່ມີໃນປະຈຸບັນ ແລະມີການປັບປຸງແຜນການສົ່ງເສີມການທ່ອງທ່ຽວລະດັບຊາດ ອີງຕາມການປະເມີນຜົນແຕ່ລະໄລຍະ. ການສ້າງແຜນການ

ສົ່ງເສີມການທ່ອງທ່ຽວ ຄວນອີງໃສ່ບົດຮຽນຂອງປະເທດທີ່ປະສົບຜົນສຳເລັດໃນການພັດທະນາການທ່ອງທ່ຽວ, ແລະ ມີການຈັດຕັ້ງປະຕິບັດຕາມແຜນງານທີ່ວາງໄວ້. ຄວນໃຫ້ພາກທຸລະກິດ ມີສ່ວນຮ່ວມໃນການສ້າງແຜນດັ່ງກ່າວ.

2. ສະເໜີໃຫ້ ສຶກສາຄວາມເປັນໄປໄດ້ ເພື່ອສ້າງຕັ້ງຄະນະກຳມະການສົ່ງເສີມການທ່ອງທ່ຽວຂອງ ສປປ ລາວ ໃຫ້ເປັນອົງກອນເອກະລາດ ເພື່ອນຳພາດ້ານການຕະຫຼາດ ແລະການສົ່ງເສີມການທ່ອງທ່ຽວ ໂດຍໃຫ້ພາກທຸລະກິດຈາກຂະແໜງການທີ່ປິ່ນອ້ອມການທ່ອງທ່ຽວ ແລະ ພາກລັດທີ່ກ່ຽວຂ້ອງຫຼາຍຝ່າຍ ເປັນຄະນະປະຈຳສະພາບໍລິຫານ, ເພື່ອນຳພາໃນການປຶກສາຫາລື, ສ້າງ ແລະຕິດຕາມການຈັດຕັ້ງປະຕິບັດ ຍຸດທະສາດການສົ່ງເສີມ ແລະ ໂຄສະນາການ ທ່ອງທ່ຽວ ທັງໃນຂັ້ນສູນກາງ ແລະ ຂັ້ນແຂວງ, ແລະ ມີ ທີມບໍລິຫານທີ່ເປັນມືອາຊີບເປັນຜູ້ຈັດຕັ້ງປະຕິບັດວຽກງານ.
3. ສະເໜີໃຫ້ປະເມີນຄືນປະສິດຕິຜົນ ໃນການຈັດຕັ້ງປະຕິບັດນິຕິກຳທີ່ຕິດພັນກັບການເກັບກອງທຶນ ສົ່ງເສີມການທ່ອງທ່ຽວ (ດຳລັດ ວ່າດ້ວຍກອງທຶນການທ່ອງທ່ຽວ ເລກທີ 119/ລບ ລົງວັນທີ 10 ເມສາ 2017)
4. ຖ້າເຫັນວ່າ ນິຕິກຳທີ່ມີຢູ່ ບໍ່ມີປະສິດຕິຜົນພຽງພໍ ກໍ່ສະເໜີໃຫ້ມີການອອກລະບຽບໃໝ່ ກ່ຽວກັບການ ການຈັດເກັບເງິນເຂົ້າກອງທຶນສົ່ງເສີມການທ່ອງທ່ຽວ ແລະ ຈຸດປະສົງການນຳໃຊ້ ທີ່ຊັດເຈນ. ໃນການຈັດຕັ້ງປະຕິບັດການຈັດເກັບ ກໍ່ຄວນໃຫ້ເປັນເອກະພາບທົ່ວປະເທດ ແລະໃຫ້ມີຊ່ອງທາງການຈ່າຍ ທີ່ສະດວກສະບາຍເພື່ອຮັບປະກັນໃຫ້ລາຍຮັບໄດ້ຕາມເປົ້າໝາຍ ແລະ ກົງກັບຈຳນວນນັກທ່ອງທ່ຽວທີ່ເຂົ້າມາ.
5. ຄວນມີການລາຍງານຜົນຈາກການຈັດເກັບເງິນກອງທຶນສົ່ງເສີມການທ່ອງທ່ຽວ ແລະ ການນຳໃຊ້ ໃຫ້ຜູ້ມີສ່ວນກ່ຽວຂ້ອງ ຮັບຊາບ ເປັນແຕ່ລະໄລຍະ.

**ຂະແໜງການທີ່ກ່ຽວຂ້ອງ**

1. ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

**ຄວາມຄືບໜ້າລ່າສຸດ**

- ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮ່ວມກັບ ສຄອຊ ໄດ້ຈັດປະຊຸມປຶກສາຫາລື ເພື່ອຕິດຕາມການແກ້ໄຂບັນຫາທີ່ພາກທຸລະກິດໄດ້ຍົກຂຶ້ນໃນກອງປະຊຸມທຸລະກິດລາວຄັ້ງທີ 12 ກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ ໃນເດືອນ ກໍລະກົດ ແລະ ສິງຫາ 2020 ເຊິ່ງສາມາດສະຫຼຸບໄດ້ຄື: ການປັບປຸງຍຸດທະສາດການສົ່ງເສີມການທ່ອງທ່ຽວ: ໄດ້ມີການຕົກລົງເຫັນດີດ້ານຫຼັກການ ໃນການສ້າງຕັ້ງສະພາສົ່ງເສີມການທ່ອງທ່ຽວ ເຊິ່ງມີການເຂົ້າຮ່ວມຂອງພາກລັດຫຼາຍຝ່າຍ ແລະ ພາກທຸລະກິດ ແລະ ມີທີມງານທີ່ມີປະສົບການເປັນຜູ້ບໍລິຫານ. ເບື້ອງຕົ້ນແມ່ນມອບໃຫ້ກົມຄຸ້ມຄອງການທ່ອງທ່ຽວ ຄົ້ນຄວ້າ ເພື່ອຮ່າງນິຕິກຳໃນການສ້າງຕັ້ງ ເພື່ອນຳສະເໜີຕໍ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ. ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ ອອກຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າ ສ້າງນິຕິກຳກ່ຽວກັບຮ່າງດຳລັດວ່າດ້ວຍສະພາສົ່ງເສີມການທ່ອງທ່ຽວ ເລກທີ 530/ຖວທ ລົງວັນທີ 02 ກັນຍາ 2020 ເພື່ອຄົ້ນຄວ້າ ແລະ ສ້າງ ນິຕິກຳກ່ຽວກັບ ຮ່າງດຳລັດວ່າດ້ວຍສະພາສົ່ງເສີມການທ່ອງທ່ຽວ.
- ຜົນຈາກກອງປະຊຸມປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການທ່ອງທ່ຽວໃນ ສ ປປ ລາວ) ຄັ້ງວັນທີ 17 ກັນຍາ 2019:
    - ໃນໄລຍະຜ່ານມາທາງ ກະຊວງ ຖວທ ໄດ້ສ້າງແຜນຍຸດທະສາດໃນຫຼາຍລະດັບ ທັງລະດັບຊາດ, ລະດັບພາກ ແລະ ລະດັບແຂວງ, ເຊັ່ນ ແຜນຍຸດທະສາດການພັດທະນາການທ່ອງທ່ຽວຂອງ ສປປ

ລາວ (ຮັບຮອງໂຍ ນາຍົກລັດຖະມົນຕີ), ແຜນພັດທະນາການທ່ອງທ່ຽວລະດັບພາກ (ຮັບຮອງໂດຍ ລມຄ ກະຊວງ ຖວທ), ແຜນສົ່ງເສີມດ້ານການຕະຫຼາດການທ່ອງທ່ຽວ ແລະ ປະຈຸບັນ ກໍາລັງສ້າງ ແຜນພັດທະນາສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍການທ່ອງທ່ຽວ. ໃນການສ້າງແຜນ ແມ່ນໄດ້ເຊີນ ຫຼາຍພາກສ່ວນຈາກພາກລັດ ເຂົ້າຮ່ວມປະກອບຄໍາຄິດເຫັນຕັ້ງແຕ່ເລີ່ມຕົ້ນສ້າງແຜນ, ສ່ວນແຜນ ລະດັບຂັ້ນແຂວງ ຜ່ານມາຍັງມີຄວາມຫຍຸ້ງຍາກທາງດ້ານງົບປະມານ ຈິ່ງບໍ່ໄດ້ກວມເອົາພາກທຸລະກິດ ຂັ້ນສູນກາງເຂົ້າຮ່ວມ ແຕ່ໄດ້ເຊີນພາກທຸລະກິດລະດັບທ້ອງຖິ່ນເຂົ້ານໍາທຸກຄັ້ງ. ສະຖິຕິນັກທ່ອງທ່ຽວ ໃນ 6 ເດືອນຕົ້ນປີ 2019 ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນ ສປປ ລາວ ປະມານ 2.2 ລ້ານຄົນ (ເພີ່ມຂຶ້ນ 5% ທຽບກັບໄລຍະດຽວກັນໃນປີ 2018), ໂດຍນໍາໃຊ້ວິທີການຄິດໄລ່ຂອງອົງ ການທ່ອງທ່ຽວໂລກ. ສໍາລັບນະໂຍບາຍສົ່ງເສີມ ການພັດທະນາການທ່ອງທ່ຽວທີ່ອີງໃສ່ທໍາມະຊາດ ປັດຈຸບັນຍັງບໍ່ທັນມີການຕິດຕາມປະເມີນຜົນແຜນຍຸດທະສາດຢ່າງເປັນລະບົບ, ຍັງບໍ່ທັນເຂົ້າເຖິງເທົ່າ ທີ່ຄວນ ໂດຍສະເພາະແມ່ນການລະດົມທຶນເຂົ້າໃນການພັດທະນາການທ່ອງທ່ຽວ. ໃນປະຈຸບັນ ກົມ ພັດທະນາການທ່ອງທ່ຽວ ຢູ່ໃນຂັ້ນຕອນສະເໜີພິຈາລະນາຄົ້ນຄວ້າໃນການຮ່າງແຜນພັດທະນາ ການທ່ອງທ່ຽວສີຂຽວ ແລະ ຕົວຊີ້ວັດ (ຮອດ 2030), ນອກຈາກນັ້ນ ກໍ່ໄດ້ຮ່ວມມືກັບ ກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອກໍານົດຕົວຊີ້ວັດໃນການຫຼຸດຜ່ອນການນໍາໃຊ້ວັດ ສະດຸທີ່ບໍ່ເປັນມິດຕໍ່ສິ່ງແວດລ້ອມໃນຂະແໜງການທ່ອງທ່ຽວ, ແລະ ໄດ້ຮ່າງມາດຕະຖານການຈັດອັນ ດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ພ້ອມນັ້ນ ຮ່ວມກັບ ກະຊວງ ວິທະຍາສາດ ແລະ ເຕັກໂນ ໂລຊີ. ນອກຈາກນັ້ນ ໃນຕໍ່ໜ້າຈະໄດ້ຈັດລະດັບກັບຂະແໜງໂຮງແຮມຮ້ານອາຫານເຊັ່ນດຽວກັນ.

- ຕາງໜ້າ ກົມຄຸ້ມຄອງການທ່ອງທ່ຽວ: ຕໍ່ກັບການເກັບກອງທຶນສົ່ງເສີມການທ່ອງທ່ຽວ ເຫັນວ່າໄດ້ ລະບຸໃນດໍາລັດວ່າດ້ວຍກອງທຶນການທ່ອງທ່ຽວ ເລກທີ 119/ລບ ຊັດເຈນແລ້ວ, ແຕ່ຖ້າຫາກເຫັນວ່າ ຍັງມີນິຕິກໍາໃດທີ່ຢາກປັບປຸງ ແມ່ນສາມາດສະເໜີຫາ ລັດຖະມົນຕີກະຊວງ ຖວທ ເພື່ອອອກຂໍ້ຕົກລົງ ປັບປຸງຕື່ມໄດ້.
- ຕາງໜ້າ ກົມແຜນການ ແລະ ການເງິນ, ກະຊວງ ຖວທ: ສໍາລັບບັນຫາການເກັບກອງທຶນ ການທ່ອງທ່ຽວ, ໄດ້ລົງເຜີຍແຜ່ດໍາລັດວ່າດ້ວຍກອງທຶນການທ່ອງທ່ຽວ ເລກທີ 119/ລບ ທັງພາກລັດ ແລະ ພາກທຸລະກິດ ໃນ ແຂວງຕ່າງໆໃນທົ່ວປະເທດ, ແຕ່ເຫັນວ່າ ການຈັດຕັ້ງປະຕິບັດກໍ່ຍັງບໍ່ເປັນ ເອກະພາບກັນໃນແຕ່ລະແຂວງ ແລະການເກັບເງິນກອງທຶນ ກໍ່ຕິດພັນກັບຫຼາຍຂະແໜງການທີ່ ກ່ຽວຂ້ອງ (ເຊັ່ນຂະແໜງການເງິນ) ຈິ່ງເຮັດໃຫ້ການເກັບເງິນກອງທຶນໃນບາງແຂວງ ຍັງບໍ່ໄດ້ປະຕິບັດ ເປັນປົກກະຕິ. ໃນການນໍາໃຊ້ກອງທຶນສົ່ງເສີມການທ່ອງທ່ຽວ ແມ່ນ ແບ່ງໃຫ້ທ້ອງຖິ່ນ 60% ແລະ ສູນກາງ 40%, ການນໍາໃຊ້ສ່ວນໃຫຍ່ແມ່ນໃນວຽກງານການໂຄສະນາ, ການພັດທະນາບຸກຄະລາ ກອນ ແລະ ສິ່ງອໍານວຍຄວາມສະດວກ.

### 5. ນະໂຍບາຍສະໜັບສະໜູນການທ່ອງທ່ຽວ ໃນໄລຍະການແຜ່ລະບາດ ແລະ ຟື້ນຟູນຈາກ ໂຄວິດ 19

ສະພາບບັນຫາ: ໃນໄລຍະການແຜ່ລະບາດຂອງເຊື້ອໄວລັດໂຄວິດ 19 (ເລີ່ມແຕ່ເດືອນ ມີນາ 2020 ເປັນຕົ້ນມາ) ໃນຫຼາຍປະເທດທົ່ວໂລກ ໂດຍສະເພາະແມ່ນໃນປະເທດອ້ອມຂ້າງ ສປປ ລາວ, ໄດ້ສົ່ງຜົນກະທົບໂດຍກົງ ຕໍ່ການດໍາເນີນທຸລະກິດຂອງຂະແໜງການທ່ອງທ່ຽວຂອງ ສປປ ລາວ. ຜ່ານມາ ການຍົກເລີກສາຍການບິນຈາກຕ່າງປະເທດ ທີ່ເດີນທາງມາ ສປປ ລາວ ແລະ ການຈໍາກັດແຫຼ່ງທີ່ມາຂອງນັກທ່ອງທ່ຽວທີ່ມາຜ່ານປະເທດໄທ ເຮັດໃຫ້ຈໍານວນນັກທ່ອງທ່ຽວ ທີ່ເຂົ້າມາ ສປປ ລາວ ຫຼຸດລົງຢ່າງຫຼວງຫຼາຍ ຈຶ່ງເຮັດໃຫ້ທຸລະກິດທີ່ປິ່ນອ້ອມການທ່ອງທ່ຽວ ໄດ້ຮັບຜົນກະທົບຫຼາຍ. ພ້ອມດຽວກັນ ເນື່ອງຈາກທຸລະກິດທີ່ປິ່ນອ້ອມການທ່ອງທ່ຽວມີຜົນກະທົບຕໍ່ເສດຖະກິດ ແລະ ການຈ້າງງານ ຂອງປະເທດ ຂ້ອນຂ້າງຫຼາຍ ຈຶ່ງເຫັນໄດ້ວ່າ ການຫຼຸດລົງຂອງນັກທ່ອງທ່ຽວ ເນື່ອງມາຈາກການແຜ່ລະບາດຂອງໄວຣັສ ໂຄວິດ-19 ທີ່ໄດ້ສົ່ງຜົນກະທົບຕໍ່ກັບລາຍຮັບຂອງບັນດາທຸລະກິດທີ່ປິ່ນອ້ອມການທ່ອງທ່ຽວ ເປັນຕົ້ນແມ່ນ ໂຮງແຮມ, ຮ້ານອາຫານ, ບໍລິສັດທ່ອງທ່ຽວ ແລະ ຜູ້ປະກອບການບໍລິການຂົນສົ່ງໂດຍສານ ໃນ ສປປ ລາວ, ຈະສົ່ງຜົນກະທົບ ຕໍ່ເສດຖະກິດ ແລະ ການຈ້າງງານ ຂອງປະເທດ ຢ່າງຫຼວງຫຼາຍ. ສະນັ້ນ ຂະແໜງການທ່ອງທ່ຽວຈຶ່ງຕ້ອງການໃຫ້ມີນະໂຍບາຍຊ່ວຍເຫຼືອໃນຂະແໜງການດັ່ງກ່າວ.

ອີງຕາມຂໍ້ມູນສະຖິຕິທີ່ສາມາດເກັບກໍາໄດ້ຈາກປີຜ່ານມາ ເຫັນວ່າ:

- ຈໍານວນນັກທ່ອງທ່ຽວຕ່າງປະເທດ ທີ່ເຂົ້າມາທ່ອງທ່ຽວໃນ ສປປ ລາວ ປີ 2019 ເທົ່າກັບ 4.58 ລ້ານຄົນ (ເຊິ່ງ 1.02 ລ້ານຄົນແມ່ນນັກທ່ອງທ່ຽວຈາກ ສປ ຈີນ)
- ໃນ ປີ 2018 ຈໍານວນໂຮງແຮມທັງໝົດ ໃນ ສປປ ລາວ ເທົ່າກັບ 670 ແຫ່ງ, ຈໍານວນເຮືອນພັກ ແລະ ລີສອດ ທັງໝົດ 2432 ແຫ່ງ, ຈໍານວນ ຮ້ານອາຫານ ແລະ ຮ້ານບັນເທີງ ທັງໝົດ 2609 ແຫ່ງ . ຈໍານວນແຮງງານທັງໝົດໃນຂະແໜງການກ່ຽວຂ້ອງກັບບໍລິການທ່ອງທ່ຽວ ເທົ່າກັບ 385,000 ຄົນ (ເຊິ່ງ ຕາມການປະເມີນ ໃນປີ 2015, ປະມານ 130,000 ແມ່ນຈໍານວນແຮງງານທີ່ກ່ຽວຂ້ອງໂດຍກົງກັບຂະແໜງການທ່ອງທ່ຽວ) ;
- ຜ່ານມາ ລາຍຮັບຈາກຂະແໜງທ່ອງທ່ຽວໂດຍກົງ ຫຼາຍກວ່າ US$811 ລ້ານ (ປີ 2018)
- ສ່ວນປະກອບຂອງ GDP ຈາກການທ່ອງທ່ຽວ ເທົ່າກັບ ປະມານ US$2 ຕື້ , ເຊິ່ງກົງກັບ 13.7% ຂອງ GDP ທັງໝົດ (ປີ 2017)

**ຂໍ້ສະເໜີວິທີແກ້ໄຂ ແລະ ຄວາມຄືບໜ້າ**

1. ສະເໜີໃຫ້ ກະຊວງການເງິນ ຫຼຸດຜ່ອນພັນທະອາກອນຂອງພາກທຸລະກິດ ໂດຍສະເພາະ ຫົວໜ່ວຍທຸລະກິດທີ່ປິ່ນອ້ອມການທ່ອງທ່ຽວ ໂດຍຫຼັງຈາກທີ່ມີການໄລ່ລຽງອາກອນຂອງປີ 2019 ແລ້ວ, ສະເໜີໃຫ້ເລື່ອນເວລາຊໍາລະອາກອນຂອງປີ 2019 ໄປອີກ ສອງງວດ **(ແກ້ໄຂແລ້ວ)**
2. ສະເໜີໃຫ້ຂະແໜງການເງິນ ພິຈາລະນາມີມາດຕະການຫຼຸດຜ່ອນການເກັບ ອາກອນມູນຄ່າເພີ່ມ ສໍາລັບ ຄ່າປີ້ຍົນ ແລະ ຜະລິດຕະພັນການທ່ອງທ່ຽວ ໃນຊ່ວງການແຜ່ລະບາດຂອງໄວຣັສ COVID-19,
3. ສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ຮ່ວມປຶກສາຫາລື ກັບ ບັນດາທະນາຄານທຸລະກິດ ເພື່ອ ພິຈາລະນາຄວາມເປັນໄປໄດ້ ໃນການກໍານົດບາງມາດຕະການ ໃນການໃຫ້ຄວາມຊ່ວຍເຫຼືອລູກໜີ້ທະນາຄານ ໃນໄລຍະການແຜ່ລະບາດຂອງເຊື້ອໄວຣັສ COVID-19 ເຊັ່ນ: ການເລື່ອນ ຫຼື ຜ່ອນຊໍາລະດອກເບ້ຍທະນາຄານ ແລະ ອື່ນໆ
4. ໃນໄລຍະວິກິດການໄວຣັສ ທີ່ການດໍາເນີນທຸລະກິດຂອງຫຼາຍຫົວໜ່ວຍກໍາລັງປະສົບບັນຫາ ອາດເປັນເຫດໃຫ້ຜູ້ປະກອບການຈໍາຕ້ອງຊັບຊ້ອນໃຫ້ພະນັກງານອອກບາງຈໍານວນ ເພື່ອໃຫ້ທຸລະກິດຢູ່ລອດ. ອີງຕາມ

ນະໂຍບາຍໃນກົດໝາຍ ວ່າດ້ວຍ ການປະກັນສັງຄົມ (ສະບັບປັບປຸງ), ເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018, ມາດຕາ 9 ກຳນົດໃຫ້ມີການຮັບປະກັນໃຫ້ຜູ້ປະກັນຕົນ ໃນການຮັບເງິນອຸດໜູນຈາກກອງທຶນປະກັນສັງຄົມແຫ່ງຊາດ ໃນກໍລະນີວ່າງງານ. ສະເໜີໃຫ້ອົງການຄຸ້ມຄອງວຽກງານປະກັນສັງຄົມ ໂຄສະນາເຜີຍແຜ່ ນະໂຍບາຍການອຸດໜູນວ່າງງານໃຫ້ແກ່ຜູ້ປະກອບການ ແລະ ຜູ້ອອກແຮງງານ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ພ້ອມທັງ ພິຈາລະນາການຮ້ອງຂໍການອຸດໜູນວ່າງວຽກ ພາຍໃນ 30 ວັນ ຕາມທີ່ໄດ້ລະບຸໃນມາດຕາ 95 ຂອງກົດໝາຍປະກັນສັງຄົມ ເພື່ອຊ່ວຍເຫຼືອຜູ້ວ່າງງານ ໃນຊ່ວງວິກິດຂອງການລະບາດຂອງເຊື້ອໄວຣັສ ໂຄວິດ-19 ນີ້ດ້ວຍ **(ແກ້ໄຂແລ້ວບາງສ່ວນ)**

5. ຕາມມາດຕາ 71 ຂອງ ກົດໝາຍ ວ່າດ້ວຍ ແຮງງານ (ສະບັບປັບປຸງ), ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 ທີ່ກຳນົດໃຫ້ ທຸກຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ ຕ້ອງເຂົ້າປະກັນຕົນ ແລະ ຈ່າຍເງິນເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ເພື່ອໄດ້ຮັບການອຸດໜູນປະກັນສັງຄົມ, ສະເໜີໃຫ້ອົງການຄຸ້ມຄອງວຽກງານປະກັນສັງຄົມ ພິຈາລະນາເລື່ອນເວລາຊຳລະການປະກອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແບບບັງຄັບຂອງປີ 2020 ດ້ວຍ, ເພື່ອຫຼຸດຜ່ອນພາລະຂອງຜູ້ປະກອບການ ໃນຊ່ວງການລະບາດຂອງ ເຊື້ອໄວຣັສ ໂຄວິດ-19 **(ແກ້ໄຂແລ້ວ)**
6. ສະເໜີໃຫ້ພາກລັດພິຈາລະນາ ຕັ້ງກອງທຶນສະເພາະເພື່ອບັນເທົາຜົນກະທົບຈາກການລະບາດຂອງ ເຊື້ອໄວຣັສ COVID-19 ຫຼື ນຳໃຊ້ກອງທຶນທີ່ມີຢູ່ ເຊັ່ນ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊ່ວຍຜູ້ປະກອບການ ຊຳລະດອກເບ້ຍທະນາຄານ ໃນໄລຍະນີ້, ດ້ວຍການກຳນົດກຸ່ມທຸລະກິດເປົ້າໝາຍ ທີ່ມີຜົນກະທົບຕໍ່ເສດຖະກິດ ແລະ ການຈ້າງງານຫຼາຍທີ່ສຸດ ເຊັ່ນ ທຸລະກິດ ປະເພດ ໂຮງແຮມ, ແລະ ໂຮງຈັກໂຮງງານ ເປັນຕົ້ນ ໃນການໃຫ້ການຊ່ວຍເຫຼືອດັ່ງກ່າວ,
7. ສະເໜີໃຫ້ ຂະແໜງການກ່ຽວຂ້ອງຂອງພາກລັດ ພິຈາລະນາ ຫຼຸດອັດຕາຄ່າໄຟຟ້າ ໃຫ້ແກ່ທຸລະກິດໃນຂະແໜງການບໍລິການທີ່ປິ່ນອ້ອມການທ່ອງທ່ຽວ ຄືກັບອັດຕາຂອງທຸລະກິດໃນຂະແໜງອຸດສາຫະກຳ,
8. ເພື່ອສົ່ງເສີມໃຫ້ມີການທ່ອງທ່ຽວລາວ ໂດຍນັກທ່ອງທ່ຽວລາວ ໃຫ້ຫຼາຍຂຶ້ນໃນໄລຍະນີ້, ສະເໜີໃຫ້ພາກລັດນຳໃຊ້ໂອກາດນີ້ ໃນການ ປະກາດວັນພັກລັດຖະການຂອງປີ 2020 ລ່ວງໜ້າ ເພື່ອສົ່ງເສີມໃຫ້ນັກທ່ອງທ່ຽວລາວ ສາມາດວາງແຜນການທ່ອງທ່ຽວພາຍໃນປະເທດຫຼາຍຂຶ້ນ
9. ສະໜັບສະໜູນໂຄງການ "ລາວທ່ຽວລາວ" ທີ່ເລີ່ມໂດຍຜູ້ປະກອບການທ່ອງທ່ຽວ
10. ສະເໜີໃຫ້ທະນາຄານແຫ່ງ ສປປ ລາວ ພິຈາລະນາ ເພີ່ມສະພາບຄ່ອງໃນລະບົບທະນາຄານ ເພື່ອໃຫ້ພາກທຸລະກິດສາມາດເຂົ້າຫາເງິນກູ້ໄດ້ຫຼາຍຂຶ້ນ ເຊັ່ນ ຄົ້ນຄວ້າຄວາມເປັນໄປໄດ້ໃນການຫຼຸດອັດຕາເງິນຄ້ຳປະກັນເງິນຝາກຂອງທະນາຄານທຸລະກິດ ທີ່ກຳນົດໂດຍ ທະນາຄານແຫ່ງ ສປປ ລາວ, ເພື່ອເຮັດໃຫ້ມີເງິນໝູນວຽນໃນລະບົບຫຼາຍຂຶ້ນ. **(ແກ້ໄຂແລ້ວ)**

## ບັນຫາສະເພາະຂອງຂະແໜງກະສິກຳ

1. **ການຢັ້ງຢືນກະສິກຳສະອາດ ຕ້ອງຜ່ານຫຼາຍຂັ້ນຕອນ, ແລະ ມີຄ່າໃຊ້ຈ່າຍສູງ**

ສະພາບບັນຫາ: ໃນປະຈຸບັນ ເນື່ອງຈາກຜູ້ບໍລິໂພກມີຄວາມໃສ່ໃຈໃນດ້ານຄວາມປອດໄພຂອງອາຫານຫຼາຍຂຶ້ນ ເຮັດໃຫ້ເກີດມີຄວາມຕ້ອງການຂອງຕະຫຼາດຕໍ່ຜະລິດຕະພັນກະສິກຳທີ່ປາສະຈາກສານເຄມີ ຫຼື ມີການນຳໃຊ້ສານເຄມີທີ່ຕໍ່າ ຫຼາຍຂຶ້ນ. ພ້ອມດຽວກັນນີ້ ຜູ້ປະກອບການໃນຂະແໜງກະສິກຳ ຈຳນວນຫຼາຍ ກໍ່ມີຄວາມສົນໃຈໃນການຫັນປ່ຽນວິທີການຜະລິດກະສິກຳທີ່ເພິ່ງພາສານເຄມີ ມາເປັນການຜະລິດກະສິກຳທີ່ອີງໃສ່ກົນໄກນິເວດທຳມະຊາດ ເພື່ອເຮັດໃຫ້ ດິນປູກຝັງມີຄວາມຍືນຍົງດ້ານຊີວະພາບ, ສ້າງສະພາບແວດລ້ອມການເຮັດວຽກທີ່ມີຄວາມປອດໄພແກ່ສຸຂະພາບຂອງຊາວກະສິກອນ ແລະ ພ້ອມທັງໃຫ້ສາມາດສ້າງຜະລິດຕະພັນກະສິກຳທີ່ຮອງຮັບກັບທ່າອ່ຽງຄວາມຕ້ອງການຂອງຕະຫຼາດ. ຢ່າງໃດກໍ່ຕາມ ຜູ້ປະກອບການທີ່ມີຄວາມຕ້ອງການ ສ້າງຜະລິດຕະພັນກະສິກຳອິນຊີ ຫຼື ກະສິກຳສະອາດໃນຮູບແບບອື່ນໆ ເພື່ອປ້ອນຕະຫຼາດ ເຫັນວ່າ ໃນການຂໍໃບຢັ້ງຢືນກະສິກຳອິນຊີ ແລະ ກະສິກຳທີ່ດີ ແມ່ນຕ້ອງຜ່ານຫຼາຍຂັ້ນຕອນ, ແລະ ມີຄ່າໃຊ້ຈ່າຍສູງ, ເຊິ່ງກໍ່ເປັນສາເຫດໜຶ່ງທີ່ເຮັດໃຫ້ ຕົ້ນທຶນການຜະລິດກະສິກຳສະອາດ ມີມູນຄ່າສູງ ເຊິ່ງສ້າງຜົນກະທົບໃຫ້ແກ່ຄວາມສາມາດແຂ່ງຂັນຂອງຜູ້ປະກອບການໃນ ສປປ ລາວ ກັບຜະລິດຕະພັນກະສິກຳສະອາດຈາກຕ່າງປະເທດ, ພ້ອມທັງສ້າງຜົນກະທົບຕໍ່ຜູ້ບໍລິໂພກໃນດ້ານລາຄາ. ນອກຈາກນີ້ ເຫັນວ່າ ຜູ້ປະກອບການຍັງບໍ່ສາມາດເຂົ້າຫາຂໍ້ມູນໃນການຈຳແນກປະເພດກະສິກຳ ເຊັ່ນ ກະສິກຳສະອາດ, ກະສິກຳອິນຊີ ແລະ ອື່ນໆ ທີ່ຊັດເຈນ ໄດ້ເທົ່າທີ່ຄວນ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ມີແຫຼ່ງຂໍ້ມູນ ທີ່ຜູ້ປະກອບການສາມາດເຂົ້າເຖິງໄດ້ງ່າຍ ກ່ຽວກັບການຈຳແນກປະເພດກະສິກຳ ຕ່າງໆ ແລະ ຂັ້ນຕອນການຢັ້ງຢືນກະສິກຳສະອາດ
2. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາ ຫຼຸດຜ່ອນບາງຂອດຂັ້ນ ແລະ ຄ່າທຳນຽມ ໃນການການຂໍໃບຢັ້ງຢືນກະສິກຳສະອາດ ໂດຍສະເພາະແມ່ນ ປະເພດກະສິກຳທີ່ດີ ແລະ ກະສິກຳອິນຊີ
3. ພິຈາລະນາ ກຳນົດສະຖານທີ່ ຂາຍກະສິກຳອິນຊີ ທີ່ເປັນຫຼັກແຫຼ່ງ
4. ມີໜ່ວຍງານທີ່ສາມາດຢັ້ງຢືນມາດຕະຖານ ຂອງວັດຖຸດິບທີ່ໃຊ້ເຂົ້າໃນການຜະລິດກະສິກຳສະອາດ ເປັນຕົ້ນ ແມ່ນ ມາດຕະຖານນ້ຳ ແລະ ອື່ນໆ

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1) ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້
2) ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
3) ກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ

**ຄວາມຄືບໜ້າຂອງການແກ້ໄຂບັນຫາ**

- ໃນກອງປະຊຸມປຶກສາຫາລືລະຫວ່າງຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການຜະລິດກະສິກຳ) ຄັ້ງວັນທີ 01 ທັນວາ 2020: ຂະແໜງກະສິກຳ ໄດ້ເຜີຍແຜ່ ແລະ ອະທິບາຍຂັ້ນຕອນ ແລະ ເງື່ອນໄຂຂອງການເຂົ້າເຖິງຂໍ້ມູນການຈຳແນກປະເພດກະສິກຳ ຕ່າງໆ ແລະ ຂັ້ນຕອນການຢັ້ງຢືນກະສິກຳສະອາດ ໃຫ້ແກ່ກຸ່ມຜູ້ຜະລິດກະສິກຳ, ເຊິ່ງປະຈຸບັນ ຜູ້ປະກອບການກໍ່ສາມາດເຂົ້າຫາຂໍ້ມູນດັ່ງກ່າວໄດ້ຜ່ານທາງ ເວັບໄຊທ໌ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (https://lncci.la/lbf/lbf-

13th-2020/). ສ່ວນການຫຼຸດຜ່ອນເງື່ອນໄຂ ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ ເນື່ອງຈາກປະຕິບັດຕາມມາດຕະຖານຂອງສາກົນ.